# ຍຸດທະສາດພັດທະນາກະສິກຳຮອດປີ 2025

# ແລະ ວິໄສທັດຮອດປີ 2030

**ວິໄສທັດ ແລະ ເປົ້າໝາຍຂອງຂະແໜງການ**

"ຮັບປະກັນຄວາມໝັ້ນຄົງ ທາງດ້ານສະບຽງອາຫານ, ຜະລິດສິນຄ້າກະສິກຳທີ່ມີທ່າແຮງ, ພັດທະນາກະສິກຳສະອາດ, ປອດໄພ ແລະ ຍືນຍົງ ບົນພື້ນຖານການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ຕິດພັນກັບການພັດທະນາຊົນນະບົດ ເພື່ອປະກອບສ່ວນສ້າງພື້ນຖານເສດຖະກິດແຫ່ງຊາດ"

ກະຊວງກະສິກຳ ແລະ ປ່າໄມ້

ມີນາ 2015

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 53 /ລບ

ນະຄອນຫຼວງວຽງຈັນ, ວັນທີ 20.2.2015

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ຍຸດທະສາດພັດທະນາກະສິກຳ ຮອດປີ 2025 ແລະ ວິໄສທັດ ຮອດປີ 2030

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມ ມະຕິກົກລົງຂອງ ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ພຶດສະພາ ປີ 2014 ສະບັບເລກທີ 06/ລບ, ລົງວັນທີ 02 ກໍລະກົດ 2014.
- ອີງຕາມ ເອກະສານລາຍງານຂອງກະຊວງ ກະສິກຳ ແລະ ປ່າໄມ້ ສະບັບເລກທີ 1258/ພບ, ລົງ ວັນທີ 26 ສິງຫາ 2014.

## ລັດຖະບານ ອອກດຳລັດ:

ມາດຕາ 1. ຮັບຮອງ ແລະ ປະກາດໃຊ້ " ຍຸດທະສາດການພັດທະນາກະສິກຳ ຮອດປີ 2025 ແລະ ວິໄສທັດ ຮອດປີ 2030 ".

ມາດຕາ 2. ມອບໃຫ້ກະຊວງ ກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບ ບັນດາກະຊວງ-ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນຕ່າງໆ ຄົ້ນຄວ້າຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຍຸດທະສາດພັດທະນາກະສິກຳ ຮອດປີ 2025 ແລະ ວິໄສທັດ ຮອດປີ 2030 ໃຫ້ໄດ້ຮັບຜົນດີ.

ມາດຕາ 3. ບັນດາກະຊວງ-ອົງການທຽບເທົ່າ, ນະຄອນຫຼວງວຽງຈັນ, ບັນດາແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 4. ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ

# ຄຳນຳ

ພັກ ແລະ ລັດຖະບານ ເວລາໃດ ກໍເປັນຫ່ວງເປັນໃຍ ແລະ ຖືສຳຄັນ ກ່ຽວກັບການພັດທະນາ ວຽກງານກະສິກຳ ຊຶ່ງສະແດງອອກໃນມະຕິຕ່າງໆຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດ ໃນແຕ່ລະໄລຍະ, ພົ້ນເດັ່ນທີ່ສຸດ ແມ່ນພາຍຫຼັງທີ່ພັກເຮົາ ໄດ້ກຳນົດແນວທາງປ່ຽນແປງໃໝ່ ເປັນຕົ້ນມາ ຊຶ່ງພັກໄດ້ກຳນົດແນວທາງ ຫັນຈາກເສດຖະກິດທຳມະຊາດ ໄປສູ່ ເສດຖະກິດສິນຄ້າ ແລະ ໄດ້ກຳນົດແຈ້ງ ທິດທາງ ໃນການພັດທະນາ ວຽກງານກະສິກຳ ໂດຍຖືເອົາກະສິກຳ ແລະ ປ່າໄມ້ ເປັນພື້ນຖານໃຫ້ແກ່ການຫັນ ເປັນອຸດສາຫະກຳ. ມະຕິກອງປະຊຸມໃຫຍ່ ຂອງພັກ ໃນແຕ່ລະໄລຍະ ໄດ້ສືບຕໍ່ ກຳນົດ ທິດທາງໜ້າທີ່ ໃນການ ພັດທະນາວຽກງານກະສິກຳ ແລະ ປ່າໄມ້ ຢ່າງຈະແຈ້ງ; ພັກເຮົາໄດ້ ກຳນົດວ່າ: "ກະສິກຳ ເປັນແນວຮົບ ອັນດັບໜຶ່ງ, ການກະສິກຳ ແລະ ປ່າໄມ້ ຍັງແມ່ນ ຂະແໜງການພື້ນຖານ ໃນໂຄງປະກອບເສດຖະກິດແຫ່ງຊາດ ຂອງພວກເຮົາ, ການຫັນຈາກກະສິກຳທຳມະຊາດ ໄປສູ່ ການຜະລິດເປັນສິນຄ້າ ເປັນຄວາມຮຽກຮ້ອງຕ້ອງການ ພາວະວິໄສ ຂອງສະໄໝຂ້າມຜ່ານ ຂຶ້ນສູ່ ສັງຄົມນິຍົມ ຢູ່ປະເທດເຮົາ". ເຖິງຢ່າງໃດກໍຕາມ ໃນໄລຍະ ຜ່ານມາ ເຫັນວ່າ ການຜະລິດກະສິກຳ ເວົ້າລວມ ແມ່ນຍັງບໍ່ທັນຂະຫຍາຍຕົວແຮງ, ຮູບແບບການຜະລິດກະສິກຳ ສ່ວນຫຼາຍ ຍັງຂຶ້ນກັບທຳມະຊາດຢູ່, ສະມັດຕະພາບ ຂອງການຜະລິດກະສິກຳ ຍັງຕ່ຳ, ການຜະລິດບໍ່ທັນມີຈຸດສຸມ, ການຂະຫຍາຍອຸດສາຫະກຳ ປຸງແຕ່ງກະສິກຳ ຍັງເຮັດໄດ້ໜ້ອຍ, ຍັງບໍ່ທັນສາມາດຂຸດຄົ້ນໄດ້ ທ່າແຮງບົ່ມຊ້ອນ ທາງດ້ານຊັບພະຍາກອນ ທຳມະຊາດ ທີ່ ສປປ ລາວ ເຮົາມີຢ່າງອຸດົມສົມບູນ.

ເຫັນໄດ້ສະພາບ ແລະ ຄວາມສຳຄັນຂອງວຽກງານກະສິກຳ ຄືດັ່ງກ່າວນັ້ນ ລັດຖະບານ ຈຶ່ງໄດ້ ຊີ້ນຳ ກະຊວງ ກໍຄື ຂະແໜງການກະສິກຳ ແລະ ປ່າໄມ້ ຢ່າງໃກ້ຊິດ ໃນການກຳນົດຍຸດທະສາດ ພັດທະນາກະສິກຳ ຮອດປີ 2025 ແລະ ກຳນົດວິໄສທັດ ຮອດປີ 2030. ຈຸດປະສົງລວມ ຂອງຍຸດທະສາດພັດທະນາກະສິກຳ ຮອດປີ 2025 ແມ່ນເພື່ອກຳນົດ ທິດທາງ, ເປົ້າໝາຍ ແລະ ຄາດໝາຍສູ້ຊົນ ຕະຫຼອດຮອດໂຄງປະກອບ ການ ຜະລິດ ຂອງຂະແໜງການກະສິກຳ ຕາມທິດ ຫັນເປັນອຸດສາຫະກຳ ແລະ ທັນສະໄໝ ໃນເງື່ອນໄຂການເຊື່ອມ ໂຍງກັບພາກພື້ນ ແລະ ສາກົນ ແນໃສ່ ເພື່ອຕອບສະໜອງ ຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາ ວຽກງານກະສິກຳ ໃນໄລຍະໃໝ່ ປະກອບສ່ວນເຂົ້າ ໃນການຈັດຕັ້ງປະຕິບັດ ເພື່ອບັນລຸເປົ້າໝາຍ ຂອງແຜນ ພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ແຕ່ລະໄລຍະ, ຕອບສະໜອງຄວາມຕ້ອງການ ໃນການຜະລິດ ເປັນ ສິນຄ້າ, ອຸດສາຫະກຳປຸງແຕ່ງ ແລະ ການບໍລິການ, ຫຼຸດຜ່ອນການເອື່ອຍອີງ ໃສ່ຊັບພະຍາກອນທຳມະຊາດ ແລະ ປະກອບສ່ວນ ເຂົ້າໃນ ການຈັດຕັ້ງປະຕິບັດ ຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກ ແຫ່ງຊາດ ແລະ ເປົ້າໝາຍສະຫັດສະວັດແຫ່ງການພັດທະນາ.

ການສ້າງຍຸດທະສາດພັດທະນາກະສິກຳ ຮອດປີ 2025 ໄດ້ລິເລີ່ມ ໃນຊ່ວງໄລຍະທ້າຍ ຂອງການ ຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VI ແລະ ແຜນພັດທະນາ ວຽກງານກະສິກຳ ແລະ ປ່າໄມ້ ໄລຍະ 5 ປີ (2006-2010). ພາຍໃຕ້ການຊີ້ນຳ ຂອງຄະນະນຳກະຊວງ, ຂະບວນການສ້າງ ຍຸດທະສາດພັດທະນາກະສິກຳ ແມ່ນໄດ້ອີງໃສ່ທິດນຳ ກໍຄື ແນວທາງນະໂຍບາຍ ທີ່ກຳນົດ ໃນມະຕິຕ່າງໆຂອງພັກ ໂດຍສະເພາະ ມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ, ໂດຍໄດ້ຈັດ ກອງປະຊຸມ ປຶກສາຫາລື ທັງໃນລະດັບວິຊາການ ແລະ ລະດັບການນຳ ທັງໃນ ຂັ້ນສູນກາງ ແລະ ທ້ອງຖິ່ນ ຂຶ້ນຫຼາຍຄັ້ງ

ຕະຫຼອດຮອດການປະຊຸມປຶກສາຫາລື ກັບບັນດາ ອົງການຈັດຕັ້ງສາກົນ ແລະ ອົງການຜູ້ໃຫ້ທຶນຕ່າງໆ. ພ້ອມດຽວກັນ ກໍຖອດຖອນບົດຮຽນ ນຳບາງກະຊວງ ແລະ ຂະແໜງການທີ່ກ່ຽວຂ້ອງ ແລະ ຖອດຖອນບົດຮຽນ ນຳປະເທດເພື່ອນໃກ້ຄຽງ ໂດຍມີການວິເຄາະ-ວິໄຈບັນຫາ ແລະ ສະພາບຕົວຈິງ ຂອງການພັດທະນາວຽກງານກະສິກຳ ຂອງ ສປປ ລາວ ໃນເງື່ອນໄຂແຫ່ງການເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ຍຸດທະສາດພັດທະນາກະສິກຳ ຮອດປີ 2025 ແລະ ວິໄສທັດ ຮອດປີ 2030 ໄດ້ຜ່ານການ ຮັບຮອງ ແລະ ປະກາດໃຊ້ ຈາກລັດຖະບານ ຕາມດຳລັດຂອງລັດຖະບານ ສະບັບເລກທີ 53/ລບ, ລົງວັນທີ 20/2/2015. ຍຸດທະສາດສະບັບດັ່ງກ່າວນີ້ ແມ່ນເປັນເອກະສານທາງການ ເພື່ອເປັນບ່ອນອີງ ແລະ ກຳນົດທິດທາງ ແຜນການ ໃນການພັດທະນາ ຂະແໜງການກະສິກຳ ໃນໄລຍະ ແຕ່ນີ້ ຮອດປີ 2025 ຊຶ່ງສອດຄ່ອງກັບຍຸດທະສາດລວມ ໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຕ່ນີ້ຮອດປີ 2025 ຂອງລັດຖະບານ, ນອກນັ້ນ ຍັງສອດຄ່ອງກັບຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ກໍຄື ເປົ້າໝາຍສະຫັດສະວັດ ແຫ່ງການພັດທະນາ. ຍຸດທະສາດພັດທະນາກະສິກຳ ຮອດປີ 2025 ສະບັບນີ້ ແມ່ນເປັນພື້ນຖານ ສຳລັບການສ້າງແຜນງານ ດ້ານກະສິກຳ ໃນໄລຍະກາງ ແລະ ໄລຍະສັ້ນ ຂອງລັດຖະບານ, ໂດຍສະເພາະ ສຳລັບຂະແໜງການກະສິກຳ, ທັງເປັນພື້ນຖານ ໃຫ້ແກ່ການສ້າງແຜນດຳເນີນງານ ກໍຄື ແຜນການ ແລະ ໂຄງການຮ່ວມມື ດ້ານກະສິກຳ ເພື່ອນຳໄປຈັດຕັ້ງປະຕິບັດ ໃຫ້ບັນລຸເປົ້າໝາຍ ຂອງຂະແໜງການ. ຍຸດທະສາດພັດທະນາ ກະສິກຳ ຮອດປີ 2025 ຈະໄດ້ຮັບການທົບທວນຄືນ, ໝູນໃຊ້ ແລະ ດັດປັບ ໃຫ້ທ່ວງທັນ ກັບສະພາບການ ເພື່ອຕອບສະໜອງ ຕາມແນວທາງນະໂຍບາຍຂອງພັກ ແລະ ຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາ ໂດຍອີງຕາມສະພາບ ແລະ ເງື່ອນໄຂ ຂອງການປ່ຽນແປງ ທາງດ້ານ ເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

ຍຸດທະສາດພັດທະນາກະສິກຳ ຮອດປີ 2025 ໄດ້ກຳນົດແຈ້ງ ຈຸດປະສົງ, ເປົ້າໝາຍ ແລະ ຄາດໝາຍສູ້ຊົນໃນການພັດທະນາວຽກງານກະສິກຳ ໃນແຕ່ລະໄລຍະ, ພ້ອມດຽວກັນ ກໍກຳນົດ ນະໂຍບາຍ, ແຜນງານ, ແຜນດຳເນີນງານ ແລະ ໂຄງການ ຊຶ່ງລວມທັງໝົດ ມີ 16 ແຜນດຳເນີນງານ ແລະ 120 ໂຄງການ ໄປຄຽງຄູ່ກັບການກຳນົດ ມາດຕະການແຕ່ລະດ້ານ ຕະຫຼອດຮອດ ການກຳນົດ ພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງຂະແໜງການຂອງລັດ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ, ພາລະບົດບາດ ຂອງຜູ້ປະກອບການ ແລະ ຊາວກະສິກອນ. ເຖິງວ່າ ແຕ່ລະມາດຕະການ ແລະ ແຜນດຳເນີນງານ ທີ່ກຳນົດ ໃນຍຸດທະສາດສະບັບນີ້ ຈະມີລັກສະນະຂໍ້ສະເໜີ, ແຕ່ຂ້າພະເຈົ້າຫວັງວ່າ ມັນຈະເປັນບ່ອນອີງ ໃນການກຳນົດແຜນການປະຈຳປີ ແລະ ແຜນການ 5 ປີ ຂອງຂະແໜງການກະສິກຳ ກໍຄື ຂະແໜງການທີ່ກ່ຽວຂ້ອງອື່ນໆ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ໃຫ້ປະສົບຜົນສຳເລັດ ຢູ່ໃນຂົງເຂດວຽກງານ ແລະ ທ້ອງຖິ່ນຂອງຕົນ.

ນະຄອນຫຼວງວຽງຈັນ, ວັນທີ: 20 ມີນາ 2015.

ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້

ວິໄລວັນ ພົມເຂ

# ສາລະບານ


**ພາກສະເໜີ** ........ 1

**I. ຕີລາຄາສະພາບການຜະລິດກະສິກຳໃນໄລຍະຜ່ານມາ** ........ 4

**1.1. ນະໂຍບາຍ ແລະ ທິດນຳໃນການພັດທະນາກະສິກຳ ໃນໄລຍະຜ່ານມາ** ........ 4

**1.2 ໝາກຜົນຕົວຈິງ ໃນການຈັດຕັ້ງປະຕິບັດການຜະລິດກະສິກຳ ໃນໄລຍະຜ່ານມາ** ........ 5

1.2.1 ການຜະລິດສະບຽງອາຫານ ........ 5

1.2.2 ການຜະລິດສິນຄ້າກະສິກຳ ........ 7

1.2.3 ການພັດທະນາພື້ນຖານໂຄງລ່າງ ແລະ ພື້ນຖານວັດຖຸເຕັກນິກຕ່າງໆ ........ 8

1.2.4 ການຮ່ວມມື ແລະ ລົງທຶນໃນຂະແໜງກະສິກຳ ........ 9

1.2.5 ການພັດທະນາຊັບພະຍາກອນມະນຸດ ໃນຂະແໜງກະສິກຳ ແລະ ປ່າໄມ້ ........ 10

**1.3 ສາເຫດທີ່ພາໃຫ້ມີຜົນສຳເລັດ** ........ 11

**1.4 ບັນດາຂໍ້ຈຳກັດ, ຂໍ້ຄົງຄ້າງ ແລະ ສາເຫດ** ........ 11

**1.5. ບົດຮຽນ ທີ່ຖອດຖອນໄດ້** ........ 12

**II. ວິໄສທັດ ແລະ ເປົ້າໝາຍຍຸດທະສາດ** ........ 14

**2.1 ບ່ອນອີງໃນການກຳນົດຍຸດທະສາດ** ........ 14

**2.2 ຄາດຄະເນສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ສິ່ງທ້າທາຍ** ........ 14

**2.3 ທິດນຳຂອງພັກ, ທັດສະນະ ແລະ ວິໄສທັດຂອງຂະແໜງການ** ........ 16

2.3.1 ທິດນຳຂອງພັກ ແລະ ລັດຖະບານ ຕໍ່ວຽກງານກະສິກຳ ........ 16

2.3.2 ທັດສະນະ ........ 17

2.3.3 ວິໄສທັດ ຮອດປີ 2030 ........ 17

**2.4 ເປົ້າໝາຍ** ........ 18

2.4.1 ເປົ້າໝາຍລວມ ........ 18

2.4.2 ການກຳນົດເປົ້າໝາຍ ແລະ ຄາດໝາຍສູ້ຊົນ ຮອດປີ 2020 ........ 18

2.4.2.1 ເປົ້າໝາຍ (ແຜນງານ) ທີ 1: ການຜະລິດສະບຽງ ........ 18

2.4.2.2 ເປົ້າໝາຍ (ແຜນງານ) ທີ 2: ການຜະລິດສິນຄ້າກະສິກຳ ........ 20

2.4.3 ການກຳນົດເປົ້າໝາຍ ແລະ ຄາດໝາຍສູ້ຊົນຮອດປີ 2025 ........ 21

2.4.3.1 ເປົ້າໝາຍ (ແຜນງານ) ທີ 1: ການຜະລິດສະບຽງ ........ 21

2.4.3.2 ເປົ້າໝາຍ (ແຜນງານ) ທີ 2: ການຜະລິດສິນຄ້າກະສິກຳ ........ 22

**III. ເນື້ອໃນວຽກຈຸດສຸມ ແລະ ບັນດາມາດຕະການຈັດຕັ້ງປະຕິບັດ** ........ 23

**3.1 ມາດຕະການລວມ** ........ 23

3.1.1 ດ້ານນະໂຍບາຍ ແລະ ນິຕິກຳ ........ 23

3.1.1.1 ດ້ານນະໂຍບາຍ ........ 23

3.1.1.2 ດ້ານນິຕິກຳ ........ 24

3.1.2 ການປັບປຸງຂອດປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ........ 25

3.1.3 ການຮ່ວມມື ແລະ ລົງທຶນ ໃນຂະແໜງກະສິກຳ ........ 27

3.1.4 ການພັດທະນາບຸກລະລາກອນ ແລະ ບົດບາດຍິງ-ຊາຍ ........ 29

3.1.5 ການປັບປຸງກົງຈັກການຈັດຕັ້ງ ແລະ ພັດທະນາວຽກງານຄຸ້ມຄອງລັດ ໃນຂະແໜງກະສິກຳ ........ 32

3.1.5.1 ວຽກງານປັບປຸງກົງຈັກການຈັດຕັ້ງ ........ 32

3.1.5.2 ວຽກງານປັບປຸງ ແລະ ພັດທະນາກົນໄກການບໍລິຫານລັດໃນຂະແໜງການ ........ 33

3.1.6 ການຫັນເປັນອຸດສາຫະກຳ ແລະ ທັນສະໃໝ ໃນຂະແໜງກະສິກຳ ແລະ ຊົນນະບົດ ........ 33

3.1.7 ການພັດທະນາກຸ່ມ/ສະຫະກອນການຜະລິດກະສິກຳ ຕິດພັນກັບການສ້າງຊົນນະບົດໃໝ່ ........ 36

**3.2 ມາດຕະການສະເພາະ ທາງດ້ານວິຊາການ ........ 38**

3.2.1 ມາດຕະການສຳລັບການຜະລິດສະບຽງອາຫານ ........ 38

3.2.1.1 ມາດຕະການດ້ານການປູກຝັງ ........ 38

3.2.1.2 ມາດຕະການດ້ານການລ້ຽງສັດ, ສັດຕະວະແພດ ແລະ ການປະມົງ ........ 54

3.2.1.3. ການຮັບປະກັນທາງດ້ານສະບຽງອາຫານ ແລະ ໂພສະນາການ ........ 61

3.2.2 ມາດຕະການສຳລັບການຜະລິດເປັນສິນຄ້າ ........ 64

3.2.2.1 ມາດຕະການດ້ານການປູກຝັງ ........ 64

3.2.2.2 ມາດຕະການດ້ານການລ້ຽງສັດ, ສັດຕະວະແພດ ແລະ ການປະມົງ ........ 73

**IV. ແຜນງານ ແລະ ໂຄງການສະໜັບສະໜູນ ........ 77**

**4.1 ແຜນດຳເນີນງານ ແລະ ໂຄງການສະໜັບສະໜູນຮອດປີ 2020 ແລະ 2025 ........ 77**

4.1.1 ແຜນດຳເນີນງານ ແລະ ໂຄງການດ້ານປູກຝັງ ........ 77

4.1.2 ແຜນດຳເນີນງານ ແລະ ໂຄງການດ້ານລ້ຽງສັດ ແລະ ການປະມົງ ........ 81

**V. ວິທີການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ປະເມີນຜົນ ........ 85**

**5.1 ການສ້າງເປັນແຜນງານ, ແຜນດຳເນີນງານ ແລະ ໂຄງການລະອຽດ ........ 85**

**5.2 ການແບ່ງຄວາມຮັບຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງຕ່າງໆ ........ 86**

5.2.1 ໜ້າທີ່ແລະ ຄວາມຮັບຜິດຊອບຂອງຂະແໜງການຂອງລັດ ຂັ້ນສູນກາງ ........ 86

5.2.2 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຂະແໜງການຂອງລັດ ຂັ້ນທ້ອງຖິ່ນ ........ 86

5.2.3 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງພາກທຸລະກິດ ແລະ ຜູ້ປະກອບການ ........ 87

5.2.4 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຊາວກະສິກອນ ........ 87

**5.3 ການຕິດຕາມ, ກວດກາ ແລະ ປະເມີນຜົນ ........ 88**

## ພາກສະເໜີ

ຂະແໜງການກະສິກຳ ແລະ ປ່າໄມ້ ແມ່ນຂະແໜງການໜຶ່ງທີ່ມີບົດບາດສຳຄັນ ໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ແຜນພັດທະນາເສກຖະກິດ-ສັງຄົມຂອງລັດ ກ່ຽວກັບ ວຽກງານກະສິກຳ ແລະ ປ່າໄມ້. ພາຍຫຼັງທີ່ປະເທດຊາດໄດ້ຮັບການປົດປ່ອຍ ແລະ ສ້າງຕັ້ງເປັນ ສປປ ລາວ ເປັນຕົ້ນມາ, ພັກ ແລະ ລັດຖະບານໄດ້ຖືສຳຄັນແຕ່ຫົວທີ ກ່ຽວກັບການພັດທະນາວຽກງານກະສິກຳ ຊຶ່ງສະແດງອອກໃນມະຕິຕ່າງໆຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ໃນແຕ່ລະໄລຍະ, ພົ້ນເດັ່ນທີ່ສຸດ ແມ່ນພາຍຫຼັງທີ່ພັກເຮົາ ໄດ້ກຳນົດແນວທາງປ່ຽນແປງໃໝ່ ເປັນຕົ້ນມາ ຊຶ່ງພັກໄດ້ຖືເອົາ ກະສິກຳເປັນສະໜາມຮົບອັນດັບໜຶ່ງ ແລະ ກຳນົດແນວທາງ ຫັນຈາກເສດຖະກິດທຳມະຊາດ ໄປສູ່ ເສດຖະກິດສິນຄ້າ, ເຫັນໄດ້ວ່າ ການພັດທະນາວຽກງານກະສິກຳ ໄດ້ມີບາດກ້າວຂະຫຍາຍຕົວຢ່າງໜັກແໜ້ນ; ອັນສຳຄັນ ແມ່ນໄດ້ຄ່ອຍໆຫັນມ້າງ ຮູບແບບການຜະລິດກະສິກຳແບບທຳມະຊາດເທື່ອລະກ້າວ, ພື້ນຖານໂຄງລ່າງທາງດ້ານກະສິກຳ ໄດ້ຮັບການພັດທະນາເປັນກ້າວໆມາ ເປັນຕົ້ນແມ່ນ ລະບົບຊົນລະປະທານ, ອ່າງເກັບນ້ຳ ແລະ ສະຖານີຈັກສູບນ້ຳ ໄດ້ຮັບການສ້າງຂຶ້ນຢູ່ຫຼາຍໆແຫ່ງ ອັນໄດ້ເຮັດໃຫ້ ການເຮັດນາ 2 ລະດູ ໄດ້ນັບມື້ນັບຂະຫຍາຍກວ້າງອອກ, ພື້ນຖານທາງດ້ານເຕັກນິກ-ວິທະຍາການ ເປັນຕົ້ນແມ່ນ ບັນດາສູນ-ສະຖານີ ຄົ້ນຄວ້າທົດລອງ, ສາທິດ ແລະ ບໍລິການທາງດ້ານວິຊາການ ກໍໄດ້ຮັບການສ້າງຕັ້ງ ແລະ ພັດທະນາ ເປັນກ້າວໆມາ ຊຶ່ງສາມາດຍູ້ແຮງ ເຮັດໃຫ້ການຜະລິດກະສິກຳ ມີບາດກ້າວຂະຫຍາຍຕົວເປັນລຳດັບ ຊຶ່ງມີຜົນເຮັດໃຫ້ ສປປລາວ ສາມາດຜະລິດກຸ້ມຕົນເອງ ທາງດ້ານສະບຽງອາຫານໄດ້ ໂດຍສະເພາະ ນັບຕັ້ງແຕ່ປີ 2000 ເປັນຕົ້ນມາ ແລະ ສາມາດຜະລິດເປັນສິນຄ້າສົ່ງອອກ. ນອກຈາກນັ້ນ ການປູກພືດ ແລະ ໄມ້ອຸດ ສາຫະກຳ ໂດຍສະເພາະ ແມ່ນ ພືດທີ່ເປັນ ສິນຄ້າ ເປັນຕົ້ນແມ່ນ: ສາລີ, ອ້ອຍ, ມັນຕົ້ນ, ກາເຟ, ຢາງພາລາ, ພືດຜັກ ແລະ ໄມ້ໃຫ້ໝາກ ກໍນັບມື້ນັບເພີ່ມຂຶ້ນ ສາມາດເປັນສິນຄ້າຢູ່ພາຍໃນ ແລະ ສົ່ງອອກ ຕ່າງປະ ເທດ.

ເຖິງຢ່າງໃດກໍຕາມ ເມື່ອທຽບກັບຄວາມຮຽກຮ້ອງຕ້ອງການ ແລະ ທ່າແຮງບົ່ມຊ້ອນ ທາງດ້ານຊັບພະຍາກອນທຳມະຊາດ ທີ່ ສປປລາວເຮົາ ມີຢ່າງອຸດົມສົມບູນແລ້ວ ເຫັນວ່າ ຍັງບໍ່ທັນສາມາດຕອບສະໜອງໄດ້ ຕາມຄວາມຮຽກຮ້ອງຕ້ອງການ ແລະ ຍັງບໍ່ທັນສາມາດຂຸດຄົ້ນໄດ້ ທ່າແຮງບົ່ມຊ້ອນດັ່ງກ່າວ, ການຜະລິດກະສິກຳ ເວົ້າລວມ ແມ່ນຍັງບໍ່ທັນໄດ້ຮັບການຂະຫຍາຍຕົວແຮງ, ຮູບແບບການຜະລິດ ສ່ວນຫຼາຍຍັງຂຶ້ນກັບທຳມະຊາດ, ທັງນີ້ກໍເນື່ອງຈາກວ່າ ການຫັນແນວທາງ ນະໂຍບາຍ, ມະຕິ, ຄຳສັ່ງ ຂອງພັກ ເປັນແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດແຜນພັດທະນາກະສິກຳ ຕະຫຼອດຮອດ ການປະຕິບັດບັນດາກົດໝາຍ ແລະ ນິຕິກຳຂອງລັດ ຍັງບໍ່ທັນກວ້າງຂວາງ ແລະ ລົງເລິກສູ່ຮາກຖານຂັ້ນບ້ານ ແລະ ກຸ່ມບ້ານ ຈຶ່ງເຮັດໃຫ້ ການປຸກລະດົມປະຊາຊົນ ແລະ ທຸກພາກສ່ວນເສດຖະກິດ ໃຫ້ຫັນປ່ຽນ ຈາກຮູບແບບການຜະລິດແບບດັ້ງເດີມ ມາສູ່ຮູບແບບໃໝ່ ຍັງມີຄວາມຫຍຸ້ງຍາກ ແລະ ຊັກຊ້າ, ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ໃນຂະແໜງກະສິກຳ ໂດຍສະເພາະ ໃນຂັ້ນທ້ອງຖິ່ນ ຍັງບໍ່ທັນໜັກແໜ້ນ ແລະ ເລິກເຊິ່ງ. ເພື່ອແກ້ໄຂບັນຫາດັ່ງກ່າວ ມັນຮຽກຮ້ອງໃຫ້ຂະແໜງການ ຕ້ອງສ້າງໃຫ້ມີ ຍຸດທະສາດພັດທະນາ ວຽກງານກະສິກຳ ໃນແຕ່ລະໄລຍະ ທັງໄລຍະກາງ ແລະ ໄລຍະຍາວ ຢ່າງເປັນລະບົບຄົບຊຸດ.

ຍຸດທະສາດກະສິກຳຮອດປີ 2025 ໄດ້ກຳນົດແຈ້ງ ວິໄສທັດ, ຈຸດປະສົງ ແລະ ເປົ້າໝາຍ ໃນການພັດທະນາຂະແໜງການ ແລະ ວຽກງານກະສິກຳ ແຕ່ນີ້ ຮອດປີ 2020 ແລະ 2025. ວິໄສທັດຂອງຂະແໜງການກະສິກຳ ຊຶ່ງໄດ້ກຳນົດຮອດປີ 2030 ແມ່ນແນໃສ່ **"ຮັບປະກັນຄວາມໝັ້ນຄົງ ທາງດ້ານສະບຽງອາຫານ, ຜະລິດສິນຄ້າກະສິກຳທີ່ມີທ່າແຮງ, ພັດທະນາກະສິກຳສະອາດ ປອດໄພ ແລະ ຍືນຍົງ ບົນພື້ນຖານ ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ຕິດພັນກັບການພັດທະນາຊົນນະບົດ ເພື່ອປະກອບສ່ວນສ້າງພື້ນຖານເສດຖະກິດແຫ່ງຊາດ"**. ຄາດໝາຍສູ້ຊົນລວມບາງດ້ານ ທີ່ໄດ້ກຳນົດແຕ່ ລະໄລຍະ ມີຄື:

**ຮອດປີ 2020** ສູ້ຊົນເຮັດໃຫ້ ລວມຍອດຜະລິດຕະພັນພາຍໃນ ຂອງຂະແໜງກະສິກຳ ແລະ ປ່າໄມ້ ຂະຫຍາຍຕົວ ໃຫ້ໄດ້ ໃນລະດັບສະເລ່ຍ 3,4%, ປະກອບສ່ວນ ໃນໂຄງປະກອບເສດຖະກິດແຫ່ງຊາດ ໃນອັດຕາສ່ວນ 19%. ຮັບປະກັນດ້ານໂພຊະນາການ ຂອງປະຊາຊົນໃຫ້ໄດ້ຮັບພະລັງງານຢ່າງຕ່ຳ **2.600 ກິໂລກາລໍຣີຕໍ່ຄົນຕໍ່ວັນ**; ໃນນີ້ ເຂົ້າ ແລະ ທາດແປ້ງ ກວມປະມານ 62%, ຊີ້ນ, ໄຂ່ ແລະ ປາ ປະມານ 10%, ປະເພດ ພືດຜັກ, ໝາກໄມ້ ແລະ ປະເພດຖົ່ວ ກວມປະມານ 5% ແລະ ປະເພດໄຂມັນ, ນ້ຳຕານ ແລະ ນ້ຳນົມ ກວມປະມານ 23%. ສູ້ຊົນຜະລິດເຂົ້າເປືອກລວມ ໃຫ້ໄດ້ ບໍ່ຫຼຸດ 4,7 ລ້ານໂຕນ (ເຂົ້າຈ້າວ 30%), ຍົກລະດັບການຜະລິດເຂົ້າ ແລະ ຜັກສະອາດ ໃຫ້ໄດ້ ຕາມມາດຕະຖານກະສິກຳທີ່ດີ (GAP). ການຜະລິດພືດເປັນສິນຄ້າ ໃຫ້ໄດ້ ເຊັ່ນ: ເຂົ້າເພື່ອເປັນສິນຄ້າພາຍໃນ ແລະ ສົ່ງອອກ ໃຫ້ໄດ້ຢ່າງໜ້ອຍ 1 ລ້ານໂຕນ (ເຂົ້າເປືອກ), ຜະລິດສາລີອາຫານສັດ ໃຫ້ໄດ້ 1,3 ລ້ານໂຕນ, ກາເຟ ໃຫ້ໄດ້ 120.000 ໂຕນ, ອ້ອຍ ເພື່ອເປັນວັດຖຸດິບ ປ້ອນໂຮງງານ ໃຫ້ໄດ້ 2,15 ລ້ານໂຕນ, ມັນຕົ້ນ ໃຫ້ໄດ້ 1,5 ລ້ານໂຕນ, ຖົ່ວເຫຼືອງ ໃຫ້ໄດ້ 50.000 ໂຕນ ແລະ ພືດອື່ນໆ ທີ່ມີທ່າແຮງໄດ້ປຽບ ຕິດພັນກັບການປຸງແຕ່ງພາຍໃນ ເພື່ອສ້າງ ມູນຄ່າເພີ່ມ. ສູ້ຊົນຜະລິດຊີ້ນ, ປາ ແລະ ໄຂ່ ລວມໃຫ້ໄດ້ 487.500 ໂຕນ (ໃນນີ້, ຊີ້ນ ແລະ ໄຂ່ ໃຫ້ໄດ້ 262.500 ໂຕນ, ປາ ແລະ ສັດນ້ຳໃຫ້ໄດ້ 225.000 ໂຕນຕໍ່ປີ) ດ້ວຍອັດຕາການຂະຫຍາຍຕົວ ຂອງຝູງສັດຢູ່ໃນລະດັບ ປະມານ 6% ຕໍ່ປີ, ການລ້ຽງ ປາ ແລະ ສັດນ້ຳ ໃນລະດັບ 8-10% ຕໍ່ປີ, ສົ່ງອອກ ຊີ້ນ (ງົວ-ຄວາຍ) ໃຫ້ໄດ້ 10.000-15.000 ໂຕນ ໄປຄຽງຄູ່ກັບ ການຊຸກຍູ້ ສົ່ງເສີມ ການປຸງແຕ່ງຜະລິດຕະພັນຊີ້ນ ແລະ ປາ ເປັນສຳເລັດຮູບຢູ່ພາຍໃນ ໃຫ້ ເປັນລະບົບຕ່ອງໂສ້ ຕິດພັນກັບການຕະຫຼາດ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

**ຮອດປີ 2025** ສືບຕໍ່ຮັບປະກັນດ້ານໂພຊະນາການຂອງປະຊາຊົນໃຫ້ໄດ້ຮັບພະລັງງານ ຢູ່ໃນລະດັບບໍ່ຫຼຸດ **2.600 ກິໂລກາລໍຣີຕໍ່ຄົນຕໍ່ວັນ**, ໃນນີ້ ເຂົ້າ ແລະ ທາດແປ້ງ ກວມປະມານ 54%, ຊີ້ນ, ໄຂ່ ແລະ ປາ ປະມານ 13%, ປະເພດ ພືດຜັກ, ໝາກໄມ້ ແລະ ປະເພດຖົ່ວ ກວມປະມານ 8% ແລະ ປະເພດໄຂມັນ, ນ້ຳຕານ ແລະ ນ້ຳນົມ ກວມປະມານ 25%. ສູ້ຊົນຜະລິດເຂົ້າເປືອກລວມ ບໍ່ໃຫ້ຫຼຸດ 5 ລ້ານໂຕນ (ຂົ້າຈ້າວ 30%), ໂດຍການເນັ້ນໃສ່ ຄຸນນະພາບ, ຮັບປະກັນຄວາມສະອາດ ແລະ ປອດໄພ ຕາມມາດຕະຖານກະສິກຳທີ່ດີ (GAP) ແລະ ສາມາດແຂ່ງຂັນກັບຕະຫຼາດ ຢູ່ພາກພື້ນ ແລະ ສາກົນໄດ້. ສຳລັບການຜະລິດພືດເປັນສິນຄ້າ ຕ້ອງສູ້ຊົນໃຫ້ໄດ້ ຄື: ເຂົ້າເພື່ອເປັນສິນຄ້າພາຍໃນ ແລະ ສົ່ງອອກ ຢ່າງໜ້ອຍ

ໃຫ້ໄດ້ 1,5 ລ້ານໂຕນ, ຜະລິດສາລີອາຫານສັດ ໃຫ້ໄດ້ 1,4 ລ້ານໂຕນ, ກາເຟ ໃຫ້ໄດ້ 280.000 ໂຕນ, ອ້ອຍ ໃຫ້ໄດ້ 2,4 ລ້ານໂຕນ, ມັນຕົ້ນ ໃຫ້ໄດ້ 1,6 ລ້ານໂຕນ, ຖົ່ວເຫຼືອງ ໃຫ້ໄດ້ 52.000 ໂຕນ ແລະ ພືດອື່ນໆທີ່ມີທ່າແຮງໄດ້ປຸງ ໂດຍການພັດທະນາ ແລະ ປັບປຸງການຜະລິດ ຕິດພັນກັບອຸດສາຫະກຳ ປຸງແຕ່ງ ແລະ ການຕະຫຼາດ ໃຫ້ເປັນຕ່ອງໂສ້ ທີ່ທັນສະໄໝ ໂດຍນຳໃຊ້ ເຕັກນິກ-ເຕັກໂນໂລຊີ ທີ່ກ້າວໜ້າ ເພື່ອສ້າງມູນຄ່າເພີ່ມໃຫ້ສູງຂື້ນ. ສູ້ຊົນຜະລິດຊີ້ນ, ປາ ແລະ ໄຂ່ ລວມໃຫ້ໄດ້ 711.000 ໂຕນ (ໃນນັ້ນ, ຊີ້ນ ແລະ ໄຂ່ໃຫ້ໄດ້ 414.000 ໂຕນ, ປາ ແລະ ສັດນ້ຳໃຫ້ໄດ້ 297.000 ໂຕນຕໍ່ປີ); ສົ່ງອອກ ຊີ້ນ (ງົວ-ຄວາຍ) ໃຫ້ໄດ້ 15.000 ໂຕນ, ໄປຄຽງຄູ່ກັບການຊຸກຍູ້ ສົ່ງເສີມ ການປຸງແຕ່ງຜະລິດຕະພັນຊີ້ນ ແລະ ປາສຳເລັດຮູບ ຢູ່ພາຍໃນ ໃຫ້ເປັນ ລະບົບຕ່ອງໂສ້ ຕິດພັນ ກັບ ການຕະຫຼາດ ຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄໝ.

ເພື່ອຮັບປະກັນ ເຮັດໃຫ້ຍຸດທະສາດພັດທະນາກະສິກຳ ຮອດປີ 2025 ຖືກຈັດຕັ້ງປະຕິບັດໄປຕາມທິດທີ່ໄດ້ກຳນົດໄວ້ ໃຫ້ມີຜົນສຳເລັດ ຈຶ່ງໄດ້ກຳນົດມາດຕະການລວມ ແລະ ມາດຕະການສະເພາະ; ສຳລັບມາດຕະການລວມ ແມ່ນກວມເອົາ ວຽກງານດ້ານນະໂຍບາຍ, ການສ້າງ ແລະ ປັບປຸງນິຕິກຳ, ການກຳນົດກົນໄກປະສານງານ, ການສົ່ງເສີມການຮ່ວມມື ແລະ ລົງທຶນ, ການປັບປຸງກົງຈັກການຈັດຕັ້ງ ແລະ ການພັດທະນາບຸກຄະລາກອນ ໃນຂະແໜງກະສິກຳ ແລະ ປ່າໄມ້, ສ່ວນມາດຕະການສະເພາະທາງດ້ານວິຊາການ ແມ່ນກວມເອົາ ຂົງເຂດການພັດທະນາທາງດ້ານວິຊາການ ກ່ຽວກັບການປູກຝັງ ແລະ ລ້ຽງສັດ; ໂດຍສະເພາະແມ່ນ ການກຳນົດ ແລະ ແບ່ງເຂດທີ່ດິນກະສິກຳ, ການຄົ້ນຄວ້າທົດລອງ, ການຊຸກຍູ້ ແລະ ສົ່ງເສີມ, ການພັດທະນາ ແລະ ປັບປຸງກຳລັງການຜະລິດ, ການພັດທະນາພື້ນຖານໂຄງລ່າງດ້ານຊົນລະປະທານ ແລະ ພື້ນຖານໂຄງລ່າງທາງ ດ້ານເຕັກນິກ-ວິຊາການ ແລະ ອື່ນໆ. ນອກນັ້ນ ຍັງໄດ້ກຳນົດເປັນ ແຜນດຳເນີນງານ ແລະ ໂຄງການລະອຽດ ເພື່ອບັນລຸ 2 ເປົ້າໝາຍ ກໍຄື 2 ແຜນງານຕົ້ນຕໍ ຄື: **1) ເປົ້າໝາຍ ຫຼື ແຜນງານດ້ານການຜະລິດ ສະບຽງອາຫານ ແລະ 2) ເປົ້າໝາຍ ຫຼື ແຜນງານດ້ານການຜະລິດເປັນສິນຄ້າກະສິກຳ** ເພື່ອປະກອບສ່ວນ ເຂົ້າໃນການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ; ໂດຍໄດ້ກຳນົດເປັນແຜນດຳເນີນງານ ທັງໝົດ **16 ແຜນດຳເນີນງານ** ແລະ **120 ໂຄງການ**, ໃນນີ້ ດ້ານການປູກຝັງ ປະກອບມີ 9 ແຜນດຳເນີນງານ ແລະ 62 ໂຄງການ, ດ້ານການລ້ຽງສັດ ແລະ ການປະມົງ ປະກອບມີ 7 ແຜນດຳເນີນງານ ແລະ 58 ໂຄງການ.

# I. ຕີລາຄາສະພາບການຜະລິດກະສິກຳໃນໄລຍະຜ່ານມາ

## 1.1. ນະໂຍບາຍ ແລະ ທິດນຳໃນການພັດທະນາກະສິກຳ ໃນໄລຍະຜ່ານມາ

ພາຍຫຼັງປະເທດຊາດ ໄດ້ຮັບການປົດປ່ອຍ ແລະ ສ້າງຕັ້ງ ສປປ ລາວ ໃນວັນທີ 2 ທັນວາ ປີ 1975, ການຜະລິດສະບຽງອາຫານ ຍັງບໍ່ທັນກຸ້ມກິນ, ຕ້ອງໄດ້ນຳເຂົ້າຈຳນວນຫຼາຍ, ກຳລັງການຜະລິດກະສິກຳສ່ວນໃຫຍ່ແມ່ນ ຊາວນາຂະໜາດນ້ອຍ, ກະແຈກກະຈາຍ, ນັກວິຊາການກະສິກຳ ຍັງຂາດເຂີນ, ພື້ນຖານການຜະລິດກະສິກຳ ຍັງອ່ອນນ້ອຍ, ສະຖານີກະສິກຳ ມີພຽງ 2 ແຫ່ງ, ເນື້ອທີ່ຊົນລະປະທານ ມີພຽງແຕ່ 12.700 ເຮັກຕາ, ການຜະລິດເຂົ້າ ທັງໝົດໄດ້ພຽງແຕ່ 350.000 ໂຕນ, ສະບຽງອາຫານບໍ່ໄດ້ຮັບການຄ້ຳປະກັນ ແລະ ມີການນຳເຂົ້າຈາກຕ່າງປະເທດ ເປັນສ່ວນໃຫຍ່, ສິນຄ້າສົ່ງອອກ ມີພຽງເຄື່ອງປ່າຂອງດົງ.

ແນວທາງປ່ຽນແປງໃໝ່ ໃນຂົງເຂດກະສິກຳ ໄດ້ກຳນົດແຈ້ງ ໃນກອງປະຊຸມປະສົມ ລະຫວ່າງ ຄະນະບໍລິຫານງານສູນກາງພັກ ກັບສະພາລັດຖະມົນຕີ (ຄັ້ງວັນທີ 15-22 ມິຖຸນາ 1988) ທີ່ ປະທານ ໄກສອນ ພົມວິຫານ ໄດ້ຊີ້ນຳໃຫ້ຖືເອົາ **ວຽກການຜະລິດກະສິກຳ ເປັນສະໜາມຮົບອັນດັບໜຶ່ງ** ແລະ ກຳນົດແນວທາງເພື່ອຫັນຈາກເສດຖະກິດທຳມະຊາດ ໄປສູ່ ເສດຖະກິດຜະລິດສິນຄ້າ. ກອງປະຊຸມ ໄດ້ກຳນົດແຈ້ງ ທິດທາງໃນການພັດທະນາ ວຽກງານກະສິກຳ ໂດຍຖືເອົາ ກະສິກຳ ແລະ ປ່າໄມ້ ເປັນພື້ນຖານໃຫ້ແກ່ການຫັນເປັນອຸດສະຫະກຳ ຂອງປະເທດເຮົາ ແລະ ຮັບຮູ້ວ່າ ກະສິກຳປະເທດເຮົາ ຍັງຢູ່ໃນລະດັບຕ່ຳທີ່ສຸດ, ຍັງບໍ່ທັນຫລຸດພົ້ນອອກຈາກການກະສິກຳ ທີ່ຜະລິດເຂົ້າເປັນຕົ້ນຕໍ ແລະ ກຸ້ມຕົນເອງພໍໃຊ້ພໍລາວເທື່ອ. ດັ່ງນັ້ນ, ມີຄວາມຈຳເປັນ ຕ້ອງໄດ້ຍູ້ແຮງການຜະລິດສິນຄ້າ ເພື່ອແບ່ງງານໃນສັງຄົມ, ຂະຫຍາຍກຳລັງການຜະລິດ, ປັບປຸງການພົວພັນການຜະລິດໃໝ່, ສ້າງໂຄງປະກອບການຜະລິດກະສິກຳທີ່ສົມເຫດສົມຜົນ, ຫັນປ່ຽນຈາກການຜະລິດ ທີ່ສຸມໃສ່ແຕ່ເຂົ້າ ໄປສູ່ການຜະລິດກະສິກຳຮອບດ້ານ, ຂະຫຍາຍເນື້ອທີ່ການຜະລິດສະບຽງອາຫານ ແລະ ສິນຄ້າ ເຊັ່ນ: ສາລີ, ມັນຕົ້ນ, ອ້ອຍ, ຢາສູບ ແລະ ອື່ນໆ, ສົ່ງເສີມການລ້ຽງສັດ ແລະ ລ້ຽງປາ ໃຫ້ຂະຫຍາຍຕົວໄວ. ປັບປຸງ ພື້ນຖານໂຄງລ່າງ ເຊັ່ນ: ບັນດາສູນຜະລິດ, ສະຖານີຄົ້ນຄວ້າ ເພື່ອຄົ້ນຄວ້າ ຂະຫຍາຍແນວພັນພືດ, ແນວພັນສັດ, ແນວພັນປາ ແລະ ນຳເອົາເຕັກນິກວິທະຍາສາດເຂົ້າສູ່ການຜະລິດ. ຈາກນັ້ນມາ ມະຕິກອງປະຊຸມໃຫຍ່ຂອງພັກ ໃນແຕ່ລະໄລຍະ ໄດ້ສືບຕໍ່ກຳນົດ ທິດທາງໜ້າທີ່ ໃນການ ພັດທະນາ ວຽກງານກະສິກຳ ແລະ ປ່າໄມ້ ຢ່າງຈະແຈ້ງ; ພັກເຮົາໄດ້ ກຳນົດວ່າ: ***"ກະສິກຳ ເປັນແນວຮົບອັນດັບໜຶ່ງ, ການກະສິກຳ ແລະ ປ່າໄມ້ ຍັງແມ່ນຂະແໜງການພື້ນຖານ ໃນໂຄງປະກອບເສດຖະກິດແຫ່ງຊາດ ຂອງພວກເຮົາ, ການຫັນຈາກກະສິກຳທຳມະຊາດ ໄປສູ່ ການຜະລິດເປັນສິນຄ້າ ເປັນຄວາມຮຽກຮ້ອງຕ້ອງການ ພາວະວິໄສ ຂອງສະໄໝຂ້າມຜ່ານຂຶ້ນສູ່ສັງຄົມນິຍົມ ຢູ່ປະເທດເຮົາ".***

## 1.2 ໝາກຜົນຕົວຈິງ ໃນການຈັດຕັ້ງປະຕິບັດການຜະລິດກະສິກຳ ໃນໄລຍະຜ່ານມາ

### 1.2.1 ການຜະລິດສະບຽງອາຫານ

ຜ່ານການຈັດຕັ້ງປະຕິບັດ ແນວທາງປ່ຽນແປງໃໝ່ ເຖິງວ່າພົບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍປະການກໍຕາມ ແຕ່ຍ້ອນການນຳພາຂອງພັກ ແລະ ລັດ, ປະເທດພວກເຮົາຈຶ່ງສາມາດຜະລິດກຸ້ມຕົນເອງທາງດ້ານສະບຽງອາຫານໂດຍພື້ນຖານ ໂດຍສະເພາະ ແຕ່ປີ 2000 ມາຮອດປະຈຸບັນ ການຜະລິດເຂົ້າໄດ້ເພີ່ມຂຶ້ນ ຢ່າງຕໍ່ເນື່ອງ ມີສ່ວນແຮໄວ້ ແລະ ຂາຍເປັນສິນຄ້າ ສົ່ງອອກ, ຊຶ່ງເປັນເຫດການສຳຄັນອັນໜຶ່ງຂອງປະເທດຊາດ.

ໃນຊຸມປີທີ່ຜ່ານມາ, ການຜະລິດກະສິກຳ ແລະ ປ່າໄມ້ ແມ່ນໄດ້ປະກອບສ່ວນສຳຄັນ ໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ໃຫ້ນັບມື້ນັບຫຼຸດລົງ ໂດຍສະເພາະ ມາຮອດປີ 2012 ໄດ້ປະກອບສ່ວນໃນໂຄງປະກອບ ເສດຖະກິດແຫ່ງຊາດ ໃນອັດຕາສ່ວນ 26% ດ້ວຍລະດັບການຂະຫຍາຍຕົວ 3,3% ຕໍ່ປີ. ການຜະລິດແຕ່ລະດ້ານ ສາມາດສັງລວມໄດ້ ຄືດັ່ງລຸ່ມນີ້:

1) <u>ດ້ານການຜະລິດເຂົ້າ</u>

ມາຮອດປີ 2012 ສາມາດຜະລິດເຂົ້າລວມ ໄດ້ທັງໝົດ 3,5 ລ້ານໂຕນ, ໃນນັ້ນ ອັດຕາສ່ວນ ຂອງຜົນຜະລິດ ເຂົ້ານາປີ ກວມເອົາປະມານ 80%, ຜົນຜະລິດເຂົ້ານາແຊງກວມປະມານ 15% ແລະ ຜົນຜະລິດເຂົ້າເນີນສູງກວມພຽງແຕ່ປະມານ 5%. ຖ້າຄິດໄລ່ຜົນຜະລິດເຂົ້າເປືອກ ຕໍ່ຄົນແມ່ນຢູ່ໃນລະຫວ່າງ 520-540 ກລ/ຄົນ ເຫັນວ່າ ສາມາດຕອບສະໜອງ ໃຫ້ແກ່ສັງຄົມໄດ້ຢ່າງພຽງພໍ ແລະ ມີສ່ວນແຮໄວ້ ເພື່ອເປັນສິນຄ້າ.

2) <u>ດ້ານການປູກພືດສະບຽງ</u> (ສາລີຫວານ, ປະເພດຖົ່ວ, ຜັກ, ເຜືອກມັນ... )

ການຜະລິດພືດຜັກຕ່າງໆ ສາມາດສະໜອງໃຫ້ ແກ່ການບໍລິໂພກພາຍໃນ ໄດ້ໂດຍພື້ນຖານ ໃນລະດັບສະເລ່ຍ 600.000-700.000 ໂຕນຕໍ່ປີ ທຽບໃສ່ຄາດໝາຍ ທີ່ໄດ້ວາງໄວ້ ເຫັນວ່າ ບັນລຸເກີນຄາດ ໝາຍໂດຍສະເລ່ຍ 2,1% ຕໍ່ປີ, ໃນນີ້ ພົ້ນເດັ່ນແມ່ນ: ໃນປີ 2012 ຜົນຜະລິດສາລີຫວານ ບັນລຸໄດ້ 199.000 ໂຕນ, ຜົນຜະລິດເຜືອກມັນຕ່າງໆ (ບໍ່ນັບມັນຕົ້ນ) ໄດ້ເພີ່ມຂຶ້ນ ເປັນ 255.000 ໂຕນ ຈາກ 181.000 ໂຕນ ໃນປີ 2005, ໄມ້ໃຫ້ໝາກປະເພດຕ່າງໆ ບັນລຸໄດ້ 647.000 ໂຕນ; ໃນນີ້ ພົ້ນເດັ່ນ ແມ່ນ: ໝາກກ້ວຍ, ໝາກໂມ, ໝາກນັດ, ໝາກຫຸ່ງ. ສ່ວນຜົນຜະລິດ ຜັກ ປະເພດຕ່າງໆ ສາມາດບັນລຸໄດ້ 910.100 ໂຕນ; ໃນນີ້ ພົ້ນເດັ່ນ ທີ່ສຸດແມ່ນ ຂະບວນການ ປູກຜັກອິນຊີ ຊຶ່ງເປັນ ທ່າອ່ຽງຄວາມຕ້ອງການຂອງສັງຄົມນັບມື້ໄດ້ຮັບການ ພັດ ທະນາ ແລະ ຂະຫຍາຍຕົວຢ່າງຕັ້ງໜ້າ.

3) <u>ດ້ານການລ້ຽງສັດ ແລະ ການປະມົງ</u>

ການລ້ຽງສັດ ແລະ ການປະມົງ ກໍໄດ້ມີການປັບປຸງໃຫ້ດີຂຶ້ນເປັນລຳດັບ ໂດຍສະເພາະແມ່ນ ໄດ້ມີການຫັນປ່ຽນລະບົບ, ຮູບແບບ ແລະ ວິທີການລ້ຽງ, ຈາກການລ້ຽງແບບທຳມະຊາດ ຫັນໄປສູ່ການລ້ຽງ ແບບວິທະຍາສາດ ແລະ ຫັນເປັນອຸດສາຫະກຳ. ໃນລະຫວ່າງປີ 2006 ຫາ ປີ 2012 ສັດ ແລະ ປາ ມີການຂະຫຍາຍຕົວ ສະເລ່ຍ 5-6% ຕໍ່ປີ, ໃນນີ້, ທຽບໃສ່ປີ 2006 ມາຮອດປີ 2012 ມີ ຄວາຍ 1.185.580 ເພີ່ມຂຶ້ນ 7%, ມີງົວ 1.691.800 ໂຕ ເພີ່ມຂຶ້ນ 30%, ມີໝູ 2.793.680 ໂຕ ເພີ່ມຂຶ້ນ 37%, ມີແບ້

443.800 ໂຕ ເພີ່ມຂຶ້ນ 105%, ມີສັດປີກ 28.778.700 ໂຕເພີ່ມຂຶ້ນ 41%. ການສະໜອງຊີ້ນ, ໄຂ່ ແລະ ປາ ເພື່ອບໍລິໂພກ ໄດ້ມີການເພີ່ມຂຶ້ນ 38% ຈາກ 227.000 ໂຕນ ໃນປີ 2006 ເປັນ 314.690 ໂຕນ ໃນປີ 2012, ໃນນີ້ ເປັນຊີ້ນ ແລະ ໄຂ່ 178.690 ໂຕນ. ສຳລັບປາແມ່ນ ເພີ່ມຈາກ 87.390 ໂຕນ ໃນປີ 2006 ເປັນ 136.560 ໂຕນໃນປີ 2012. ສັງລວມແລ້ວ ມາຮອດປີ 2012 ອັດຕາການບໍລິໂພກ ຊີ້ນ, ໄຂ່ ແລະ ປາ ສະເລ່ຍໃສ່ປະຊາກອນແມ່ນເພີ່ມຂຶ້ນ ຈາກ 39,62 ກິໂລ/ຄົນ/ປີ ໃນປີ 2006 ມາເປັນ 48,2 ກິໂລ/ຄົນ/ປີ ໃນປີ 2012.

4) <u>ທາງດ້ານໂພສະນາການ</u>

ໃນໄລຍະ 20 ປີທີ່ຜ່ານມາ, ພົນລະເມືອງຂອງປະເທດໂດຍສະເລ່ຍທີ່ດຳລົງຊີວິດ ຢູ່ໃນຄວາທຸກຍາກ ໄດ້ຫຼຸດລົງຈາກ 46% ໃນປີ 1992 ມາເປັນ 26% ໃນປີ 2009-2010 (GOL/UN 2010). ລວມຍອດຜະລິດຕະພັນພາຍໃນ ສະເລ່ຍຕໍ່ຫົວຄົນ ໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນໄລຍະຫຼາຍປີຜ່ານມາ ເນື່ອງຈາກມີການສະໜອງອາຫານທີ່ພາໃຫ້ເກີດພະລັງງານ (Dietary Energy Supply/DES) ຕໍ່ຫົວຄົນເພີ່ມຂຶ້ນ. ເຖິງຢ່າງໃດກໍຕາມ ເຖິງວ່າຄວາມທຸກຍາກໄດ້ມີການແກ້ໄຂ ແຕ່ບັນຫາດ້ານໂພຊະນາການ ກໍ່ຍັງເປັນສິ່ງທ້າທາຍ; ຕົວຊີ້ວັດດ້ານການຂາດສານອາຫານ ກໍຍັງບໍ່ໄດ້ຮັບການແກ້ໄຂເທົ່າທີ່ຄວນ. ດັ່ງນັ້ນ, ສປປລາວ ແມ່ນກຳລັງປະເຊີນໜ້າ ກັບອັດຕາການຂາດສານອາຫານຊ້ຳເຮື້ອ ທີ່ມີຜົນກະທົບຕໍ່ການຈະເລີນເຕີບໂຕ ຂອງຄົນລາວ ເຊັ່ນ: ລວງສູງ, ນ້ຳໜັກ, ການຂາດວິຕາມິນ A ແລະ ພະຍາດເລືອດຈາງ ໃນອັດຕາສ່ວນທີ່ສູງສົມຄວນ ໂດຍສະເພາະ ໃນເຂດຊົນນະບົດ (FAO, 2013).

ໃນປີ 2012 ລັດຖະບານ ໄດ້ດຳເນີນການສຳຫຼວດຄວາມສ່ຽງ ແລະ ກຸ່ມສ່ຽງ (Risk and Vulnerability Survey-RVS) ໄດ້ຊີ້ໃຫ້ເຫັນເຖິງການບໍລິໂພກອາຫານຈຳພວກຄາໂບຮາຍເດຼດ ຫຼື ອາຫານທີ່ພາໃຫ້ເກີດພະລັງງານໃນຄອບຄົວ (ເຊັ່ນ: ປະລິມານຂອງກາລໍຣີ) ໂດຍທົ່ວໄປແລ້ວຢູ່ໃນປະລິມານ ທີ່ເໝາະສົມ, ເຖິງວ່າຍັງມີປະມານ 12 ເປີເຊັນ ຂອງຄອບຄົວທີ່ຍັງມີການບໍລິໂພກທີ່ຕ່ຳ ແລະ ຢູ່ໃນຂີດ ໝາຍຂອງເສັ້ນສະແດງ. ຂໍ້ມູນເກັບກຳທີ່ສູງທີ່ສຸດ ກ່ຽວກັບ ລະດັບການບໍລິໂພກທີ່ຕ່ຳ ຫຼື ຢູ່ໃນຂີດໝາຍເສັ້ນສະແດງ ແມ່ນພົບເຫັນ ໃນເຂດບໍລິເວນທີ່ຮາບສູງ ທາງພາກກາງ-ພາກເໜືອ, ຊຶ່ງມີຜົນກະທົບປະມານ 25 ເປີເຊັນ ຂອງຄອບຄົວ. ການສັງເກດອີກມູມໜຶ່ງຂອງການບໍລິໂພກອາຫານ, ອັດຕາສະເລ່ຍການບໍລິໂພກ ໂປຼຕີນຕໍ່ຄົວເຮືອນ ພຽງແຕ່ 1,8 ມື້ ຕໍ່ ອາທິດ ໃນຮູບແບບທີ່ເປັນປາ ແລະ ຊີ້ນ. ໃນບັນດາແຫຼ່ງອາຫານ ຫຼື ແຫຼ່ງໂປຕີນທັງໝົດ ເຫັນວ່າ ປາ ແມ່ນໄດ້ຮັບການບໍລິໂພກຢ່າງຕໍ່ເນື່ອງ ຖ້າທຽບກັບບັນດາອາຫານອື່ນໆ ໃນຄົວເຮືອນ ແລະ ມັນກໍແມ່ນ ແຫຼ່ງໂປຼຕີນທີ່ສຳຄັນທີ່ຫາໄດ້ງ່າຍໃນຄອບຄົວທີ່ມີລະດັບ ຫຼື ເກນການບໍລິໂພກອາຫານທີ່ຕ່ຳທີ່ສຸດ (Food Consumption Scores-FCS). ການບໍລິໂພກໄຂ່ ແມ່ນຖືວ່າສູງຂຶ້ນ ໃນປະຈຸບັນ ແຕ່ທາດຊີ້ນ ແລະ ນົມ ແມ່ນເກືອບວ່າບໍ່ມີເລີຍຢູ່ໃນອາຫານລາວ. ພ້ອມດຽວກັນນັ້ນ ການບໍລິໂພກ ທາດໄຂມັນ/ນ້ຳມັນ ແມ່ນຖືວ່າຍັງ ຕ່ຳຫຼາຍ ສຳລັບຄອບຄົວທີ່ມີລະດັບ ຫຼື ເກນການບໍລິໂພກ ອາຫານທີ່ຕ່ຳທີ່ສຸດ ແລະ ມີພຽງແຕ່ 1,3 ມື້ ຕໍ່ ໜຶ່ງອາທິດ. ໃນທາງກົງກັນຂ້າມ, ການຂາດສານອາຫານ ກໍຖືວ່າຍັງສູງຢູ່ ຊຶ່ງເຫັນວ່າມີຫຼາຍກວ່າ 40% ແມ່ນເດັກອາຍຸຕ່ຳກວ່າ 5 ປີ ທີ່ບໍ່ມີການຈະເລີນເຕີບໂຕເຕັມທີ່ ແລະ

25% ມີນໍ້າໜັກຕໍ່າກວ່າເກນມາດຖານ. ຕົວເລກກ່ຽວກັບຂໍ້ຈຳກັດ ໃນການຈະເລີນເຕີບໂຕ ຂອງເດັກຢູ່ໃນເຂດທົ່ງພຽງແມ່ນປະມານ 50% ແລະ ຢູ່ເຂດພູສູງພາກເໜືອ 58%.

### 1.2.2 ການຜະລິດສິນຄ້າກະສິກຳ

ອີງໃສ່ທ່າແຮງທາງດ້ານຊັບພະຍາກອນທຳມະຊາດ ແລະ ມູນເຊື້ອການຜະລິດຂອງປະຊາຊົນ ໃນແຕ່ລະທ້ອງຖິ່ນ ເຫັນວ່າ ການຜະລິດກະສິກຳເປັນສິນຄ້າ ໄດ້ມີການຂະຫຍາຍຕົວຢ່າງຕັ້ງໜ້າ ຊຶ່ງເປັນໜໍ່ແໜງໃຫ້ແກ່ການຜະລິດ ເປັນກຸ່ມ, ສະມາຄົມ ໂດຍສະເພາະ ນັບແຕ່ມີແນວທາງ ປ່ຽນແປງໃໝ່ ເປັນຕົ້ນມາ, ອັນພົ້ນເດັ່ນແມ່ນການປູກໄມ້ອຸດສາຫະກຳເຊັ່ນ: ຢາງພາລາ ແລະ ພືດສິນຄ້າຕ່າງໆ ເຊັ່ນ: ເຂົ້າ, ສາລີ, ກາເຟ, ຊາ, ອ້ອຍ, ຢາສູບ, ມັນຕົ້ນ, ພືດຜັກ, ແລະ ອື່ນໆ. ສຳຄັນກວ່າໝູ່ ແມ່ນໄດ້ມີການນຳໃຊ້ແນວພັນປັບປຸງຢ່າງກວ້າງຂວາງ ເພື່ອຍົກຜະລິດຕະພາບ ແລະ ມາດຖານການຜະລິດ ເພື່ອຕອບສະໜອງໃຫ້ໄດ້ຕາມຄວາມຕ້ອງການຂອງຕະຫລາດ.

ການຜະລິດພືດສິນຄ້າ ມາຮອດປີ 2012 ເຫັນວ່າມີການຂະຫຍາຍຕົວ ແລະ ເພີ່ມຂຶ້ນເປັນກ້າວໆ ຖ້າທຽບໃສ່ປີ 2006. ສະເພາະການສົ່ງອອກ ເຂົ້າ ສ່ວນໃຫຍ່ແມ່ນການຄ້າຕາມຊາຍແດນ ສະເລ່ຍປີໜຶ່ງ ປະມານ 400.000-500.000 ໂຕນ. ສຳລັບພືດສິນຄ້າອື່ນໆ ເປັນຕົ້ນແມ່ນ: ສາລີອາຫານສັດ ສາມາດຜະລິດໄດ້ ເກືອບ 1 ລ້ານໂຕນ ເພີ່ມຂຶ້ນ 126%, ກາເຟ ບັນລຸໄດ້ 87.330 ໂຕນ ເພີ່ມຂຶ້ນ 2 ເທົ່າ, ອ້ອຍ ບັນລຸໄດ້ 1.055.700 ໂຕນ ເພີ່ມຂຶ້ນເກືອບ 5 ເທົ່າ, ມັນຕົ້ນໄດ້ 1.060.880 ໂຕນ ເພີ່ມຂຶ້ນ 4 ເທົ່າ, ຊາ (ຕົ້ນນໍ້າ) ໄດ້ 3.980 ໂຕນ ເພີ່ມຂຶ້ນ 6 ເທົ່າ, ຢາສູບ ໄດ້ 75.560 ໂຕນ ເພີ່ມຂຶ້ນ 3 ເທົ່າ, ປະເພດຖົ່ວຕ່າງໆ ໄດ້ 60.200 ໂຕນ ເພີ່ມຂຶ້ນ 36%, ໝາກເດືອຍ ໄດ້ 122.300 ໂຕນ, ໝາກງາ ໄດ້ 13.900 ໂຕນ.

ສຳລັບການລ້ຽງສັດ ແລະ ການປະມົງເປັນສິນຄ້າ ມາຮອດປີ 2012 ກໍເຫັນວ່າ ໄດ້ມີການຂະຫຍາຍຕົວ ແລະ ມີປັດໃຈໃໝ່ເກີດຂຶ້ນຫຼາຍ ໂດຍສະເພາະ ແມ່ນການນຳໃຊ້ ແນວພັນປັບປຸງ ແລະ ກ້າວໄປສູ່ການລ້ຽງແບບອຸດສາຫະກຳ, ພົ້ນເດັ່ນແມ່ນ ການລ້ຽງໝູ ແບບເປັນຟາມຂະໜາດໃຫຍ່ ໄດ້ເພີ່ມຂຶ້ນ ຈາກຈຳນວນແມ່ພັນ 13.910 ໂຕ ໃນປີ 2011 ມາເປັນ 20.220 ແມ່ (775 ຟາມ) ໃນປີ 2012 ແລະ ສາມາດຜະລິດລູກໝູໄດ້ 385.000 ໂຕຕໍ່ປີ; ໃນນີ້ ຫຼາຍແຂວງໄດ້ມີການພັດທະນາ ແລະ ຂະຫຍາຍຕົວ; ພົ້ນເດັ່ນທີ່ສຸດ ແມ່ນ: ແຂວງວຽງຈັນ, ນະຄອນຫລວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ ແລະ ຈຳປາສັກ. ສຳລັບຟາມລ້ຽງສັດໃຫຍ່ ຢູ່ຫຼາຍແຂວງກໍເລີ່ມມີໜໍ່ແໜງ ແລະ ມີການຂະຫຍາຍຕົວ ເຊັ່ນ: ແຂວງບໍ່ແກ້ວ, ວຽງຈັນ, ບໍລິຄຳໄຊ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ ແລະ ນະຄອນຫລວງວຽງຈັນ. ໃນປີ 2012 ສັງລວມການລ້ຽງງົວ ແບບມີການກັກຂັງ ເປັນບໍລິເວນຊັດເຈນ ມີທັງໝົດ 285 ຟາມ, ມີງົວທັງໝົດ 31.800 ໂຕ. ການສົ່ງອອກສັດໃຫຍ່ຕາມຊາຍແດນ ໄປປະເທດໃກ້ຄຽງ ໂດຍລວມແລ້ວ ແມ່ນເພີ່ມຂຶ້ນຍ້ອນລາຄາສັດໃຫຍ່ໄດ້ເພີ່ມສູງຂຶ້ນ. ການລ້ຽງແບ້ແບບເປັນຟາມກັກຂັງ ກໍມີການຂະຫຍາຍຕົວ ແລະ ເພີ່ມຂຶ້ນ ຄື: ຈາກ 43 ຟາມ ໃນປີ 2010 ມາເປັນ 68 ຟາມ ໃນປີ 2012; ຈຳນວນແບ້ ກໍເພີ່ມຂຶ້ນຫຼາຍກວ່າ 65%. ຟາມສັດປີກ ກໍມີການຂະຫຍາຍຕົວດີພໍສົມຄວນ; ໃນປີ 2012 ມີຟາມໄກ່ຊີ້ນ ທັງໝົດ 91 ຟາມ

ມີໄກ່ຊີ້ນທັງຫມົດ 444.000 ໂຕ, ຟາມໄກ່ໄຂ່ ມີທັງໝົດ 252 ຟາມ ຈຳນວນແມ່ໄກ່ໄຂ່ ທັງໝົດ ເກືອບ 1,4 ລ້ານໂຕ, ຟາມເປັດໄຂ່ ມີ 82 ຟາມ ມີແມ່ເປັດທັງໝົດ 176.800 ໂຕ, ຟາມເປັດຊີ້ນ ມີ 7 ຟາມ ມີເປັດຊີ້ນ ປະມານ 15.900 ໂຕ, ນອກນັ້ນ ຍັງມີຟາມລ້ຽງນົກກະທາ ຊຶ່ງມີທັງຫມົດ 24 ຟາມ.

ການລ້ຽງປາ ກໍມີການຂະຫຍາຍຕົວເພີ່ມຂຶ້ນ ໂດຍສະເພາະ ການລ້ຽງໃສ່ກະຊັງ ຢູ່ບັນດາເຂດຕົວເມືອງລຽບຕາມແຄມແມ່ນ້ຳຂອງ ແລະ ສາຂາແມ່ນ້ຳທີ່ສຳຄັນຕ່າງໆ, ປະຈຸບັນມີກະຊັງລ້ຽງປາທັງໝົດ 4.500 ກະຊັງ ທຽບໃສ່ປີ 2005 ເພີ່ມຂຶ້ນ 1,4 ເທົ່າໂຕ. ສັງລວມ ການລ້ຽງປາ ທຸກຮູບແບບ ແມ່ນສາມາດສະໜອງຊີ້ນປາ ໃຫ້ແກ່ສັງຄົມໄດ້ ປະມານ 82.100 ໂຕນ ເພີ່ມຂຶ້ນ 38% ຖ້າທຽບໃສ່ປີ 2005. ຟາມລ້ຽງກຸ້ງ ກໍມີໜໍ່ແໜງ ຂະຫຍາຍຕົວ ຊຶ່ງປະຈຸບັນ ມີແລ້ວ 2 ຟາມ ໃນເນື້ອທີ່ 80 ເຮັກຕາ ຊຶ່ງສາມາດສະໜອງກຸ້ງ ໃຫ້ແກ່ຕະຫລາດພາຍໃນ ໄດ້ປະມານ 100 ກິໂລຕໍ່ມື້. ການຄົ້ນຄວ້າທົດລອງ ແລະ ຜະລິດແນວພັນປາ ກໍໄດ້ຮັບການພັດທະນາເປັນກ້າວໆມາ; ມາຮອດປີ 2012 ສາມາດຜະລິດແນວພັນປາ ໄດ້ທັງໝົດ 150 ລ້ານໂຕ ແລະ ໄດ້ເຮັດການບໍລິການແນວພັນປາ ໃຫ້ແກ່ສັງຄົມ ໄດ້ທັງໝົດ 80 ລ້ານໂຕ.

ຕີລາຄາລວມແລ້ວ ເຫັນວ່າ ການຜະລິດກະສິກຳເປັນສິນຄ້າ ຂອງສປປລາວ ໄດ້ມີບາດກ້າວ ຂະຫຍາຍຕົວ ແລະ ເພີ່ມຂຶ້ນເປັນລຳດັບ, ໃນນີ້ ພົ້ນເດັ່ນກວ່າໝູ່ ແມ່ນການສົ່ງອອກສາລີອາຫານສັດ, ກາເຟ, ກ້ວຍ, ຜົນຜະລິດຈາກມັນຕົ້ນ ແລະ ອ້ອຍ. ການຜະລິດ ແລະ ສົ່ງອອກກາເຟ ສູ່ຕະຫລາດສາກົນ ຖືວ່າເປັນຕົວຢ່າງສິນຄ້າທີ່ດີ ໃນການພັດທະນາສິນຄ້າເພື່ອສົ່ງອອກ ແລະ ແມ່ນຜະລິດຕະພັນ ກະສິກຳ ຂອງລາວທີ່ເປັນທີ່ຍອມຮັບຂອງ ຕະຫຼາດສາກົນ. ເຖິງຢ່າງໃດກໍຕາມ ສິນຄ້າກະສິກຳ ສ່ວນຫຼວງຫຼາຍ ແມ່ນຍັງບໍ່ທັນມີການປຸງແຕ່ງເພື່ອສ້າງມູນຄ່າເພີ່ມ, ສ່ວນໃຫຍ່ ແມ່ນຜະລິດຕະພັນຂັ້ນຕົ້ນ ຫລື ເປັນວັດຖຸດິບ ຈຶ່ງສ້າງລາຍຮັບໄດ້ໜ້ອຍ. ການລົງທຶນກໍຍັງບໍ່ມີຈຸດສຸມ ແລະ ບໍ່ທັນເປັນລະບົບຄົບຊຸດ ແລະ ໝັ້ນຄົງເທື່ອ ນັບແຕ່ຂອດການຜະລິດ ໄປຈົນຮອດຂອດປຸງແຕ່ງ ແລະ ການຕະຫຼາດ ຊຶ່ງບັນຫາ ແລະ ປະກົດການນີ້ຈະຕ້ອງໄດ້ອອກແຮງປັບປຸງແກ້ໄຂໃນຕໍ່ໜ້າ.

### 1.2.3 ການພັດທະນາພື້ນຖານໂຄງລ່າງ ແລະ ພື້ນຖານວັດຖຸເຕັກນິກຕ່າງໆ

ໃນໄລຍະຜ່ານມາ ທາງຂະແໜງການໄດ້ສຸມໃສ່ຟື້ນຟູ, ຂະຫຍາຍ ແລະ ກໍ່ສ້າງພື້ນຖານໂຄງລ່າງຊົນລະປະທານ ເພື່ອຮັບປະກັນ ການສະໜອງນ້ຳຊົນລະປະທານ ໃຫ້ແກ່ເນື້ອທີ່ການຜະລິດກະສິກຳ; ມາຮອດປີ 2014 ທົ່ວປະເທດ ມີໂຄງການຊົນລະປະທານທັງໝົດ 18.067 ໂຄງການ; ໃນນີ້ ລະບົບນ້ຳໄຫຼເອງ ມີ 3.345 ໂຄງການ, ລະບົບຈັກສູບນ້ຳ ມີ 1.828 ໂຄງການ ແລະ ຝາຍປະຖົມປະຖານ ມີ 12.894 ໂຄງການ ຊຶ່ງສາມາດສະໜອງນ້ຳໃຫ້ແກ່ການຜະລິດລະດູຝົນ ໄດ້ທັງໝົດ 272.300 ເຮັກຕາ (ສຳລັບປູກເຂົ້າ 262.600 ເຮັກຕາ ແລະ ປູກພືດ 9.700 ເຮັກຕາ) ແລະ ສະໜອງໃຫ້ແກ່ການຜະລິດລະດູແລ້ງໄດ້ທັງໝົດ 173.300 ເຮັກຕາ (ສຳລັບປູກເຂົ້າ 127.500 ເຮັກຕາ ແລະ ສຳລັບປູກພືດ 45.800 ເຮັກຕາ).

ນອກຈາກນັ້ນ, ພື້ນຖານວັດຖຸ-ເຕັກນິກ ອັນຈຳເປັນໃຫ້ແກ່ການຜະລິດ ຈຳນວນໜຶ່ງ ກໍໄດ້ ຮັບການ

ປັບປຸງໃຫ້ດີຂຶ້ນ ເພື່ອສ້າງປະຖົມປັດໄຈພື້ນຖານ ຮັບໃຊ້ການຜະລິດ ໄປຄຽງຄູ່ກັບການ ປັບປຸງກຳລັງການຜະລິດ ໂດຍສະເພາະແມ່ນ ການສ້າງຕັ້ງກຸ່ມການຜະລິດ ເຊັ່ນ: ກຸ່ມຜູ້ຜະລິດເຂົ້າ ແລະ ກຸ່ມປູກພືດອຸດສາຫະກຳ ແລະ ປູກພືດຜັກອິນຊີຕ່າງໆ, ເຮັດໃຫ້ການຜະລິດ ຕິດພັນກັບການປຸງແຕ່ງ, ການຕະຫຼາດ, ການບໍລິການ ແລະ ສ້າງວຽກເຮັດງານທຳໃຫ້ແກ່ຊາວກະສິກອນນັບມື້ນັບເພີ່ມຂຶ້ນ ຊຶ່ງສະແດງອອກ ມາຮອດປະຈຸບັນ ໃນທົ່ວປະເທດ ມີ ກຸ່ມຜະລິດທັງໝົດ 2.720 ກຸ່ມ ໃນນີ້ ກຸ່ມລ້ຽງສັດ ແລະ ປາ 1.670 ກຸ່ມ ແລະ ກຸ່ມປູກຝັງ 1.050 ກຸ່ມ, ນອກນີ້ ຍັງມີສະມາຄົມ ທີ່ພົ້ນເດັ່ນ ເຊັ່ນ: ສະມາຄົມກາເຟລາວ ຊຶ່ງປະກອບດ້ວຍສະມາຄົມຜູ້ຜະລິດ ແລະ ຜູ້ສົ່ງອອກກາເຟລາວ. ບົດຮຽນທີ່ດີ ຈາກແຂວງຄຳມ່ວນ ແລະ ສະຫວັນນະເຂດ ແມ່ນ ການສ້າງ ແລະ ປັບປຸງ ກຸ່ມຜູ້ຜະລິດໃຫ້ມີຄວາມເຂັ້ມແຂງ ຊຶ່ງປະກອບມີ ກຸ່ມຜະລິດແນວພັນເຂົ້າ, ກຸ່ມນຳໃຊ້ນ້ຳຊົນລະປະທານ, ກຸ່ມປູກເຂົ້າ, ກຸ່ມຜູ້ປຸງແຕ່ງ ຫຼື ກຸ່ມໂຮງສີ; ໂດຍແມ່ນກຸ່ມໂຮງສີ ເປັນຜູ້ເຮັດໜ້າທີ່ ບໍລິການສອງສົ້ນ ຄື: ເກັບຊື້ແນວເຂົ້າ ຊະນິດທີ່ຕະຫຼາດຕ້ອງການ ຈາກກຸ່ມຜະລິດແນວພັນເຂົ້າ ເພື່ອສະ ໜອງ ໃຫ້ກຸ່ມຜູ້ປູກເຂົ້າ ແລະ ສະໜອງປັດໃຈຂາເຂົ້າ ໃຫ້ກຸ່ມຜູ້ປູກເຂົ້າ, ທັງເປັນຜູ້ເກັບຊື້ເຂົ້າ ຈາກກຸ່ມຜູ້ປູກ ເຂົ້າ ເພື່ອມາປຸງແຕ່ງ ແລະ ຂາຍ. ໃນເວລາດຽວກັນ ບັນດາກຸ່ມໂຮງສີເຂົ້າ ຈະເປັນ ຜູ້ເກັບຮັກສາ ເພື່ອສ້າງເປັນຄັງແຮເຂົ້າ ໂດຍພາກລັດ ເປັນຜູ້ສະໜອງນະໂຍບາຍ ເພື່ອໃຫ້ບັນດາກຸ່ມ ໂດຍສະເພາະ ກຸ່ມໂຮງສີ ສາມາດເຂົ້າເຖິງແຫຼ່ງທຶນສິນເຊື່ອ ແລະ ຕະຫຼາດ. ການພົວພັນການຜະລິດ ລະຫວ່າງ ບັນດາ ກຸ່ມຄືດັ່ງທີ່ກ່າວຢູ່ຂ້າງເທິງ ເປັນໜໍ່ແໜງ ສ້າງໃຫ້ເຂົາເຈົ້າ ມີຄວາມເຂັ້ມແຂງຂຶ້ນ ເພື່ອກ້າວໄປເປັນ ສະມາຄົມ ແລະ ສະຫະກອນແບບໃໝ່ ເທື່ອລະກ້າວໃນອະນາຄົດ.

ໄປຄຽງຄູ່ກັນນັ້ນ, ຂະແໜງກະສິກຳ ແລະ ປ່າໄມ້ ໄດ້ສືບຕໍ່ ສົ່ງເສີມການນຳໃຊ້ ແນວພັນເຂົ້າປັບປຸງ ເພີ້ມຂຶ້ນເຖິງ 41% ຂອງ ຜູ້ປູກເຂົ້າທົ່ວປະເທດ, ຈາກຕາຫນ່າງ ທີ່ກະຈາຍໃນທົ່ວປະເທດ ມີເຖິງ 1.300 ກຸ່ມຜະລິດ. ຕາໜ່າງດັ່ງກ່າວ ໄດ້ກາຍເປັນກຳລັງແຮງ ເພື່ອຂະຫຍາຍຖານການຜະລິດແນວພັນ ເຂົ້າ ອອກສູ່ວົງກ້ວາງ. ຈາກບົດຮຽນການຜະລິດແນວພັນ ໃນຜ່ານມາ, ຂະແໜງກະສິກຳ ແລະ ປ່າໄມ້ ໄດ້ວາງຄາດຫມາຍສູ້ຊົນ ໃຫ້ຕອບສະຫນອງແນວພັນເຂົ້າປັບປຸງ ແລະ ແນວພັນດີ ໃຫ້ໄດ້ 100% ສຳລັບ ລະດູແລ້ງ. ຄຽງຄູ່ກັບແນວພັນ, ຍັງສືບຕໍ່ປະຕິບັດນະໂຍບາຍຊຸກຍູ້ ການນຳໃຊ້ຝຸ່ນ ໂດຍມີການສົມທົບລະອຽດ ກັບ ກະຊວງອຸດສະກະກຳ ແລະ ການຄ້າ. ການນຳໃຊ້ ຝຸ່ນເຄມີ ແລະ ຝຸ່ນຊີວະພາບ ຂອງຄອບຄົວຜະລິດກະສິກຳ ກວມເຖິງ 40% ຂອງຄອບຄົວ ເຮັດກະສິກຳທັງໝົດທົ່ວປະເທດ. ສ່ວນການນຳໃຊ້ກົນຈັກ ເຫັນວ່າ ເພີ້ມຂຶ້ນສູງສົມຄວນ ທຽບໃສ່ 10 ປີ ຜ່ານມາ, ຊາວນາ ໃຊ້ລົດໄຖນາ ມີເຖິງ 64% ຂອງຈຳນວນຊາວນາທົ່ວປະເທດ ຊຶ່ງຕົ້ນຕໍ ແມ່ນລົດໄຖນາ ເດີນຕາມ.

### 1.2.4 ການຮ່ວມມື ແລະ ລົງທຶນໃນຂະແໜງກະສິກຳ

ໃນໄລຍະຜ່ານມາ ພັກ ແລະ ລັດຖະບານໄດ້ສຸມການລົງທຶນໃນຂະແໜງ ກະສິກຳ ແລະ ປ່າໄມ້ ຫຼາຍພໍສົມຄວນ. ບໍລິມາດການລົງທຶນທັງໝົດ ສະເພາະ 5 ປີຜ່ານມາ ມີປະມານ 17.315 ຕື້ກີບ, ໃນນີ້ ໄດ້ຈາກງົບປະມານ ຂອງລັດ ກວມເອົາ 385 ຕື້ກີບ, ທຶນຈາກການຊ່ວຍເຫຼືອລ້າ ແລະ ກູ້ຢືມມີປະມານ 12.030

ຕື້ກີບ, ການລົງທຶນພາຍໃນ ແລະ ຕ່າງປະເທດ (FDI) ປະມານ 4.900 ຕື້ກີບ, ໃນນີ້ ເກືອບ 70% ຂອງທຶນທີ່ໄດ້ມາ ແມ່ນມາຈາກແຫຼ່ງທຶນຊ່ວຍເຫຼືອ ເພື່ອການພັດທະນາ. ແຕ່ຖ້າເບິ່ງເລິກເຖິງ ໂຄງປະກອບການລົງທຶນເຫັນວ່າ: ສອງສ່ວນສາມ (2/3) ຂອງທຶນການ ຊ່ວຍເຫຼືອສາກົນເພື່ອການ ພັດທະ ນາແມ່ນລົງໃສ ການກໍ່ສ້າງລະບົບຊົນລະປະທານ ແລະ ເສັ້ນທາງຊົນນະບົດ, ປະມານ 50% ຂອງສ່ວນທີ່ຍັງເຫຼືອແມ່ນ ນຳໃຊ້ສຳລັບຈ້າງຊ່ຽວຊານ, ສ່ວນເຫຼືອອີກເຄິ່ງໜຶ່ງແມ່ນນຳໃຊ້ເພື່ອການກໍ່ສ້າງ ບຸກຄະລາກອນ ແລະ ການຄົ້ນຄ້ວາສິ່ງເສີມເຕັກນິກ ແລະ ນຳໃຊ້ເປັນກອງທຶນ. ໄດ້ຈ້າງຊ່ຽວຊານມາຊ່ວຍ ສະເພາະດ້ານ ທີ່ໄດ້ມາດຕະຖານຕາມ ທີ່ໄດ້ກຳນົດໄວ້ໃນສັນຍາ ການຮ່ວມມື ກັບຜູ້ໃຫ້ທຶນ. ເຖິງຢ່າງໃດກໍ່ຕາມ ມາຮອດ ປະຈຸບັນ ຂະແໜງກະສິກຳ ໄດ້ມີຄວາມ ພະຍາຍາມ ຫຼຸດຈຳນວນ ຊ່ຽວຊານຕ່າງ ປະເທດເທົ່າທີ່ຈະຫຼຸດໄດ້ ແລະ ເພີ່ມຊ່ຽວຊານ ພາຍໃນ ເທົ່າທີ່ຈຳເປັນ. ສຳລັບ ງົບປະມານ ທີ່ມີຢູ່ທ້ອງຖິ່ນກໍຄ້າຍຄືກັນ, ສ່ວນໃຫຍ່ແມ່ນລົງທຶນໃສ່ກໍ່ສ້າງໂຄງລ່າງ, ສ່ວນງົບປະມານ ສຳລັບ ວຽກງານວິຊາການ ລວມທັງວຽກງານ ຄົ້ນຄວ້າທົດລອງ ແລະ ສົ່ງເສີມການຜະລິດ ແມ່ນມີ ຈຳກັດຫຼາຍ.

ການລົງທຶນໃສ່ວຽກງານປ້ອງກັນພະຍາດ, ລະບົບການກວດກາ ຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ສິນຄ້າກະສິກຳ-ປ່າໄມ້ ແລະ ລະບົບ "ສຸຂະນາໄມພືດ ແລະ ສັດ" (SPS) ແມ່ນຍັງຈຳກັດຫຼາຍ. ຖ້າປະເທດພວກເຮົາຈະເປັນປະເທດສົ່ງອອກ ສິນຄ້າກະສິກຳ ແລະ ປ່າໄມ້ ໃນລະບຽບການ ຂອງອາຊ່ຽນ ແລະ ອົງການການຄ້າໂລກ (WTO) ຕ້ອງມີລະບົບການກວດກາພະຍາດ, ຢັ້ງຢືນຄຸນນະພາບ ແລະ ມາດຕະຖານການຜະລິດ. ດັ່ງນັ້ນ ການພັດທະນາ ລະບົບສຸຂະນາໄມພືດ ແລະ ສັດ (SPS) ແລະ ລະບົບມາດຖານການຜະລິດ ໃນລາວ ຈຶ່ງຖືເປັນວຽກບູລິມະສິດ ອັນດັບໜຶ່ງ ແລະ ຕ້ອງໄດ້ດຶງດູດ ເອົາການສະໜັບສະໜູນຈາກທຸກພາກສ່ວນ.

### 1.2.5 ການພັດທະນາຊັບພະຍາກອນມະນຸດ ໃນຂະແໜງກະສິກຳ ແລະ ປ່າໄມ້

ໃນໄລຍະຜ່ານມາ ຂະແໜງກະສິກຳ ແລະ ປ່າໄມ້ ໄດ້ເອົາໃຈໃສ່ ໃນການກໍ່ສ້າງ ແລະ ບຳລຸງພະນັກງານ ໃນຂະແໜງການຂອງຕົນເພື່ອຍົກສູງ ຄວາມຮູ້ ແລະ ຄວາມສາມາດ ຂອງພະນັກງານ-ລັດຖະກອນ ທັງ 3 ປະເພດ ໃຫ້ສູງຂຶ້ນເທື່ອລະກ້າວ ຊຶ່ງສະແດງອອກ ມາຮອດປະຈຸບັນ ໃນທົ່ວປະເທດ ມີ ພະນັກງານ-ລັດຖະກອນທັງໝົດ 9.317 ຄົນ[1]; ຍິງ 2.373 ຄົນ ເທົ່າກັບ 25% ຂອງລັດຖະກອນທັງໝົດ; ໃນນີ້ ຢູ່ບັນດາກົມອ້ອມຂ້າງກະຊວງ 1.420 ຄົນ, ຍິງ 445 ຄົນ ເທົ່າກັບ 15.24%, ຂັ້ນແຂວງ 2.913 ຄົນ, ຍິງ 707 ຄົນ ເທົ່າກັບ 31,27%, ຂັ້ນເມືອງ 4.651 ຄົນ, ຍິງ 1,080 ຄົນ ເທົ່າກັບ 49,92% ແລະ ຢູ່ບັນດາວິທະຍາໄລ ແລະ ໂຮງຮຽນ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ຈຳນວນ 5 ແຫ່ງ ມີ 333 ຄົນ, ຍິງ 141 ຄົນ ເທົ່າກັບ 3,57%.

[1] ຂໍ້ມູນຮອດເດືອນ ມັງກອນ 2014 (ກົມຈັດຕັ້ງ ແລະ ພະນັກງານ)

ຈຳນວນພະນັກງານ-ລັດຖະກອນ ແຍກຕາມລະດັບວິຊາສະເພາະ: ລະດັບປະລິນຍາເອກ 44 ຄົນ, ຍິງ 5 ຄົນ, ປະລິນຍາໂທ 560 ຄົນ, ຍິງ 73 ຄົນ, ປະລິນຍາຕີ 2.298 ຄົນ, ຍິງ 603 ຄົນ, ຊັ້ນສູງ 3.177 ຄົນ, ຍິງ 745 ຄົນ, ຊັ້ນກາງ 2.967 ຄົນ, ຍິງ 872 ຄົນ, ຊັ້ນຕົ້ນ 228 ຄົນ, ຍິງ 61 ຄົນ, ບໍ່ມີວິຊາສະເພາະ 43 ຄົນ, ຍິງ 14 ຄົນ.

ສັງລວມແລ້ວການກໍ່ສ້າງ ແລະ ບັນຈຸພະນັກງານໃນແຕ່ລະຂັ້ນ ເມື່ອທຽບໃສ່ຄວາມຕ້ອງການ ຕົວຈິງທາງດ້ານວິຊາການສະເພາະດ້ານ ທີ່ຈະນຳພາປະຊາຊົນໃນການປູກ-ການລ້ຽງ ຕົວຈິງ ແມ່ນຍັງບໍ່ທັນ ດຸ່ນດ່ຽງ, ຍັງມີສະພາບພະນັກງານເຫລືອບໍ່ພໍ ເປັນຕົ້ນແມ່ນ ບາງຂະແໜງ ວິຊາການມີຫຼາຍ ແຕ່ບາງຂະແໜງວິຊາການ ແມ່ນບໍ່ພຽງພໍ ເຊັ່ນ: ວິຊາການປ້ອງກັນພືດ, ປູກຝັງ, ວິໄຈດິນ, ພະຍາດພືດ, ສັດຕະວະແພດ ແລະ ການປະມົງ.

## 1.3 ສາເຫດທີ່ພາໃຫ້ມີຜົນສຳເລັດ

1) ພັກ ແລະ ລັດຖະບານ ໄດ້ມີແນວທາງນະໂຍບາຍທີ່ຖືກຕ້ອງ, ມີນິຕິກຳຮອງຮັບ ແລະ ໄດ້ກຳນົດຍຸດທະສາດການພັດທະນາທີ່ສອດຄ່ອງ ໂດຍສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ທຸກພາກສ່ວນເສດຖະກິດ ໄດ້ເຂົ້າຮ່ວມຢ່າງຕັ້ງໜ້າ.
2) ປະຊາຊົນ, ຜູ້ປະກອບການ, ຊາວກະສິກອນ ໄດ້ມີຄວາມຕື່ນຕົວ ແລະ ຫ້າວຫັນໃນການຜະລິດ. ມີຄວາມພະຍາຍາມ ຢາກປັບປຸງກຳລັງການຜະລິດ, ການຈັດຕັ້ງກຸ່ມ, ຈັດຕັ້ງສະມາຄົມ ເພື່ອສ້າງຄວາມເຂັ້ມແຂງ ເຂົ້າເຖິງຂໍ້ມູນຂ່າວສານ ແລະ ການຕະຫຼາດ
3) ການນຳໃຊ້ເຕັກນິກວິທະຍາສາດ ເຂົ້າໃນການຜະລິດກະສິກຳ ນັບມື້ຂະຫຍາຍຕົວ ແລະ ໄດ້ຮັບການພັດທະນາຂຶ້ນ. ຕາໜ່າງການສົ່ງເສີມກະສິກຳ ກໍ່ໄດ້ຮັບການປັບປຸງເປັນກ້າວໆ.
4) ພື້ນຖານໂຄງລ່າງ ເປັນຕົ້ນແມ່ນ ລະບົບຊົນລະປະທານ, ສູນຄົ້ນຄວ້າທົດລອງ, ສູນຜະລິດແນວພັນ, ຫ້ອງວິໄຈພະຍາດພືດ ແລະ ສັດ, ສະຖານີບໍລິການດ້ານເຕັກນິກຕ່າງໆ ນັບມື້ນັບເພີ່ມຂຶ້ນ ແລະ ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວເປັນກ້າວໆ.
5) ໂຄງປະກອບການຈັດຕັ້ງ ໃນຂະແໜງກະສິກຳ ແລະ ປ່າໄມ້ ໄດ້ຮັບການປັບປຸງ ເປັນແຕ່ລະໄລຍະເພື່ອໃຫ້ສອດຄ່ອງ. ຖັນແຖວພະນັກງານບໍລິຫານ, ຄຸ້ມຄອງ ແລະ ວິຊາການ ໄດ້ຮັບການກໍ່ສ້າງ, ບຳລຸງ ແລະ ຍົກລະດັບຢູ່ພາຍໃນ ແລະ ຕ່າງປະເທດຢ່າງຕໍ່ເນື່ອງ.
6) ການລົງທຶນພາຍໃນ, ຕ່າງປະເທດ ແລະ ໂຄງການຊ່ວຍເຫຼືອຕ່າງໆຂອງສາກົນ ນັບມື້ນັບເພີ່ມຂຶ້ນ.

## 1.4 ບັນດາຂໍ້ຈຳກັດ, ຂໍ້ຄົງຄ້າງ ແລະ ສາເຫດ

1) ການເຜີຍແຜ່ເຊື່ອມຊຶມມະຕິ, ຄຳສັ່ງ, ແຜນຍະໂຍບາຍຂອງພັກ, ກົດໝາຍ ແລະ ນິຕິກຳຕ່າງໆຂອງລັດ ກ່ຽວກັບວຽກງານກະສິກຳ ແລະ ປ່າໄມ້ ຍັງບໍ່ທັນກວ້າງຂວາງ, ທົ່ວເຖິງ ແລະ ລົງເລິກສູ່ທ້ອງຖິ່ນ ຮາກຖານການຜະລິດ ຈຶ່ງເຮັດໃຫ້ການຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງ ແລະ ການຈັດ

ຕັ້ງປະຕິບັດຕົວຈິງ ຍັງບໍ່ທັນໄດ້ດີ ຕະຫຼອດຮອດ ການປະຕິບັດກົດໝາຍ, ລະບຽບການ ແລະ ມາດຕະການດ້ານວິຊາການ ຕ່າງໆ ກໍບໍ່ທັນເຂັ້ມງວດເທົ່າທີ່ຄວນ.

2) ດິນກະສິກຳພວກເຮົາມີຫຼາຍ ແຕ່ການຄຸ້ມຄອງ, ວາງແຜນ, ຈັດສັນ, ແບ່ງເຂດ ສຳລັບ ແຕ່ລະເປົ້າໝາຍການຜະລິດຍັງບໍ່ທັນໄດ້ດີ ແລະ ຍັງບໍ່ທັນໄດ້ຖືກຂຸດຄົ້ນໝົດທ່າແຮງທີ່ມີ ໂດຍສະເພາະໃນເຂດ 7 ທົ່ງພຽງໃຫຍ່ ແລະ ບັນດາທົ່ງພຽງອື່ນໆ. ພ້ອມດຽວກັນ ນັ້ນ, ວຽກງານມອບດິນ-ມອບປ່າ ໃຫ້ປະຊາຊົນຄຸ້ມຄອງນຳໃຊ້ ເຖິງວ່າໄດ້ປະຕິບັດໄປແລ້ວສ່ວນໜຶ່ງ ກໍຕາມ ແຕ່ ການຊຸກຍູ້ ສົ່ງເສີມ ຕິດຕາມ ການນຳໃຊ້ ຍັງບໍ່ທັນເຮັດໄດ້ດີ.

3) ການປະສານສົມທົບ ລະຫວ່າງຂະແໜງການທີ່ກ່ຽວຂ້ອງ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ ຍັງບໍ່ທັນໄດ້ຕໍ່ເນື່ອງ. ການປັບປຸງກຳລັງການຜະລິດ ແລະ ຕ່ອງໂສ້ການຜະລິດ ໂດຍສະ ເພາະການສ້າງຕັ້ງກຸ່ມ ເຖິງວ່າ ມີໜໍ່ແໜງ ແຕ່ກໍຍັງບໍ່ທັນໄດ້ຂະຫຍາຍຢ່າງກວ້າງຂວາງ; ຢູ່ບ່ອນທີ່ມີກຸ່ມການຜະລິດ ທີ່ເຂັ້ມແຂງແລ້ວ ພັດຍັງບໍ່ທັນໄດ້ຮັບການຊຸກຍູ້ສົ່ງເສີມ ດ້ວຍນະໂຍບາຍ ແລະ ມາດຕະການທີ່ເໝາະສົມ ໂດຍສະເພາະ ທາງດ້ານ ພື້ນຖານໂຄງລ່າງ, ຂາດພະນັກງານຜູ້ພາປູກ-ພາລ້ຽງ ຕະຫຼອດຮອດ ການໃຫ້ສິນເຊື່ອ ແລະ ອື່ນໆ.

4) ການສ້າງຕາໜ່າງປ້ອງກັນພືດ-ສັດ ແລະ ການຂະຫຍາຍແນວພັນເຂົ້າ, ແນວພັນພືດ ແລະ ແນວພັນສັດ ຍັງບໍ່ທັນໄດ້ກວ້າງຂວາງ; ລະບົບການຜະລິດ ນັບແຕ່ຂອດການຜະລິດ ໄປຈົນຮອດການປຸງແຕ່ງ ແລະ ການຕະຫຼາດ ບໍ່ທັນເປັນຕ່ອງໂສ້ທີ່ເກາະກ່າຍກັນ ຈຶ່ງເຮັດໃຫ້ຂະບວນການຜະລິດ ຍັງບໍ່ທັນຮັບປະກັນ ທັງທາງ ດ້ານປະລິມານ ແລະ ຄຸນນະພາບ.

5) ສູນຄົ້ນຄວ້າ ແລະ ບໍລິການເຕັກນິກຍັງບໍ່ທັນເຂັ້ມແຂງ, ຍັງບໍ່ທັນສາມາດ ເຮັດໜ້າທີ່ການເມືອງໄດ້ຢ່າງເຕັມເມັດເຕັມໜ່ວຍ. ຫຼາຍສູນຍັງຂາດພະນັກງານວິຊາການທີ່ມີປະສົບການ ແລະ ຄວາມຊຳນານງານ ຕະຫຼອດຮອດ ງົບປະມານ ເພື່ອເຄື່ອນໄຫວວຽກງານ ກໍຍັງມີຈຳກັດ.

6) ຄວາມສາມາດແຂ່ງຂັນຂອງສິນຄ້າກະສິກຳຍັງຕໍ່າ, ການສົ່ງອອກສ່ວນຫຼາຍຍັງແມ່ນການຄ້າຂາຍຊາຍແດນ ແລະ ຈຳກັດຢູ່ພາຍໃນຂົງເຂດອະນຸພາກພື້ນລຸ່ມແມ່ນ້ຳຂອງ. ຍັງຂາດປັດໃຈເອື້ອອຳນວຍ ໃຫ້ແກ່ການຜະລິດສິນຄ້າກະສິກຳ ເປັນຕົ້ນແມ່ນ ການສ້າງ ແລະ ປັບປຸງວຽກສຸຂານາໄມພືດ ແລະ ສັດ.

7) ການລົງທຶນເຂົ້າໃນຂະແໜງກະສິກຳ ແລະ ປ່າໄມ້ ໂດຍສະເພາະ ການລົງທຶນໃສ່ ການປູກ-ການລ້ຽງ ແລະ ການຄົ້ນຄວ້າທົດລອງ ລວມທັງການລົງທຶນຂອງລັດ, ຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດຍັງຈຳກັດ. ການລົງທຶນໃນຜ່ານມາ ສ່ວນໃຫຍ່ແມ່ນເນັ້ນໃສ່ການກໍ່ສ້າງພື້ນຖານໂຄງລ່າງຊົນລະປະທານ; ແຕ່ການນຳໃຊ້ໂຄງການຈຳນວນໜຶ່ງທີ່ໄດ້ລົງທຶນໄປແລ້ວ ພັດຍັງບໍ່ທັນມີປະສິດຕິຜົນ.

## 1.5. ບົດຮຽນ ທີ່ຖອດຖອນໄດ້

1) ບ່ອນໃດມີການຜັນຂະຫຍາຍມະຕິຂອງພັກ ແລະ ແຜນພັດທະນາເສດຖະກິດຂອງລັດ ໃຫ້ເປັນນະໂຍບາຍ, ແຜນງານ, ໂຄງການ ແລະ ແຜນວຽກລະອຽດ ບວກໃສ່ຄວາມເປັນເຈົ້າການ ຂອງອົງການ

ປົກຄອງທ້ອງຖິ່ນ ແລະ ມີການເຂົ້າຮ່ວມຂອງ ຂະແໜງການທີ່ກ່ຽວຂ້ອງ ຕະຫຼອດຮອດ ການເຂົ້າຮ່ວມຂອງປະຊາຊົນ ແລະ ຜູ້ປະກອບການ ເຫັນວ່າ ຢູ່ບ່ອນນັ້ນ ແມ່ນສາມາດປະຕິບັດໄດ້ດີ ແລະ ປະສົບຜົນສຳເລັດ.

2) ນະໂຍບາຍ ແລະ ນິຕິກຳຕ່າງໆ ກ່ຽວກັບ ວຽກງານພັດທະນາ ກະສິກຳ ແລະ ການຫັນເປັນ ອຸດສາຫະກຳ ແລະ ທັນສະໄໝ ໃນຂະແໜງກະສິກຳ ມີຄວາມຈຳເປັນຕ້ອງໄດ້ປັບປຸງ ໃຫ້ສອດຄ່ອງ ແລະ ທ່ວງທັນກັບ ຄວາມຕ້ອງການ ໃນການພັດທະນາ ໃນແຕ່ລະໄລຍະ.
3) ການຜະລິດກະສິກຳ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ ຕິດພັນກັບ ການປຸງແຕ່ງຜົນຜະລິດກະສິກຳ ແລະ ການຕະຫຼາດ ໄປຄຽງຄູ່ກັບ ການສ້າງ ແລະ ປັບປຸງ ກຸ່ມການຜະລິດໃຫ້ເຂັ້ມແຂງ ໂດຍການເຂົ້າຮ່ວມ ຂອງທຸກພາກສ່ວນເສດຖະກິດ ຄືດັ່ງບົດຮຽນ ຂອງກຸ່ມຜະລິດກາເຟ ແລະ ກຸ່ມຜະລິດພືດອຸດສາຫະກຳອື່ນໆ ແມ່ນເປັນເງື່ອນໄຂ ແລະ ສາມາດ ຍູ້ແຮງ ເຮັດໃຫ້ຂະແໜງກະສິກຳ ມີຄວາມເຂັ້ມແຂງ ແລະ ເຕີບໂຕໄວ.
4) ການປະສານສົມທົບລະຫວ່າງ ຂະແໜງການທີ່ກ່ຽວຂ້ອງ ທັງໃນ ລະດັບສູນກາງ ແລະ ທ້ອງຖິ່ນ ເປັນຕົ້ນແມ່ນ: ອຸດສາຫະກຳ-ການຄ້າ, ການເງິນ, ທະນາຄານ, ໂຍທາທິການແລະຂົນສົ່ງ ແລະ ອື່ນໆ ໃຫ້ມີຄວາມກົມກຽວ, ສະໜັບສະໜູນຊຶ່ງກັນແລະກັນຢ່າງ ແໜ້ນແຟ້ນ ແລະ ໄປລວງດຽວກັນ ນັ້ນຖືເປັນປັດໃຈທີ່ສຳຄັນ ໃນການຊຸກຍູ້ ສົ່ງເສີມ ການຜະລິດ ກະສິກຳ ແລະ ປ່າໄມ້ ໃຫ້ແຂງແຮງ.
5) ການພັດທະນາກະສິກຳຕ້ອງມີຈຸດສຸມ ຕິດພັນກັບການພັດທະນາຕາມເຂດແຄ້ວນ, ທ່າແຮງ ແລະ ສະພາບຈຸດພິເສດ ຂອງທີ່ຕັ້ງ, ພື້ນທີ່, ຄວາມໄດ້ປຽບ ແລະ ກາລະໂອກາດ ໂດຍການນຳໃຊ້ທ່າແຮງດ້ານທີ່ຕັ້ງ ທີ່ມີລັກສະນະເປັນຍຸດທະສາດຂອງປະເທດ ສົມທົບກັບຄວາມອຸດົມສົມບູນ ຂອງຊັບພະຍາກອນທຳມະຊາດ, ຄວາມຫຼາກຫຼາຍທາງດ້ານນິເວດກະສິກຳ, ຄວາມໝັ້ນຄົງທາງດ້ານການເມືອງ ແລະ ມູນເຊື້ອຄວາມດຸໝັ່ນ ຂອງຊາວກະສິກອນລາວ ເພື່ອຫັນເຂດການຜະລິດ ໃຫ້ເປັນ ສະໜາມຮົບ ດ້ານການຜະລິດກະສິກຳ.
6) ການນຳໃຊ້ເຕັກນິກໃໝ່ ທີ່ເໝາະສົມ, ລວມທັງ ການນຳໃຊ້ກົນຈັກກະສິກຳ, ການຄັດເລືອກ ແນວພັນທີ່ດີ, ແທດເໝາະ ກັບສະພາບຈຸດພິເສດ ຂອງແຕ່ລະທ້ອງຖິ່ນ ບວກໃສ່ກັບ ການຮັບປະກັນ ການສະໜອງນ້ຳ, ການປັບປຸງບຳລຸງດິນ ແລະ ການປົວລະບັດຮັກສາ ແລະ ການປະຕິບັດຫຼັກການຜະລິດກະສິກຳທີ່ດີ ຖືເປັນເງື່ອນໄຂ ອັນຈຳເປັນ ໃນການຍົກຄຸນນະພາບ ແລະ ຜະລິດຕະພາບໃຫ້ສູງຂຶ້ນ.

# II. ວິໄສທັດ ແລະ ເປົ້າໝາຍຍຸດທະສາດ

## 2.1 ບ່ອນອີງໃນການກຳນົດຍຸດທະສາດ

ຍຸດທະສາດກະສິກຳຮອດປີ 2025 ແລະ ວິໄສທັດຮອດປີ 2030 ໄດ້ຖືກກຳນົດຂຶ້ນ ໂດຍສອດຄ່ອງກັບ ແນວທາງ, ແຜນນະໂຍບາຍ ແລະ ທິດນຳ ຂອງພັກ ແລະ ແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ ຂອງລັດຖະບານ ໃນແຕ່ລະໄລຍະ ແລະ ກຳນົດຂຶ້ນ ບົນພື້ນຖານສະພາບ, ເງື່ອນໄຂ, ຈຸດພິເສດ ແລະ ທ່າແຮງ ຕົວຈິງ ຂອງ ສປປລາວ ແລະ ຍັງສອດຄ່ອງ ກັບສະພາບເງື່ອນໄຂ ແຫ່ງການຂະຫຍາຍຕົວ ຂອງພາກພື້ນ ແລະ ສາກົນ ໂດຍສະເພາະແມ່ນ ເປົ້າໝາຍ ສະຫະສະວັດແຫ່ງການພັດທະນາ. ການກຳນົດ ຍຸດທະສາດ ກະສິກຳ ຮອດປີ 2025 ຕົ້ນຕໍ ແມ່ນອີງໃສ່ບັນດາເອກະສານທີ່ສຳຄັນຕົ້ນຕໍ ຄືດັ່ງລຸ່ມນີ້:

- ມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງ ພັກປະຊາຊົນປະຕິວັດລາວ.
- ແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດຄັ້ງທີ VII (2011-2015) ແລະ ແຜນພັດທະນາ ກະສິກຳ ແລະ ປ່າໄມ້ 5 ປີ ຄັ້ງທີ 7 (2011-2015).
- ຍຸດທະສາດ ຄ້ຳປະກັນ ສະບຽງອາຫານແຫ່ງຊາດ ແລະ ທິດທາງແຜນການ ພັດທະນາກະສິກຳ ແລະ ປ່າໄມ້ ໃນ 07 ທົ່ງພຽງ ຮອດປີ 2010 ທີ່ລັດຖະບານຮັບຮອງ ຕາມແຈ້ງການ ສະບັບເລກທີ 140/ຫສນຍ.ກລຂ, ລົງວັນທີ 03/02/2004.
- ຍຸດທະສາດການສົ່ງອອກແຫ່ງຊາດ ໃນໄລຍະປີ 2011-2015 ສະບັບເລກທີ 344/ນຍ, ລົງວັນທີ 16/12/2009.
- ຍຸດທະສາດປ່າໄມ້ ຮອດປີ 2020 ຂອງ ສປປລາວ (ດຳລັດຂອງນາຍົກລັດຖະມົນຕີ ຮັບຮອງສະບັບ ເລກທີ 229/ນຍ, ລົງວັນທີ 9/08/2005.
- ຍຸດທະສາດແຫ່ງການຂະຫຍາຍຕົວ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ (NGPES).
- ມະຕິຕົກລົງຂອງກອງປະຊຸມລັດຖະບານເປີດກວ້າງ ປະຈຳ 6 ເດືອນຕົ້ນປີ 2012-2013 ສະບັບ ເລກທີ 04/ລບ, ລົງວັນທີ 30/4/2013.
- ເປົ້າໝາຍສະຫັດສະວັດ ແຫ່ງການພັດທະນາ (MDGs).
- ນະໂຍບາຍແຫ່ງຊາດ ວ່າດ້ວຍໂພສະນາການ ສະບັບເລກທີ 744/ກຊສ, ລົງວັນທີ 27/11/2008 (ດຳລັດຮັບຮອງສະບັບເລກທີ 248/ນຍ, ລົງວັນທີ 01/12/2008), ແລະ ຍຸດທະສາດ ແລະ ແຜນ ປະຕິບັດງານແຫ່ງຊາດ ວ່າດ້ວຍໂພສະນາການ (2010-2015).
- ແຜນງານ ພັດທະນາຊົນນະບົດ ຂອງ ລັດຖະບານ.
- ຍຸດທະສາດ ແລະ ແຜນງານອື່ນໆທີ່ກ່ຽວຂ້ອງຂອງລັດຖະບານ.

## 2.2 ຄາດຄະເນສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ສິ່ງທ້າທາຍ

ປະຈຸບັນ ປະຊາກອນຂອງໂລກ ມີປະມານ 7 ຕື້ ຄົນ; ໃນນັ້ນ 925 ລ້ານຄົນ ຍັງຕ້ອງການອາຫານເພີ້ມ ແລະ ທ່າອ່ຽງຂອງປະຊາກອນໂລກ ຈະເພີ້ມຂື້ນເຖິງ 7,5 ຕື້ ຄົນ ໃນປີ 2015, ປະມານ 8 ຕື້

ໃນປີ 2020 ແລະ 9,2 ຕື້ ໃນປີ 2050. ໃນເວລາດຽວກັນ ປະຊາກອນ ທີ່ອຶດຫິວ ແມ່ນເພີ່ມຂຶ້ນກາຍ 1 ຕື້ຄົນແລ້ວ. ສຳລັບ ສປປລາວ ຄາດຄະເນປະຊາກອນ ຮອດປີ 2020 ມີປະມານ 7,5 ລ້ານຄົນ, ຮອດປີ 2025 ປະມານ 8,3 ລ້ານຄົນ; ໃນນີ້ບໍ່ລວມຈຳນວນ ນັກທ່ອງທ່ຽວທີ່ເຂົ້າມາລາວໃນແຕ່ລະປີ. ເພື່ອຮອງຮັບການເຕີບໂຕ ຂອງປະຊາກອນດັ່ງກ່າວ ອົງການອາຫານ ແລະ ການກະເສດ (FAO) ໄດ້ປະເມີນຄວາມຕ້ອງການ ແລະ ໄດ້ຮຽກຮ້ອງ ໃຫ້ບັນດາປະເທດ ໃນທົ່ວໂລກ ຕ້ອງເພີ່ມ ປະລິມານການຜະລິດສະບຽງອາຫານທີ່ມີ ໃນປະຈຸບັນ ຂຶ້ນອີກໃຫ້ໄດ້ 60%.

ຕາມການຄາດຄະເນ ຂອງອົງການສະຫະປະຊາຊາດ, ເສດຖະກິດຂອງໂລກ ແລະ ພາກພື້ນ ມີສັນຍານທາງບວກ ທີ່ຈະຟື້ນຕົວເປັນກ້າວໆ. ສຳລັບ ບາງປະເທດໃກ້ຄຽງ ເຊັ່ນ: ສປ.ຈີນ, ອິນເດຍ... ເສດຖະກິດ ສືບຕໍ່ຂະຫຍາຍຕົວສູງ ກາຍເປັນຜູ້ຂັບເຄື່ອນ ເສດຖະກິດໂລກ ໃນທົດສະວັດນີ້; ບັນດາປະເທດອາຊຽນ, ປະເທດຄູ່ຮ່ວມເຈລະຈາ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນຕ່າງໆ ຍັງຈະສືບຕໍ່ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອແກ່ປະເທດດ້ອຍພັດທະນາ ເພື່ອຫຼຸດຜ່ອນ ຄວາມແຕກໂຕນກັນທາງດ້ານການພັດທະນາ. ການເຂົ້າຮ່ວມເປັນ ສະມາຊິກຂອງ ອົງການການຄ້າໂລກ ຂອງ ສປປ ລາວ ແລະເຂົ້າຮ່ວມ ໃນຂະບວນການຄ້າເສລີອາຊຽນ, ອາຊຽນ+3, ອາຊີຕາເວັນອອກ ຈະເປັນໂອກາດດີ ໃນການເຂົ້າເຖິງຕະຫຼາດສາກົນ ຫຼາຍຂຶ້ນ. ການຄົ້ນຄວ້ານຳໃຊ້ ວິທະຍາສາດ ເຕັກໂນໂລຢີ ແລະ ການພັດທະນາ ແບບກ້າວກະໂດດ ຍັງເປັນທ່າອ່ຽງລວມຂອງໂລກ ແລະ ເປັນໂອກາດດີ ທີ່ສາມາດຍາດແຍ່ງ ແລະ ນຳໃຊ້ ເຂົ້າໃນຂະບວນ ການຜະລິດສະບຽງອາຫານ ແລະ ສິນຄ້າ ກະສິກຳ ຢູ່ ສປປລາວ. ການເຊື່ອມໂຍງດ້ານເສດຖະກິດ ຂອງປະເທດ ເຂົ້າກັບເສດຖະກິດພາກພື້ນ ແລະ ສາກົນ ເປັນເງື່ອນໄຂ ແລະ ນິມິດໝາຍທີ່ສຳຄັນ ໃນການຍູ້ແຮງ ການພັດທະນາຂະແໜງກະສິກຳ ຂອງ ສປປ ລາວ ໃຫ້ກ້າວຂຶ້ນ ໂດຍສະເພາະພາຍຫຼັງທີ່ ສປປລາວ ໄດ້ເຂົ້າເປັນສະມາຊິກ ຂອງອົງການ ການຄ້າໂລກ.

ໄປຄຽງຄູ່ກັບ ກາລະໂອກາດ ແລະ ສິ່ງເອື້ອອຳນວຍ ຄືດັ່ງທີ່ກ່າວຂ້າງເທິງນັ້ນ, ການພັດທະນາກະສິກຳ ຂອງ ສປປລາວເຮົາ ຍັງປະເຊີນກັບສິ່ງທ້າທາຍ ຫຼາຍປະການ ເປັນຕົ້ນແມ່ນ:

1) ຄວາມໜາແໜ້ນ ຂອງປະຊາກອນ ນັບມື້ເພີ່ມຂຶ້ນ, ຄວາມຕ້ອງການ ສະບຽງອາຫານ ທັງທາງດ້ານປະລິມານ ແລະ ຄຸນນະພາບ ກໍເພີ່ມຂຶ້ນ ໂດຍສະເພາະ ແມ່ນການຍົກສູງ ມາດຕະຖານ ດ້ານຄວາມປອດໄພ ຂອງອາຫານ ແລະ ສຸຂະນາໄມ ຂອງສິນຄ້າກະສິກຳ ກໍນັບມື້ສູງຂຶ້ນ.
2) ການປ່ຽນແປງຂອງສະພາບອາກາດ ແລະ ໄພຂົ່ມຂູ່ ຈາກໄພທຳມະຊາດ (ເຊັ່ນ: ນ້ຳຖ້ວມ, ແຫ້ງແລ້ງ, ສັດຕູພືດລະບາດ, ການລະບາດຂອງພະຍາດສັດລ້ຽງ, ດິນເຊາະເຈື່ອນ ແລະ ອື່ນໆ) ຊຶ່ງທັງໝົດນັ້ນ ຍັງເປັນໄພຂົ່ມຂູ່ ແລະ ມີຄວາມສ່ຽງສູງຕໍ່ການຜະລິດກະສິກຳຂອງລາວໃນຕໍ່ໜ້າ.
3) ລະດັບ ໃນການແກ້ງແຍ້ງ ແຂ່ງຂັນ ຂອງຕະຫຼາດ ນັບມື້ເພີ່ມຂຶ້ນ ນຳໄປສູ່ ຄວາມຕ້ອງການ ຄວາມປອດໄພ ທາງດ້ານສະບຽງອາຫານ ແລະ ມາດຖານສິນຄ້າກະສິກຳ ກໍນັບມື້ນັບເພີ່ມຂຶ້ນເຊັ່ນດຽວກັນ.

4) ຄວາມຕ້ອງການ ທີ່ດິນ ສຳລັບ ການຜະລິດເພີ່ມຂຶ້ນ ຍ້ອນທ່າອ່ຽງ ການແກ້ງແຍ້ງທາງດ້ານທີ່ດິນ ເພື່ອຜະລິດພືດສະບຽງ, ພືດສິນຄ້າ ແລະ ພືດອຸດສາຫະກຳ ໂດຍສະເພາະ ພືດທີ່ໃຫ້ນ້ຳມັນ, ພືດທີ່ເປັນພະລັງງານ, ພືດທີ່ໃຫ້ຢາງອື່ນໆ ລວມທັງການພັດທະນາ ພື້ນຖານໂຄງລ່າງ ນັບມື້ເພີ່ມຂຶ້ນ ຈະເຮັດໃຫ້ທີ່ດິນ ສຳລັບການຜະລິດສະບຽງ ນັບມື້ຫຼຸດລົງ.
5) ຊັບພະຍາກອນທຳມະຊາດ ລວມທັງ ແຫຼ່ງພະລັງງານ ນັບມື້ນັບຫຼຸດລົງ ໃນເວລາດຽວກັນ ລາຄານ້ຳມັນ ຈະມີແນວໂນ້ມເພີ່ມສູງຂຶ້ນ, ອາດຈະສົ່ງຜົນເຮັດໃຫ້ຕົ້ນທຶນການຜະລິດ ສູງຂຶ້ນ, ຊຶ່ງມີຄວາມຈຳເປັນຕ້ອງໄດ້ສຶກສາຄົ້ນຄວ້າ ເພື່ອພັດທະນາ ແລະ ປັບປຸງຮູບແບບ ຫຼື ວິທີການຜະລິດໃນຕໍ່ໜ້າໃຫ້ແທດເໝາະ ແນໃສ່ເພື່ອສ້າງມູນຄ່າເພີ່ມໃຫ້ສູງຂຶ້ນ ແລະ ຫຼຸດຜ່ອນຕົ້ນທຶນການຜະລິດໃຫ້ຕ່ຳລົງ.
6) ການພັດທະນາແບບຍືນຍົງ ຕິດພັນກັບການອະນຸລັກສິ່ງແວດລ້ອມ ເປັນສິ່ງທ້າທາຍ ໃນເງື່ອນໄຂທີ່ມີການຊຸກຍູ້ ສົ່ງເສີມການປູກພືດສິນຄ້າ ທີ່ມີທ່າແຮງສູງ, ໂດຍສະເພາະແມ່ນບັນຫາ ທີ່ຈະເກີດຂຶ້ນ ເຊັ່ນ: ດິນເຊື່ອມໂຊມ, ການນຳໃຊ້ສານເຄມີເພີ້ມຂຶ້ນ ແລະ ອື່ນໆ.

## 2.3 ທິດນຳຂອງພັກ, ທັດສະນະ ແລະ ວິໄສທັດຂອງຂະແໜງການ

### 2.3.1 ທິດນຳຂອງພັກ ແລະ ລັດຖະບານ ຕໍ່ວຽກງານກະສິກຳ

ມະຕິກອງປະຊຸມໃຫຍ່ຂອງພັກ ໃນແຕ່ລະໄລຍະ ໂດຍສະເພາະ ມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ ໄດ້ກຳນົດທິດທາງ ແລະ ໜ້າທີ່ວຽກງານຈຸດສຸມ ສຳລັບການພັດທະນາ ວຽກງານກະສິກຳ ທີ່ນອນໃນຂົງເຂດເສດຖະກິດ ຄື: ***"ພັດທະນາກະສິກຳ ແບບປະສົມປະສານ, ຮັບປະກັນຄວາມໝັ້ນຄົງ ທາງດ້ານສະບຽງອາຫານ..."***[2]. ຂະແໜງກະສິກຳ ແລະ ປ່າໄມ້ ຍັງແມ່ນ ຂະແໜງການພື້ນຖານ ໃນໂຄງປະກອບເສດຖະກິດແຫ່ງຊາດ. ພວກເຮົາຕ້ອງສຸມໃສ່ ເສີມຂະຫຍາຍຄວາມສາມາດບົ່ມຊ້ອນ ທາງດ້ານການກະສິກຳ ແລະ ປ່າໄມ້ຢ່າງຮອບດ້ານ, ສ້າງໃຫ້ມີການຫັນປ່ຽນທີ່ຕັ້ງໜ້າ ຕາມທິດ ເຮັດກະສິກຳສະອາດ, ຂະຫຍາຍການເຮັດກະເສດສຸມ ທີ່ທັນສະໄໝ ແລະ ມີປະສິດຕິພາບສູງ; ໝູນໃຊ້ ວິທະຍາສາດ-ເຕັກນິກທີ່ກ້າວໜ້າ ທັນສະໄໝ ເຂົ້າໃສ່ພື້ນຖານການຜະລິດ ໃຫ້ນັບມື້ ນັບກວ້າງຂວາງ, ຈຳກັດການຜະລິດ ແບບເປີດກວ້າງເນື້ອທີ່, ຮີບຮ້ອນຈັດວາງ ໂຄງປະກອບການປູກຝັງ-ລ້ຽງສັດຄືນໃໝ່ ໃຫ້ເໝາະສົມຕາມທ່າແຮງ ຂອງແຕ່ລະບໍລິເວນ, ປະກອບສ່ວນເຂົ້າໃນຂະບວນການສາມສ້າງ ຄື: "ສ້າງແຂວງໃຫ້ເປັນຫົວໜ່ວຍ ຍຸດທະສາດ, ສ້າງເມືອງໃຫ້ເຂັ້ມແຂງຮອບດ້ານ ແລະ ສ້າງບ້ານ ໃຫ້ເປັນຫົວໜ່ວຍ ພັດທະນາ", ໂດຍສ້າງ ໃຫ້ມີເຂດຜະລິດກະສິກຳສະເພາະ ເຊັ່ນ: ເຂດປູກເຂົ້າ, ເຂດລ້ຽງສັດ, ເຂດປູກພືດຜັກປອດສານພິດ, ເຂດປູກພືດອຸດສາຫະກຳ ແລະ ອື່ນໆ.... ເອົາໃຈໃສ່ຊຸກຍູ້ ວຽກງານຄົ້ນຄວ້າ ການນຳໃຊ້ແນວພັນໃໝ່, ເຕັກນິກວິທະຍາການໃໝ່ ເຂົ້າໃນການຜະລິດໃຫ້ວ່ອງໄວ ຕິດພັນກັບການຊຸກຍູ້ ຜູ້ປະກອບການ ແລະ ສ້າງຄອບຄົວຕົວແບບໃຫ້ແຜ່ຫຼາຍ ພ້ອມທັງສົ່ງເສີມໃຫ້ມີການປຸງແຕ່ງ ຜົນຜະລິດ ກະສິກຳ ແລະ ປ່າໄມ້ ທີ່ເໝາະ ສົມກັບແຕ່ລະບໍລິເວນ.

---

[2] ຂັດຈາກ ມະຕິກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ.

ຕ້ອງເລັ່ງລັດ ການຈັດສັນທີ່ດິນກະສິກຳ ໃນຂອບເຂດທົ່ວປະເທດ ໃຫ້ສຳເລັດ ໂດຍຮັບປະກັນ ໃຫ້ມີເນື້ອທີ່ດິນ ສຳລັບການຜະລິດ ສະບຽງອາຫານຢ່າງພຽງພໍ ໃນນີ້ ໃຫ້ສຸມໃສ່ ພັດທະນາ 7 ທົ່ງພຽງ ບຸລິມະສິດ ແລະ ບັນດາທົ່ງພຽງກາງ, ທົ່ງພຽງນ້ອຍ ຢ່າງເປັນລະບົບຄົບຊຸດ ເພື່ອສ້າງຄວາມໝັ້ນຄົງ ທາງ ດ້ານສະບຽງອາຫານ. ສຳຄັນທີ່ສຸດ ຕ້ອງສຸມໃສ່ ປັບປຸງ ຍົກລະດັບ ຊົນລະປະທານ ໃຫ້ແໜ້ນໜາ ຖາວອນ ທັງຄຸ້ມຄອງ ນຳໃຊ້ ໃຫ້ມີປະສິດທິຜົນສູງ, ສ້າງຕັ້ງ ແລະ ປັບປຸງ ສູນສົ່ງເສີມ ຫຼື ສູນພັດທະນາກະສິກຳ, ຫັນການຄົ້ນຄວ້າ ລົງຮັບໃຊ້ ເຂດຈຸດສຸມການຜະລິດ ໃນແຕ່ລະບໍລິເວນ ເພື່ອຜະລິດແນວພັນ ທັງເຮັດບົດບາດ ໃຫ້ການແນະນຳ ຝຶກອົບຮົມ ທາງດ້ານເຕັກນິກ-ວິຊາການ ໃຫ້ແກ່ຊາວກະສິກອນ, ຈັດຕັ້ງກຸ່ມ ຊາວກະສິກອນ ເພື່ອເຮັດໃຫ້ການ ພັດທະນາກະສິກຳ ແລະ ຊົນນະບົດ ມີຄວາມຍືນຍົງ, ສືບຕໍ່ປະຕິບັດ ນະໂຍບາຍຈັດສັນທີ່ດິນ ແລະ ມອບດິນ-ມອບປ່າ ໃຫ້ແຕ່ລະບ້ານ ປົກປັກຮັກສາ, ນຳໃຊ້ ພ້ອມທັງ ມອບສິດນຳໃຊ້ທີ່ດິນຢ່າງຍາວນານ ໃຫ້ແຕ່ລະຄອບຄົວ ຊາວກະສິກອນ ໃນເຂດຊົນນະບົດ ເພື່ອໃຫ້ເຂົາເຈົ້າ ມີຄວາມອຸ່ນອ່ຽນ ທຳການຜະລິດ. ການຂະຫຍາຍ ກະສິກຳ ໃນເຂດຊົນນະບົດ ຕ້ອງປະຕິບັດ ຄົບຊຸດ, ຕິດພັນກັບການປຸງແຕ່ງ ແລະ ການບໍລິການ ປະສົມປະສານ ຕະຫຼອດ ຂະບວນ ວິວັດ ແຫ່ງການຫັນ ເປັນອຸດສາຫະກຳທີ່ທັນສະໄໝ ແລະ ການເຊື່ອມໂຍງເຂົ້າກັບສາກົນ ຕິດພັນກັບ ການຂະຫຍາຍຕົວ ຂອງຊຸມຊົນ ແລະ ຕົວເມືອງນ້ອຍ, ຕິດພັນກັບການຫັນເປັນທັນສະໄໝ. ຄຽງຄູ່ກັນນັ້ນ ການພັດທະນາກະສິກຳ ຕ້ອງຕິດພັນກັບກຳລັງແຮງຂອງກົນໄກຕະຫຼາດ ຕາມທິດສັງຄົມນິຍົມ, ເສີມຂະຫຍາຍກຳລັງແຮງ ຂອງວິທະຍາສາດ ບວກກັບການນຳໃຊ້, ຂຸດຄົ້ນບັນດາກຳລັງແຮງງານ ແລະ ຊັບພະຍາກອນທີ່ມີ: ແຮງງານ, ທີ່ດິນ, ແຫຼ່ງນ້ຳ ແລະ ປ່າໄມ້ ສົມທົບກັບການສະໜັບສະໜູນ ການລົງທຶນ ພາຍໃນ ແລະ ຕ່າງປະເທດ[3].

### 2.3.2 ທັດສະນະ

ພັກ ແລະ ລັດຖະບານ ໄດ້ກຳນົດເອົາ ການຜະລິດກະສິກຳ ເປັນວຽກໜຶ່ງ ໃນໂຄງປະກອບເສດຖະກິດ ຕາມທິດ ຖືເອົາກະສິກຳ ເປັນພື້ນຖານ ໃຫ້ແກ່ອຸດສາຫະກຳ ແລະ ການບໍລິການ ແລະ ເປັນພື້ນຖານໃຫ້ແກ່ ເສດຖະກິດແຫ່ງຊາດ.

### 2.3.3 ວິໄສທັດ ຮອດປີ 2030

ວິໄສທັດ ຂອງຂະແໜງການກະສິກຳ ແມ່ນ: **"ຮັບປະກັນຄວາມໝັ້ນຄົງ ທາງດ້ານສະບຽງ ອາຫານ, ຜະລິດສິນຄ້າກະສິກຳທີ່ມີທ່າແຮງ, ພັດທະນາກະສິກຳສະອາດ, ປອດໄພ ແລະ ຍືນຍົງ ບົນພື້ນຖານ ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ຕິດພັນກັບການພັດທະນາຊົນນະບົດ ເພື່ອປະກອບສ່ວນ ສ້າງພື້ນຖານເສດຖະກິດແຫ່ງຊາດ".**

---

[3] ຂັດຈາກ ລາຍງານການເມືອງຂອງຄະນະບໍລິຫານງານ ສູນກາງພັກ ສະໄໝທີ VIII ສະເໜີຕໍ່ກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ (ປຶ້ມເອກະສານກອງປະຊຸມໃຫຍ່ຄັ້ງທີ IX ພັກປະຊາຊົນປະຕິວັດລາວ; 2011).

## 2.4 ເປົ້າໝາຍ

### 2.4.1 ເປົ້າໝາຍລວມ

1) ພື້ນຖານເສດຖະກິດມີການຂະຫຍາຍຕົວ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ ທີ່ໜັກແໜ້ນ, ມີພື້ນຖານໂຄງລ່າງທີ່ເປັນລະບົບຄົບຊຸດ, ຮັບປະກັນໃຫ້ແກ່ການເຕີບໂຕທາງດ້ານເສດຖະກິດໃຫ້ຢູ່ໃນລະດັບເພີ່ມຂຶ້ນຕາມເກນປົກກະຕິ, ມີປະສິດທິຜົນ, ໝັ້ນທ່ຽງ ແລະ ຮັບປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ທັງຮັບປະກັນຄຸນນະພາບ ທາງດ້ານໂພຊະນາການ ຢ່າງໜັກແໜ້ນ, ຜະລິດສິນຄ້າກະສິກຳ ທີ່ມີປະລິມານ ແລະ ຄຸນນະພາບແຂ່ງຂັນສູງ ທັງສາມາດປັບໂຕ ເຂົ້າກັບການປ່ຽນແປງ ຂອງສະພາບດິນຟ້າອາກາດ.
2) ການຜະລິດກະສິກຳຖືກຕາມຫລັກການ ດ້ານສຸຂານາໄມ, ສະອາດ, ຮັບປະກັນຄວາມປອດໄພ ຕໍ່ສຸຂະພາບຂອງຜູ້ຜະລິດ-ບໍລິໂພກ ແລະ ເປັນມິດກັບສິ່ງແວດລ້ອມ.
3) ການຜະລິດກະສິກຳ ສາມາດປະກອບສ່ວນໃນດ້ານຕ່າງໆ ເຊັ່ນ: ການສ້າງວຽກເຮັດງານທຳ; ການເພີ່ມລາຍຮັບ ໃຫ້ແກ່ປະຊາຊົນ; ການຫຼຸດຜ່ອນຄວາມແຕກໂຕນກັນ ລະຫວ່າງຕົວເມືອງ ກັບຊົນນະບົດ, ກໍ່ສ້າງຊົນນະບົດໃໝ່ ໄປຄຽງຄູ່ ກັບການປົກປັກຮັກສາ ເອກະລັກວັດທະນະທຳ ຂອງປະຊາຊົນລາວບັນດາເຜົ່າ; ປົກປັກຮັກສາ ສິ່ງແວດລ້ອມ ແລະ ຄວາມສົມດຸນ ຂອງລະບົບນິເວດ.

### 2.4.2 ການກຳນົດເປົ້າໝາຍ ແລະ ຄາດໝາຍສູ້ຊົນ ຮອດປີ 2020

ຮອດປີ 2020 ສູ້ຊົນເຮັດໃຫ້ ລວມຍອດຜະລິດຕະພັນພາຍໃນ ຂອງຂະແໜງກະສິກຳ ແລະ ປ່າໄມ້ ຂະຫຍາຍຕົວ ໃຫ້ໄດ້ ໃນລະດັບສະເລ່ຍ 3,4%, ປະກອບສ່ວນ ໃນໂຄງປະກອບ ເສດຖະກິດແຫ່ງຊາດ ໃນອັດຕາສ່ວນ 19%.

#### 2.4.2.1 ເປົ້າໝາຍ (ແຜນງານ) ທີ 1: ການຜະລິດສະບຽງ

ເພື່ອຮັບປະກັນດ້ານໂພຊະນາການ ຂອງປະຊາຊົນໃຫ້ໄດ້ຮັບພະລັງງານບໍ່ໃຫ້ຫຼຸດ **2.600 ກິໂລກາລໍຣີຕໍ່ຄົນຕໍ່ວັນ**, ໃນນີ້ ເຂົ້າ ແລະ ທາດແປ້ງ ກວມປະມານ 62%, ຊີ້ນ, ໄຂ່ ແລະ ປາ ປະມານ 10%, ປະເພດ ພືດຜັກ, ໝາກໄມ້ ແລະ ປະເພດຖົ່ວ ກວມປະມານ 6% ແລະ ປະເພດໄຂມັນ/ນ້ຳມັນ, ນ້ຳຕານ ແລະ ນ້ຳນົມ ກວມປະມານ 22%. ເພື່ອຮັບປະກັນພະລັງງານຄືດັ່ງກ່າວ ຕ້ອງຮັບປະກັນດ້ານສະບຽງອາຫານແຕ່ລະ ປະເພດ ເພື່ອບໍລິໂພກໃນແຕ່ລະປີ ໃຫ້ໄດ້ຢ່າງໜ້ອຍ ຄືດັ່ງລາຍລະອຽດລຸ່ມນີ້[4]:

- ເຂົ້າສານ 160 ກິໂລ/ຄົນ/ປີ (ຫຼື ເທົ່າກັບປະມານ 280 ກິໂລເຂົ້າເປືອກ/ຄົນ/ປີ).
- ທາດແປ້ງ 5 ກິໂລ/ຄົນ/ປີ.

[4] ແຫຼ່ງຂໍ້ມູນ: ຍຸດທະສາດຄໍ້າປະກັນສະບຽງອາຫານ ສປປລາວ ໄລຍະ 2001-2010 ທີ່ຖືກຮັບຮອງຈາກລັດຖະບານ ໃນວັນທີ 3/2/2004, ຂໍ້ມູນຈາກ: Lao Expenditure and Consumption Survey (2002/03 and 2007/08 LECS) ແລະ ຂໍ້ມູນຈາກອົງການ FAO.

- ປະເພດຊີ້ນ, ປາ ແລະ ໄຂ່ 65 ກິໂລ/ຄົນ/ປີ; ໃນນີ້ເປັນຊີ້ນໝູ 13 ກິໂລ/ຄົນ/ປີ, ຊີ້ນສັດປີກ 9 ກິໂລ/ຄົນ/ປີ, ຊີ້ນອື່ນໆ 7 ກິໂລ/ຄົນ/ປີ, ໄຂ່ 6 ກິໂລ/ຄົນ/ປີ ແລະ ປາ 30 ກິໂລ/ຄົນ/ປີ.
- ປະເພດພືດຜັກ 50 ກິໂລ/ຄົນ/ປີ.
- ປະເພດຖົ່ວ-ງາ (ແຫ້ງ) 2 ກິໂລ/ຄົນ/ປີ.
- ສາລີ 2,5 ກິໂລ/ຄົນ/ປີ.
- ປະເພດ ພືດເປັນຫົວ (ເຜືອກ, ມັນ ຕ່າງໆ...) 2,5 ກິໂລ/ຄົນ/ປີ.
- ໝາກໄມ້ 30 ກິໂລ/ຄົນ/ປີ.
- ນ້ຳຕານ 1 ກິໂລ/ຄົນ/ປີ.
- ນ້ຳນົມ 3 ກິໂລ/ຄົນ/ປີ.
- ປະເພດໄຂມັນ/ນ້ຳມັນ 23 ກິໂລ/ຄົນ/ປີ.

ຕ້ອງສູ້ຊົນຜະລິດ ແລະ ສະໜອງ ເຂົ້າ, ພືດຜັກ, ປະເພດຖົ່ວ-ງາ, ໝາກໄມ້, ນ້ຳຕານ, ຊີ້ນ-ປາ ແລະ ໄຂ່ ໃຫ້ພຽງພໍ ແລະ ມີສ່ວນແຮໄວ້ ຊຶ່ງຕ້ອງໄດ້ເອົາໃຈໃສ່ ການຜະລິດສະບຽງທີ່ສຳຄັນ ດັ່ງນີ້:

1) ສູ້ຊົນຜະລິດເຂົ້າເປືອກລວມ <u>ໃຫ້ໄດ້ບໍ່ໃຫ້ຫຼຸດ 4,7 ລ້ານໂຕນ</u>; ຕາມອັດຕາສ່ວນ ເຂົ້າໜຽວປະມານ 70% ແລະ ເຂົ້າຈ້າວປະມານ 30%, ດ້ວຍອັດຕາການຂະຫຍາຍຕົວ ຂອງຜົນຜະລິດ ແຕ່ນີ້ຫາປີ 2020 ສະເລ່ຍໃຫ້ໄດ້ປະມານ 5% ຕໍ່ປີ (ໃນນີ້ ເນັ້ນໃສ່ການຍົກຜະລິດຕະພາບ ເປັນຕົ້ນຕໍ ໄປຄຽງຄູ່ ກັບ ການຂະຫຍາຍເນື້ອທີ່ ຕາມຄວາມອາດສາມາດຕົວຈິງ) ຊຶ່ງປະກອບມີລາຍລະອຽດ ຄື:

- ເຂົ້າສຳລັບຄ້ຳປະກັນສະບຽງອາຫານ ປະມານ 2,5 ລ້ານໂຕນ (ເຂົ້າເປືອກ) ຊຶ່ງລວມມີ:
  - ເຂົ້າບໍລິໂພກ 2,1 ລ້ານໂຕນ (ເຂົ້າເປືອກ) *(7,5 ລ້ານຄົນ X 280 ກິໂລເຂົ້າເປືອກ/ຄົນ/ປີ).*
  - ສາງແຮເຂົ້າ 400.000 ໂຕນ (ເຂົ້າສານ 240.000 ໂຕນ; ກຸ້ມໄດ້ປະມານ 2-3 ເດືອນ).
- ແນວພັນເຂົ້າປະມານ 100.000 ໂຕນ.
- ສຳລັບປຸງແຕ່ງພາຍໃນປະມານ 500.000 ຫາ 600.000 ໂຕນ.
- ເຂົ້າເປັນສິນຄ້າພາຍໃນ ແລະ ສົ່ງອອກບໍ່ໃຫ້ຫຼຸດ 1 ລ້ານໂຕນ.

2) ຜະລິດພືດຜັກ, ຖົ່ວ-ງາ ແລະ ໝາກໄມ້ ສຳລັບບໍລິໂພກເຊັ່ນ: ສາລີຫວານ ໃຫ້ໄດ້ ປະມານ 228.000 ໂຕນ, ເຜືອກ-ມັນ ໃຫ້ໄດ້ປະມານ 304.000 ໂຕນ, ປະເພດໄມ້ໃຫ້ໝາກ ໃຫ້ໄດ້ ປະມານ 800.000 ໂຕນ ແລະ ພືດຜັກອື່ນໆ ໃຫ້ໄດ້ປະມານ 1,5 ລ້ານໂຕນ.

3) ສູ້ຊົນຜະລິດຊີ້ນ, ປາ ແລະ ໄຂ່ ລວມໃຫ້ໄດ້ 487.500 ໂຕນ (ໃນນີ້, ຊີ້ນ ແລະ ໄຂ່ໃຫ້ໄດ້ 262.500 ໂຕນ, ປາ ແລະ ສັດນ້ຳໃຫ້ໄດ້ 225.000 ໂຕນຕໍ່ປີ) ເພື່ອຕອບສະໜອງອັດຕາ ການບໍລິໂພກລວມສະເລ່ຍ ໃຫ້ໄດ້ 65 ກິໂລຕໍ່ຄົນຕໍ່ປີ, ໃນນັ້ນ ເຂດຕົວເມືອງ ໃຫ້ໄດ້ 70 ກິໂລຕໍ່ຄົນຕໍ່ປີ ແລະ ເຂດຊົນ

ນະບົດ ໃຫ້ໄດ້ 50 ກິໂລຕໍ່ຄົນຕໍ່ປີ ແລະ ສູ້ຊົນເຮັດໃຫ້ອັດຕາການຂະຫຍາຍຕົວ ຂອງຝູງສັດ ຢູ່ໃນລະດັບປະມານ 6% ຕໍ່ປີ. ຂະຫຍາຍການລ້ຽງປາ ແລະ ສັດນ້ຳ ໃຫ້ໄດ້ 8-10% ຕໍ່ປີ.

### 2.4.2.2 ເປົ້າໝາຍ (ແຜນງານ) ທີ 2: ການຜະລິດສິນຄ້າກະສິກຳ

ຕ້ອງສູ້ຊົນເຮັດໃຫ້ການຜະລິດສິນຄ້າກະສິກຳ ມີການຂະຫຍາຍຕົວ ເພື່ອຮັບປະກັນທັງປະລິມານ ແລະ ຄຸນນະພາບ ແນໃສ່ໃຫ້ເຂົ້າເຖິງຕະຫຼາດ ພາຍໃນ, ພາກພື້ນ ແລະ ສາກົນ ໂດຍໃຫ້ຕິດພັນກັບການປັບປຸງກຸ່ມຊາວກະສິກອນ,ສະມາຄົມ ຜູ້ຜະລິດ ແລະ ປຸງແຕ່ງກະສິກຳຢ່າງແຂງແຮງ ໂດຍຕ້ອງ ສູ້ຊົນເຮັດໃຫ້ການຜະລິດກະສິກຳເປັນສິນຄ້າທີ່ສຳຄັນສືບຕໍ່ຂະຫຍາຍຕົວດັ່ງລຸ່ມນີ້:

1) ໃນຈຳນວນຄາດໝາຍຜົນຜະລິດເຂົ້າລວມທັງໝົດ; ຜະລິດເຂົ້າເປັນສິນຄ້າພາຍໃນ ແລະ ສົ່ງອອກ ໃຫ້ໄດ້ປະມານ 1 ລ້ານໂຕນເຂົ້າເປືອກ ໄປຄຽງຄູ່ກັບການສົ່ງເສີມ ການປູກເຂົ້າທີ່ມີທ່າແຮງຂອງແຕ່ລະທ້ອງຖິ່ນ ເປັນຕົ້ນ: ເຂົ້າກ່ຳ, ເຂົ້າໄກ່ນ້ອຍ, ເຂົ້າຫອມ ໃນເຂດທີ່ມີທ່າແຮງ ແລະ ມີເງື່ອນໄຂ, ແລະ ສົ່ງເສີມເຂົ້າພັນ ປັບປຸງໃໝ່ທີ່ມີຄຸນນະພາບ ແລະ ເປັນທີ່ຕ້ອງການຂອງຕະຫຼາດ ເປັນຕົ້ນ: ເຂົ້າທ່າດອກຄຳ, ເຂົ້າທ່າສະໂນ, ເຂົ້າໂພນງາມ ແລະ ເຂົ້າຫອມອື່ນໆ ໃນເຂດທົ່ງພຽງຕ່າງໆ. ເພີ່ມສັດສ່ວນ ການປູກເຂົ້າຈ້າວໃຫ້ກວມເອົາ 30% ຂອງຜົນຜະລິດທັງໝົດ, ໃນນັ້ນ ເລັ່ງໃສ່ຜະລິດເຂົ້າ ເພື່ອສົ່ງອອກໃນມາດຕະຖານກະສິກຳທີ່ດີ (GAP) ໂດຍເລັ່ງໃສ່ຕະຫຼາດພາກພື້ນ ແລະ ສາກົນ. ສຳລັບຢູ່ບັນດາທົ່ງພຽງນ້ອຍ ແລະ ທົ່ງພຽງກາງ ຂອງແຂວງພາກເໜືອ ແມ່ນສຸມໃສ່ ຜະລິດເຂົ້າເປັນສິນຄ້າ ເພື່ອສະໜອງໃຫ້ ສ.ປ.ຈີນ ແລະ ປະເທດໃກ້ຄຽງ ໂດຍນຳໃຊ້ແນວພັນເຂົ້າ ທີ່ຕະຫຼາດຕ້ອງການ.

2) **ສຳລັບພືດຕ່າງໆ**: ຜະລິດສາລີອາຫານສັດ ໃຫ້ບັນລຸປະມານ 1,3 ລ້ານໂຕນ, ກາເຟ ໃຫ້ໄດ້ປະມານ 120.000 ໂຕນ, ອ້ອຍ ໃຫ້ໄດ້ຫຼາຍກ່ວາ 2 ລ້ານໂຕນ, ມັນຕົ້ນ ໃຫ້ໄດ້ປະມານ 1,5 ລ້ານໂຕນ, ຖົ່ວເຫຼືອງ ໃຫ້ໄດ້ປະມານ 50.000 ໂຕນ. ນອກນັ້ນ ກໍສູ້ຊົນຜະລິດພືດສິນຄ້າອື່ນໆ ທີ່ມີທ່າແຮງໄດ້ປຽບຕາມທີ່ຕະຫຼາດຕ້ອງການ ເພື່ອເປັນສິນຄ້າພາຍໃນ ແລະ ສົ່ງອອກ.

3) **ສຳລັບການລ້ຽງສັດ**: ສູ້ຊົນຫັນການລ້ຽງສັດແບບທຳມະຊາດ ໄປສູ່ການລ້ຽງແບບເປັນຟາມໃຫ້ສາມາດສະໜອງຜົນຜະລິດ ຈາກຟາມໃຫ້ໄດ້ 30% ຂອງຜົນຜະລິດສັດທັງໝົດ. ສຸມໃສ່ການລ້ຽງສັດ ພັນປັບປຸງ ເພື່ອເປັນສິນຄ້າ ສະໜອງ ຕະຫລາດພາຍໃນ ໃຫ້ພຽງພໍ ແລະ ສູ້ຊົນສືບຕໍ່ສົ່ງອອກສັດໃຫຍ່ ປະເພດງົວ, ຄວາຍ ໄປປະເທດໃກ້ຄຽງ ໂດຍຄິດໄລ່ເປັນນ້ຳໜັກຊີ້ນ ຢ່າງຕ່ຳໃຫ້ໄດ້ 10.000-15.000 ໂຕນ ໃນປີ 2020. ເພື່ອຮັບປະກັນຝູງສັດ (ງົວ, ຄວາຍ, ແບ້) ຂະຫຍາຍຕົວ, ເພີ່ມທະວີການສ້າງສວນຫຍ້າ, ການຜະລິດອາຫານສັດ ໃຫ້ເປັນຂະບວນການ. ທົ່ວຂະແໜງກະສິກຳ ແລະ ປ່າໄມ້ ຮັບຜິດຊອບສ້າງສວນ ແນວພັນຫຍ້າຫຼາຍຊະນິດ ທີ່ມີຄຸນນະພາບ ເພື່ອເປັນບ່ອນສາທິດ ທັງເປັນບ່ອນຂະຫຍາຍແນວພັນຫຍ້າ ປຸງແຕ່ງອາຫານສັດ.

### 2.4.3 ການກຳນົດເປົ້າໝາຍ ແລະ ຄາດໝາຍສູ້ຊົນຮອດປີ 2025

#### 2.4.3.1 ເປົ້າໝາຍ (ແຜນງານ) ທີ 1: ການຜະລິດສະບຽງ

ສືບຕໍ່ຮັບປະກັນດ້ານໂພຊະນາການຂອງປະຊາຊົນໃຫ້ໄດ້ຮັບພະລັງງານ ບໍ່ຕໍ່າກວ່າ **2.600 ກິໂລກາລໍຣີຕໍ່ຄົນຕໍ່ວັນ**, ໃນນີ້ ເຂົ້າ ແລະ ທາດແປ້ງ ກວມປະມານ 54%, ຊີ້ນ, ໄຂ່ ແລະ ປາ ປະມານ 13%, ປະເພດ ພືດຜັກ, ໝາກໄມ້ ແລະ ປະເພດຖົ່ວ ກວມປະມານ 8% ແລະ ປະເພດ ໄຂມັນ/ນໍ້າມັນ, ນໍ້າຕານ ແລະ ນໍ້ານົມ ກວມປະມານ 25% ໂດຍຕ້ອງຮັບປະກັນດ້ານ ສະບຽງອາ ຫານ ແຕ່ລະປະເພດ ເພື່ອບໍລິໂພກໃນແຕ່ລະປີ ໃຫ້ໄດ້ ຢ່າງໜ້ອຍ ຄືດັ່ງລາຍລະອຽດລຸ່ມນີ້ [5]:

- ເຂົ້າສານ 140 ກິໂລ/ຄົນ/ປີ (ຫຼື ເທົ່າກັບປະມານ 234 ກິໂລເຂົ້າເປືອກ/ຄົນ/ປີ).
- ທາດແປ້ງ 4,5 ກິໂລ/ຄົນ/ປີ.
- ປະເພດຊີ້ນ, ປາ ແລະ ໄຂ່ 79 ກິໂລ/ຄົນ/ປີ; ໃນນີ້ເປັນຊີ້ນໝູ 18 ກິໂລ/ຄົນ/ປີ, ຊີ້ນສັດປີກ 10 ກິໂລ/ຄົນ/ປີ, ຊີ້ນອື່ນໆ 10 ກິໂລ/ຄົນ/ປີ, ໄຂ່ 8 ກິໂລ/ຄົນ/ປີ ແລະ ປາ 33 ກິໂລ/ຄົນ/ປີ.
- ພືດຜັກ 80 ກິໂລ/ຄົນ/ປີ.
- ປະເພດຖົ່ວ-ງາ (ແຫ້ງ) 2 ກິໂລ/ຄົນ/ປີ.
- ສາລີ 2 ກິໂລ/ຄົນ/ປີ.
- ປະເພດ ພືດເປັນຫົວ (ເຜືອກ, ມັນ ຕ່າງໆ...) 2,1 ກິໂລ/ຄົນ/ປີ.
- ໝາກໄມ້ 40 ກິໂລ/ຄົນ/ປີ.
- ນໍ້າຕານ 1,5 ກິໂລ/ຄົນ/ປີ.
- ນໍ້ານົມ 5 ກິໂລ/ຄົນ/ປີ.
- ປະເພດໄຂມັນ/ນໍ້າມັນ 25 ກິໂລ/ຄົນ/ປີ.

ຕ້ອງສູ້ຊົນຜະລິດ ແລະ ສະໜອງ ເຂົ້າ, ພືດຜັກ, ປະເພດຖົ່ວ-ງາ, ໝາກໄມ້, ນໍ້າຕານ, ຊີ້ນ-ປາ ແລະ ໄຂ່ ໃຫ້ພຽງພໍ ແລະ ມີສ່ວນແຮໄວ້ ຊຶ່ງຕ້ອງໄດ້ເອົາໃຈໃສ່ ການຜະລິດສະບຽງທີ່ສຳຄັນ ດັ່ງນີ້:

1) ສູ້ຊົນຜະລິດເຂົ້າເປືອກລວມ <u>ບໍ່ໃຫ້ຫຼຸດ 5 ລ້ານໂຕນ</u>, ຕາມອັດຕາສ່ວນ ເຂົ້າໜຽວ 70% ແລະ ເຂົ້າຈ້າວ 30%, ຊຶ່ງປະກອບມີລາຍ ລະອຽດ ຄື:

- ເຂົ້າສຳລັບຄໍ້າປະກັນສະບຽງອາຫານ ປະມານ 2,5 ລ້ານໂຕນ (ເຂົ້າເປືອກ) ຊຶ່ງປະກອບມີ:
  - ເຂົ້າບໍລິໂພກປະມານ 2,1 ລ້ານໂຕນ *(9 ລ້ານຄົນ X 234 ກິໂລເຂົ້າເປືອກ/ຄົນ/ປີ).*
  - ຄັງແຮເຂົ້າປະມານ 400.000ໂຕນ (ເຂົ້າສານ 240.000 ໂຕນ; ກຸ້ມໄດ້ປະມານ 2-3 ເດືອນ).

[5] ແຫຼ່ງຂໍ້ມູນ: ຍຸດທະສາດຄໍ້າປະກັນສະບຽງອາຫານ ສປປລາວ ໄລຍະ 2001-2010 ທີ່ຖືກຮັບຮອງຈາກລັດຖະບານ ໃນວັນທີ 3/2/2004, ຂໍ້ມູນຈາກ: Lao Expenditure and Consumption Survey (2002/03 and 2007/08 LECS) ແລະ ຂໍ້ມູນຈາກອົງການ FAO.

– ແນວພັນເຂົ້າປະມານ 100.000 ໂຕນ.

- ສຳລັບປຸງແຕ່ງພາຍໃນປະມານ 500.000 ຫາ 600.000 ໂຕນ.
- ເຂົ້າເປັນສິນຄ້າພາຍໃນ ແລະ ສົ່ງອອກບໍ່ໃຫ້ຫຼຸດ 1,5 ລ້ານໂຕນ.

2) ຜົນຜະລິດພືດຜັກ, ຖົ່ວ-ງາ ແລະ ໝາກໄມ້ ສຳລັບບໍລິໂພກເຊັ່ນ: ສາລີຫວານ ໃຫ້ໄດ້ ປະມານ 306.000 ໂຕນ, ເຜືອກ-ມັນ ໃຫ້ໄດ້ປະມານ 327.000 ໂຕນ, ປະເພດໄມ້ໃຫ້ໝາກ ໃຫ້ໄດ້ ປະມານ 825.000 ໂຕນ ແລະ ພືດຜັກອື່ນໆ ໃຫ້ໄດ້ປະມານ 1,57 ລ້ານໂຕນ.

3) ສູ້ຊົນຜະລິດຊີ້ນ, ປາ ແລະ ໄຂ່ ລວມໃຫ້ໄດ້ 711.000 ໂຕນ (ໃນນັ້ນ, ຊີ້ນ ແລະ ໄຂ່ໃຫ້ໄດ້ 414.000 ໂຕນ, ປາ ແລະ ສັດນ້ຳໃຫ້ໄດ້ 297.000 ໂຕນຕໍ່ປີ) ເພື່ອຕອບສະໜອງອັດຕາການບໍລິໂພກ ລວມສະເລ່ຍ ໃຫ້ໄດ້ 79 ກິໂລຕໍ່ຄົນຕໍ່ປີ.

### 2.4.3.2 ເປົ້າໝາຍ (ແຜນງານ) ທີ 2: ການຜະລິດສິນຄ້າກະສິກຳ

ຕ້ອງສູ້ຊົນເຮັດໃຫ້ການຜະລິດສິນຄ້າກະສິກຳ ມີການຂະຫຍາຍຕົວ ເພື່ອຮັບປະກັນທັງປະລິມານ ແລະ ຄຸນນະພາບ ແນໃສ່ໃຫ້ເຂົ້າເຖິງຕະຫຼາດ ພາຍໃນ, ພາກພື້ນ ແລະ ສາກົນ ໂດຍໃຫ້ຕິດພັນກັບການປັບປຸງກຸ່ມຊາວກະສິກອນ, ສະມາຄົມຜູ້ຜະລິດ ແລະ ປຸງແຕ່ງກະສິກຳຢ່າງແຂງແຮງ ໂດຍຕ້ອງ ສູ້ຊົນເຮັດໃຫ້ການຜະລິດກະສິກຳເປັນສິນຄ້າທີ່ສຳຄັນສືບຕໍ່ຂະຫຍາຍຕົວດັ່ງລຸ່ມນີ້:

1) ໃນຈຳນວນຄາດໝາຍຜົນຜະລິດເຂົ້າລວມທັງໝົດ; ຜະລິດເຂົ້າເປັນສິນຄ້າພາຍໃນ ແລະ ສົ່ງອອກໃຫ້ໄດ້ປະມານ 1,5 ລ້ານໂຕນເຂົ້າເປືອກ ໃນປີ 2025 ໄປຄຽງຄູ່ກັບການສົ່ງເສີມ ການປູກເຂົ້າທີ່ມີທ່າແຮງຂອງແຕ່ລະທ້ອງຖິ່ນ ເປັນຕົ້ນ: ເຂົ້າກ່ຳ, ເຂົ້າໄກ່ນ້ອຍ, ເຂົ້າຫອມ ໃນເຂດທີ່ມີທ່າແຮງ ແລະ ມີເງື່ອນໄຂ, ແລະ ສົ່ງເສີມເຂົ້າພັນ ປັບປຸງໃໝ່ທີ່ມີຄຸນນະພາບ ແລະ ເປັນທີ່ຕ້ອງການຂອງຕະຫຼາດ ເປັນຕົ້ນ: ເຂົ້າທ່າດອກຄຳ, ເຂົ້າທ່າສະໂນ, ເຂົ້າໂພນງາມ ແລະ ເຂົ້າຫອມອື່ນໆ ໃນເຂດທົ່ງພຽງຕ່າງໆ. ຮັກສາສັດສ່ວນການປູກເຂົ້າຈ້າວໃຫ້ກວມເອົາ 30% ຂອງຜົນຜະລິດທັງໝົດ, ໃນນັ້ນ ເລັ່ງໃສ່ຜະລິດເຂົ້າ ເພື່ອສົ່ງອອກໃນມາດຕະຖານ ກະສິກຳທີ່ດີ (GAP) ໂດຍເລັ່ງໃສ່ຕະຫຼາດພາກພື້ນ ແລະ ສາກົນ. ສຳລັບຢູ່ບັນດາທົ່ງພຽງນ້ອຍ ແລະ ທົ່ງພຽງກາງ ຂອງແຂວງພາກເໜືອ ແມ່ນສຸມໃສ່ ຜະລິດເຂົ້າເປັນສິນຄ້າ ເພື່ອສະໜອງໃຫ້ ສ.ປ.ຈີນ ແລະ ປະເທດໃກ້ຄຽງ ໂດຍນຳໃຊ້ແນວພັນເຂົ້າ ທີ່ຕະຫຼາດຕ້ອງການ.

2) **ສຳລັບພືດຕ່າງໆ**: ສູ້ຊົນຜະລິດສາລີອາຫານສັດ ໃຫ້ບັນລຸປະມານ 1,4 ລ້ານໂຕນ, ກາເຟ ໃຫ້ໄດ້ປະມານ 280.000 ໂຕນ (ອີງໃສ່ຍຸດທະສາດການພັດທະນາກາເຟລາວ), ອ້ອຍ ໃຫ້ໄດ້ຫຼາຍກ່ວາ 2,4 ລ້ານໂຕນ, ມັນຕົ້ນ ໃຫ້ໄດ້ປະມານ 1,6 ລ້ານໂຕນ, ຖົ່ວເຫຼືອງ ໃຫ້ໄດ້ປະມານ 52.000 ໂຕນ. ນອກນັ້ນ ກໍສູ້ຊົນ ຜະລິດພືດສິນຄ້າອື່ນໆທີ່ມີທ່າແຮງໄດ້ປຽບ ຕາມທີ່ຕະຫຼາດຕ້ອງການ ເພື່ອເປັນສິນຄ້າພາຍໃນ ແລະ ສົ່ງອອກ.

3) **ສຳລັບການລ້ຽງສັດ**: ສູ້ຊົນຫັນການລ້ຽງສັດແບບທຳມະຊາດ ໄປສູ່ການລ້ຽງແບບເປັນຟາມ ໃຫ້ສາມາດສະໜອງຜົນຜະລິດ ຈາກຟາມໃຫ້ໄດ້ 35% ຂຶ້ນໄປຂອງຜົນຜະລິດສັດທັງໝົດ. ສຸມໃສ່ການລ້ຽງສັດ ພັນປັບປຸງ ເພື່ອເປັນສິນຄ້າ ສະໜອງ ຕະຫລາດພາຍໃນ ໃຫ້ພຽງພໍ ແລະ ສູ້ຊົນສືບຕໍ່ສົ່ງອອກສັດໃຫຍ່ ປະເພດງົວ, ຄວາຍ ໄປປະເທດໃກ້ຄຽງ ໂດຍຄິດໄລ່ເປັນນ້ຳໜັກຊີ້ນ ຢ່າງຕ່ຳໃຫ້ໄດ້ 15.000 ໂຕນ ໃນປີ 2025.

## III. ເນື້ອໃນວຽກຈຸດສຸມ ແລະ ບັນດາມາດຕະການຈັດຕັ້ງປະຕິບັດ

ເພື່ອຈັດຕັ້ງຜັນຂະຫຍາຍ 2 ເປົ້າໝາຍ ຈຸດສຸມ ກ່ຽວກັບ ການຜະລິດສະບຽງອາຫານ ແລະ ການຜະລິດສິນຄ້າ, ໂດຍສະເພາະ ບັນດາຕົວເລກຄາດໝາຍ ທີ່ວາງໄວ້ ຮອດປີ 2020 ແລະ 2025, ກະຊວງກະສິກຳ ແລະ ປ່າໄມ້ ສະເໜີກ່ຽວກັບ ເນື້ອໃນຍຸດທະສາດ ແລະ ບັນດາມາດຕະການຈັດຕັ້ງປະຕິບັດ ຮອດປີ 2025 ຊຶ່ງລວມເອົາບັນດາມາດຕະການລວມ ແລະ ມາດຕະການສະເພາະດ້ານ ຄືດັ່ງລຸ່ມນີ້:

### 3.1 ມາດຕະການລວມ

ເພື່ອສະໜັບສະໜູນ ແລະ ຮັບປະກັນການຈັດຕັ້ງປະຕິບັດ ມາດຕະການສະເພາະ ທາງດ້ານວິຊາການທີ່ສະເໜີມານັ້ນ ຈຶ່ງສະເໜີມາດຕະການລວມ ຈຳນວນໜຶ່ງ ດັ່ງນີ້:

#### 3.1.1 ດ້ານນະໂຍບາຍ ແລະ ນິຕິກຳ

##### 3.1.1.1 ດ້ານນະໂຍບາຍ

- ດຳເນີນການສຶກສາ, ວິເຄາະ-ວິໃຈ ເພື່ອກຳນົດອັດຕາດອກເບ້ຍສິນເຊື່ອ ທີ່ເໝາະສົມ, ຕະຫຼອດຮອດການເພີ່ມວົງເງິນສິນເຊື່ອໃນໄລຍະຍາວ ລວມທັງປັບປຸງຮູບການ ແລະ ຫຼັກການໃຊ້ຫຼັກຊັບຄ້ຳປະກັນ ເພື່ອໃຫ້ສອດຄ່ອງກັບການຜະລິດກະສິກຳ ທີ່ຖືວ່າເປັນການຜະລິດ ທີ່ມີຄວາມສ່ຽງ (ໄພພິບັດ ທຳມະຊາດ) ໂດຍສະເພາະແມ່ນການຜະລິດສິນຄ້າກະສິກຳ ທີ່ເປັນບຸລິມະສິດລະດັບຊາດ ແລະ ລະດັບທ້ອງຖິ່ນ.
- ປະຕິບັດນະໂຍບາຍສິນເຊື່ອດອກເບ້ຍຕ່ຳ ສຳລັບເປົ້າໝາຍກຸ່ມຜະລິດເຂົ້າ ແລະ ພືດສິນຄ້າ ບຸລິມະສິດລະດັບຊາດ ແລະ ລະດັບທ້ອງຖິ່ນ ທີ່ຫັນເປັນກົນຈັກ ຫຼື ຫັນເປັນອຸດສາຫະກຳ ທີ່ຕິດພັນກັບການປຸງແຕ່ງ ແລະ ການຕະຫຼາດ (ເຊັ່ນ: ການຜະລິດເຂົ້າ ແມ່ນ ສຳລັບເປົ້າໝາຍ ກຸ່ມຜູ້ຜະລິດທີ່ນຳໃຊ້ ກົນຈັກ ນັບແຕ່ຂອດໄຖ, ຄາດ, ດຳ, ເກັບກ່ຽວ, ອົບແຫ້ງ ແລະ ປຸງແຕ່ງສີ ແລະ ອື່ນໆ).
- ປະສານສົມທົບກັບຂະແໜງອຸດສາຫະກຳ ແລະ ການຄ້າ, ຂະແໜງການເງິນ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍ ນະໂຍບາຍສຳລັບໂຄງການຜະລິດ ເພື່ອຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າກະສິກຳ ເຊັ່ນ: ນະໂຍບາຍດ້ານການເງິນ (ການສົ່ງອອກສິນຄ້າ, ການສ້າງກອງທຶນ ສົ່ງເສີມການຜະລິດເປັນສິນຄ້າ, ກອງທຶນຄ້ຳປະກັນລາຄາ ແລະ ຄ້ຳປະກັນຄວາມສ່ຽງ, ການສ້າງຄັງແຮສະບຽງ ແລະ ຄັງແຮສິນຄ້າ ແລະ ອື່ນໆ).

- ປະຕິບັດນະໂຍບາຍຖົມຊຸມ ເພື່ອຄ້ຳປະກັນລາຄາເຂົ້າ ແລະ ພືດສິນຄ້າບຸລິມະສິດລະດັບຊາດ, ຮັບປະກັນ ໃຫ້ປະຊາຊົນ ຜູ້ຜະລິດ ຕ້ອງໄດ້ກຳໄລຢ່າງຕ່ຳ 30% ຂອງຕົ້ນທຶນການຜະລິດ. ດຳເນີນໂຄງການ ສ້າງຄັງແຮເຂົ້າ ແຫ່ງຊາດ ໃຫ້ມີປະສິດຕິຜົນ.
- ຄົ້ນຄວ້າ ແລະ ກຳນົດນະໂຍບາຍ ທີ່ເໝາະສົມ ສຳລັບການນຳເຂົ້າປັດໃຈການຜະລິດ ຫຼື ປັດໃຈຂາເຂົ້າກະສິກຳ ທີ່ ສປປລາວເຮົາ ບໍ່ສາມາດຜະລິດເອງໄດ້ ເຊັ່ນ: ກົນຈັກກະສິກຳ, ຝຸ່ນ, ປຸຍ, ຢາປາບສັດຕູພືດ, ຢາປ້ອງກັນແລະປິ່ນປົວພະຍາດສັດ, ເຄມີ ຫຼື ວັດຖຸດິບເພື່ອຜະລິດທີ່ອາ ຫານສັດລວມທັງ ແນວພັນເຂົ້າ, ແນວພັນພືດ ແລະ ສັດ ໃນກໍລະນີຈຳເປັນ.
- ຄົ້ນຄວ້າ ແລະ ກຳນົດນະໂຍບາຍ ທີ່ເໝາະສົມ ສຳລັບຄ່າກະແສໄຟຟ້າ ແລະ ຄ່ານ້ຳຊົນລະປະທານໃນຂົງເຂດ ການຜະລິດກະສິກຳ (ການປູກ-ການລ້ຽງ) ລວມທັງອຸດສາຫະກຳປຸງແຕ່ງກະສິກຳ ແນໃສ່ເພື່ອຫຼຸດ ຜ່ອນຕົ້ນທຶນ ການຜະລິດ.
- ຄົ້ນຄວ້າ ແລະ ກຳນົດນະໂຍບາຍພິເສດທີ່ກະທັດຮັດ ວ່ອງໄວ ແລະ ຖືກຕ້ອງຕາມລະບຽບສະເພາະເພື່ອສົ່ງເສີມ ການລົງທຶນ ຜະລິດສິນຄ້າກະສິກຳ ທີ່ເປັນບຸລິມະສິດລະດັບຊາດ (ເຊັ່ນ: ເຂົ້າ, ສາລີແຂງ, ກາເຟ, ອ້ອຍ, ມັນຕົ້ນ, ຢາງພາລາ, ງົວ) ແລະ ສິນຄ້າບຸລິມະສິດ ທີ່ເປັນທ່າແຮງຂອງທ້ອງຖິ່ນ ໂດຍສະເພາະແມ່ນ ນະໂຍບາຍສົ່ງເສີມພິເສດ ສຳລັບຊຸກຍູ້ ແລະ ສົ່ງເສີມການຜະລິດກະສິກຳສະອາດ ເປັນມິດກັບສິ່ງແວດລ້ອມ.
- ສ້າງຕັ້ງກອງທຶນຊ່ວຍເຫຼືອ ເພື່ອຫຼຸດຜ່ອນຄວາມສ່ຽງ ສຳລັບການຜະລິດກະສິກຳ ເພື່ອຄ້ຳປະກັນສະບຽງອາຫານ ແລະ ເພື່ອເປັນສິນຄ້າ.
- ຄົ້ນຄວ້າ ແລະ ກຳນົດນະໂຍບາຍ ສະໜັບສະໜູນ, ສົ່ງເສີມ ແລະ ໃຫ້ທຶນ ເພື່ອພັດທະນາ ແລະ ປັບປຸງຄຸນນະພາບ ແລະ ມາດຕະຖານ ຜົນຜະລິດກະສິກຳ ລວມທັງ ຜົນຜະລິດທີ່ເປັນສະບຽງອາຫານ ແລະ ສິນຄ້າ ດ້ວຍການລົງທຶນ ສ້າງ ແລະ ພັດທະນາ ລະບົບສຸຂະນາໄມພືດ ແລະ ສັດ.
- ປະຕິບັດນະໂຍບາຍສັກຢາປ້ອງກັນ ແລະ ປິ່ນປົວພະຍາດສັດ ໂດຍບໍ່ເສຍຄ່າ ໃນເຂດທີ່ມີຄວາມສ່ຽງຕໍ່ ພະຍາດລະບາດ, ເຂດພູດອຍ, ເຂດທຸລະກັນດານ ທຸກຍາກ ແລະ ຫ່າງໄກສອກຫຼີກ.
- ກຳນົດນະໂຍບາຍທີ່ເໝາະສົມ ຕໍ່ພະນັກງານທີ່ລົງປະຕິບັດໜ້າທີ່ ຢູ່ຮາກຖານເຂດຫ່າງໄກ ສອກຫຼີກ ໂດຍການກຳນົດ ລະບອບເວລາໃນການສັບປ່ຽນ, ນະໂຍບາຍໃນການຍົກລະດັບຄວາມຮູ້ດ້ານຕ່າງໆ ແລະ ມາດຖານໃນການຄົ້ນຄົ້ວເລື່ອນຊັ້ນຕຳແໜ່ງງານ.

### 3.1.1.2 ດ້ານນິຕິກຳ

- ທົບທວນ ແລະ ປັບປຸງຄືນຢ່າງເປັນລະບົບຄົບຊຸດ ບັນດານິຕິກຳ ກ່ຽວກັບວຽກງານກະສິກຳ ເພື່ອໃຫ້ສອດຄ່ອງກັບສະພາບ, ເງື່ອນໄຂ, ຈຸດພິເສດຂອງ ສປປລາວ ເຮົາ ທັງສອດຄ່ອງກັບ ບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ ສປປລາວເຮົາເປັນພາຄີ.
- ກຳນົດແບ່ງເຂດ ແລະ ສ້າງແຜນແມ່ບົດ ການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ເພື່ອສະເໜີລັດຖະບານພິຈາລະນາ ແລະ ອອກນິຕິກຳຮັບຮອງ ໂດຍເນັ້ນໃສ່ ການກຳນົດມາດຕະການ ປ້ອງກັນ

ການຫັນປ່ຽນທີ່ດິນກະສິກຳ ໂດຍສະເພາະ ແມ່ນການຫັນປ່ຽນດິນນາ ໄປສູ່ເປົ້າໝາຍ ການນຳໃຊ້ອື່ນ ທີ່ບໍ່ໄດ້ຮັບອະນຸຍາດ.

- ສ້າງ ແລະ ປັບປຸງນິຕິກຳ ທີ່ກ່ຽວກັບວຽກງານການປູກຝັງ ແລະ ລ້ຽງສັດ ໃຫ້ໄປຕາມສັນຍາ ແລະ ສົນທິສັນຍາ ທີ່ ສປປ ລາວເປັນພາຄີ ໂດຍສະເພາະ ກ່ຽວກັບ ສຸຂານາໄມ ແລະ ສຸຂະນາໄມພືດ ແລະ ສັດ (SPS Agreement).
- ສ້າງ ແລະ ປັບປຸງ ບັນດານິຕິກຳ ກ່ຽວກັບ ການຄຸ້ມຄອງການນຳໃຊ້ ລວມທັງການນຳເຂົ້າ ປັດໃຈການຜະລິດ ທີ່ ສປປ ລາວ ບໍ່ສາມາດຜະລິດເອງໄດ້ ເຊັ່ນ: ຝຸ່ນ, ປຸຍ, ຢາວັກຊີນ ຫຼື ຢາປ້ອງກັນ ແລະ ປິ່ນປົວພະຍາດ ສັດ, ຢາປ້ອງກັນບົ້ງແມງ, ຢາປາບສັດຕູພືດ, ແນວພັນພືດ ແລະ ແນວພັນສັດ...) ໃຫ້ມີຜົນບັງຄັບໃຊ້ທາງດ້ານກົດໝາຍ.

### 3.1.2 ການປັບປຸງຂອດປະສານງານກັບພາກສ່ວນທີ່ກ່ຽວຂ້ອງ

ເພີ່ມທະວີການປະສານງານ ລະຫວ່າງຂະແໜງການກະສິກຳ ແລະ ປ່າໄມ້ ກັບບັນດາຂະແໜງ ທີ່ປິ່ນອ້ອມ ເປັນຕົ້ນແມ່ນ: ຂະແໜງອຸດສາຫະກຳ ແລະ ການຄ້າ, ການເງິນ, ທະນາຄານ, ໂຍທາທິການ ແລະ ຂົນສົ່ງ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພັດທະນາຊົນນະບົດ, ແຜນການ ແລະ ລົງທຶນ, ຍຸຕິທຳ ແລະ ຂະແໜງອື່ນໆ ແນໃສ່ ເຮັດໃຫ້ການກຳນົດ ນະໂຍບາຍ, ຍຸດທະສາດ, ແຜນງານ ລວມທັງນິຕິກຳຕ່າງໆ ຂອງບັນດາຂະແໜງການ ມີການເຊື່ອມໂຍງກັນ ແລະ ສອດຄ່ອງກັນ ເພື່ອຍູ້ແຮງ ຂະບວນການຜະລິດສະບຽງອາຫານ ແລະ ການຜະລິດສິນຄ້າກະສິກຳ ໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ. ໄປຄຽງຄູ່ກັບນັ້ນ, ຕ້ອງເລັ່ງໃສ່ປັບປຸງການປະສານສົມທົບ ລະຫ່ວາງສູນກາງກັບທ້ອງຖິ່ນ ໂດຍສະເພາະແມ່ນການແບ່ງຂັ້ນຄຸ້ມຄອງ ຕິດພັນກັບທິດ 3 ສ້າງ: *"ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ"* ໃຫ້ປະກົດຜົນເປັນຈິງ.

**ສຳລັບການປະສານງານລະຫ່ວາງລັດ ກັບຜູ້ຜະລິດ ແລະ ຜູ້ປະກອບການ;** ຜູ້ຜະລິດ ແລະ ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ແມ່ນກຳລັງແຮງທີ່ສຳຄັນ ໃນຂະ ບວນການຜະລິດກະສິກຳ. ສະນັ້ນ, ຕ້ອງຍູ້ແຮງ ການຮ່ວມມື ປະສານງານກັນ ລະຫ່ວາງສອງພາກສ່ວນນີ້ ໃນຮູບແບບການຜະລິດທີ່ມີສັນຍາຜູກພັນສອງສົ້ນ ຄື: ຜູ້ປະກອບການ ເປັນຜູ້ສະໜອງປັດໃຈການຜະລິດ, ເກັບຊື້ ແລະ ປຸງແຕ່ງ, ສ່ວນຜູ້ຜະລິດ ແມ່ນຮັບຜິດຊອບ ໃນການຈັດຕັ້ງກຸ່ມ, ສະມາຄົມ ຫຼື ສະຫະກອນ ເພື່ອປັບປຸງ ແລະ ຂະຫຍາຍກຳລັງການຜະລິດ ໃຫ້ກ້ວາງຂວາງ, ມີກຳລັງແຮງ ແລະ ມີຄວາມເປັນເຈົ້າ ພ້ອມທັງດຳເນີນ ການຜະລິດ ຕາມຄວາມຕ້ອງການຂອງຜູ້ບໍລິໂພກ ຫຼື ຄວາມຕ້ອງການຂອງຕະຫຼາດ. ເຮັດຄື ແນວນັ້ນ ຈະເຮັດໃຫ້ການຜະລິດຂອງປະຊາຊົນຕິດພັນກັບການປຸງແຕ່ງ ແລະ ການບໍລິການ ຫຼື ເວົ້າ ຢ່າງໜຶ່ງ ແມ່ນເຮັດໃຫ້ໂຄງປະກອບເສດຖະກິດ ທີ່ມີກະສິກຳຕິດພັນກັບອຸດສາຫະກຳ ແລະ ການບໍລິການ ນັບແຕ່ລະດັບບ້ານ ແລະ ກຸ່ມບ້ານຂຶ້ນມາ ເທື່ອລະກ້າວ. ສ່ວນລັດຕ້ອງປຸກລະດົມການລົງທຶນ ຂອງ ຜູ້ປະ ກອບການທັງພາຍໃນ ແລະ ຕ່າງປະເທດ ແນໃສ່ເຮັດໃຫ້ການຜະລິດສະບຽງອາຫານ ແລະ ການຜະລິດ ເປັນສິນຄ້າ ມີການຂະ

ຫຍາຍຕົວຢ່າງແຂງແຮງ. ພ້ອມກັນນັ້ນ ລັດຍັງມີບົດບາດໃນການກຳນົດນະໂຍບາຍ ທີ່ເປັນການກະຕຸກຊຸກຍູ້, ກຳນົດລະບຽບກົດໝາຍທີ່ຮັດກຸມ ແລະ ເອື້ອອຳນວຍດ້ານວິຊາການທີ່ຈຳເປັນ ແນໃສ່ເຮັດໃຫ້ການຜະລິດໄດ້ດຳເນີນໄປຕາມທິດກະສິກຳສະອາດຢ່າງໜັກແໜ້ນ. ໄປຄຽງຄູ່ກັນນັ້ນ ລັດຍັງ ເຮັດໜ້າທີ່ ບາງດ້ານ ຄື:

1) ສະໜັບສະໜູນໃຫ້ມີກອງທຶນໝູນວຽນໃນກຸ່ມຜູ້ຜະລິດກະສິກຳ ແລະ ປ່າໄມ້ ຊຶ່ງລວມມີ: ກຸ່ມປູກ, ກຸ່ມລ້ຽງ, ກຸ່ມຜູ້ປຸງແຕ່ງ ແລະ ອື່ນໆ.
2) ສະໜັບສະໜູນ ແລະ ອຳນວຍຄວາມສະດວກໃຫ້ກຸ່ມຜູ້ຜະລິດ, ຜູ້ປະກອບການສາມາດເຂົ້າເຖິງແຫຼ່ງທຶນ ໃນອັດຕາດອກເບ້ຍ ແລະ ໄລຍະເວລາກູ້ຢືມທີ່ເໝາະສົມ.
3) ສົ່ງເສີມ ໃຫ້ມີການເຂົ້າຮ່ວມຂອງພາກສ່ວນສະຖາບັນການເງິນ, ການເງິນຈຸລະພາກ ແລະ ອົງການຊ່ວຍເຫຼືອຂອງສາກົນ, ສ້າງກອງທຶນພັດທະນາກະສິກຳ ຢູ່ໃນກຸ່ມບ້ານ ແລະ ເປົ້າໝາຍການຜະລິດ.
4) ປະສານສົມທົບ ກັບຂະແໜງການເງິນ ເພື່ອສະໜັບສະໜູນ ການປ່ອຍສິນເຊື່ອ ແລະ ກຳນົດນະໂຍບາຍ ດອກເບັ້ຍທີ່ເໝາະສົມ ສຳລັບການຜະລິດກະສິກຳ.

ສຳລັບການປະສານງານໃນການຄ້ຳປະກັນສະບຽງອາຫານ ແລະ ໂພສະນາການ; ການຮັບປະກັນດ້ານອາຫານ ແລະ ການຂາດສານອາຫານ ເປັນບັນຫາສະຫຼັບສັບຊ້ອນ, ຊຶ່ງມັນບໍ່ສາມາດ ແກ້ໄຂໄດ້ໃນຂະແໜງການດຽວ ຫຼື ຜູ້ໃດຜູ້ໜຶ່ງ, ມັນຮຽກຮ້ອງໃຫ້ມີການວາງແຜນ ແລະ ການກຳນົດບຸລິມະສິດ ຮ່ວມກັນໃນທົ່ວທຸກຂະແໜງການ, ຕ້ອງມີການຈັດຕັ້ງປະຕິບັດໄປລວງດຽວກັນ ແລະ ມີການແລກປ່ຽນ ຂໍ້ມູນຊຶ່ງກັນ ແລະ ກັນ. ລັດຖະບານເຫັນໄດ້ຄວາມສຳຄັນທີ່ວ່າ ເພື່ອເຮັດໃຫ້ເປົ້າໝາຍສະຫະສະວັດ ໂດຍສະເພາະ MDG1; ເປົ້າໝາຍ 1.C ປະສົບຜົນສຳເລັດ ມັນຮຽກຮ້ອງໃຫ້ການຮ່ວມມືກັນ ລະຫວ່າງທຸກຂະແໜງການທີ່ກ່ຽວຂ້ອງ ເພື່ອຮັບປະກັນດ້ານສະບຽງອາຫານ ແລະ ການປັບປຸງ ດ້ານໂພສະນາການ ໃຫ້ຢູ່ໃນລະດັບທີ່ດີໃນທຸກຂັ້ນ.

ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຮັບການມອບໝາຍ ແລະ ມີພາລະບົດບາດເປັນໃຈກາງ ໃນການປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງ ປັບປຸງ ແລະ ພັດທະນາ ລະບົບການຜະລິດ ເພື່ອຮັບປະກັນດ້ານສະບຽງອາຫານ ໃນລະດັບຄົວເຮືອນ ແລະ ລະດັບຊາດ ໃຫ້ມີຄວາມໝັ້ນຄົງ ແລະ ເປັນໃຈກາງໃນການວາງກອບໂຄງສ້າງ ໃຫ້ເປັນລະບົບຕໍ່ເນື່ອງ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ຮ່ວມກັນ ຂອງທຸກຂະແໜງການ. ນອກນັ້ນຍັງມີ ຄະນະກຳມະການດ້ານໂພສະນາການ ເປັນໜ່ວຍງານໃໝ່ ທີ່ຫາກໍໄດ້ຕັ້ງຂຶ້ນ ເພື່ອເປັນໜ່ວຍປະສານງານໃນການຈັດຕັ້ງປະຕິບັດ ກິດຈະກຳທີ່ກ່ຽວພັນກັບໂພສະນາການ ແລະ ວາງແຜນ ດ້ານວຽກງານໂພສະນາການ. ກອງເລຂາຄະນະກຳມະການດັ່ງກ່າວ ໄດ້ຮັບການສ້າງຕັ້ງ ໂດຍແມ່ນ ລັດຖະມົນຕີວ່າການກະຊວງສາທາລະນະສຸກ ເປັນປະທານ ແລະ ເປັນປະທານຮ່ວມໂດຍ ລັດຖະມົນຕີຊ່ວຍວ່າການກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງແຜນການ ແລະ ການລົງທຶນ. ເຖິງຢ່າງໃດກໍຕາມ ເຫັນວ່າ ຍັງມີຄວາມຈຳເປັນ ທີ່ຈະເສີມສ້າງຄວາມອາດສາມາດ ໃຫ້ແກ່ສະຖາບັນທີ່ມີຢູ່ ທາງດ້ານ ການປະສານງານ ໃຫ້ມີຄວາມເຂັ້ມແຂງ ແລະ ກຳນົດກົນໄກອັນໃໝ່ພາຍໃນໜ່ວຍງານທີ່ມີ ເພື່ອເຊື່ອມປະສານ

ໂດຍສະເພາະ ການປະສານງານກັບກຸ່ມຊາວນາ, ໜ່ວຍງານເອກະຊົນ, ສະມາຄົມ, ຜູ້ປະກອບການ ແລະ ອົງການດ້ານສັງຄົມທີ່ກ່ຽວຂ້ອງຕ່າງໆ.

### 3.1.3 ການຮ່ວມມື ແລະ ລົງທຶນ ໃນຂະແໜງກະສິກຳ

**ກ. ດ້ານການຮ່ວມມື:**

ສຳລັບຂົງເຂດການຮ່ວມມື ຕ້ອງໄດ້ເອົາໃຈໃສ່ ບາງມາດຕະການຕົ້ນຕໍ ດັ່ງນີ້:

1) ຕັ້ງໜ້າສືບຕໍ່ຂົນຂວາຍ ຍາດແຍ່ງການຊ່ວຍເຫຼືອ ເພື່ອການພັດທະນາ ຈາກຄູ່ຮ່ວມພັດທະນາ, ເພື່ອນມິດຍຸດທະສາດ, ສະຖາບັນການເງິນ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທີ່ບໍ່ແມ່ນລັດຖະບານ, ການຮ່ວມມືໃນຂອບຂອງອາຊຽນ, ອະນຸພາກພື້ນແມ່ນ້ຳຂອງ ເພື່ອຍາດແຍ່ງ ເອົາການຊ່ວຍເຫຼືອດ້ວຍຫຼາຍຮູບ ຫຼາຍສີ ແນໃສ່ມາພັດທະນາວຽກບຸລິມະສິດຂອງຕົນ ເປັນຕົ້ນແມ່ນ ການຄ້ຳປະ ກັນສະບຽງອາຫານ, ການຜະລິດກະສິກຳເປັນສິນຄ້າ, ການຊອກອາຊີບດ້ານກະສິກຳ ເພື່ອເພີ່ມ ລາຍຮັບໃຫ້ຊາວກະສິກອນ ດ້ວຍການປູກ ແລະ ການລ້ຽງ ແລະ ອື່ນໆ ພ້ອມທັງອອກແຮງປະຕິບັດພັນທະຂອງການເປັນສະມາຊິກອົງການການຄ້າໂລກ.
2) ເອົາໃຈໃສ່ປະຕິບັດກົນໄກຄຸ້ມຄອງ ການຮ່ວມມື ກັບຕ່າງປະເທດ ຕາມດຳລັດເລກທີ 75/ນຍ, ລົງວັນທີ 20/3/2009 ວ່າດ້ວຍການຄຸ້ມຄອງ ແລະ ການນຳໃຊ້ທຶນຊ່ວຍເຫຼືອທາງການ ເພື່ອການພັດທະນາຢ່າງເຄັ່ງຄັດ ແນໃສ່ເພື່ອຄຸ້ມຄອງ ບັນດາໂຄງການຢູ່ໃນຂະແໜງກະສິກຳ ແລະ ປ່າໄມ້ແບບລວມສູນ, ຜ່ານປະຕູດຽວ ພ້ອມທັງມີການແບ່ງຂັ້ນຄຸ້ມຄອງ ຕາມພາລະບົດບາດ ແລະ ຕາມທິດນຳ 3 ສ້າງ ທັງນີ້ ກໍເພື່ອສາມາດຕິດຕາມ, ຄຸ້ມຄອງ ແລະ ກວດກາ ການຊ່ວຍເຫຼືອໃຫ້ໄປຕາມທິດ ແລະ ມີປະສິດທິຜົນສູງສຸດ.
3) ເປັນເຈົ້າການ ກຳນົດໂຄງການຮ່ວມມືຕ່າງປະເທດ ໃຫ້ຫັນລົງໄປຊ່ວຍເມືອງທີ່ທຸກຍາກ ເພື່ອປະກອບສ່ວນ ເຮັດໃຫ້ເປົ້າໝາຍສະຫັດສະຫວັດ ດ້ານການພັດທະນາ ບັນລຸຄາດໝາຍທີ່ວາງໄວ້ ເປັນຢ່າງດີ, ປະກອບສ່ວນລຶບລ້າງ ຄອບຄົວທຸກຍາກ ດ້ວຍການປະກອບອາຊີບ ໃນຂະແໜງກະສິກຳເປັນກ້າວໆ.
4) ຕັ້ງໜ້າປະຕິບັດວຽກງານ ການຕິດຕາມ, ກວດກາ ແລະ ປະເມີນຜົນຢ່າງຕໍ່ເນື່ອງ ແລະ ເປັນລະບົບ ເພື່ອກະຕຸກຊຸກຍູ້ ໃຫ້ແກ່ການຈັດຕັ້ງປະຕິບັດ ໂຄງການຊ່ວຍເຫຼືອເພື່ອການພັດທະນາ ບັນລຸຕາມເປົ້າໝາຍທີ່ວາງໄວ້ ແລະ ມີປະສິດທິຜົນສູງ ພ້ອມທັງຮັບປະກັນຄວາມຍືນຍົງ.

**ຂ. ດ້ານການລົງທຶນ:**

ຮອດປີ 2020 ເພື່ອຮັບປະກັນ ລະດັບການຈະເລີນເຕີບໂຕຂອງ GDP ໃນລະດັບ 8,5%, ໃນນັ້ນການເຕີບໂຕຂອງຂະແໜງກະສິກຳ ແລະ ປ່າໄມ້ ໃນລະດັບສະເລ່ຍ 3,4% ຂຶ້ນໄປ, ໂຄງປະກອບ ການລົງທຶນໃນຂະແໜງກະສິກຳ ແລະ ປ່າໄມ້ ຄວນຮັກສາການລົງທຶນລວມທັງໝົດ ໃຫ້ໄດ້ໃນລະດັບ 79.200 ຕື້ກີບ (ປະມານ 9.900 ລ້ານໂດລາ); ໃນນັ້ນ: ການລົງທຶນຂອງລັດ (PIP) ໃນລະດັບ 1.200 ຕື້ກີບ

(ປະມານ 150 ລ້ານໂດລາ) ກວມເອົາປະມານ 1,5% ຂອງການລົງທຶນລວມ (ເພີ່ມຂຶ້ນ 15% ຕໍ່ປີ); ການຊ່ວຍເຫຼືອ ເພື່ອການພັດທະນາ (ODA) ໃນລະດັບ 13.000 ຕື້ກີບ (ປະມານ 1.625 ລ້ານໂດລາ) ກວມເອົາປະມານ 16,4% ຂອງການລົງທຶນລວມ (ເພີ່ມຂຶ້ນ 20% ຕໍ່ປີ), ແລະ ການລົງທຶນ ຂອງພາກ ຜູ້ປະກອບການ/ເອກະຊົນພາຍໃນ ແລະ ຕ່າງປະເທດ (FDI) ໃນລະດັບ 65.000 ຕື້ກີບ (ປະມານ 8.125 ລ້ານໂດລາ) ກວມ ເອົາປະມານ 82,1% ຂອງການລົງທຶນລວມ ເພີ່ມຂຶ້ນ 25% ຕໍ່ປີ; ໃນນັ້ນ ການລົງທຶນ ຂອງພາກ ທຸລະ ກິດ (ເອກະຊົນ) ພາຍໃນ 30% ແລະ ການລົງທຶນຕ່າງ ປະເທດ 70% ຂອງການລົງທຶນ (FDI) ທັງໝົດ.

ຮອດປີ 2025, ໂຄງປະກອບການລົງທຶນ ໃນຂະແໜງກະສິກຳ ແລະ ປ່າໄມ້ ຄວນຮັກສາການລົງທຶນ ລວມທັງໝົດ ໃຫ້ໄດ້ໃນລະດັບ 187.000 ຕື້ກີບ (ປະມານ 23.375 ລ້ານໂດລາ); ໃນນັ້ນ: ການລົງທຶນຂອງ ລັດ (PIP) ໃນລະດັບ 2.000 ຕື້ກີບ (ປະມານ 250 ລ້ານໂດລາ) ກວມເອົາປະມານ 1,07% ຂອງການ ລົງທຶນລວມ (ເພີ່ມຂຶ້ນ 15%/ປີ); ການຊ່ວຍເຫຼືອເພື່ອການພັດທະນາ (ODA) ໃນລະດັບ 25.000 ຕື້ກີບ (ປະມານ 3.125 ລ້ານໂດລາ) ກວມເອົາປະມານ 13,37% ຂອງການລົງທຶນລວມ (ເພີ່ມຂຶ້ນ 20%/ປີ), ແລະ ການລົງທຶນຂອງພາກຜູ້ປະກອບການ/ເອກະຊົນພາຍໃນ ແລະ ຕ່າງປະເທດ (FDI) ໃນລະດັບ 160.000 ຕື້ກີບ (ປະມານ 20.000 ລ້ານໂດລາ) ກວມເອົາປະມານ 85,56% ຂອງການລົງທຶນລວມ (ເພີ່ມ ຂຶ້ນ 25%/ປີ); ໃນນັ້ນ ການລົງທຶນ ຂອງພາກທຸລະກິດ (ເອກະຊົນ) ພາຍໃນ 30% ແລະ ການລົງທຶນ ຕ່າງ ປະເທດ 70% ຂອງ ການລົງທຶນ (FDI) ທັງໝົດ.

ການລົງທຶນທັງໝົດຂ້າງເທິງນັ້ນ ຈະສຸມໃສ່ເປົ້າໝາຍ ການຜະລິດສະບຽງອາຫານ ແລະ ການຜະລິດ ເປັນສິນຄ້າກະສິກຳ, ນອກນັ້ນ ແມ່ນສຸມໃສ່ ບັນດາແຜນງານ ແລະ ໂຄງການລະດັບຊາດ ເຊັ່ນ: ການພັດທະນາຊົນລະກະເສດ, ການພັດທະນາພື້ນຖານໂຄງລ່າງ ວັດຖຸ-ເຕັກນິກ, ການຄົ້ນຄວ້າທົດລອງ ດ້ານກະສິກຳ, ການຂະຫຍາຍຕາໜ່າງການບໍລິການເຕັກນິກກະສິກຳ, ການພັດທະນາບຸກຄະລາກອນ ຕິດພັນ ກັບການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ.

ເພື່ອບັນລຸຈຸດປະສົງ ແລະ ເປົ້າໝາຍຂ້າງເທິງນັ້ນ ຕ້ອງເລັ່ງໃສ່ປະຕິບັດມາດຕະການຕົ້ນຕໍ ດັ່ງນີ້:

1) ຕັ້ງໜ້າ ແລະ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດກົດໝາຍການລົງທຶນ, ສືບຕໍ່ໃຫ້ການບໍລິການ ແລະ ສ້າງຄວາມສະດວກ ໃຫ້ແກ່ຜູ້ລົງທຶນ ແນໃສ່ລະດົມຂົນຂວາຍນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ມາລົງທຶນໃສ່ຂະແໜງກະສິກຳ ແລະ ປ່າໄມ້ ໃຫ້ນັບມື້ນັບຫຼາຍຂຶ້ນ ພ້ອມທັງ ເຮັດໃຫ້ ການລົງທຶນດັ່ງກ່າວ ຕິດພັນກັບການສ້າງອາຊີບ ໃຫ້ຊາວກະສິກອນ ເພື່ອໃຫ້ເຂົາເຈົ້າ ມີລາຍຮັບ ແບບຖາວອນ.
2) ຕັ້ງໜ້າຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການລົງທຶນ ຂອງລັດສະບັບເລກທີ 08/ສພຊ, ລົງວັນທີ 26 ພະຈິກ 2009 ຢ່າງເຂັ້ມງວດ, ຫຼີກເວັ້ນການປະຕິບັດ ໂຄງການລົງທຶນນອກແຜນການ ທີ່ສະພາແຫ່ງ ຊາດ ໄດ້ຮັບຮອງເອົາແລ້ວ.

3) ສືບຕໍ່ປຸກລະດົມຢ່າງແຂງແຮງ ເພື່ອນຳໃຊ້ທຸກກຳລັງແຮງ ຂອງທົ່ວສັງຄົມ ເປັນຕົ້ນແມ່ນ ພາກສ່ວນເສດຖະກິດຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຫັນມາລົງທຶນ ເຮັດການຜະລິດກະສິກຳເປັນສິນຄ້າ ໃຫ້ນັບມື້ນັບຫຼາຍຂຶ້ນ ໂດຍສະເພາະ ແມ່ນການລົງທຶນ ພັດທະນາລະບົບຊົນລະກະເສດ, ການປູກເຂົ້າ ແລະ ພືດເປັນສິນຄ້າບຸລິມະສິດລະດັບຊາດ ແລະ ພືດທີ່ເປັນເອກະລັກຂອງທ້ອງຖິ່ນທີ່ມີທ່າແຮງ ຕິດພັນກັບການປຸງແຕ່ງ ເພື່ອສ້າງມູນຄ່າເພີ່ມ ໃຫ້ນັບມື້ນັບຫຼາຍຂຶ້ນ.
4) ກຳນົດ ບັນດາກິດຈະການ ທີ່ເປັນບຸລິມະສິດ ເພື່ອເປັນຈຸດສຸມໃນການລົງທຶນ ໃນຊຸມປີຕໍ່ໜ້າ, ລົງທຶນໃສ່ການກຳນົດ ແບ່ງເຂດການຜະລິດກະສິກຳ, ການຄ້ຳປະກັນສະບຽງອາຫານ, ການຜະລິດເປັນສິນຄ້າ ເປັນຕົ້ນແມ່ນ: ເຂົ້າ, ສາລີ, ກາເຟ, ມັນຕົ້ນ, ອ້ອຍ, ຢາງພາລາ, ງົວ, ການຜະລິດ ແນວພັນ, ການຍົກຜະລິດຕະພາບ ພືດສິນຄ້າປາຍແຫຼມ, ການຈັດຕັ້ງກຸ່ມຜະລິດ, ການຍັ້ງຢືນ ຄຸນນະພາບສິນຄ້າກະສິກຳ, ການປຸງແຕ່ງສິນຄ້າຜະລິດຕະພັນກະສິກຳ, ການຖ່າຍທອດເຕັກນິກ ເຕັກໂນໂລຊີ, ການປັບປຸງກະສິກຳ ແລະ ການສ້າງນິຕິກຳ ແລະ ນະໂຍບາຍ ເພື່ອຄຸ້ມຄອງ ແລະ ພັດທະນາວຽກງານກະສິກຳ ແລະ ປ່າໄມ້, ຮັບປະກັນຕ້ານແລ້ງ ຕ້ານຖ້ວມ, ການຄຸ້ມຄອງປ່າຜະລິດ ແລະ ວຽກບຸລິມະສິດອື່ນທີ່ເຫັນວ່າຈຳເປັນ.

### 3.1.4 ການພັດທະນາບຸກລະລາກອນ ແລະ ບົດບາດຍິງ-ຊາຍ

ເພື່ອບັນລຸເປົ້າໝາຍຂອງ ພັກ ແລະ ລັດຖະບານ ທີ່ໄດ້ກຳນົດໄວ້ຮອດປີ 2020 ຕ້ອງນຳເອົາປະເທດຊາດຫຼຸດພົ້ນອອກຈາກສະພາວະຄວາມດ້ອຍພັດທະນາ ແລະ ເພື່ອບັນລຸຈຸດປະສົງ ແລະ ເປົ້າໝາຍໃນການພັດທະນາຂອງຂະແໜງກະສິກຳ ແຕ່ນີ້ຮອດປີ 2020 ແລະ 2025 ໂດຍສະເພາະແມ່ນ ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ໃນຂະແໜງກະສິກຳ, ຮັບປະກັນຄວາມໝັ້ນຄົງ ດ້ານສະບຽງອາຫານ, ຊຸກຍູ້ສົ່ງເສີມການຜະລິດສິນຄ້າກະສິກຳ ຕາມທິດການພັດທະນາກະສິກຳແບບຍືນຍົງ ປະກອບສ່ວນ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນບັນດາເຜົ່າ, ດັ່ງນັ້ນ, ການພັດທະນາບຸກຄະລາກອນ ຂອງຂະແໜງກະສິກຳ ຈຶ່ງໄດ້ວາງຈຸດໝາຍສູ້ຊົນ ຮອດປີ 2020 ແລະ 2025 ດັ່ງນີ້:

1. ຮັບປະກັນໃຫ້ພະນັກງານລັດຖະກອນທຸກຄົນມີຄວາມຮູ້ ຄວາມສາມາດ ດ້ານຕ່າງໆ ທີ່ສົມຄູ່ກັບໜ້າທີ່ ແລະ ຄວາມຮັບຜິດຊອບ, ມີຄວາມໜັກແໜ້ນ ທາງດ້ານການເມືອງແນວຄິດ, ມີຄຸນສົມບັດສິນທຳປະຕິວັດ, ມີຈັນຍາບັນ, ຈັນຍາທຳ ຕອບສະໜອງການບໍລິການຮັບໃຊ້ປະຊາຊົນ ຢ່າງຕັ້ງໜ້າ.
2. ພະນັກງານ-ລັດຖະກອນທຸກຄົນໄດ້ຮັບການພັດທະນາຄວາມຮູ້ທີ່ຈຳເປັນ ເພື່ອຮັບປະກັນໃນການປະຕິບັດໜ້າທີ່ວຽກງານ ໃຫ້ມີຄຸນນະພາບສູງ ໂດຍການຈັດຕັ້ງ ການຝຶກອົບຮົມ ຕາມຫຼັກສູດການຝຶກອົບຮົມໃນສາຍວິຊາສະເພາະ, ວິຊາອື່ນໆທີ່ກ່ຽວຂ້ອງ, ພາສາຕ່າງປະເທດ, ການນຳໃຊ້ເຕັກໂນໂລຢີ ດ້ານຂໍ້ມູນຂ່າວສານ ຢ່າງໜ້ອຍ 2-3 ເທື່ອຕໍ່ຄົນຕໍ່ປີ.
3. ສ້າງນັກວິຊາການກັບທີ່ດ້ານກະສິກຳ ຊັ້ນຕົ້ນ ຮ່ວມກັບກົມວິຊາການໃຫ້ກາຍເປັນນັກພັດທະນາຂັ້ນບ້ານ 3-5 ຄົນຕໍ່ບ້ານ ໃຫ້ໄດ້ 80% ໃນປີ 2020 ແລະ ສຳເລັດ 100% ໃນປີ 2025

ໂດຍເນັ້ນໃສ່ການປູກ, ການລ້ຽງ ໃຫ້ສາມາດເຮັດວຽກກັບຊຸມຊົນ, ເປັນນັກສົ່ງເສີມທີ່ມີຄວາມຮູ້ຄວາມສາມາດ, ມີຄວາມຊ່ຽວຊານສະເພາະດ້ານ ເຊັ່ນ: ໝໍດິນ, ພະຍາດສັດ, ພະຍາດພືດ ແລະ ອື່ນໆ ເພື່ອປະກອບໃຫ້ທ້ອງຖິ່ນ ແຂວງ, ເມືອງ, ສູນບໍລິການເຕັກນິກຂັ້ນ ແບບທັນສະໄໝ ແລະ ມີຄວາມຍືນຍົງຕ່າງໆ ໂດຍຕ້ອງມີຜູ້ທົດແທນຢ່າງຕໍ່ເນື່ອງໃນການນຳພາຊາວກະສິກອນ ຈັດຕັ້ງການຜະລິດກະສິກຳ

4. ພັດທະນາ ບຸກຄະລາກອນ ແລະ ນັກຄົ້ນຄວ້າໃຫ້ໄດ້ 13.941 ຄົນ ໃນປີ 2020 ເພີ່ມຂຶ້ນ 49,62% ຈາກຈຳນວນພະນັກງານທີ່ມີແລ້ວໃນປະຈຸບັນ, ຮອດປີ 2025 ຈະສ້າງໃຫ້ໄດ້ 15.500 ຄົນ ເພີ່ມຂຶ້ນ 66,36%.ຈາກຈຳນວນພະນັກງານທີ່ມີແລ້ວໃນປະຈຸບັນ, ໃນນີ້ ຮອດປີ 2020 ພະນັກງານສັງກັດຢູ່ບັນດາກົມ ແລະ ສະຖາບັນອ້ອມຂ້າງກະຊວງ 14%, ຂັ້ນແຂວງ 18%, ຂັ້ນເມືອງ 65% ແລະ ບັນດາວິທະຍາໄລ ແລະ ໂຮງຮຽນຕ່າງໆ 3% ແລະ ຮອດປີ 2025 ພະນັກງານສັງກັດຢູ່ບັນດາກົມ ແລະ ສະຖາບັນອ້ອມຂ້າງກະຊວງ 12%, ຂັ້ນແຂວງ 15%, ຂັ້ນເມືອງ 70% ແລະ ບັນດາວິທະຍາໄລ ແລະ ໂຮງຮຽນຕ່າງໆ 3% ໂດຍຈັດແບ່ງຕາມສາຂາວິຊາສະເພາະດັ່ງນີ້:

| | ຮອດປີ 2020 | ຮອດປີ 2025 |
|---|---|---|
| 1). ເສດຖະກິດກະສິກຳ | 976 ຄົນ | 1.085 ຄົນ |
| 2). ປູກຝັງ, ປ້ອງກັນພືດ | 2.788 ຄົນ | 3.100 ຄົນ |
| 3). ວິທະຍາສາດດິນ, ເຄມີກະສິກຳ | 1.115 ຄົນ | 1.240 ຄົນ |
| 4). ການລ້ຽງສັດ | 1.394 ຄົນ | 1.550 ຄົນ |
| 5). ການປະມົງ | 836 ຄົນ | 929 ຄົນ |
| 6). ສັດຕະວະແພດ | 976 ຄົນ | 1.085 ຄົນ |
| 7). ສິ່ງແວດລ້ອມ, ນິເວດວິທະຍາ, ຊີວະນາໆພັນ | 418 ຄົນ | 465 ຄົນ |
| 8). ຊົນລະປະທານ | 1.115 ຄົນ | 1.240 ຄົນ |
| 9). ກົນຈັກກະສິກຳ | 558 ຄົນ | 620 ຄົນ |
| 10). ປ່າໄມ້ | 2.788 ຄົນ | 3.100 ຄົນ |
| 11). ວິຊາສະໜັບສະໜູນອື່ນໆ | 976 ຄົນ | 1.086 ຄົນ |

5. ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວຽກງານຕາມທິດ 3 ສ້າງ, ກົງຈັກຕ້ອງຮັບປະກັນຄົບຊຸດ ໂດຍສືບຕໍ່ພັດທະນາຂັ້ນເມືອງ ໃຫ້ເຂັ້ມແຂງ ແລະ ສາມາດບັນຈຸພະນັກງານທັງໝົດ ຕາມຄວາມຕ້ອງການ ດ້ານຕຳແໜ່ງງານ ໃຫ້ໄດ້ 80% ໃນປີ 2020 ແລະ 100% ໃນປີ 2025.

6. ພັດທະນາບຸກຄະລາກອນຂອງຂະແໜງກະສິກຳ ໃຫ້ມີຄຸນນະພາບສູງ ເພື່ອຮອງຮັບໜ້າທີ່ການເມືອງໄນໄລຍະໃໝ່ ໃນຍຸກໂລກາພິວັດ, ການເຊື່ອມໂຍງສາກົນ ແລະ ພາກພື້ນ ຈຶ່ງວາງຄາດໝາຍສູ້ຊົນຍົກລະດັບທາງດ້ານວິຊາສະເພາະ ໃຫ້ພະນັກງານ-ລັດຖະກອນ ຮອດປີ 2020 ລະດັບປະລິນຍາເອກເພີ່ມຂຶ້ນສະເລ່ຍ 25% ຂອງຈຳນວນທີ່ມີປະຈຸບັນ 44 ຄົນ ເທົ່າກັບ 56 ຄົນ, ລະດັບປະລິນຍາໂທ

ເພີ່ມຂຶ້ນສະເລ່ຍ 20% ຂອງຈຳນວນທີ່ມີປະຈຸບັນ 560 ຄົນ ເທົ່າກັບ 671 ຄົນ, ລະດັບປະລິນຍາຕີ ເພີ່ມຂຶ້ນສະເລ່ຍ 35% ຂອງຈຳນວນທີ່ມີປະຈຸບັນ 2.298 ຄົນ ເທົ່າກັບ 3.102 ຄົນ, ຮອດປີ 2025 ລະດັບປະລິນຍາເອກ ເພີ່ມຂຶ້ນສະເລ່ຍ 55% ຂອງຈຳນວນທີ່ມີປະຈຸບັນ 44 ຄົນ ເທົ່າກັບ 68 ຄົນ, ລະດັບປະລິນຍາໂທ ເພີ່ມຂຶ້ນສະເລ່ຍ 45% ຂອງຈຳນວນທີ່ມີປະຈຸບັນ 560 ຄົນ ເທົ່າກັບ 812 ຄົນ, ລະດັບປະລິນຍາຕີ ເພີ່ມຂຶ້ນສະເລ່ຍ 75% ຂອງຈຳນວນທີ່ມີປະຈຸບັນ 2.298 ຄົນ ເທົ່າກັບ 4.022 ຄົນ ໂດຍເນັ້ນໃສ່ ວິຊາການສະເພາະດ້ານ. ການສ້າງພະນັກງານວິຊາການລະດັບປະລິນຍາເອກ ແລະ ປະລິນຍາໂທ ຕ້ອງມີທຶນການສຶກສາທີ່ຕອບສະໜອງໄດ້ ຕາມຄວາມຕ້ອງການ ໃນການພັດທະນາ, ພ້ອມກັນນີ້ຕ້ອງມີລະບົບການຄັດເລືອກຢ່າງມີຈຸດສຸມ ເອົາພະນັກ ງານວິຊາການທີ່ມີພອນສະຫວັນ ແລະ ມີຄວາມຮູ້ຄວາມສາມາດ ທາງດ້ານວິຊາການກ່ຽວກັບວິຊາສະເພາະໃດນຶ່ງທີ່ແນ່ນອນ.

7. ບຳລຸງສ້າງພະນັກງານນຳພາ ແລະ ພະນັກງານຄຸ້ມຄອງ ໂດຍມີແຜນບຳລຸງສ້າງ ທີ່ເປັນລະບົບຄົບຊຸດ ແນ່ໃສ່ເພີ່ມຄວາມຮູ້ ຄວາມສາມາດທາງດ້ານທິດສະດີການເມືອງ ແລະ ວິຊາສະເພາະ ເພື່ອໃຫ້ສາມາດຈັດຕັ້ງ ນຳພາຕາມແນວທາງການປ່ຽນແປງໃໝ່ຂອງພັກແຕ່ລະໄລຍະ ໃຫ້ບັນລຸຜົນຕາມລະດັບຄາດໝາຍ, ໃນຂະນະດຽວກັນ ກໍ່ຕ້ອງສ້າງແຜນພະນັກງານສືບທອດ ໃຫ້ເປັນລະບົບ.
8. ສຸມໃສ່ປັບປຸງບັນດາວິທະຍາໄລ ແລະ ໂຮງຮຽນ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ໃຫ້ມີຄຸນນະພາບ ທັງດ້ານການຄຸ້ມຄອງບໍລິຫານໂຮງຮຽນ, ພື້ນຖານໂຄງລ່າງຂອງໂຮງຮຽນ, ປັບປຸງພັດ ທະນາຫຼັກສູດການຮຽນ-ການສອນ, ການຍົກລະດັບຄູ-ອາຈານໃຫ້ໄດ້ 100% ຕາມມາດຕະຖານທີ່ກະຊວງສຶກສາທິການ ແລະ ກິລາວາງອອກ ເພື່ອແນ່ໃສ່ສ້າງນັກວິຊາການດ້ານກະສິກຳ ໃຫ້ມີລະດັບຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສົມທຳປະຕິວັດ ທີ່ດີ ອອກຮັບໃຊ້ສັງຄົມ ແລະ ສາມາດແຂ່ງຂັນໃນລະດັບພາກພື້ນ.
9. ສະໜອງທຶນການສຶກສາໃຫ້ນັກຮຽນ ທີ່ຢູ່ໃນເຂດຊົນນະບົດເພື່ອສົ່ງເສີມໃຫ້ຮຽນວິຊາກະສິກຳ (ດ້ານການປູກຝັງ ແລະ ລ້ຽງສັດ) ແລ້ວສົ່ງກັບຄືນທ້ອງຖິ່ນຂອງຕົນເພື່ອສ້າງເປັນວິຊາການຂັ້ນບ້ານ ແລະ ສູນສະຖານີຕ່າງໆ.
10. ສ້າງຫລັກສູດການຝຶກອົບຮົມທີ່ເໝາະສົມ ເພື່ອຈັດຕັ້ງການຝຶກອົບຮົມກັບທີ່, ສະຖານທີ່ຝຶກອົບຮົມ ວິຊາຊີບ, ໂຮງຮຽນ, ສູນບໍລິການເຕັກນິກກະສິກຳ. ພ້ອມກັນນີ້ກໍ່ຈັດຕັ້ງການທັດສະນະສຶກສາແລກປ່ຽນ ແລະ ຖອດຖອນບົດຮຽນ ຢູ່ພາຍໃນ ແລະ ຕ່າງປະເທດ.
11. ພະນັກງານ-ລັດຖະກອນທຸກຄົນ, ທຸກເພດ, ຊົນເຜົ່າ ມີຄວາມສະເໝີພາບ ແລະ ມີໂອກາດເທົ່າທຽມກັນ ໃນການໄດ້ຮັບການຍົກລະດັບ, ການສົ່ງເສີມໃນຕຳແໜ່ງນຳພາ ແລະ ບໍລິຫານຫຼາຍຂຶ້ນ.

ສຳລັບການພັດທະນາຄວາມກ້າວໜ້າຂອງແມ່ຍິງ ຫຼື ວຽກງານບົດບາດຍິງ-ຊາຍ ຖືເປັນບຸລິມະສິດໜຶ່ງທີ່ສຳຄັນໃນການປະຕິບັດແຜນງານພັດທະນາກະສິກຳ ແລະ ປ່າໄມ້, ໂດຍການເພີ້ມທະວີ, ສະໜັບສະໜູນ ແລະ ສ້າງໂອກາດ ເອື້ອອຳນວຍ ໃຫ້ແກ່ພະນັກງານ ແລະ ຊາວກະສິກອນ ເພດຍິງມີສ່ວນຮ່ວມໃນການຕັດສິນບັນຫາໃນແຕ່ລະຂັ້ນໃຫ້ໄດ້ 30% ຂຶ້ນໄປ, ໃຫ້ພະນັກງານເພດຍິງມີສ່ວນຮ່ວມ ໃນການ

ຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ເຂົ້າຮ່ວມສ້າງຂີດຄວາມສາມາດ, ຍົກລະດັບຄວາມຮູ້ຄວາມສາມາດ, ແລກປ່ຽນບົດຮຽນ ເຕັກນິກວິຊາການໃໝ່ ຢ່າງນ້ອຍໃຫ້ໄດ້ 35% ແລະ ໃຫ້ຊາວກະສິກອນເພດຍິງ, ຄອບຄົວທຸກຍາກ ບັນດາເຜົ່າ ໃນເຂດຊົນນະບົດ ຫ່າງໄກສອກຫຼີກ ໄດ້ເຂົ້າຮ່ວມ ໃນການຮຽນຮູ້ດ້ານ ເຕັກນິກການຜະລິດໃໝ່, ການເຂົ້າເຖິງຂໍ້ມູນຂ່າວສານ, ກົນໄກກອງທຶນ, ສິນເຊື່ອ, ການເງິນ, ການຕະຫຼາດ ແລະ ອື່ນໆທີ່ເໝາະສົມໃຫ້ໄດ້ 45% ຂຶ້ນໄປ.

### 3.1.5 ການປັບປຸງກົງຈັກການຈັດຕັ້ງ ແລະ ພັດທະນາວຽກງານຄຸ້ມຄອງລັດ ໃນຂະແໜງກະສິກຳ

#### 3.1.5.1 ວຽກງານປັບປຸງກົງຈັກການຈັດຕັ້ງ

- ປັບປຸງໂຄງປະກອບການຈັດຕັ້ງຂອງຂະແໜງກະສິກຳ ແລະ ປ່າໄມ້ ໃຫ້ເປັນລະບົບຄົບຊຸດ ເພື່ອຕອບສະໜອງໃຫ້ແກ່ການພັດທະນາ ຕ່ອງໂສ້ການການຜະລິດ ຕິດພັນກັບການພັດທະນາຊົນນະບົດ ແນໃສ່ ປັບປຸງການຈັດຕັ້ງການຜະລິດ ແລະ ກຳລັງການຜະລິດຄືນໃໝ່ ພ້ອມທັງກຳນົດ ພາລະບົດບາດໃຫ້ສອດຄ່ອງກັບ ເນື້ອໃນຈິດໃຈວຽກງານ 03 ສ້າງ.
- ປັບປຸງແບບແຜນວິທີເຮັດວຽກ ຄືນໃໝ່, ປັບປຸງທັດສະນະ ແລະ ຄວາມຮັບຜິດຊອບ ຂອງພະນັກງານນຳພາ ແລະ ຄຸ້ມຄອງ ໃຫ້ມີຄວາມເປັນເຈົ້າການ ໃນການປະຕິບັດ ໜ້າທີ່ການເມືອງຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.
- ຜັນຂະຫຍາຍຈາກແຜນງານບູລິມະສິດຂອງລັດຖະບານ ມາເປັນໂຄງການລະອຽດ ເພື່ອຈັດຕັ້ງປະຕິບັດ, ຊຶ່ງແຕ່ລະໂຄງການມີຄວາມຈຳເປັນຕ້ອງມີຄົນຮັບຜິດຊອບສະເພາະ ໃນລະດັບສູງສົມຄວນ, ໃນນັ້ນ ມີແຜນວຽກ, ແຜນຄົນ, ແຜນເງິນ ພ້ອມທັງມີກົນໄກເຮັດວຽກ ແລະ ປະສານງານ ເພື່ອເປັນເງື່ອນໄຂສາມາດຈັດຕັ້ງປະຕິບັດ ໃຫ້ມີຜົນສຳເລັດ;
- ປັບປຸງກົນໄກການຄຸ້ມຄອງບໍລິຫານ ແລະ ປະສານງານ ເພື່ອສ້າງຂີດຄວາມສາມາດຂອງ ບັນດາສູນບໍລິການເຕັກນິກຂັ້ນຕ່າງໆ ໃຫ້ມີຄວາມເຂັ້ມແຂງ; ສືບຕໍ່ປັບປຸງ ແລະ ກວດກາກົງຈັກການຈັດຕັ້ງ ແລະ ກຳນົດມາດຕະຖານຂອງແໜ່ງງານຄືນໃໝ່ ນັບແຕ່ຂັ້ນ ສູນກາງ ຮອດທ້ອງຖິ່ນ ໂດຍມີລະບົບການວາງແຜນກຳລັງຄົນທີ່ມີປະສິດທິພາບ ເພື່ອເປັນບ່ອນອີງໃຫ້ແກ່ການກຳນົດ, ຈັດວາງບຸກຄະລາກອນ ທີ່ເໝາະສົມເຂົ້າຕຳແໜ່ງງານແຕ່ລະຂັ້ນ ທີ່ຍັງຫວ່າງ ໂດຍໃຫ້ໄດ້ 80% ໃນປີ 2020 ແລະ ໃຫ້ໄດ້ 100% ໃນປີ 2025.
- ປັບປຸງ ໂຄງສ້າງການກະຈາຍບຸກຄະລາກອນ ໃນກົງຈັກການຈັດຕັ້ງຂອງກະຊວງກະສິກຳ ແລະ ປ່າໄມ້ ແຕ່ສູນກາງ ລົງຮອດທ້ອງຖິ່ນ ຮອດປີ 2025 ໂດຍເພີ່ມຈຳນວນລັດຖະກອນ ຢູ່ຂັ້ນເມືອງໃຫ້ຫຼາຍຂຶ້ນ ໃນອັດຕາສ່ວນຄື: ຂັ້ນສູນກາງ 12%, ຂັ້ນແຂວງ 15%, ຂັ້ນເມືອງ 70% ແລະ ບັນດາວິທະຍາໄລ ແລະ ໂຮງຮຽນທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ 3%.

### 3.1.5.2 ວຽກງານປັບປຸງ ແລະ ພັດທະນາກົນໄກການບໍລິຫານລັດໃນຂະແໜງການ

ປັບປຸງ ແລະ ກໍ່ສ້າງລະບົບຄຸ້ມຄອງລັດ ຕິດພັນກັບການປັບປຸງ ການຈັດຕັ້ງໃນແຕ່ລະຂັ້ນ ຂອງຂະແໜງກະສິກຳ ແລະ ປ່າໄມ້ ໃຫ້ກະທັດຮັດ ທັງຮັບປະກັນໃຫ້ແກ່ໜ້າທີ່ການເມືອງ ແລະ ໃຫ້ໄປຕາມທິດກະສິກຳຕິດພັນກັບອຸດສາຫະກຳ ແລະ ການບໍລິການ ໂດຍເລັ່ງໃສ່ 2 ຂົງເຂດຕົ້ນຕໍ ຄື: 1) ຄວາມອາດສາມາດ ໃນການຄົ້ນຄວ້າ, ສັງລວມ, ວິເຄາະ-ວິໄຈ ບັນຫາຂອງຂະແໜງການ, ການກຳນົດນະໂຍບາຍ ແລະ ການຕິດຕາມກວດກາ ໃນແຕ່ລະລະດັບ (ທັງຂັ້ນສູນກາງ ແລະ ທ້ອງຖິ່ນ); 2) ຄວາມອາດສາມາດ ໃນການຈັດຕັ້ງປະຕິບັດ ລວມທັງການຊຸກຍູ້ ສົ່ງເສີມ ໃນລະດັບທ້ອງຖິ່ນ ຮາກຖານ ໂດຍສະເພາະ ໃນລະດັບບ້ານ ແລະ ກຸ່ມບ້ານ ໃຫ້ເປັນໄປຕາມທິດ 3 ສ້າງ ລວມທັງການປັບປຸງ ແລະ ກໍ່ສ້າງໂຄງປະກອບດ້ານອາຊີບ ແລະ ດ້ານແຮງງານ ໃຫ້ແກ່ຊາວກະສິກອນ ໂດຍການປັບປຸງ, ກໍ່ສ້າງ ແລະ ຍົກລະດັບ ຂອງກຸ່ມການຜະລິດ ຕາມຂະແໜງການ ທີ່ເຫັນວ່າຈຳເປັນ.

ປັບປຸງຄວາມຮັບຜິດຊອບ ແລະ ຄວາມສາມາດໃນການປະຕິບັດ ໜ້າທີ່ການເມືອງ ຂອງກະຊວງ ກໍຄືຂະແໜງ ກະສິກຳ ແລະ ປ່າໄມ້ ດ້ວຍການສືບຕໍ່ກວດກາ ແລະ ປັບປຸງກົງຈັກການຈັດຕັ້ງ, ລະບົບນິຕິກຳ, ພາລະບົດບາດ, ສິດໜ້າທີ່, ລະບອບແບບແຜນວິທີເຮັດວຽກ ຂອງແຕ່ລະພາກສ່ວນ, ແຕ່ລະຂັ້ນ ໃຫ້ນັບມື້ສອດຄ່ອງກວ່າເກົ່າ ເພື່ອຊີ້ນຳ, ນຳພາຈັດຕັ້ງປະຕິບັດໃຫ້ຖືກຕ້ອງ; ອັນສຳຄັນແມ່ນ ສືບຕໍ່ສະກັດກັ້ນປະກົດການຫຍໍ້ທໍ້ ໃນຂົງເຂດກະສິກຳ ແລະ ປ່າໄມ້ ໃຫ້ເຂັ້ມງວດກວ່າເກົ່າ ທັງສືບຕໍ່ທັນພະນັກງານວິຊາການຢູ່ທຸກຂັ້ນ ລົງທ້ອງຖິ່ນ, ກຸ່ມບ້ານ ເພື່ອປັບປຸງ, ຟື້ນຟູ ແລະ ຂະຫຍາຍສູນບໍລິການເຕັກນິກ ດຳເນີນຝຶກອົບຮົມ ແລະ ນຳພາ ຊາວກະສິກອນ ຈັດຕັ້ງປະຕິບັດແຜນພັດທະນາ ກະສິກຳ ແລະ ປ່າໄມ້ ໃຫ້ແທດເໝາະກັບຕົວຈິງ ທັງເຂົ້າຮ່ວມໃນວຽກງານ ກໍ່ສ້າງຮາກຖານການເມືອງ ຕາມແນວທາງນະໂຍບາຍຂອງພັກແຕ່ລະໄລຍະ, ເພີ່ມທຶນຮອນໃຫ້ທ້ອງຖິ່ນຮາກຖານ ໃຫ້ຫຼາຍກວ່າເກົ່າ ໂດຍສະເພາະແມ່ນໃນບໍລິເວນທີ່ ເປັນຈຸດສູມບູລິມະສິດ; ປັບປຸງລະບົບຂໍ້ມູນຂ່າວສານແຕ່ສູນກາງ ລົງຮອດທ້ອງຖິ່ນຮາກຖານໃຫ້ດີຂື້ນກວ່າເກົ່າ ເພື່ອເຮັດໃຫ້ລະບົບລາຍງານການບໍລິການ ແລະ ການປະສານສົມທົບ ລະຫວ່າງສູນກາງ ກັບທ້ອງຖິ່ນ, ລະຫວ່າງຂະແໜງກະສິກຳແລະ ປ່າໄມ້ ກັບຂະແໜງການອື່ນໃຫ້ວ່ອງໄວ ແລະ ທັນການ.

### 3.1.6 ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ໃນຂະແໜງກະສິກຳ ແລະ ຊົນນະບົດ

ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ໃນຂະແໜງກະສິກຳ ແລະ ຊົນນະບົດ ແມ່ນຂະບວນການຫັນປ່ຽນໂຄງປະກອບເສດຖະກິດໃນຊົນນະບົດ ຕາມທິດເພີ່ມມູນຄ່າລາຄາສິນຄ້າກະສິກຳ, ແມ່ນການປັບປຸງກຳລັງການຜະລິດ ແລະ ການພົວພັນການຜະລິດ, ສົ່ງເສີມການນຳໃຊ້ກົນຈັກກະສິກຳ ເພື່ອປົດປ່ອຍແຮງງານກະສິກຳ ໃຫ້ແກ່ຂົງເຂດອຸດສະຫະກຳ ແລະ ການບໍລິການ, ປະກອບສ່ວນແກ້ໄຂຄວາມທຸກຍາກ, ພັດທະນາເສດຖະກິດ-ສັງຄົມ ໃຫ້ມີການຂະຫຍາຍຕົວແບບຕໍ່ເນື່ອງ, ໝັ້ນຄົງ, ຍືນຍົງ ແລະ ເປັນມິດກັບ ສິ່ງແວດລ້ອມ. ສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມຜູ້ຜະລິດ ຢ່າງເປັນລະບົບຄົບຊຸດ ຈາກການຜະລິດ, ການຄຸ້ມ

ຄອງຫຼັງການເກັບກ່ຽວ, ການປຸງແຕ່ງ ຈົນເຖິງການຕະຫຼາດ. ຫັນປ່ຽນຈາກການຜະລິດກະສິກຳຊຶ່ງຜ່ານມາສຸມໃສ່ແຕ່ການຜະລິດແບບທຳມະຊາດ ມາເປັນການຜະລິດທີ່ມີຄຸນນະພາບ ເພື່ອຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າ ໂດຍຍົກສະມັດຕະພາບການຜະລິດ, ນຳໃຊ້ເຕັກນິກຫຼັງເກັບກ່ຽວ ແລະ ນຳໃຊ້ກົນຈັກ ເພື່ອຕອບສະໜອງຕາມຄວາມຕ້ອງການຂອງຕະຫຼາດ ແລະ ຮັບປະກັນຄວາມປອດໄພຂອງອາຫານຕາມມາດຕະຖານຂອງສາກົນວາງອອກ.

**1/ <u>ບາງຫັດສະນະພື້ນຖານ ເພື່ອຍູ້ແຮງການຫັນເປັນອຸດສາຫະກຳ-ທັນສະໄໝ ໃນຂົງເຂດກະສິກຳ-ຊົນນະບົດ</u>**

1) ການຫັນເປັນອຸດສາຫະກຳ-ທັນສະໄໝ ໃນຂະແໜງກະສິກຳ ແລະ ຊົນນະບົດ ແມ່ນໜ້າທີ່ ສຳຄັນຕົ້ນຕໍ ໃນການຫັນເປັນອຸດສາຫະກຳ-ຫັນເປັນທັນສະໄໝ ຂອງປະເທດຊາດ. ການພັດທະນາ ອຸດສາຫະກຳ ແລະ ການບໍລິການ ຕ້ອງຕິດພັນ ແລະ ຊ່ວຍໜູນຢ່າງມີປະສິດທິຜົນ ໃຫ້ແກ່ການຫັນເປັນອຸດສາ ຫະກຳ-ຫັນເປັນທັນສະໄໝ ໃນຂະແໜງກະສິກຳ-ຊົນນະບົດ.
2) ໃຫ້ບູລິມະສິດໃນການພັດທະນາຕ່າງໆ, ໃນນັ້ນ ເນັ້ນໜັກໃສ່ການພັດທະນາຊັບພະຍາກອນມະນຸດ ໝູນໃຊ້ຢ່າງກວ້າງຂວາງຜົນສະເລັດ ຂອງວິທະຍາສາດ ແລະ ເຕັກໂນໂລຊີ, ກຳນົດໂຄງ ປະກອບການຜະລິດ ໄປຕາມທິດຂຸດຄົ້ນທ່າແຮງບົ່ມຊ້ອນ ແລະ ທ່າໄດ້ປຽບ ຂອງແຕ່ລະເຂດແຄວ້ນ ຕິດພັນກັບຕະຫຼາດ ເພື່ອແນໃສ່ ຊຸກຍູ້ການຜະລິດສິນຄ້າກະສິກຳ ຂະໜາດໃຫຍ່, ປ້ອງກັນສິ່ງແວດລ້ອມ, ປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຈາກໄພພິບັດທາງທຳມະຊາດ, ພັດທະນາກະສິກຳ-ຊົນນະບົດແບບຍືນຍົງ .
3) ອີງໃສ່ກຳລັງແຮງພາຍໃນເປັນຕົ້ນຕໍ ຄຽງຄູ່ກັນນັ້ນຕ້ອງໄດ້ຂຸດຄົ້ນທຸກກຳລັງແຮງ ຂອງພາຍນອກ, ເພີ່ມທະວີ ທ່າແຮງຂອງທຸກພາກສ່ວນເສດຖະກິດ ກໍ່ສ້າງຢ່າງແຂງແຮງເສດຖະກິດ ຄອບຄົວຜະລິດສິນຄ້າ, ກໍ່ສ້າງບັນດາຮູບແບບວິສາຫະກິດ, ໂດຍສະເພາະແມ່ນວິສາຫະກິດຂະໜາດນ້ອຍ ແລະ ກາງຢູ່ຊົນນະບົດໃຫ້ຫຼາຍຂື້ນ.
4) ນອກນັ້ນຍັງຕ້ອງໄດ້ເອົາໃຈໃສ່ ບັນຫາເສດຖະກິດ-ສັງຄົມ ໃນຂະບວນການຫັນເປັນອຸດສາຫະກຳ-ຫັນເປັນທັນສະໄໝ ໃນຂົງເຂດກະສິກຳ-ຊົນນະບົດ ເພື່ອແນໃສ່ແກ້ໄຂວຽກເຮັດງານທຳ ໃຫ້ຊາວກະສິກອນ, ແກ້ໄຂຄວາມທຸກຍາກ ຂອງປະຊາຊົນບັນດາເຜົ່າ, ບັນຫາສັງຄົມ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ເພື່ອແນໃສ່ຍົກສູງລະດັບຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າ ໃນຊົນນະບົດ, ໂດຍສະເພາະ ປະຊາຊົນບັນດາເຜົ່າ ໃນເຂດຫ່າງໄກສອກຫຼີກ ແລະ ບັນດາທັດສະນະອື່ນໆ ກ່ຽວກັບການກຳນົດ ແຜນພັດ ທະນາເສດຖະກິດ-ສັງຄົມ ຕາມເຂດແຄ້ວນ.

ບັນດາທັດສະນະທີ່ກ່າວມານັ້ນ ບໍ່ພຽງແຕ່ຮັບປະກັນ ການຫັນເປັນອຸດສາຫະກຳ-ທັນສະໄໝ ໃນຂະແໜງກະສິກຳ-ຊົນນະບົດເທົ່ານັ້ນ ແຕ່ຍັງປະກອບສ່ວນສຳຄັນ ໃນການພັດທະນາທີ່ສົມເຫດສົມຜົນ, ພັດທະນາແບບກົມກຽວ ລະຫວ່າງອຸດສາຫະກຳ ແລະ ກະສິກຳ, ລະຫວ່າງຕົວເມືອງ ແລະ ຊົນນະບົດ, ລະ

ຫວ່າງ ທົ່ງພຽງ ແລະ ພູດອຍ, ລະຫວ່າງເສດຖະກິດ-ສັງຄົມ, ປ້ອງກັນຊາດ ປ້ອງກັນຄວາມສະຫງົບ ເພື່ອຮັບປະກັນໃຫ້ ແກ່ການພັດທະນາແບບຍືນຍົງ ຕາມທິດສັງຄົມນິຍົມ.

2/ <u>ມາດຕະການ ໃນການຫັນເປັນອຸດສາຫະກຳ-ທັນສະໄໝ ໃນຂົງເຂດກະສິກຳ-ຊົນນະບົດ</u>:

1) ສືບຕໍ່ປັບປຸງກຳລັງການຜະລິດ ແລະ ການພົວພັນການຜະລິດ ໂດຍການຈັດຕັ້ງກຸ່ມຜະລິດດ້ວຍ ການຮ່ວມມືຂອງປະຊາຊົນໃຫ້ມີຄວາມເຂັ້ມແຂງ ແລະ ມີການຂະຫຍາຍຕົວ ກ້າວໄປເປັນສະມາຄົມ ແລະ ສ້າງຕັ້ງເປັນສະຫະກອນແບບໃໝ່ ເພື່ອໃຫ້ມີຄວາມອາດສາມາດເຂົ້າເຖິງສິນເຊື່ອ, ເຂົ້າເຖິງເຕັກນິກເຕັກໂນໂລຢີ ແລະ ເຄື່ອງມືການຜະລິດທີ່ທັນສະໄໝ.
2) ສົ່ງເສີມການນຳໃຊ້ກົນຈັກກະສິກຳ ເຂົ້າໃນແຕ່ລະຂອດການຜະລິດ ຕິດພັນກັບການຕະຫຼາດ, ໂດຍສົ່ງເສີມການຜະລິດ ແລະ ການບໍລິການໃຫ້ເປັນລະບົບຕ່ອງໂສ້ແບບຄົບຊຸດ ເພື່ອຍົກສູງປະສິດຕິພາບ ແລະ ຍົກສູງແຮງງານການຜະລິດ, ຫຼຸດຜ່ອນຕົ້ນທຶນການຜະລິດ, ສາມາດແຂ່ງຂັນໄດ້ ໃນຕະຫຼາດພາກພື້ນ ແລະ ສາກົນ, ເຮັດໃຫ້ປະຊາຊົນ ຜູ້ຜະລິດໄດ້ຮັບຜົນປະໂຫຍດສູງສຸດ ແນໃສ່ປົດປ່ອຍ ແຮງງານກະສິກຳ ໃຫ້ແກ່ຂະແໜງອຸດສາຫະກຳ ແລະ ການບໍລິການ.
3) ກຳນົດ ແລະ ຈັດລຽງບູລິມະສິດສິນຄ້າຍຸດທະສາດກະສິກຳ ເພື່ອຫັນການຜະລິດກະສິກຳ ໄປສູ່ອຸດສະຫະກຳກະສິກຳ-ທັນສະໄໝ ຊຶ່ງເລີ່ມຈາກ ການພັດທະນາ ບາງສິນຄ້າບຸລິມະສິດ ເຊັ່ນ: ເຂົ້າ, ສາລີ, ກາເຟ, ອ້ອຍ, ມັນຕົ້ນ, ຢາງພາລາ, ງົວ, ພືດຜັກ ແລະ ພືດອື່ນໆ. ສິນຄ້າຍຸດທະສາດກະສິກຳເຫລົ່ານີ້ ສາມາດເປັນວັດຖຸດິບກະສິກຳ ເພື່ອປ້ອນໂຮງງານອຸດສະຫາກຳປຸງແຕ່ງ ເຊັ່ນ: ອຸດສະຫະກຳອາຫານ (ສຳເລັດຮູບ ແລະ ເຄິ່ງສຳເລັດຮູບ), ການປຸງແຕ່ງອາຫານສັດ, ຜະລິດຕະພັນອື່ນໆ ເພື່ອສ້າງມູນຄ່າ ເພີ່ມໃນການສົ່ງອອກ. ກົນໄກການຫັນເປັນອຸດສະຫະກຳ-ກະສິກຳເຫລົ່ານີ້ ຕ້ອງມີນະໂຍບາຍສົ່ງເສີມສະເພາະ ເພື່ອກະຕຸກຊຸກຍູ້ ແລະ ເຊື່ອມໂຍງ ຂະບວນການຜະລິດ, ການປຸງແຕ່ງ ແລະ ການຕະຫຼາດ ໃຫ້ເຂົ້າກັນຢ່າງເປັນລະບົບ.
4) ເພີ່ມອັດຕາສ່ວນການລົງທຶນ ໃນອຸດສາຫະກຳປຸງແຕ່ງກະສິກຳ ໂດຍລັດຄວນມີນະໂຍບາຍພິເສດ ເພື່ອສົ່ງເສີມການປຸງແຕ່ງອຸດສາຫະກຳກະສິກຳ ແນໃສ່ຮັບປະກັນການສະໜອງວັດຖຸດິບ ແລະ ພະລັງງານໃຫ້ແກ່ອຸດສາຫະກຳ.
5) ຫັນເປັນຊົນລະກະເສດ ແລະ ເຂດຜະລິດສະເພາະ ໂດຍສົ່ງເສີມການຜະລິດ ດ້ວຍລະບົບຊົນລະກະເສດ ແລະ ເຮັດກະເສດສຸມ, ໂດຍສະເພາະໃນເຂດທົ່ງພຽງໃຫຍ່, ທົ່ງພຽງກາງ ແລະ ທົ່ງພຽງນ້ອຍເຂດພູດອຍ ແລະ ສົ່ງເສີມການຜະລິດສິນຄ້າ ຕາມຄວາມຕ້ອງການຂອງຕະຫຼາດ ໂດຍການຊຸກຍູ້ສົ່ງເສີມທຸກພາກສ່ວນເສດຖະກິດ, ນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມ.
6) ຢູ່ເຂດພູດອຍ ເລັ່ງໃສ່ການເຮັດກະເສດສຸມຂະໜາດນ້ອຍລະດັບຄອບຄົວ ຕິດພັນກັບການພັດທະນາຊົນນະບົດຮອບດ້ານ, ລະດັບກຸ່ມບ້ານ, ເພື່ອຮັບປະກັນສະບຽງອາຫານ ແລະ ການຜະລິດເປັນສິນຄ້າທີ່ມີ ທ່າແຮງ ໄປຄຽງຄູ່ກັບ ການສົ່ງເສີມການຜະລິດກະສິກຳອິນຊີ ທີ່ເປັນທ່າແຮງ ຂອງທ້ອງຖິ່ນ ແລະ ມີຕະຫຼາດຮັບປະກັນທີ່ແນ່ນອນ.

7) ເພື່ອເຮັດໃຫ້ການຫັນເປັນ ອຸດສາຫະກຳ-ທັນສະໄໝ ໃນຂະແໜງກະສິກຳ-ຊົນນະບົດ ມີປະສິດຕິຜົນ ແລະ ຍືນຍົງ ຕ້ອງມີຂະແໜງການ ຫຼື ໜ່ວຍງານຮັບຜິດຊອບສະເພາະໃນການ ຄົ້ນຄວ້າ, ຜະລິດ ແລະ ສົ່ງເສີມ ກົນຈັກກະສິກຳ.

### 3.1.7 ການພັດທະນາກຸ່ມ/ສະຫະກອນການຜະລິດກະສິກຳ ຕິດພັນກັບການສ້າງຊົນນະບົດໃໝ່

1) ການຈັດຕັ້ງການຜະລິດແບບຄອບຄົວ, ຂະໜາດນ້ອຍກະແຈກກະຈາຍ ຊຶ່ງການສົ່ງເສີມຂອງພາກລັດບໍ່ສາມາດເຂົ້າເຖິງ: ເພື່ອຮັບປະກັນເຮັດໃຫ້ການຜະລິດສະບຽງອາຫານ ແລະ ຜະລິດສິນຄ້າກະສິກຳຮັບປະກັນໄດ້ຕາມຄວາມຕ້ອງການໃນໄລຍະໃໝ່, ຈຶ່ງມີຄວາມຈຳເປັນ ຕ້ອງໄດ້ປັບປຸງການຈັດຕັ້ງການຜະລິດ ໂດຍຜ່ານຮູບແບບການລວມກັນເປັນກຸ່ມ, ສະມາຄົມ/ນິຄົມ ກ້າວໄປສ້າງຕັ້ງເປັນ ສະຫະກອນແບບໃໝ່ ຕາມຕ່ອງໂສ້ສ້າງມູນຄ່າເພີ້ມ ຕິດພັນກັບ ບູລິມະສິດສິນຄ້າຍຸດທະສາດກະສິກຳເຊັ່ນ: ເຂົ້າ, ສາລີ, ກາເຟ, ອ້ອຍ, ມັນຕົ້ນ, ຢາງພາລາ, ງົວ, ພືດຜັກ ແລະ ພືດອື່ນໆ. ເລີ່ມຈາກກຳນົດເຂດເນື້ອທີ່, ຄອບຄົວເຂົ້າຮ່ວມ ແນໃສ່ ເພື່ອປັບປຸງອົງການຈັດຕັ້ງຂອງຊາວກະສິກອນ ໃຫ້ເຂັ້ມແຂງໃນການຈັດຕັ້ງ ວາງແຜນການຜະລິດ ແລະ ຈຳໜ່າຍ ໂດຍຮ່ວມກັນ ເປັນເຈົ້າຂອງທຸລະກິດ ແລະ ມີການປັນຜົນກຳໄລ ໃຫ້ສັງຄົມ ແລະ ສະມາຊິກ ດ້ວຍຄວາມເປັນທຳ ຮອດປີ 2020 ສ້າງໃຫ້ມີຕົວແບບໜຶ່ງຕົວແບບຂອງແຕ່ລະເມືອງ ໃນ 18 ແຂວງ; ໃນນີ້ ສ້າງ ແລະ ກຳນົດເອົາເຂດການຜະລິດຢູ່ປະຕູນ້ຳທີ 1, 3 ແລະ 4 ຂອງລຸ່ມເຂື່ອນໄຟຟ້ານ້ຳເທີນ 2 ໂດຍເລີ່ມຈາກປະຕູ 3 ເປັນຕົວແບບໃນການຜະລິດເປັນ ລະບົບຕ່ອງໂສ້ຄົບວົງຈອນ ນັບແຕ່ຂອດການຜະລິດ ໄປຈົນຮອດຂອດການປຸງແຕ່ງ ແລະ ການຕະ ຫຼາດ ຕິດພັນກັບການທົດລອງສ້າງຊົນນະບົດໃໝ່.

2) ຫັນການຄຸ້ມຄອງ ແລະ ວິທີການຈັດຕັ້ງກຸ່ມ/ສະຫະກອນ ການຜະລິດກະສິກຳ ເຂົ້າສູ່ລະບຽບ, ກົດໝາຍ ເລີ່ມຈາກການຜັນຂະຫຍາຍດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 136/ນຍ ລົງວັນທີ 05/08/2010 ວ່າດ້ວຍສະຫະກອນ ໃຫ້ເປັນຂໍ້ຕົກລົງຂອງ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ແລະ ເປັນຄຳແນະນຳ ຂອງກົມສົ່ງເສີມ ກະສິກຳ ແລະ ສະຫະກອນ ເພື່ອເປັນບ່ອນອີງ ແລະ ເປັນເອກກະພາບກັນໃນການຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ.

3) ຖອດຖອນບົດຮຽນ ຈາກບັນດາປະເທດເພື່ອນບ້ານ ແລະ ປະເທດໃກ້ຄຽງ ທີ່ປະສົບຜົນສຳເລັດໃນການສ້າງຕັ້ງກຸ່ມ ແລະ ສະຫະກອນການຜະລິດ ລວມທັງບົດຮຽນທາງດ້ານການກຳນົດນະໂຍບາຍ ແລະ ນິຕິກຳຕ່າງໆ ເພື່ອກະຕຸກຊຸກຍູ້, ສົ່ງເສີມ ແລະ ກຳນົດມາດຕາການການສົ່ງເສີມ ສະຫະກອນການຜະລິດ ດ້ວຍຮູບແບບຕ່າງໆເພື່ອໃຫ້ແທດເໝາະກັບເງື່ອນໄຂຕົວຈິງຂອງ ສປປລາວ. ເພື່ອເຮັດໃຫ້ການພັດທະນາ ແລະ ການຈັດຕັ້ງກຸ່ມ/ສະຫະກອນ ການຜະລິດກະສິກຳ ຢູ່ ສປປ ລາວ ປະສົບຜົນສຳເລັດ ແລະ ມີປະສິດທິຜົນ ຄວນເອົາໃຈໃສ່ບາງມາດຕະການຕົ້ນຕໍ ດັ່ງນີ້:

- ຖືວຽກງານດັ່ງກ່າວ ເປັນໜ້າທີ່ ແລະ ຄວາມຮັບຜິດຊອບຂອງທຸກຂະແໜງການທີ່ກ່ຽວຂ້ອງ ໂດຍສະເພາະ ອຳນາດການປົກຄອງທ້ອງຖິ່ນແຕ່ລະຂັ້ນ ໂດຍມີການເຂົ້າຮ່ວມຂອງພາກສ່ວນຜູ້ປະ

ກອບການ ແລະ ຄວາມເປັນເຈົ້າການ, ຕື່ນຕົວສະໝັກໃຈ ຂອງຊາວກະສິກອນ ແລະ ມີລະບົບປະສານງານຢ່າງກົມກຽວ.

- ການຈັດຕັ້ງປະຕິບັດໃນການສ້າງ ກຸ່ມ ແລະ ສະຫະກອນ ຜະລິດແບບໃໝ່ ຕາມຕ່ອງໂສ້ການຜະລິດ ຕິດພັນກັບ ການປຸງແຕ່ງ ເລີ່ມຈາກການກຳນົດເປັນ ເຂດ, ເນື້ອທີ່ການຜະລິດ ແລະ ແບ່ງປັນໜ້າທີ່ ຫຼື ມີການແບ່ງງານການຜະລິດ ລວມທັງການບໍລິການປັດໃຈ, ເຄື່ອງມື ແລະ ພາຫານະການຜະລິດ ໂດຍມີການວາງແຜນການຜະລິດ ຕິດພັນກັບ ແຜນການສະໜອງ ແລະ ຈໍລະຈອນແຈກຢາຍ.
- ເລີ່ມຕົ້ນໃຫ້ມີວິຊາການປະຈຳແຕ່ 1 ຫາ 4 ຕຳແໜ່ງງານ ເພື່ອນຳພາ ກຸ່ມ, ສະຫະກອນການຜະລິດ ປະຕິບັດຕົວຈິງ ຄື: ການສ້າງລະບົບການຄຸ້ມຄອງພາຍໃນຂອງກຸ່ມ ແລະ ສະຫະ ກອນ ເຊັ່ນ: ຈັດຕັ້ງຄະນະບໍລິຫານງານ, ສ້າງລະບຽບການຄຸ້ມຄອງ, ສ້າງຕັ້ງກອງທຶນ, ລະບົບບັນຊີ ແລະ ການຈົດທະບຽນຄຸ້ມຄອງ ນຳພາກສ່ວນກ່ຽວຂ້ອງ ແລະ ການເຂົ້າເຖິງ ນະໂຍບາຍສົ່ງເສີມ ແລະ ພັດທະນາຕ່າງໆ ແລະ ມີການກວດກາ ການຈັດຕັ້ງປະຕິບັດ ດ້ານເຕັກນິກ, ນິຕິກຳ ຂໍ້ຕົກລົງ, ຄຳສັ່ງແນະນຳ ຂອງລັດຖະບານ ວາງອອກ.
- ຊຸກຍູ້ ແລະ ສ້າງເງື່ອນໄຂໃຫ້ ໃຫ້ກຸ່ມ, ສະຫະກອນ ມີຄວາມເຂັ້ມແຂງດ້ານການບໍລິຫານ ແລະ ຄຸ້ມຄອງການດຳເນີນທຸລະກິດລວມໝູ່ ຕິດພັນກັບການສ້າງ ແລະ ພັດທະນາສີມືແຮງງານ.
- ເປີດກວ້າງການລົງທຶນ ແລະ ຊຸກຍູ້ການເຂົ້າຮ່ວມຂອງຜູ້ປະກອບການ ເພື່ອເຮັດບໍລິການສອງສົ້ນ ໂດຍສະເພາະ ດ້ານກົນຈັກກະສິກຳ ຕັ້ງແຕ່ຂອດຕຽມດິນ ຈົນຮອດຂອດຫຼັງການເກັບກ່ຽວ ແລະ ປຸ່ງແຕ່ງ ແລະ ຮັບປະກັນທາງດ້ານການຕະຫຼາດ ດ້ວຍຄວາມເປັນທຳ.
- ດຳເນີນຕາມບາດກ້າວ ແລະ ຂັ້ນຕອນດັ່ງນີ້: ໄລຍະທຳອິດ ແມ່ນສ້າງເປັນກຸ່ມຮຽນຮູ້ ເພື່ອຖອດຖອນບົດຮຽນ ໂດຍໃຫ້ມີວິຊາການນຳພາປະຕິບັດປະຈຳ ແລະ ຫລັງຈາກນັ້ນ ໄລຍະກຸ່ມມີບົດຮຽນສາມາດດຳເນີນການຜະລິດເປັນສິນຄ້າ ຫຼື ດຳເນີນທຸລະກິດໄດ້ແລ້ວ, ວິຊາການທີ່ປະຈຳແມ່ນເຮັດໜ້າທີ່ເປັນທີ່ປຶກສາ ໂດຍການວ່າຈ້າງຂອງກຸ່ມ, ສະຫະກອນ. ສ່ວນລັດ ເຮັດໜ້າທີ່ກວດສອບ ກຸ່ມ, ສະຫະກອນ ໃນການຈັດຕັ້ງ ປະຕິບັດ ຕາມບັນດານິຕິກຳ ຂອງລັດວາງອອກ.
- ປັບປຸງບ່ອນທີ່ມີເງື່ອນໄຂ ໃຫ້ເຮັດນາໄຮ່ໃຫຍ່ ເພື່ອໃຫ້ແທດເໝາະກັບການນຳໃຊ້ກົນຈັກເຂົ້າ ໃນການຜະລິດ (ຕຽມດິນ, ປັກດຳ ແລະ ເກັບກ່ຽວ) ໄປຄຽງຄູ່ກັບການປັບປຸງລະບົບຕາໜ່າງ ການຂົນສົ່ງໃນເຂດການຜະລິດ, ພື້ນຖານໂຄງລ່າງການປຸງແຕ່ງ, ການເກັບຮັກສາ ແລະ ການຈຳໜ່າຍ ຜະລິດຕະພັນ ໃຫ້ເປັນລະບົບຄົບຊຸດ.
- ຈັດຕັ້ງການປະກວດຊາວນາ ຫຼື ກຸ່ມ ດີເດັ່ນ ເພື່ອຍ້ອງຍໍຊົມເຊີຍ ມອບເປັນວັດຖຸ ຫຼື ໃຫ້ນາມມະຍົດ ເປັນຜູ້ຊຳນານງານແຫ່ງຊາດ, ຂອງແຂວງ, ຂອງເມືອງ ຫຼື ບ້ານ ຫຼື ດ້ວຍຮູບການຈັດໃຫ້ມີການໄປທັດສະນະຢູ່ພາຍໃນ ຫຼື ຕ່າງປະເທດຕາມຄວາມເໝາະສົມ. ຊ່ວຍເຫຼືອສະໜັບສະໜູນລູກຊາວນາຜູ້ດີເດັ່ນ ຜູ້ທີ່ຈະສືບທອດ ເຮັດອາຊີບຊາວນາ ດ້ວຍການເຮັດສັນຍາໃຫ້ທຶນການສຶກສາ

ໄປຮຽນຕໍ່ດ້ານປູກຝັງ, ປະກອບທຶນເບື້ອງຕົ້ນ ເພື່ອດຳເນີນການຜະລິດເຂົ້າ ຫຼື ພືດກະສິກຳອື່ນ ຕາມເງື່ອນໄຂກຳນົດ.

4) ສ້າງກົນໄກປະສານງານ, ພົວພັນ ແລະ ຮ່ວມມື ລະຫວ່າງກຸ່ມ/ສະຫະກອນ ກັບພາກສ່ວນທຸລະກິດ, ຜູ້ປະກອບການ ເພື່ອເອື້ອອຳນວຍໃຫ້ແກ່ການພັດທະນາທຸລະກິດກະສິກຳ.
5) ສ້າງກົນໄກປະສານສົມທົບ ລະຫວ່າງກຸ່ມ/ສະຫະກອນ ກັບສູນບໍລິການເຕັກນິກ ເພື່ອຖ່າຍທອດ ເຕັກນິກ-ເຕັກໂນໂລຊີໃໝ່ ໃຫ້ແກ່ຊາວກະສິກອນ.

## 3.2 ມາດຕະການສະເພາະ ທາງດ້ານວິຊາການ

### 3.2.1 ມາດຕະການສຳລັບການຜະລິດສະບຽງອາຫານ

#### 3.2.1.1 ມາດຕະການດ້ານການປູກຝັງ

ເພື່ອຜັນຂະຫຍາຍທິດທາງ, ເປົ້າໝາຍ ແລະ ຕົວເລກຄາດໝາຍລວມຂອງຍຸດທະສາດ ໃຫ້ເປັນອັນສະເພາະໃນຂະແໜງການປູກຝັງ ຮອດປີ 2020 ຕ້ອງໄດ້ສຸມໃສ່ຈັດຕັ້ງປະຕິບັດ ໜ້າວຽກສຳຄັນຕົ້ນຕໍ ດັ່ງນີ້:

**1). ການກຳນົດ ແລະ ແບ່ງເຂດ ການນຳໃຊ້ທີ່ດິນກະສິກຳ**

ອີງຕາມການສຳຫຼວດ ແລະ ແບ່ງເຂດດິນກະສິກຳ ໃນລະດັບແຂວງ ແລະ ເມືອງ ໃນຂອບເຂດທົ່ວປະເທດ, ທີ່ດິນກະສິກຳທັງໝົດມີປະມານ 4,5 ລ້ານ ເຮັກຕາ (ເທົ່າກັບ 19% ຂອງພື້ນທີ່ດິນທົ່ວປະເທດ) ໄດ້ແບ່ງອອກເປັນ 3 ປະເພດຍ່ອຍຄື: 1) ພື້ນທີ່ຮາບພຽງ ແລະ ເໝາະສົມສຳລັບການເຮັດນາ ແລະ ປູກພືດລົ້ມລຸກ ອາຍຸສັ້ນ ມີເນື້ອທີ່ປະມານ 2 ລ້ານເຮັກຕາ, 2) ພື້ນທີ່ ທີ່ມີຄວາມຄ້ອຍຊັນປານກາງ, ຊັ້ນດິນເລິກເໝາະແກ່ການປູກພືດສະບຽງ ເຊັ່ນ: ສາລີ, ຖົ່ວເຫຼືອງ, ຖົ່ວຂຽວ, ໄມ້ກິນໝາກ, ພືດອຸດສະຫະກຳ ຫຼື ພືດເສດຖະກິດຕ່າງໆ ມີເນື້ອທີ່ປະມານ 1,8 ລ້ານເຮັກຕາ ແລະ 3) ພື້ນທີ່ດິນທີ່ເປັນທົ່ງຫຍ້າທຳມະຊາດເໝາະສົມແກ່ການລ້ຽງສັດໃຫ່ຍ ມີເນື້ອທີ່ປະມານ 0,65 ລ້ານເຮັກຕາ, ນອກນັ້ນຍັງສາມາດ ລ້ຽງສັດໃຫຍ່ຢູ່ໃນເຂດປ່າໄມ້ ເຊັ່ນ: ໃນເຂດປ່າໂຄກ, ປ່າຫ່າງ, ປ່າພຸ່ມ ແລະ ປ່າຕ່ຳ ຊຶ່ງມີເນື້ອທີ່ປະມານ 1,14 ລ້ານເຮັກຕາ.

ເພື່ອນຳໃຊ້ທີ່ດິນກະສິກຳໃຫ້ມີຄວາມຍືນຍົງ, ທັງສອດຄ່ອງ ແລະ ແທດເໝາະກັບເງື່ອນໄຂ, ທີ່ຕັ້ງ, ຈຸດພິເສດ, ທ່າແຮງ, ຂໍ້ໄດ້ປຽບຂອງແຕ່ລະພື້ນທີ່ ໃນການດຳເນີນການຜະລິດ ແລະ ທຸລະກິດ ດ້ານການປູກຝັງ ໃຫ້ເປັນລະບົບຕ່ອງໂສ້, ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວ ແລະ ຕາມທິດການຜະລິດກະສິກຳສະອາດ, ຈຶ່ງໄດ້ກຳນົດ ແລະ ຈັດສັນ ເຂດການຜະລິດຕາມເຂດແຄ້ວນ ຊຶ່ງສາມາດສັງລວມ ການກຳນົດເຂດທີ່ດິນ ສຳລັບການຜະລິດ ຄືດັ່ງລຸ່ມນີ້:

**ກ. ເນື້ອທີ່ດິນກະສິກຳ ທີ່ເປັນທົ່ງພຽງ[6]:**

ເນື້ອທີ່ດິນກະສິກຳ ທີ່ເປັນທົ່ງພຽງທີ່ສຳຄັນ ໃນທົ່ວປະເທດ ແມ່ນມີຫຼາຍເຂດ ຊຶ່ງຖືກຈັດແບ່ງ ຕາມຂະໜາດ ເຊັ່ນ: ທົ່ງພຽງໃຫຍ່, ທົ່ງພຽງກາງ ແລະ ທົ່ງພຽງນ້ອຍ; ລາຍລະອຽດ ແຕ່ລະເຂດທົ່ງພຽງ ມີຄື:

- **<u>ທົ່ງພຽງໃຫຍ່</u> ທີ່ມີເນື້ອທີ່ຫຼາຍກວ່າ 30.000 ເຮັກຕາ ມີທັງໝົດ 7 ແຫ່ງ ຄື:** ທົ່ງພຽງວຽງຈັນ, ທົ່ງພຽງບໍລິຄຳໄຊ, ທົ່ງພຽງເຊບັ້ງໄຟ, ທົ່ງພຽງເຊບັ້ງຫຽງ, ທົ່ງພຽງເຊໂດນ, ທົ່ງພຽງຈຳປາສັກ ແລະ ທົ່ງພຽງອັດຕະປື, ຊຶ່ງກວມເອົາ 9 ແຂວງ 51 ເມືອງ, ມີເນື້ອທີ່ທັງໝົດ ປະມານ 2.370.600 ເຮັກຕາ ໃນນີ້ ເນື້ອທີ່ດິນກະສິກຳມີປະມານ 1.208.400 ເຮັກຕາ; ເນື້ອທີ່ໆເປັນນາແລ້ວ ປະມານ 718.200 ເຮັກຕາ, ເນື້ອທີ່ສຳລັບ ການປູກພືດ ແລະ ໄມ້ໃຫ້ໝາກ ປະມານ 127.100 ເຮັກຕາ ແລະ ທົ່ງຫຍ້າລ້ຽງສັດ ປະມານ 4.800 ເຮັກຕາ, ເນື້ອທີ່ໆຈະສາມາດຂະຫຍາຍສຳລັບການຜະລິດກະສິກຳ ໄດ້ຕື່ມທັງໝົດ ປະມານ 358.300 ເຮັກຕາ. ໃນເຂດ 7 ທົ່ງພຽງໃຫ່ຍນີ້ ເປັນພື້ນທີ່ ຢູ່ໃນລະດັບຕ່ຳ ທີ່ມີອາກາດອົບອຸ່ນ (ທຽບໃສ່ ໜ້ານ້ຳທະເລ 100-200 ແມັດ) ຊຶ່ງເປັນພື້ນທີ່ເໝາະສົມ ໃນການພັດທະນາຊົນລະກະເສດ, ພືດທີ່ເໝາະສົມປູກໃນລະດູຝົນແມ່ນ ເຂົ້າ, ສ່ວນລະດູແລ້ງ ໃນເຂດຊົນລະກະເສດສາມາດປູກພືດໄດ້ຫຼາຍຊະນິດ ເຊັ່ນ: ເຂົ້າ, ສາລີ, ປະເພດຖົ່ວ, ຜັກຕ່າງໆ, ຢາສູບ ແລະ ອື່ນໆ.
- **<u>ທົ່ງພຽງຂະໜາດກາງ</u> ທີ່ມີເນື້ອທີ່ ແຕ່ 5.000 ຫາ 30.000 ເຮັກຕາ ມີທັງໝົດ 16 ແຫ່ງ**, ກວມເອົາ 9 ແຂວງ (ນະຄອນຫຼວງ, ວຽງຈັນ, ໄຊຍະບູລີ, ບໍ່ແກ້ວ, ຫຼວງນ້ຳທາ, ອຸດົມໄຊ, ຊຽງຂວາງ, ຫຼວງພະບາງ ແລະ ເຊກອງ), 16 ເມືອງ ມີເນື້ອທີ່ທັງໝົດ ປະມານ 252.800 ເຮັກຕາ ໃນນີ້ ເນື້ອທີ່ດິນກະສິກຳມີປະມານ 208.800 ເຮັກຕາ; ເນື້ອທີ່ໆເປັນນາແລ້ວ ປະມານ 51.400 ເຮັກຕາ, ເນື້ອທີ່ປູກພືດ ແລະ ໄມ້ກິນໝາກ ປະມານ 46.300 ເຮັກຕາ ແລະ ທົ່ງຫຍ້າລ້ຽງສັດ ປະມານ 2.100 ເຮັກຕາ, ເນື້ອທີ່ໆຈະສາມາດຂະຫຍາຍ ສຳລັບການຜະລິດກະສິກຳໄດ້ຕື່ມທັງໝົດ 109.000 ເຮັກຕາ. ໃນເຂດທົ່ງພຽງຂະໜາດກາງ ສ່ວນໃຫ່ຍມີລະດັບຄວາມສູງຈາກລະດັບໜ້ານ້ຳທະເລ ຢູ່ໃນລະຫວ່າງ 500-700 ແມັດ, ລະດູຝົນ ເໝາະສົມແກ່ການປູກເຂົ້າ ແລະ ລະດູແລ້ງ ສາມາດປູກເຂົ້າ, ສາລີ, ຖົ່ວ ແລະ ພືດອື່ນໆ.
- **<u>ທົ່ງພຽງນ້ອຍເຂດພູດອຍ</u> ທີ່ມີເນື້ອທີ່ ແຕ່ 300 ຫາ 5.000 ເຮັກຕາ ມີທັງໝົດ 12 ແຫ່ງ,** ກວມເອົາ 6 ແຂວງ, 11 ເມືອງ ມີເນື້ອທີ່ທັງໝົດ ປະມານ 22.200 ເຮັກຕາ, ໃນນີ້ ເນື້ອທີ່ດິນກະສິກຳ ມີປະມານ 16.000 ເຮັກຕາ; ເນື້ອທີ່ໆເປັນນາແລ້ວ ປະມານ 2.700 ເຮັກຕາ, ເນື້ອທີ່ປູກພືດ ແລະ ໄມ້ໃຫ້ໝາກ 9.200 ເຮັກຕາ ແລະ ທົ່ງຫຍ້າລ້ຽງສັດ ປະມານ 400 ເຮັກ

[6] ເຂດພື້ນທີ່ກະສິກຳທີ່ເປັນທົ່ງພຽງ: ໝາຍເຖິງພື້ນທີ່ ທີ່ມີຄວາມຮາບພຽງ ຫາຄ້ອຍຊັນປານກາງ ຊຶ່ງມີລະດັບຄວາມຄ້ອຍຊັນ ລະ ຫວ່າງ 0-26% (ຫຼື 0-15 ອົງສາ), ລະດັບຄວາມສູງຈາກໜ້ານ້ຳທະເລ ຂອງບັນດາທົ່ງພຽງໃຫ່ຍແມ່ນຕ່ຳກ່ວາ 500 ແມັດ ລົງມາ, ສຳລັບບັນດາທົ່ງພຽງນ້ອຍເຂດພູດອຍ ລະດັບຄວາມສູງຈາກໜ້ານ້ຳທະເລສ່ວນໃຫຍ່ແມ່ນຢູ່ໃນລະຫວ່າງ 500-700 ແມັດ ແລະ ການນຳໃຊ້ທີ່ດິນ ເຂົ້າໃນການຜະລິດແມ່ນຫຼາຍກ່ວາ 50% ຂື້ນໄປ.

ຕາ, ເນື້ອທີ່ໆຈະສາມາດ ຂະຫຍາຍສຳລັບການຜະລິດກະສິກຳ ໄດ້ຕື່ມທັງໝົດ ປະມານ 3.500 ເຮັກຕາ. ໃນເຂດທົ່ງພຽງນ້ອຍ ໂດຍສະເພາະ ຢູ່ເຂດພູດອຍ ທີ່ມີລະດັບຄວາມສູງຈາກໜ້ານ້ຳທະເລ ຫຼາຍກວ່າ 500 ແມັດ ໃນລະດູຝົນ ສາມາດປູກເຂົ້າທີ່ມີຄຸນນະພາບສູງໄດ້ດີ, ສ່ວນລະດູແລ້ງສາມາດປູກພືດໄດ້ຫຼາຍ ຊະນິດ ເຊັ່ນ: ຖົ່ວດິນ, ຜັກທຽມ, ພືດຜັກ ແລະ ອື່ນໆ ທີ່ໃຊ້ນ້ຳໜ້ອຍ, ເຂດດັ່ງກ່າວສ່ວນໃຫຍ່ແມ່ນມີໝອກປົກຄຸມ.

### ຂ. ເນື້ອທີ່ດິນກະສິກຳ ທີ່ບໍ່ໄດ້ຈັດເປັນທົ່ງພຽງ:

**ນອກຈາກເຂດທົ່ງພຽງແລ້ວ ຍັງມີເຂດຮາບພຽງອື່ນໆ**[7] ທີ່ກະຈາຍຢູ່ໃນທົ່ວປະເທດ ຊຶ່ງບໍ່ໄດ້ຈັດເຂົ້າໃນເຂດທົ່ງພຽງຕ່າງໆຂ້າງເທິງ ຊຶ່ງມີເນື້ອທີ່ກະສິກຳທັງໝົດ ປະມານ 2 ລ້ານເຮັກຕາ, ໃນນັ້ນ ເນື້ອທີ່ໆເປັນນາແລ້ວ ປະມານ 182.500 ເຮັກຕາ, ເນື້ອທີ່ສຳລັບ ການປູກພືດ ແລະ ໄມ້ໃຫ້ໝາກ ປະມານ 304.400 ເຮັກຕາ ແລະ ທົ່ງຫຍ້າລ້ຽງສັດ ປະມານ 147.300 ເຮັກຕາ, ເນື້ອທີ່ໆຈະສາມາດຂະຫຍາຍສຳລັບການຜະລິດກະສິກຳໄດ້ຕື່ມທັງໝົດ ມີປະມານ 1,36 ລ້ານເຮັກຕາ; ໃນນີ້ ອາດສາມາດຂະຫຍາຍເປັນເນື້ອທີ່ນາໄດ້ຕື່ມ ປະມານ 650.000 ເຮັກຕາ ແລະ ຂະຫຍາຍເປັນເນື້ອທີ່ສຳລັບປູກພືດ ແລະ ໄມ້ໃຫ້ໝາກ ໄດ້ປະມານ 717.000 ເຮັກຕາ.

### ຄ. ເນື້ອທີ່ດິນກະສິກຳ ທີ່ເປັນພູພຽງ ແລະ ພູດອຍ:

- **<u>ເຂດພູພຽງ</u>**[8]: ລວມມີ 3 ພູພຽງຕົ້ນຕໍ ຄື: ພູພຽງບໍລິເວນ, ພູພຽງນາກາຍ ແລະ ພູພຽງຊຽງຂວາງ ຊຶ່ງກວມ 5 ແຂວງ, 10 ເມືອງ ມີເນື້ອທີ່ທັງໝົດ ປະມານ 291.900 ເຮັກຕາ ໃນນັ້ນ ເນື້ອທີ່ດິນກະສິກຳມີປະມານ 185.100 ເຮັກຕາ; ເນື້ອທີ່ໆເປັນນາແລ້ວ ປະມານ 4.900 ເຮັກຕາ, ເນື້ອທີ່ປູກພືດ ແລະ ໄມ້ໃຫ້ໝາກ ປະມານ 151.600 ເຮັກຕາ ແລະ ທົ່ງຫຍ້າລ້ຽງສັດ ປະມານ 9.900 ເຮັກຕາ, ເນື້ອທີ່ໆຈະສາມາດຂະຫຍາຍສຳລັບການຜະລິດກະສິກຳ ໄດ້ຕື່ມທັງໝົດ ປະມານ 18.700 ເຮັກຕາ.
    - **<u>ພູພຽງບໍລິເວນ</u>**: ມີລະດັບຄວາມສູງຈາກໜ້ານ້ຳທະເລ ລະຫວ່າງ 700-1.000 ແມັດ, ກວມ 3 ແຂວງ (ສາລະວັນ, ຈຳປາສັກ ແລະ ເຊກອງ), 4 ເມືອງ ຄື: ປາກຊ່ອງ, ບາຈຽງ (ແຂວງຈຳປາສັກ), ເລົ່າງາມ (ແຂວງສາລະວັນ), ທ່າແຕງ (ແຂວງເຊກອງ), ມີເນື້ອທີ່ທັງໝົດ

---

[7] ເຂດຮາບພຽງອື່ນໆ: ໝາຍເຖິງພື້ນທີ່ ທີ່ມີຄວາມຮາບພຽງ ຫາຄ້ອຍຊັນປານກາງ ຊຶ່ງມີລະດັບ ຄວາມຄ້ອຍຊັນລະຫວ່າງ 0-26% (ຫຼື 0-15 ອົງສາ), ລະດັບຄວາມສູງ ຈາກໜ້ານ້ຳທະເລ ແມ່ນຕ່ຳກວ່າ 700 ແມັດລົງມາ ແລະ ການນຳໃຊ້ ທີ່ດິນເຂົ້າໃນ ການຜະລິດແມ່ນຫຼາຍກ່ວາ 50% ຂື້ນໄປ ຊຶ່ງກະແຈກກະຈາຍຢູ່ທົ່ວທຸກພາກຂອງປະເທດ ທີ່ບໍ່ນອນຢູ່ໃນເຂດທົ່ງພຽງ, ພູພຽງ, ພູດອຍ ແລະ ມີເນື້ອທີ່ແຕ່ລະຕອນນ້ອຍກວ່າ 300 ຮຕ ລົງມາ.

[8] ເຂດພູພຽງ: ໝາຍເຖິງເຂດພື້ນທີ່ທີ່ມີຄວາມຮາບພຽງ ຫາຄ້ອຍຊັນປານກາງ ດ້ວຍຄວາມ ຄ້ອຍຊັນລະຫວ່າງ 0-26% (ຫຼື 0-15 ອົງສາ), ລະດັບຄວາມສູງຈາກໜ້ານ້ຳທະເລສ່ວນໃຫຍ່ແມ່ນລະຫວ່າງ 700-1000 ແມັດ, ພື້ນທີ່ດັ່ງກ່າວແມ່ນເປັນບໍລິເວນກວ້າງ ທີ່ຕິດຈອດ ກັນ ຊຶ່ງເໝາະສົມໃນການຜະລິດເປັນສ່ວນໃຫຍ່ ເຊັ່ນ: ພູພຽງຊຽງຂວາງ, ພູພຽງນາກາຍ ແລະ ພູພຽງບໍລິເວນ.

ປະມານ 195.900 ເຮັກຕາ, ໃນນັ້ນ ເນື້ອທີ່ດິນກະສິກຳ ມີປະມານ 160.100 ເຮັກຕາ; ເນື້ອທີ່ໆເປັນນາແລ້ວ ປະມານ 1.400 ເຮັກຕາ, ເນື້ອທີ່ປູກພືດ ແລະ ໄມ້ໃຫ້ໝາກ ປະມານ 146.600 ເຮັກຕາ, ທົ່ງຫຍ້າລ້ຽງສັດ ປະມານ 200 ເຮັກຕາ, ເນື້ອທີ່ໆສາມາດຂະຫຍາຍ ສໍາລັບການປູກຝັງ ໄດ້ຕື່ມ ປະມານ 11.900 ເຮັກຕາ. ເຂດພູພຽງບໍລິເວນ ເປັນພູພຽງ ທີ່ມີເນື້ອທີ່ ກວ້າງຂວາງ, ມີຄວາມສູງ ແລະ ມີອາກາດເຢັນທີ່ເປັນເອກະລັກສະເພາະ ເໝາະແກ່ການປູກກາເຟ, ພືດຜັກ, ໄມ້ໃຫ້ໝາກ, ດອກໄມ້ ແລະ ພືດເມືອງໜາວ ແລະ ຍັງສາມາດປູກຜັກນອກລະດູໄດ້; ເຂດ ດັ່ງກ່າວ ສາມາດເວົ້າໄດ້ວ່າ ເປັນເຂດ ທີ່ມີທ່າແຮງໄດ້ປຽບໃນດ້ານການປູກພືດຜັກ ແລະ ພືດເສດຖະກິດອື່ນໆໄດ້ເປັນຢ່າງດີ ຍ້ອນເປັນເຂດທີ່ມີ ອາກາດເໝາະສົມ ແລະ ດິນມີຄວາມອຸດົມສົມບູນດີ.

- **<u>ພູພຽງນາກາຍ</u>:** ລະດັບຄວາມສູງຈາກໜ້ານໍ້າທະເລປະມານ 800 ແມັດ, ນອນຢູ່ໃນເຂດເມືອງນາກາຍ ແຂວງ ຄໍາມ່ວນ, ມີເນື້ອທີ່ທັງໝົດ ປະມານ 67.600 ເຮັກຕາ, ໃນນັ້ນ ເນື້ອທີ່ດິນກະສິກໍາມີປະມານ 920 ເຮັກຕາ; ເນື້ອທີ່ໆເປັນນາແລ້ວ ພຽງແຕ່ 23 ເຮັກຕາ, ເນື້ອທີ່ສໍາລັບປູກພືດ ແລະ ໄມ້ໃຫ້ໝາກ 39 ເຮັກຕາ, ທົ່ງຫ້ຍາລ້ຽງສັດ 150 ເຮັກຕາ, ເນື້ອທີ່ຈະສາມາດຂະຫຍາຍສໍາລັບການຜະລິດກະສິກໍາ ໄດ້ຕື່ມ ປະມານ 710 ເຮັກຕາ, ທັງນີ້ກໍຍ້ອນວ່າ ພື້ນທີ່ສ່ວນໃຫຍ່ ແມ່ນເປັນທີ່ດິນປ່າໄມ້ (ປ່າສະຫງວນແຫ່ງຊາດ), ອີກປະການໜຶ່ງ ຄວາມເໝາະສົມ ສໍາລັບ ການປູກພືດ ແມ່ນຂ້ອນຂ້າງຕໍ່າ ເພາະວ່າ ໂຄງສ້າງຂອງດິນບໍ່ດີປານໃດ ເມື່ອທຽບໃສ່ເຂດພູພຽງບໍລິເວນ, ແຕ່ເຂດດັ່ງກ່າວ ມີອ່າງເກັບນໍ້າເຂື່ອນໄຟຟ້ານໍ້າເທີນ-2 (ກວມເນື້ອທີ່ປະມານ 45.000 ເຮັກຕາ) ຊຶ່ງເໝາະສົມ ສໍາລັບການລ້ຽງປາ ແລະ ການປະມົງ.
- **<u>ພູພຽງຊຽງຂວາງ</u>:** ລະດັບຄວາມສູງຈາກໜ້ານໍ້າທະເລ ລະຫວ່າງ 800-1.200 ແມັດ, ນອນຢູ່ໃນ 5 ເມືອງ (ເມືອງພູກູດ, ແປກ, ຄູນ, ຜາໄຊ ແລະ ເມືອງຄໍາ) ຂອງແຂວງຊຽງຂວາງ, ມີເນື້ອທີ່ທັງໝົດ ປະມານ 28.400 ເຮັກຕາ, ໃນນັ້ນ ມີເນື້ອທີ່ດິນກະສິກໍາປະມານ 24.200 ເຮັກຕາ; ເນື້ອທີ່ໆ ເປັນນາແລ້ວ ປະມານ 3.520 ເຮັກຕາ, ເນື້ອທີ່ ປູກພືດ ແລະ ໄມ້ໃຫ້ໝາກ ປະມານ 4.940 ເຮັກຕາ, ທົ່ງຫຍ້າລ້ຽງສັດ ປະມານ 9.540 ເຮັກຕາ, ເນື້ອທີ່ໆຈະສາມາດຂະຫຍາຍ ສໍາລັບການຜະລິດກະສິກໍາ ໄດ້ຕື່ມທັງໝົດ ປະມານ 6.200 ເຮັກຕາ. ພູພຽງຊຽງຂວາງ ເປັນພູພຽງທີ່ມີຂະໜາດກ້ວາງພໍສົມຄວນ ເຖິງວ່າຄຸນນະພາບ ຂອງດິນບໍ່ດີປານໃດ ແຕ່ກໍສາມາດປັບປຸງໄດ້. ອີກປະການໜຶ່ງ ເຂດດັ່ງກ່າວ ຍັງມີທ່າແຮງໄດ້ປຽບ ຍ້ອນວ່າມີຄວາມສູງ ແລະ ມີອາກາດເຢັນທີ່ເປັນເອກະລັກສະເພາະ ສາມາດປັບປຸງເປັນທົ່ງຫຍ້າລ້ຽງສັດໄດ້ດີ ແລະ ສາມາດປູກພືດເມືອງໜາວ, ລວມທັງພືດຜັກ ແລະ ໄມ້ກິນໝາກໄດ້ເປັນຢ່າງດີ.

- **<u>ເນື້ອທີ່ດິນກະສິກຳ ເຂດພູດອຍ</u>**[9]: ນອກຈາກເນື້ອທີ່ໆມີຢູ່ໃນບັນດາທົ່ງພຽງ, ພູພຽງ ແລະ ເຂດຮາບພຽງຕ່າງໆ ທີ່ກ່າວມາ ຂ້າງເທິງນັ້ນແລ້ວ ຍັງມີເນື້ອທີ່ໆບໍ່ໄດ້ຈັດເຂົ້າໃນບັນດາທົ່ງພຽງ ແລະ ພູພຽງ ຊຶ່ງສ່ວນໃຫຍ່ແມ່ນ ຢູ່ກະແຈກກະຈາຍ ໃນເຂດພູດອຍ ໃນທົ່ວປະເທດ ຊຶ່ງມີເນື້ອທີ່ດິນກະສິກຳທັງໝົດ ປະມານ 901.300 ເຮັກຕາ, ໃນນັ້ນ ເນື້ອທີ່ໆເປັນນາແລ້ວ ປະມານ 4.300 ເຮັກຕາ, ເນື້ອທີ່ປູກພືດ ແລະ ໄມ້ໃຫ້ໝາກ ປະມານ 248.200 ເຮັກຕາ, ທົ່ງຫຍ້າລ້ຽງສັດ ປະມານ 489.800 ເຮັກຕາ, ເນື້ອທີ່ຈະສາມາດຂະຫຍາຍ ສຳລັບການຜະລິດກະສິກຳ ໄດ້ຕື່ມ ທັງໝົດປະມານ 159.000 ເຮັກຕາ .

ສັງລວມແລ້ວ ເຫັນວ່າ ທີ່ດິນສຳລັບການຜະລິດກະສິກຳ ໃນ ສປປລາວ ແມ່ນມີພຽງພໍ ແຕ່ການນຳໃຊ້ທີ່ດິນດັ່ງກ່າວ ໂດຍລວມແລ້ວ ແມ່ນຍັງບໍ່ທັນນຳໃຊ້ໝົດຄວາມສາມາດຂອງພື້ນທີ່ ແລະ ການນຳໃຊ້ ກໍບໍ່ທັນມີປະສິດທິຜົນເທົ່າທີ່ຄວນ ໂດຍສະເພາະໃນເຂດທົ່ງພຽງໃຫຍ່ ແລະ ເຂດທົ່ງພຽງກາງພາກເໜືອ ເຊັ່ນ: ທົ່ງງົວແດງ, ທົ່ງພ້າວຫ້າວ, ທົ່ງຜາອຸດົມ ແຂວງບໍ່ແກ້ວ, ທົ່ງເມືອງຫຼວງນ້ຳທາ, ທົ່ງເມືອງສິງ ແຂວງຫຼວງນ້ຳທາ; ທົ່ງພຽງເມືອງພຽງ, ທົ່ງພຽງໄຊຍະບູລີ, ທົ່ງພຽງເມືອງຊຽງຮ່ອນ ແຂວງໄຊຍະບູລີ ທີ່ເຫັນວ່າມີທ່າແຮງສູງ ໃນການພັດທະນາຊົນລະກະເສດ ແລະ ອີກປະການໜຶ່ງ ປະຊາຊົນສ່ວນໃຫຍ່ ກໍມີມູນເຊື້ອໃນການຜະລິດ ກະສິກຳເປັນຢ່າງດີ.

ເຖິງຢ່າງໃດກໍຕາມ ເພື່ອເປັນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ໃຫ້ມີຄວາມຍືນຍົງ, ຮັບປະກັນປະສິດຕິຜົນສູງສຸດ, ນຳຜົນປະໂຫຍດສູງສຸດມາໃຫ້ແກ່ປະເທດຊາດ ແລະ ສາມາດປະກອບສ່ວນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກໍຄື ສາມາດສ້າງລາຍຮັບໃຫ້ແກ່ປະຊາຊົນ ຈຶ່ງສະເໜີ ບາງມາດຕະການ ເພື່ອຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ຄືດັ່ງລຸ່ມນີ້:

- ສືບຕໍ່ຢ່າງເລັ່ງລັດ ການຈັດສັນທີ່ດິນກະສິກຳ ໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນໃຫ້ມີເນື້ອທີ່ທຳ ການຜະລິດສະບຽງອາຫານຢ່າງພຽງພໍ ເພື່ອສ້າງຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ຮັກສາທີ່ດິນກະສິກຳໄວ້ບໍ່ໃຫ້ຫຼຸດ 4,5 ລ້ານເຮັກຕາ, ໃນນັ້ນ ທີ່ດິນສຳລັບຜະລິດສະບຽງອາຫານ ໂດຍສະເພາະ ດິນນາ ບໍ່ໃຫ້ຫຼຸດ 2 ລ້ານເຮັກຕາ.
- ດຳເນີນການສຳຫຼວດ ຈັດສັນ ເຂດພື້ນທີ່ເພື່ອເປົ້າໝາຍການສະຫງວນ ແລະ ຮັກສາໄວ້ ສຳລັບການຜະລິດກະສິກຳ ທີ່ມີເອກະລັກສະເພາະ ຂອງທ້ອງຖິ່ນ ເຊັ່ນ: ເຂດປູກກາເຟ ຢູ່ພູພຽງບໍລິເວນ, ເຂດປູກເຂົ້າໄກ່ນ້ອຍ ຢູ່ແຂວງຊຽງຂວາງ ແລະ ຫົວພັນ, ເຂດລ້ຽງສັດໃຫຍ່ ຢູ່ພູພຽງຊຽງຂວາງ ແລະ ແຕ້ມແຜນວາດພ້ອມທັງປັກຫຼັກໝາຍ ເຂດເນື້ອທີ່ການຜະລິດກະສິກຳ ທີ່ມີລະບົບ

[9] ພື້ນທີ່ກະສິກຳເຂດພູດອຍ: ໝາຍເຖິງເຂດພື້ນທີ່ທີ່ມີຄວາຄ້ອຍຊັນຫຼາຍກວ່າ 26% ຂຶ້ນໄປ (ຫຼື ຫຼາຍກວ່າ 15 ອົງສາຂຶ້ນໄປ), ລະດັບຄວາມສູງຈາກໜ້ານ້ຳທະເລສູງກວ່າ 500 ແມັດຂຶ້ນໄປຊຶ່ງພື້ນທີ່ດັ່ງກ່າວແມ່ນມີຫຼັກສະນະເປັນຫຼຸບເປັນໂນນ ທີ່ບໍ່ເໝາະສົມໃນ ການຜະລິດ ກະສິກຳ ຊຶ່ງສ່ວນໃຫຍ່ແມ່ນກະຈາຍຢູ່ໃນເຂດພາກເໜືອ ແລະ ເຂດຊາຍແດນທາງທິດຕາເວັນອອກ ທີ່ຕິດກັບ ສສຫວຽດນາມ ເປັນສ່ວນໃຫຍ່.

ຊົນລະປະທານຄົບຊຸດ ແມ່ນຫ້າມຫັນປ່ຽນການນຳໃຊ້ທີ່ດິນ ໄປສູ່ເປົ້າໝາຍອື່ນຢ່າງເດັດຂາດ ໂດຍສະເພາະ ໃນເຂດໂຄງການຈຸດສຸມການຜະລິດເຂົ້າ ເພື່ອຄ້ຳປະກັນສະບຽງ ໂດຍສຸມໃສ່ ບັນດາທົ່ງພຽງໃຫຍ່ ແລະ ທົ່ງພຽງກາງຈຳນວນໜຶ່ງ ໃນ 10 ແຂວງ ເພື່ອບັນລຸເນື້ອທີ່ນາປູກເຂົ້າ ທັງ 2 ລະດູ ໃຫ້ໄດ້ປະມານ 600.000 ເຮັກຕາ ແລະ ຍົກຜະລິດຕະພາບ ແນໃສ່ ເພື່ອຮັບປະ ກັນການຜະລິດເຂົ້າໃຫ້ໄດ້ 2,5 ລ້ານໂຕນເຂົ້າເປືອກ (ໃນນີ້; ເຂົ້າສຳລັບບໍລິໂພກ ປະມານ 2,1 ລ້ານໂຕນ ແລະ ເພື່ອເປັນສັງແຮເຂົ້າ ປະມານ 4 ແສນໂຕນ).

- ສຸມໃສ່ວຽກງານການສຳຫລວດທີ່ດິນ ແລະ ວາງແຜນການນຳໃຊ້ທີ່ດິນກະສິກຳ ໃນລະດັບກຸ່ມບ້ານ ໃນມາດຕາສ່ວນ 1/5.000 ຫຼື 1/10.000 ແບບມີສ່ວນຮ່ວມ ເປັນຕົ້ນແມ່ນບັນດາ ກຸ່ມບ້ານພັດທະນາໃນວຽກງານ 3 ສ້າງ ແລະ ບາງກຸ່ມບ້ານ ໃນຂອບເຂດທົ່ວປະເທດ ທີ່ເປັນບຸລິມະສິດທຳອິດ.
- ຄົ້ນຄວ້າ ແລະ ປັບປຸງຄືນບັນດາກົດໝາຍ, ລະບຽບການ ແລະ ນິຕິກຳຕ່າງໆ ທີ່ພົວພັນ ເຖິງການຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ທີ່ຍັງເຫັນວ່າບໍ່ທັນສອດຄ່ອງກັບສະພາບຕົວຈິງ ນອກຈາກນີ້ຍັງຕ້ອງໄດ້ຄົ້ນຄວ້າ ແລະ ນຳສະເໜີ ຮ່າງກົດໝາຍ ຫຼື ຮ່າງດຳລັດ ທີ່ເຫັນວ່າ ຈຳເປັນເຊັ່ນ: ກົດໝາຍ ຫຼື ດຳລັດ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ, ບັນດາຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ ແລະ ລະບຽບການຕ່າງໆ ເຊັ່ນ: ລະບຽບການ ຄຸ້ມຄອງດິນນາ, ລະບຽບການຄຸ້ມຄອງດິນກະສິກຳເຂດເນີນສູງ ແລະ ອື່ນໆ ເພື່ອຮັບໃຊ້ໃຫ້ແກ່ການປະຕິບັດ ແຜນນະໂຍບາຍ ກ່ຽວກັບການຄຸ້ມຄອງ ທີ່ດິນກະສິກຳ.
- ສ້າງພື້ນຖານໂຄງລ່າງ ຝຶກອົບຮົມ ແລະ ກໍ່ສ້າງພະນັກງານວິຊາການໃນການວິໄຈດິນ, ພືດ ແລະ ຝຸ່ນ ໃນລະດັບແຂວງໃຫ້ໄດ້ ແຂວງລະໜຶ່ງແຫ່ງ ພ້ອມວິຊາການຄົບຊຸດ ຝຶກອົບຮົມ ແລະ ກໍ່ສ້າງໝໍດິນ ປະຈຳ ບ້ານ ຫຼື ກຸ່ມບ້ານ ພັດທະນາທີ່ເປັນເປົ້າໝາຍຈຸດສຸມການຜະລິດໃຫ້ທົ່ວເຖິງ.
- ສ້າງຖານຂໍ້ມູນ, ປຶ້ມຄູ່ມືການນຳໃຊ້ດິນກະສິກຳ ແລະ ການນຳໃຊ້ຝຸ່ນຊະນິດຕ່າງໆ ເພື່ອໂຄສະນາເຜີຍແຜ່ຢ່າງກວ້າງຂວາງ ແລະ ທົ່ວເຖິງດ້ວຍຮູບການ ແລະ ວິທີການຕ່າງໆ ທີ່ເໝາະສົມເຊັ່ນ: ວິທະຍຸ,ໂທລະພາບ, ສິ່ງພິມຕ່າງໆ ແລະ ລົງເວບໄຊເຫຼົ່ານີ້ເປັນຕົ້ນ.
- ດຳເນີນການຕິດຕາມກວດກາ ຢ່າງເປັນລະບົບຕໍ່ການນຳໃຊ້ທີ່ດິນກະສິກຳ ທີ່ບໍ່ຖືກຕ້ອງ ຕາມເປົ້າໝາຍ, ການຈັບຈອງຫຼືການຫັນປ່ຽນທີ່ດິນກະສິກຳທີ່ບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ, ການນຳໃຊ້ທີ່ດິນກະສິກຳ ທີ່ເປັນຜົນສະທ້ອນອັນບໍ່ດີຕໍ່ສິ່ງແວດລ້ອມ ແລະ ອື່ນໆ ແລະ ມີມາດຕະການຢ່າງເຂັ້ມງວດຕໍ່ຜູ້ລະເມີດ.

### 2). ການຈັດແບ່ງເຂດການຜະລິດສຳລັບສະບຽງ

ເພື່ອນຳໃຊ້ທີ່ດິນກະສິກຳໃຫ້ສອດຄ່ອງ ແລະ ແທດເໝາະກັບເງື່ອນໄຂ, ທີ່ຕັ້ງ, ຈຸດພິເສດ, ທ່າແຮງ, ຂໍ້ໄດ້ປຽບຂອງແຕ່ລະພື້ນທີ່ ໃນການດຳເນີນການຜະລິດ ແລະ ທຸລະກິດ ດ້ານການປູກຝັງ ໃຫ້ເປັນ ລະບົບ

ຕ່ອງໂສ້ ແລະ ທັນສະໄໝ ຕາມທິດຜະລິດກະສິກຳສະອາດ ຈຶ່ງໄດ້ກຳນົດ ແລະ ຈັດສັນເຂດການ ຜະລິດຕາມເຂດແຄ້ວນ ສຳລັບພືດສະບຽງ ຄືດັ່ງລຸ່ມນີ້:

**(1) ເຂົ້າ**

ສຳລັບເຂດພູດອຍ ແລະ ພູພຽງ: ສຸມໃສ່ບັນດາທົ່ງພຽງນ້ອຍເຂດພູດອຍ ແລະ ພູພຽງ ໂດຍການນຳໃຊ້ພັນພື້ນເມືອງ, ແນວພັນທີ່ເອກະລັກສະເພາະທ້ອງຖິ່ນ ແລະ ແນວພັນເຂົ້າປັບປຸງ ໃນບາງເຂດທີ່ເໝາະສົມ ເພື່ອຮັບໃຊ້ບໍລິໂພກພາຍໃນ ໂດຍກຳນົດເນື້ອທີ່ປູກເຂົ້າ ປະມານ 450.000-500.000 ເຮັກຕາ, ຜົນຜະລິດໃຫ້ໄດ້ປະມານ 1,9-2,0 ລ້ານໂຕນເຂົ້າເປືອກ ແລະ ຮອດປີ 2025 ການຜະລິດເຂົ້າຈະເນັ້ນໃສ່ການຍົກສະມັດຕະພາບຕໍ່ເນື້ອທີ່ ໃນລະບົບກະສິກຳສະອາດ (GI, GAP, OA), ຜົນຜະລິດລວມປະມານ 2,3 ລ້ານໂຕນເຂົ້າເປືອກ.

ສຳລັບເຂດທົ່ງພຽງ: ຮອດປີ 2020 ຂະຫຍາຍເນື້ອທີ່ປູກເຂົ້າທົ່ວປະເທດໃຫ້ໄດ້ 1,1 ລ້ານເຮັກຕາ, ສຳລັບເນື້ອທີ່ນາ ໃນ 7 ທົ່ງພຽງໃຫຍ່ມີປະມານ 800.000 ເຮັກຕາ. ຮອດປີ 2025 ເນື້ອທີ່ນາລວມທົ່ວປະເທດເພີ່ມຂຶ້ນໃຫ້ໄດ້ 1,2 ລ້ານເຮັກຕາ. ໃນນີ້ ນອກຈາກ ກຳນົດເຂດຜະລິດທົ່ວໄປແລ້ວ ຍັງກຳນົດເປັນເຂດຈຸດສຸມ ຕົວແບບ ເພື່ອຍົກຜະລິດຕະພາບ ການຜະລິດເຂົ້າ ເຊັ່ນ:

- ທົ່ງພຽງວຽງຈັນ ແມ່ນສຸມໃສ່ ຈຸດສຸມນ້ຳງັມ-3, ຈຸດສຸມນ້ຳຊວງ, ນ້ຳທຸມ, ທົ່ງຮາບທ່າງ່ອນ, ເຂດຈຸດສຸມດົງໂພສີ, ທ່າພະ-ໜອງພົງ ໂດຍຍົກຜະລິດຕະພາບໃຫ້ໄດ້ 5 ໂຕນ/ຮຕ.
- ທົ່ງພຽງບໍລິຄຳໄຊ ສຸມໃສ່ ເຂດຈຸດສຸມກຸດຟ້າແມບ (ເມືອງທ່າພະບາດ), ຈຸດສຸມເມືອງບໍລິຄັນ, ເມືອງປາກຊັນ, ທົ່ງແສນທະມາດ (ເມືອງຄຳເກີດ).
- ທົ່ງພຽງເຊບັ້ງໄຟ ສຸມໃສ່ ຈຸດສຸມເຊບັ້ງໄຟ ລວມທັງ ເມືອງໜອງບົກ ແລະ ເມືອງເຊບັ້ງໄຟ, ເຂດນຳໃຊ້ນ້ຳລຸ່ມເຮືອນຈັກເຂື່ອນໄຟຟ້ານ້ຳເທີນ-2 (ປະຕູ 1-2, ປະຕູ 3, ປະຕູ 4-5), ເມືອງຍົມມະລາດ, ເມືອງມະຫາໄຊ, ເຂດເມືອງຫີນບູນ ແຂວງຄຳມ່ວນ ແລະ ເຂດພູເຮືອຊາວວາ ເມືອງໄຊບູລີ ແຂວງສະຫວັນນະເຂດ. ໃນນີ້ ໃນເບື້ອງຕົ້ນ ໄດ້ກຳນົດເອົາ ເຂດການຜະລິດ ໃນເນື້ອທີ່ໂຄງການຊົນລະປະທານລຸ່ມເຮືອນຈັກເຂື່ອນໄຟຟ້ານ້ຳເທີນ-2 ເປັນເຂດທົດລອງຜະລິດເຂົ້າ ແບບຄົບວົງຈອນ ຕິດພັນກັບການເຮັດທົດລອງ ພັດທະນາຕົວເມືອງໃນຊົນນະບົດ ຫຼື ພັດທະນາຊົນນະບົດໃໝ່.
- ທົ່ງພຽງເຊບັງຫຽງ ແມ່ນສຸມໃສ່ ເຂດກຸ່ມບ້ານເວີນ, ເຂດຫ້ວຍທວດ, ເຂດສຸຍ ເມືອງຈຳພອນ ແລະ ເຂດທ່າລະຫານ້ຳ ແຂວງສະຫວັນນະເຂດ.
- ທົ່ງພຽງເຊໂດນ ແມ່ນສຸມໃສ່ ເຂດເມືອງວາປີ ແລະ ເຂດອື່ນໆ ຂອງແຂວງສາລະວັນ.
- ທົ່ງພຽງຈຳປາສັກ ແມ່ນສຸມໃສ່ຈຸດສຸມທົດລອງ ເຂດໂຄງການໜອງບົວທອງ ເມືອງມຸນລະປະໂມກ, ເຂດເມືອງໂຂງ, ເຂດເມືອງປະທຸມພອນ, ເຂດເມືອງໂພນທອງ ແລະ ເຂດອື່ນໆ ຂອງແຂວງຈຳປາສັກ.
- ທົ່ງພຽງອັດຕະປື ແມ່ນສຸມໃສ່ເຂດເຊປຽນ, ຫ້ວຍສະໜອງ ແລະ ເຂດນ້ຳປາ ເມືອງ ຊານໄຊ.

ໃນນີ້ ແມ່ນກຳນົດເອົາທົ່ງພຽງ ເຊບັ້ງໄຟ ແລະ ເຊບັ້ງຫຽງ ຂອງແຂວງຄຳມ່ວນ ແລະ ແຂວງສະຫວັນນະເຂດ ເປັນເຂດໂຄງການຈຸດສຸມປູກເຂົ້າ ເພື່ອຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງ ລະດັບຊາດ.

ສຳລັບໂຄງການປູກເຂົ້າ ເພື່ອຄ້ຳປະກັນສະບຽງອາຫານ ຮັບປະກັນຜົນຜະລິດບໍ່ຫຼຸດ 2,5 ລ້ານໂຕນ ເຂົ້າເປືອກ ໄດ້ເປັນເອກະພາບກັນ ກຳນົດເອົາ 10 ແຂວງ ທີ່ມີເງື່ອນໄຂ ແລະ ມີທ່າແຮງ ເປັນເຂດຈຸດສຸມ ການຜະລິດ ຄື: ນະຄອນຫຼວງວຽງຈັນ, ແຂວງຫຼວງນ້ຳທາ, ບໍ່ແກ້ວ, ໄຊຍະບູລີ, ແຂວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ ແລະ ຈຳປາສັກ ຊຶ່ງມີເນື້ອທີ່ນາທັງໝົດ ປະມານ 600.000 ຮຕ.

**(2) ພືດຜັກ**

ສຳລັບເຂດພູດອຍ ແລະ ພູພຽງ: ສຳລັບພືດຜັກ ເນັ້ນໜັກໃສ່ ພື້ນທີ່ໆມີທ່າແຮງ ແລະ ເໝາະສົມ ທາງດ້ານນິເວດກະສິກຳ ໂດຍສະເພາະໃນເຂດພື້ນທີ່ຊານເມືອງ ແລະ ເຂດພື້ນທີ່ປະຊາຊົນທີ່ມີມູນເຊື້ອໃນ ການປູກຜັກ, ເປັນຕົ້ນເມືອງພູຄູນ ແຂວງຫຼວງພະບາງ, ເມືອງຄຳ, ເມືອງຄູນ, ເມືອງແປກ ແລະ ເມືອງທ່າ ໂທມ ແຂວງ ຊຽງຂວາງ, ເມືອງສິງ ແຂວງຫຼວງນ້ຳທາ ແລະ ເມືອງອື່ນໆ ທີ່ມີທ່າແຮງ ເພື່ອສະໜອງເຂົ້າສູ່ ຕົວເມືອງໃຫຍ່ ແລະ ເນັ້ນໃສ່ ການປູກຜັກສວນຄົວແບບປະສົມປະສານ ໃນເຂດຫ່າງໄກຊອກຫຼີກ. ຜົນ ຜະລິດປະມານ 900.000 ຫາ 1.200.000 ໂຕນ (ການຈັດແບ່ງສັດສ່ວນ 60/40 ພູພຽງ ແລະ ທົ່ງພຽງ).

ສຳລັບເຂດທົ່ງພຽງ: ພືດຜັກໃຫ້ໄດ້ ຜົນຜະລິດ 600.000 ຫາ 800.000 ໂຕນ, ເປັນຕົ້ນທົ່ງພຽງວຽງ ຈັນ ສຸມໃສ່: ເມືອງ ຫາດຊາຍຟອງ, ເມືອງສີໂຄດຕະບອງ, ເມືອງນາຊາຍທອງ, ເມືອງທຸລະຄົມ ແລະ ອື່ນໆ, ທົ່ງພຽງເຊບັ້ງໄຟ ສຸມໃສ່: ເມືອງເຊບັ້ງໄຟ, ເມືອງໜອງບົກ, ເມືອງທ່າແຂກ, ທົ່ງພຽງເຊບັ້ງຫຽງ ສຸມໃສ່: ເມືອງໄຊພູທອງ, ເມືອງ ສອງຄອນ, ເມືອງຈຳພອນ, ເມືອງໄກສອນ ແລະ ທົ່ງພຽງຈຳປາສັກ ແມ່ນ ສຸມໃສ່: ເມືອງໂພນທອງ, ເມືອງຈຳປາສັກ. ປະຕິບັດຕາມທິດທີ່ວ່າ: ສ້າງຊົນນະບົດໃຫ້ເປັນບ່ອນ ຜະລິດພືດ-ຜັກ ເພື່ອສະໜອງ ໃຫ້ແກ່ຕົວເມືອງ, ເຂດທ່ອງທ່ຽວ ແລະ ບັນດາໂຄງການພັດທະນາພື້ນຖານໂຄງລ່າງ ທີ່ມີແຮງງານຫຼາຍ; ຫຼີກເວັ້ນ ການນຳເອົາພືດ-ຜັກ ຈາກຕົວເມືອງ ສະໜອງໃຫ້ແກ່ຊົນນະບົດ.

**(3) ພືດຕະກູນຖົ່ວ**

ສຳລັບເຂດພູດອຍ ແລະ ພູພຽງ: ສຳລັບຖົ່ວດິນ ແລະ ຖົ່ວເຫຼືອງ ແມ່ນສຸມໃສ່: ເມືອງຄອບ, ປາກ ລາຍ, ບໍ່ແຕນ, ແກ່ນທ້າວ ແຂວງໄຊຍະບູລີ ແລະ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ ເປັນສະບຽງ ອາຫານ 80.000 ໂຕນ, ເນື້ອທີ່ 40.000 ຮຕ ຫຼື 60% ຂອງການຜະລິດພືດຕະກຸນຖົ່ວ ໃນທົ່ວປະເທດ.

ສຳລັບເຂດທົ່ງພຽງ: ໂດຍສະເພາະ ເຂດທົ່ງພຽງວຽງຈັນ ສຸມໃສ່: ເມືອງທຸລະຄົມ, ໂພນໂຮງ, ສັງ ທອງ, ຫາດຊາຍຟອງ, ແຂວງບໍລິຄຳໄຊ ສຸມໃສ່: ເມືອງປາກຊັນ, ແຂວງຄຳມ່ວນ ສຸມໃສ່: ເມືອງທ່າແຂກ, ເມືອງໜອງບົກ, ແຂວງສະຫວັນນະເຂດ ສຸມໃສ່: ເມືອງໄກສອນພົມວິຫານ, ເມືອງຈຳພອນ, ສອງຄອນ, ແຂວງສາລະວັນ ສຸມໃສ່: ເມືອງເລົ່າງາມ, ສາລະວັນ, ວາປີ, ແຂວງຈຳປາສັກ ສຸມໃສ່: ເມືອງບາຈຽງ ຊຶ່ງ ສ່ວນໃຫຍ່ ແມ່ນຖົ່ວດິນ, ຖົ່ວເຫຼືອງ ແລະ ຖົ່ວຂຽວ ຊຶ່ງຄາດວ່າ ມີເນື້ອທີ່ປູກສະເລ່ຍແຕ່ລະປີ ປະມານ 27.000-30.000 ເຮັກຕາ; ຄາດວ່າຈະໄດ້ຜົນຜະລິດ ສະເລ່ຍແຕ່ລະປີ ປະມານ 54.000-60.000 ໂຕນ.

**(4) ໄມ້ໃຫ້ໝາກ**

ສຳລັບເຂດພູດອຍ ແລະ ພູພຽງ: ລວມມີ ໝາກກ້ຽງ, ສຸມໃສ່ ເຂດ: ເມືອງນ້ຳບາກ, ແຂວງຫຼວງພະບາງ; ເມືອງໄຊຍະບູລີ ແຂວງໄຊຍະບູລີ; ເມືອງກາສີ, ເມືອງວັງວຽງ ແຂວງວຽງຈັນ; ເມືອງປາກຊັນ ແຂວງບໍລິຄຳໄຊ; ເມືອງຫ້ວຍຊາຍ ແຂວງບໍ່ແກ້ວ; ສຳລັບໝາກຈອງ ສຸມໃສ່ ເມືອງຄຳ ແຂວງຊຽງຂວາງ, ເມືອງຫົວເມືອງ, ເມືອງຊຳເໜືອ ແຂວງຫົວພັນ. ນອກນັ້ນ ແມ່ນປະເພດໄມ້ໃຫ້ໝາກອື່ນໆ ແມ່ນສຸມໃສ່ເຂດທີ່ມີທ່າແຮງ ແລະ ມີມູນເຊື້ອ ແລະ ສຸມໃສ່ປະເພດໄມ້ໃຫ້ໝາກ ທີ່ເປັນເອກະລັກ ຂອງທ້ອງຖິ່ນ ໂດຍໃຫ້ໄດ້ຜົນຜະລິດ ລວມທັງໝົດ 300.000 ຫາ 450.000 ໂຕນ ຫຼື ປະມານ 30% ຂອງຜົນຜະລິດ ໝາກໄມ້ລວມທົ່ວປະເທດ.

ສຳລັບເຂດທົ່ງພຽງ: ໄມ້ກິນໝາກ ສຸມໃສ່ສົ່ງເສີມປູກໃນເຂດທີ່ມີທ່າແຮງເຊັ່ນ: ໝາກກ້ວຍ, ໝາກມັດຢູ່ເຂດ ເມືອງປາກກະດິງ, ເມືອງຄຳເກີດ ແຂວງບໍລິຄຳໄຊ, ສຳລັບໝາກຂຽບ, ໝາກພ້າວ, ໝາກເງາະ, ຖົ່ວລຽນ, ລຳໃຍ, ໝາກມ່ວງ ສຸມໃສ່ແຂວງສາລະວັນ ແລະ ຈຳປາສັກ. ນອກຈາກນັ້ນ ແມ່ນສຸມໃສ່ ໄມ້ໃຫ້ໝາກປະເພດອື່ນໆ ໃນເຂດທີ່ມີເງື່ອນໄຂ ໃຫ້ໄດ້ ຜົນຜະລິດ ປະມານ 700.000 ຫາ 1.000.000 ໂຕນ ຫຼື ປະມານ 70% ຂອງຜົນຜະລິດໝາກໄມ້ລວມທົ່ວປະເທດ.

**3). ການພັດທະນາພື້ນຖານໂຄງລ່າງດ້ານຊົນລະປະທານ ແລະ ການສ້າງເຂດຈຸດສຸມ ຊົນລະກະເສດ**

ເພື່ອຮັບປະກັນການສະໜອງນ້ຳ ໃຫ້ການຜະລິດ ໄດ້ທັງ 2 ລະດູ ທັງເປັນການຮັບມື ກັບສະພາບການປ່ຽນແປງ ຂອງດິນຟ້າອາກາດ ແລະ ຫຼຸດຜ່ອນຜົນເສຍຫາຍ ຈາກໄພທຳມະຊາດ ທີ່ອາດຈະເກີດຂຶ້ນ, ແນໃສ່ເພື່ອສະໜັບສະໜູນ ເປົ້າໝາຍການຜະລິດສະບຽງອາຫານ ແລະ ການຜະລິດກະສິກຳເປັນສິນຄ້າ, ໃນຕໍ່ໜ້າ ຕ້ອງເລັ່ງໃສ່ຈັດຕັ້ງປະຕິບັດແຜນງານຊົນລະປະທານ ໂດຍຕິດພັນກັບການຄຸ້ມຄອງລັດແຫ່ງກົດໝາຍ ແນໃສ່ຮັບປະກັນໃຫ້ແກ່ການຜະລິດຕາມແຜນງານຊົນລະກະເສດ ທີ່ໄດ້ກຳນົດໄວ້. ຮອດປີ 2020 ຕ້ອງຮັບປະກັນການສະໜອງນ້ຳ ສຳລັບການຜະລິດລະດູຝົນໃຫ້ໄດ້ ຢ່າງໜ້ອຍ 330.000 ເຮັກຕາ, ລະດູແລ້ງໃຫ້ໄດ້ ຢ່າງໜ້ອຍ 216.000 ເຮັກຕາ ແລະ ຮອດປີ 2025 ຮັບປະກັນການສະໜອງນ້ຳ ສຳລັບການຜະລິດລະດູຝົນໃຫ້ໄດ້ ຢ່າງໜ້ອຍ 355.000 ເຮັກຕາ ແລະ ລະດູແລ້ງ ໃຫ້ໄດ້ຢ່າງໜ້ອຍ 240.000 ເຮັກຕາ, ໂດຍສຸມໃສ່ ການສ້ອມແປງຫົວງານ, ລະບົບຄອງເໝືອງ, ດ້ວຍການປັບປຸງຄອງ ເໝືອງດິນເປັນຄອງເໝືອງເບຕົງແບບຖາວອນ, ປັບປຸງສະຖານີຈັກສູບນ້ຳທີ່ມີຢູ່ ໃຫ້ຮັບປະກັນ ແລະ ທັນສະໄໝຂຶ້ນກວ່າເກົ່າ, ສືບຕໍ່ກໍ່ສ້າງອ່າງເກັບນ້ຳຊົນລະປະທານ ແລະ ປະຕູນ້ຳ ເພື່ອນຳໃຊ້ນ້ຳ ຈາກທ້າຍເຂື່ອນ ໄຟຟ້ານ້ຳຕົກ ໃນບ່ອນທີ່ມີເງື່ອນໄຂ, ຖືເອົາການສ້າງ ຊົນລະປະທານ ແບບນ້ຳໄຫຼເອງ ເປັນບຸລິມະສິດ ແລະ ການນຳໃຊ້ລະບົບຈັກສູບນ້ຳ ເປັນສຳຮອງ ໄປຄຽງຄູ່ກັບ ການຫັນໄປນຳໃຊ້ແຫຼ່ງພະລັງງານ ທົດແທນອື່ນໆ ທີ່ມີທ່າແຮງເທື່ອລະກ້າວ. ເພື່ອຮັບປະກັນຄາດໝາຍດັ່ງກ່າວ ຈຶ່ງໄດ້ກຳນົດເຂດຈຸດສຸມການພັດທະນາ ໃນ 10 ແຂວງ, ແຕ່ນີ້ຮອດ ປີ 2020 ແລະ 2025 ດັ່ງລາຍລະອຽດ ດັ່ງລຸ່ມນີ້:

ສຳລັບໂຄງການຊົນລະປະທານ ຮັບໃຊ້ໂຄງການສົ່ງເສີມ ການຜະລິດເປັນສິນຄ້າ ແລະ ຄ້ຳປະກັນສະບຽງອາຫານ ຊຶ່ງລັດຖະບານໄດ້ກຳນົດເອົາ 10 ແຂວງ ເປັນເຂດຈຸດສຸມການຜະລິດ ແມ່ນຕ້ອງໄດ້ສຸມໃສ່ປັບປຸງລະບົບຊົນລະປະທານທີ່ມີຢູ່ ຈຳນວນ 6.953 ໂຄງການ ໃຫ້ຮັບປະກັນການສາມາດສະໜອງນ້ຳສຳລັບລະດູຝົນໃຫ້ໄດ້ 196.900 ເຮັກຕາ, ລະດູແລ້ງໃຫ້ໄດ້ 118.500 ເຮັກຕາ. ສືບຕໍ່ກໍ່ສ້າງ ບັນດາໂຄງການທີ່ໄດ້ຜ່ານການເຊັນສັນຍາ, ສຶກສາ, ສຳຫຼວດ-ອອກແບບສຳເລັດ ຈຳນວນ 33 ໂຄງການ ເພື່ອຮັບປະກັນຮອດປີ 2020 ໃຫ້ສາມາດສະໜອງນ້ຳໃຫ້ແກ່ການຜະລິດລະດູຝົນ ໃຫ້ໄດ້ຢ່າງໜ້ອຍ 254.000 ເຮັກຕາ, ລະດູແລ້ງໃຫ້ໄດ້ 161.350 ເຮັກຕາ ແລະ ຮອດປີ 2025 ໃຫ້ສາມາດສະໜອງນ້ຳ ໃຫ້ແກ່ການຜະລິດລະດູຝົນໃຫ້ໄດ້ຢ່າງໜ້ອຍ 279.450 ເຮັກຕາ, ລະດູແລ້ງ 184.100 ເຮັກຕາ. ສັງລວມແລ້ວຮອດປີ 2025 ຕ້ອງຮັບປະກັນ ເນື້ອທີ່ສະໜອງນ້ຳທັງສອງລະດູ ໃນ 10 ແຂວງຈຸດສຸມ ບໍ່ໃຫ້ຫຼຸດ 463.500 ເຮັກຕາ.

4). <u>ການປ້ອງກັນ ແລະ ແກ້ໄຂຜົນກະທົບຈາກໄພພິບັດ</u>:

ເພື່ອເປັນການປ້ອງກັນ, ຄວບຄຸມ ແລະ ແກ້ໄຂຜົນກະທົບ ຈາກໄພພິບັດ ລວມທັງ ໄພນ້ຳຖ້ວມ, ແຫ້ງແລ້ງ, ພະຍາດສັດ ແລະ ພືດລະບາດ ໂດຍສະເພາະ ໃນເຂດເນື້ອທີ່ທຳການຜະລິດກະສິກຳ ຈຶ່ງກຳ ນົດບາງມາດຕະການ ຄືດັ່ງລຸ່ມນີ້:

- ເຊື່ອມໂຍງແຜນຄຸ້ມຄອງ, ປ້ອງກັນ ແລະ ຄວບຄຸມໄພພິບັດທາງທຳມະຊາດ ເຂົ້າໃນແຜນພັດທະນາວຽກງານກະສິກຳ ໃນແຕ່ລະຂັ້ນ ຢູ່ໃນແຕ່ລະໄລຍະ ເພື່ອຈັດຕັ້ງປະຕິບັດໄປຄວບຄູ່ກັນ. ຮ່ວມກັບ ອົງການຈັດຕັ້ງສາກົນ ພັດທະນາແຜນດຳເນີນງານ ເພື່ອຫຼຸດຜ່ອນຄວາມສ່ຽງ ຈາກໄພພິບັດ (DRR) ໃນຂົງເຂດກະສິກຳ ແນໃສ່ເພື່ອເສີມສ້າງຄວາມອາດສາມາດ ທາງດ້ານເຕັກນິກວິຊາການ ໃນການ ຫຼຸດຜ່ອນຄວາມສ່ຽງ, ການວາງແຜນໃນການຄຸ້ມຄອງໄພພິບັດ, ລວມທັງການປະສານງານ ແລະ ການແລກປ່ຽນຂໍ້ມູນຂ່າວສານ ກັບບັນດາພາກສ່ວນອື່ນໆທີ່ກ່ຽວຂ້ອງ ໂດຍການປັບປຸງ ບັນດາກົນໄກ ແລະ ບົດບາດໜ້າທີ່ ຂອງບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ໃຫ້ການແນະນຳ ໃນການຈັດຕັ້ງ ປະຕິບັດແຜນດຳເນີນງານຢ່າງເປັນລະບົບ ຕາມຂອບປະຕິບັດງານ HYOGO ຊຶ່ງກຳນົດເອົາ 5 ຂົງເຂດບຸລິມະສິດ[10] ສຳລັບ ແຕ່ລະໄລຍະ ຄື: ໄລຍະສັ້ນ (ການຮັບມືກັບ ໄພພິບັດ), ໄລຍະສັ້ນ ຫາ ກາງ (ການຫຼຸດຜ່ອນຄວາມສ່ຽງຕໍ່ໄພພິບັດ), ໄລຍະກາງ ຫາ ໄລຍະຍາວ (ການປັບໂຕ ເຂົ້າກັບ ການປ່ຽນແປງ ຂອງດິນຟ້າອາກາດ).

[10] ໃນ 5 ຂົງເຂດບຸລິມະສິດ ປະກອບມີ: 1) ເສີມສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງ, ນະໂຍບາຍ ແລະ ການປະສານງານ, 2) ປະເມີນ ແລະ ຕິດຕາມຄວາມສ່ຽງຈາກການປ່ຽນແປງຂອງສະພາບດິນຟ້າອາກາດ, 3) ປັບປຸງຍົກລະດັບຄວາມຮູ້ ໃນການຄຸ້ມຄອງ, ສ້າງຖານຂໍ້ມູນກ່ຽວກັບ ການປ່ຽນແປງດິນຟ້າອາກາດ ແລະ ການຫຼຸດຜ່ອນຄວາມສ່ຽງຂອງໄພພິບັດ, 4) ສົ່ງເສີມເຕັກໂນໂລຊີ ທີ່ຊ່ວຍໃນການຫຼຸດຜ່ອນຄວາມສ່ຽງ ຂອງໄພພິບັດ ທັງທາງດ້ານວິທີການ ແລະ ການປະຕິບັດຕົວຈິງ, 5) ເສີມສ້າງຄວາມສາມາດ ໃນການກຽມພ້ອມຮັບມືກັບໄພພິບັດ ລວມທັງ ການແກ້ໄຂ ແລະ ຟື້ນຟູ ຫຼັງການເກີດໄພພິບັດ ໃຫ້ໄດ້ໃນທຸກລະດັບ.

- ດຳເນີນການສຶກສາ ເກັບກຳຂໍ້ມູນ ເພື່ອສ້າງແຜນທີ່ກຳນົດເຂດຄວາມສ່ຽງ ທີ່ອາດຈະເກີດໄພພິບັດທຳມະຊາດ ເຊັ່ນ: ເຂດທີ່ຕ່ຳ/ລ່ອງແມ່ນ້ຳ ທີ່ມີຄວາມສ່ຽງຕໍ່ນ້ຳຖ້ວມ, ເຂດຄວາມສ່ຽງຕໍ່ໄພແຫ້ງແລ້ງ, ເຂດທີ່ມັກເກີດພະຍຸພະຍາດສັດ ແລະ ພະຍາດພືດ (ແມງໄມ້, ໜູຂີ...) ລະບາດ, ເຂດທີ່ມີຄວາມສ່ຽງຕໍ່ການເຊາະເຈື່ອນດິນ ແລະ ອື່ນໆ ໂດຍການນຳໃຊ້ເຕັກນິກ-ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນການກຳນົດ ແລະ ປະເມີນເຫດການ ເຊັ່ນ: ນຳໃຊ້ແຜນທີ່ພາບຖ່າຍດາວທຽມ, ນຳໃຊ້ລະບົບເຕືອນໄພທີ່ທັນສະໄໝ ແລະ ອື່ນໆ.
- ສ້າງ, ປັບປຸງ ແລະ ຟື້ນຟູຄືນ ບັນດາປະຕູນ້ຳ ແລະ ຄູກັນນ້ຳ ເຊັ່ນ: ເຂດລຽບຕາມເຊບັ້ງໄຟທັງສອງຝັ່ງ (ຄຳມ່ວນ ແລະ ສະຫວັນນະເຂດ), ເຂດລຽບຕາມເຊບັງຫຽງ ແລະ ເຂດອື່ນໆທີ່ມີຄວາມສ່ຽງໂດຍສະເພາະໃນເຂດທົ່ງພຽງໃຫຍ່ ໄປຄຽງຄູ່ກັບການກວດກາ ແລະ ສ້ອມແປງຄືນ ບັນດາຕະຝັ່ງປ້ອງກັນເຈື່ອນຂອງບັນດາສະຖານີຈັກສູບນ້ຳຕາມນ້ຳຂອງ ແລະ ສາຂາ.
- ນຳໃຊ້ພື້ນຖານໂຄງລ່າງ ເຊັ່ນ: ອ່າງເກັບນ້ຳຊົນລະປະທານ ແລະ ອ່າງເກັບນ້ຳ ເຂື່ອນໄຟຟ້າຕ່າງໆດ້ວຍການຄວບຄຸມ ແລະ ກຳນົດລະດັບນ້ຳໃນອ່າງໃຫ້ເໝາະສົມ ແລະ ຢູ່ໃນລະດັບທີ່ປອດໄພ ກ່ອນລະດູນ້ຳນອງ (ຊ່ວງລະດູຝົນ) ໂດຍສະເພາະແມ່ນ: ເຂື່ອນໄຟຟ້ານ້ຳງື່ມ-1, ນ້ຳມັງ-3, ນ້ຳເທີນ-2, ເທີນຫີນບູນ, ເຊປຽນ-ເຊນ້ຳນ້ອຍ, ເຊກະໝານ ແລະ ອື່ນໆ ຫຼື ສ້າງລະບົບການລ່ອຍແລວນ້ຳ ອອກຈາກເຂດການຜະລິດ ທີ່ເປັນທົ່ງໃຫຍ່ ເນື້ອທີ່ກວ້າງຂວາງ ທີ່ມີຄວາມສ່ຽງ ເຊັ່ນ: ອ່າງເຊບັງ ຫຽງ, ເຊບັ້ງໄຟ, ສ້າງລະບົບຄູປ້ອງກັນນ້ຳຖ້ວມ ໃນເຂດທີ່ມີເງື່ອນໄຂ, ສ້າງປະຕູນ້ຳ, ຕິດຕັ້ງລະບົບຈັກສູບນ້ຳເພື່ອລະບາຍນ້ຳ ແລະ ສ້າງຄອງລະບາຍນ້ຳ ໂດຍສະເພາະ ໃນເຂດທົ່ງພຽງໃຫຍ່ ທີ່ມີຄວາມສ່ຽງ ໄປຄຽງຄູ່ກັບການນຳໃຊ້ເຕັກໂນໂລຍີທີ່ທັນສະໄໝ ເພື່ອຕິດຕາມລະດັບນ້ຳ ໃນແຕ່ລະສາຍນ້ຳທີ່ສຳຄັນ ໂດຍການກຳນົດລະດັບເຕືອນໄພ ສຸກເສີນ (ຂັ້ນ 1, ຂັ້ນ 2 ແລະ ຂັ້ນ 3) ໃນແຕ່ລະສະຖານີວັດແທກລະດັບນ້ຳ ໂດບສ້າງໃຫ້ມີສູນຄຸ້ມຄອງ, ຕິດຕາມ ແລະ ບັນຊາແບບລວມສູນ.
- ດຳເນີນການສຶກສາ ຄົ້ນຄວ້າ, ພັດທະນາ ແລະ ປັບປຸງ ແລະ ຫັນໄປນຳໃຊ້ ແນວພັນເຂົ້າ ແລະ ແນວພັນພືດ ທີ່ມີຄວາມທົນທານ ສາມາດປັບໂຕເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ເຊັ່ນ: ທົນຕໍ່ສະພາບນ້ຳຖ້ວມ ແລະ ແຫ້ງແລ້ງ ໄປຄຽງຄູ່ກັບການພັດທະນາ ແລະ ນຳໃຊ້ເຕັກນິກໃນການປູກ ທີ່ເໝາະສົມ.
- ໃນເຂດທີ່ມີຄວາມສ່ຽງຕໍ່ໄພແຫ້ງແລ້ງ ໂດຍສະເພາະ ເຂດນາໂຄກ ທີ່ຢູ່ນອກເຂດຊົນລະປະທານທີ່ມີເງື່ອນໄຂ ແມ່ນຫັນໄປສົ່ງເສີມປະຊາຊົນເກັບກັກນ້ຳ ດ້ວຍການສ້າງຝາຍຂະໜາດນ້ອຍ ເພື່ອຕັນຫ້ວຍຮ່ອງ, ຂຸດໜອງສະຂະໜາດນ້ອຍ ເພື່ອເກັບກັກນ້ຳໄວ້ໃຊ້ ໃນກໍລະນີຂາດນ້ຳ.
- ບ່ອນທີ່ບໍ່ມີເງື່ອນໄຂໃນການສ້າງພື້ນຖານໂຄງລ່າງລະບົບຕິດຕາມ, ຄວບຄຸມ ແລະ ປ້ອງກັນ ແມ່ນສ້າງເປັນຕາຕະລາງການຜະລິດ ໂດຍກຳນົດຊະນິດເຂົ້າ ແລະ ພືດຕ່າງໆ ເພື່ອປູກ ໃຫ້ແທດເໝາະກັບເວລາ ແລະ ສະພາບພື້ນທີ່ (ທີ່ດິນ) ຕິດພັນກັບການສ້າງແຜນທີ່ ກຳນົດຄວາມສ່ຽງຈາກໄພພິບັດ (ນ້ຳຖ້ວມ ແລະ ແຫ້ງແລ້ງ) ໃນແຕ່ລະເຂດ.

### 5). ການຜະລິດກະສິກຳສະອາດ ແລະ ຄວາມປອດໄພດ້ານສະບຽງອາຫານ

ສປປລາວ ເປັນປະເທດໜຶ່ງທີ່ມີທ່າແຮງ ໃນການຜະລິດກະສິກຳສະອາດ ປອດໄພ ໝັ້ນຄົງ ແລະ ຍືນຍົງ, ທິດທາງຂອງພັກ ແລະ ລັດຖະບານ ແມ່ນຖືເອົາການຜະລິດກະສິກຳສະອາດ ເປັນບຸລິມະສິດຕົ້ນຕໍ ຊຶ່ງການຜະລິດກະສິກຳສະອາດ ແມ່ນລວມມີ: ການຜະລິດກະສິກຳທີ່ດີ (GAP=Good Agriculture Practice) ແລະ ການຜະລິດກະສິກຳອິນຊີ. ນອກນັ້ນ ກໍມີຮູບແບບການຜະລິດກະສິກຳສະອາດອື່ນໆ ເຊັ່ນ: ການຜະລິດທີ່ບໍ່ນຳໃຊ້ຢາປາບສັດຕູພືດ ແລະ ການຜະລິດກະສິກຳແບບອະນຸລັກ. ສ້າງ ແລະ ປັບປຸງ ບັນດາ ຂໍ້ກຳນົດກົດລະບຽບ ແລະ ມາດຕະຖານຂອງແຕ່ລະຮູບແບບການຜະລິດ ໃຫ້ເປັນລະບົບຄົບຊຸດ ແນໃສ່ ເຮັດໃຫ້ການຜະລິດມີຄວາມເຂັ້ມແຂງ ແລະ ທຽບເທົ່າກັບສາກົນ, ຍົກລະດັບໂຄງລ່າງພື້ນຖານວັດຖຸ-ເຕັກນິກ ໃນການຢັ້ງຢືນ ມາດຕະຖານ ແລະ ຄຸນນະພາບ ໂດຍສະເພາະ ມາດຕະຖານ ກະສິກຳສະອາດ ແລະ ລະບົບອອກໃບຢັ້ງຢືນ ໃຫ້ໄປຕາມມາດຕະຖານ ISO/IEC 17065 ແລະ ຫ້ອງວິໄຈທີ່ໄດ້ມາດຖານ ISO/IEC 17025. ເພື່ອເຮັດໃຫ້ວຽກງານ ກະສິກຳສະອາດ ສາມາດບັນລຸ ຕາມເປົ້າໝາຍ ທີ່ວາງໄວ້, ບັນດາໜ້າວຽກທີ່ຈະຕ້ອງຈັດຕັ້ງປະຕິບັດມີດັ່ງນີ້:

- **<u>ການພັດທະນາເຕັກນິກ-ການຜະລິດພືດສະອາດ</u>**

1. ສຶກສາ ແລະ ກຳນົດກຸ່ມຜູ້ຜະລິດ ແລະ ຟາມປູກພືດ ຢູ່ບັນດາແຂວງໃນຂອບເຂດທົ່ວ ປະເທດ.
2. ສ້າງລະບຽບການ ເພື່ອຂຶ້ນທະບຽນກຸ່ມຜູ້ຜະລິດ ແລະ ຟາມປູກພືດຕາມມາດຕະຖານ ກະສິກຳ ທີ່ດີ ແລະ ກະສິກຳອິນຊີ ໃຫ້ໄດ້ 50% ຂອງກຸ່ມຜູ້ຜະລິດ ແລະ ຟາມປູກພືດທັງໝົດ.
3. ສ້າງຟາມຕົວແບບ ດ້ານກະສິກຳທີ່ດີ ແລະ ກະສິກຳອິນຊີ ຢູ່ ສູນພັດທະນາກະສິກຳ ສະອາດ ເພື່ອເປັນສູນຕົວແບບແຫ່ງຊາດ ໃນການຜະລິດ ແລະ ຖ່າຍທອດເຕັກນິກກະສິກຳສະອາດ.
4. ສ້າງຟາມ ແລະ ສູນຕົວແບບດ້ານກະສິກຳທີ່ດີ ແລະ ກະສິກຳອິນຊີ ໃຫ້ໄດ້ ແຂວງລະ ໜຶ່ງແຫ່ງ ໃນຂອບເຂດທົ່ວປະເທດ ກ່ອນອື່ນໝົດ ແມ່ນເລັ່ງໃສ່: ແຂວງຫຼວງນ້ຳທາ, ອຸດົມໄຊ, ຊຽງຂວາງ, ຫຼວງພະບາງ, ນະຄອນຫຼວງວຽງຈັນ, ສະຫວັນນະເຂດ ແລະ ແຂວງຈຳປາສັກ.
5. ປະສານສົມທົບ ກັບກະຊວງອຸດສາຫະກຳແລະການຄ້າ ກຳນົດ ແລະ ສ້າງຕະຫຼາດ ຈຳໜ່າຍຜົນຜະ ລິດກະສິກຳສະອາດ ໃຫ້ໄດ້ ແຂວງລະ 1 ແຫ່ງ, ຊຶ່ງຜົນຜະລິດທີ່ຈະມາຈຳໜ່າຍ ຢູ່ຕະຫຼາດ ດັ່ງ ກ່າວ ຕ້ອງໄດ້ຮັບການຢັ້ງຢືນ ຄວາມປອດໄພ ຕາມມາດຕະຖານກະສິກຳທີ່ດີ ແລະ ມາດຕະ ຖານ ກະສິກຳອິນຊີ.

- **<u>ການພັດທະນາມາດຕະຖານການປູກພືດ</u>**

ປະຈຸບັນ ສປປລາວ ມີມາດຕະຖານ ການປູກພືດທີ່ໄດ້ຜ່ານການຮັບຮອງ ຈາກກະຊວງກະສິກຳ ແລະ ປ່າໄມ້ແລ້ວ 2 ມາດຕະຖານຄື: 1) ມາດຕະຖານກະສິກຳທີ່ດີ ແລະ 2) ມາດຕະຖານ ກະສິກຳອິນຊີ, ແຕ່ມາດຕະຖານດັ່ງກ່າວ ຍັງແມ່ນມາດຕະຖານແບບສະມັກໃຈ, ຊຶ່ງບໍ່ສາມາດ ເປັນມາດຕະຖານບັງຄັບ ໂດຍພື້ນຖານໄດ້. ດັ່ງນັ້ນ, ເພື່ອຕອບສະໜອງຕໍ່ນະໂຍບາຍ ຂອງລັດຖະບານ ວ່າດ້ວຍການສ້າງປະເທດລາວ ໃຫ້ເປັນປະເທດ ຜະລິດກະສິກຳສະອາດ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ ພັດທະນາມາດຕະຖານ ດັ່ງລຸ່ມນີ້:

1. ສ້າງມາດຕະຖານການປູກພືດແຫ່ງຊາດ ທີ່ສາມາດບັງຄັບໃຊ້ ສຳລັບທຸກໆຟາມປູກພືດ ແລະ ກຸ່ມຜູ້ຜະລິດ ທີ່ມີເປົ້າໝາຍຜະລິດ ເພື່ອເປັນສິນຄ້າ ຢູ່ພາຍໃນປະເທດ.
2. ຍົກລະດັບທັງ 2 ມາດຕະຖານ ທີ່ມີຢູ່ ໃຫ້ທຽບເທົ່າກັບສາກົນ ເພື່ອໃຫ້ເປັນທີ່ຍອມຮັບ ຂອງຕະຫຼາດຕ່າງປະເທດ. ສຳລັບຜູ້ຜະລິດ ທີ່ຕ້ອງການຜະລິດ ເພື່ອການສົ່ງອອກ ຕ້ອງໄດ້ຮັບການ ຢັ້ງຢືນມາດຕະຖານກະສິກຳທີ່ດີ ຈາກກົມປູກຝັງ ເປັນຢ່າງຕໍ່າ ຈຶ່ງສາມາດສົ່ງອອກໄດ້.

- **ການພັດທະນາລະບົບການຮັບຮອງ-ຢັ້ງຢືນ**

ປະຈຸບັນ ກົມປູກຝັງ ໄດ້ພັດທະນາລະບົບການຮັບຮອງ-ຢັ້ງຢືນ ມາດຕະຖານຂື້ນມາ ຊຶ່ງສາມາດໃຫ້ການຢັ້ງຢືນ ລະບົບການປູກພືດ ທີ່ຜະລິດຕາມມາດຕະຖານກະສິກຳທີ່ດີ ແລະ ກະສິກຳອິນຊີໄດ້. ແຕ່ວ່າລະບົບການຢັ້ງຢືນທີ່ສ້າງຂື້ນມານັ້ນ ຍັງບໍ່ທັນເຂັ້ມແຂງ ແລະ ຍັງບໍ່ທັນສອດຄ່ອງກັບ ລະບົບການຢັ້ງຢືນຂອງສາກົນ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງພັດທະນາລະບົບການຮັບຮອງ-ຢັ້ງຢືນດັ່ງນີ້:

1. ສ້າງລະບົບການຢັ້ງຢືນ ໃຫ້ສອດຄ່ອງກັບມາດຕະຖານ ISO/IEC 17065, ໃຫ້ແກ່ ໜ່ວຍງານຢັ້ງຢືນ ຢູ່ ກົມປູກຝັງ.
2. ສ້າງລະບົບການຢັ້ງຢືນ ມາດຕະຖານກະສິກຳທີ່ດີ ໃຫ້ເປັນທີ່ຍອມຮັບ ຂອງອາຊຽນ.
3. ສ້າງລະບົບການຢັ້ງຢືນ ມາດຕະຖານກະສິກຳອິນຊີ ໃຫ້ເປັນທີ່ຍອມຮັບຂອງ ສະຫະພັນກະສິກຳອິນຊີນາໆຊາດ (International Federation Organic Agriculture Movement-IFOAM).
4. ສ້າງຫ້ອງວິໄຈ ສານເຄມີຕົກຄ້າງ ໃຫ້ໄດ້ມາດຕະຖານ ISO/IEC 17025 ຢູ່ສູນປ້ອງກັນພືດ.

### 6). <u>ການປັບປຸງພັດທະນາ ລະບົບການຄຸ້ມຄອງການນຳໃຊ້ ປັດໃຈການຜະລິດ (ແນວພັນ, ຝຸ່ນ ແລະ ຢາປາບສັດຕູພືດ)</u>

ພັດທະນາລະບົບການຄຸ້ມຄອງ, ການຈົດທະບຽນແນວພັນພືດ ແລະ ການກວດກາຄຸນນະພາບ ແນວພັນພືດ ໃນຂອບເຂດທົ່ວປະເທດ ຮັບປະກັນແນວພັນຄຸນນະພາບ ຕອບສະໜອງແກ່ຊາວກະສິກອນຜູ້ຜະລິດ ແລະ ກ້າວໄປໃຫ້ສາມາດເຊື່ອມໂຍງສາກົນໄດ້. ຮັບປະກັນຄຸນນະພາບຂອງຝຸ່ນເຄມີ ແລະ ຢາປາບສັດຕູພືດ ໂດຍການພັດທະນາລະບົບການຄຸ້ມຄອງ, ການຈົດທະບຽນ ທີ່ສາມາດເຊື່ອມໂຍງກັບອາຊຽນ ແລະ ມາດຕະຖານສາກົນ ພ້ອມທັງເນັ້ນໜັກ ໃນມາດຕະການຄວບຄຸມຢາປາບສັດຕູພືດ ທີ່ຕ້ອງຫ້າມ ແລະ ຢາປາບສັດຕູພືດ ທີ່ຖືກຍົກເລີກການນຳໃຊ້ ໃນ ສປປລາວ ຢ່າງເຄັ່ງຄັດ ທັງນີ້ກໍເພື່ອຮັບປະກັນຄຸນນະພາບໃນການຍົກສະມັດຕະພາບການຜະລິດ ແລະ ຮັບປະກັນຄວາມປອດໄພທາງດ້ານອາຫານ ບໍ່ໃຫ້ມີສານພິດຕົກຄ້າງໃນອາຫານ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງພັດທະນາ ພື້ນຖານໂຄງລ່າງບາງດ້ານ ດັ່ງນີ້:

- ສ້າງສູນທົດສອບແນວພັນພືດ, ຝຸ່ນເຄມີ ຢາປາບສັດຕູພືດ ກ່ອນອະນຸຍາດໃຫ້ຈົດທະບຽນ ຈຳນວນ 1 ແຫ່ງຂັ້ນສູນກາງ ພ້ອມດ້ວຍສາຂາ ພາກເໜືອ ແລະ ພາກໃຕ້ ພາກລະ 1 ແຫ່ງ.
- ສ້າງພະນັກງານ ປະຈຳຫ້ອງວິໄຈ ຊ່ຽວຊານສະເພາະດ້ານ ກ່ຽວກັບແນວພັນພືດ, ຝຸ່ນເຄມີ ແລະ ຢາປາບສັດຕູພືດ ໃຫ້ໄດ້ ຢ່າງໜ້ອຍ ດ້ານລະ 10 ຫາ 15 ຄົນ.

- ສ້າງວິຊາການສະເພາະດ້ານໃຫ້ກາຍເປັນຜູ້ສຳນານງານດ້ານ ຝຸ່ນເຄມີ, ຝຸ່ນຊີວະພາບ, ດ້ານປ້ອງກັນພືດ, ດ້ານກະສິກຳສະອາດ, ດ້ານແນວພັນ, ດ້ານການນຳໃຊ້ຢາສະໝູນໄພພື້ນເມືອງ ແລະ ອື່ນໆ
- ພະນັກງານຊ່ຽວຊານດ້ານຝຸ່ນເຄມີ ແລະ ຢາປາບສັດຕູພືດ ປະຈຳເມືອງ ແລະ ກຸ່ມບ້ານ ໃຫ້ໄດ້ຢ່າງໜ້ອຍ 5-10 ຄົນຕໍ່ກຸ່ມບ້ານ.

### 7). ການບໍລິການ ແລະ ສົ່ງເສີມເຕັກນິກການຜະລິດ

- ລັດເຮັດໜ້າທີ່ເອື້ອອຳນວຍ ແລະ ປະສານງານກັບທຸກພາກສ່ວນການຈັດຕັ້ງຕ່າງໆເພື່ອຍົກປະສິດທິພາບໃນການສະໜອງບໍລິການດ້ານຕ່າງໆ ເປັນຕົ້ນແມ່ນ: 1) ການຮຽນຮູ້ເຕັກນິກການຜະລິດ ແລະ ສ້າງມູນຄ່າເພີ່ມ ຂອງຊາວກະສິກອນ; 2) ການຈັດຕັ້ງກຸ່ມຂອງຊາວກະສິກອນ; 3) ການເຊື່ອມໂຍງການຜະລິດກັບຕະຫລາດ; 4) ສະໜອງປັດໃຈການຜະລິດໃນເຂດທີ່ຕະຫລາດ ຍັງບໍ່ທັນມີປະສິດຕິພາບ.
- ຂະຫຍາຍກຳລັງການຜະລິດກະສິກຳ ໂດຍຈັດຕັ້ງ ແລະ ປັບປຸງກຸ່ມການຜະລິດ ໃຫ້ມີຄວາມເຂັ້ມແຂງເທື່ອລະກ້າວເພື່ອຫັນການຜະລິດນ້ອຍ ກະແຈກກະຈາຍ ໄປສູ່ການຜະລິດ ແບບມີການຈັດຕັ້ງເຮັດໃຫ້ການຜະລິດມີການເປີດກ້ວາງ ແລະ ຂະຫຍາຍຕົວດ້ວຍຄວາມເປັນເຈົ້າການຂອງຊາວກະສິກອນ; ໃນ 10 ປີຕໍ່ໜ້າຕ້ອງໃຫ້ມີຢ່າງນ້ອຍ ໜຶ່ງກຸ່ມ ຫຼື ສະຫະກອນຜະລິດກະສິກຳແບບຢ່າງໃນແຕ່ລະແຂວງ ແລະ ມີຕາໜ່າງເຄືອຄ່າຍຂອງກຸ່ມ ຫຼື ສະຫະກອນເຊື່ອມໂຍງກັບອົງການຈັດຕັ້ງຊາວກະສິກອນໃນພາກພື້ນ ຫຼື ສາກົນ.
- ເຜີຍແຜ່ ແລະ ຖ່າຍທອດຄວາມຮູ້ທາງດ້ານເຕັກນິກ ທີ່ເປັນພື້ນຖານ ກ່ຽວກັບການປູກ, ການລ້ຽງໃຫ້ຊາວກະສິກອນ ເພື່ອຫັນປ່ຽນຈາກການຜະລິດແບບດັ້ງເດີມ ໄປສູ່ການຜະລິດທີ່ມີການນຳໃຊ້ ເຕັກນິກ ແລະ ເຕັກໂນໂລຢີໃໝ່ທີ່ເໝາະສົມ ເຮັດໃຫ້ມີການຍົກຜະລິດຕະພາບ ແລະ ປະສິດທິຜົນຂອງການຜະລິດຂຶ້ນເປັນລຳດັບ.
- ຊຸກຍູ້ ແລະ ສົ່ງເສີມ ພາກເອກະຊົນ, ຜູ້ປະກອບການ ແລະ ການຈັດຕັ້ງຊາວກະສິກອນເຂົ້າຮ່ວມ ໃນການສະໜອງການບໍລິການກະສິກຳຢ່າງຕັ້ງໜ້າ ເປັນຕົ້ນ: ການສະໜອງປັດໃຈການຜະລິດ, ແນວພັນ, ກົນຈັກກະສິກຳ, ສິນເຊື່ອ, ການປຸງແຕ່ງຜະລິດຕະພັນກະສິກຳ, ການເກັບຮັກສາ ແລະ ອື່ນໆລວມທັງການສ້າງສິນຄ້າເອກະລັກຂອງທ້ອງຖິ່ນ.
- ຮອດປີ 2020 ຕ້ອງປັບປຸງ ແລະ ສ້າງຕາໜ່າງການສົ່ງເສີມ ເປັນຕົ້ນແມ່ນ ບັນດາສູນ ແລະ ສະຖານີ ບໍລິການເຕັກນິກກະສິກຳ ທີ່ມີແລ້ວ ຢູ່ບັນດາເມືອງຈຸດສຸມການຜະລິດ ໃນເຂດພູດອຍ, ພູພຽງ ແລະ ທົ່ງພຽງ (272 ແຫ່ງ) ໃຫ້ມີຄວາມເຂັ້ມແຂງ ກາຍເປັນໂຮງຮຽນ ສຳລັບຊາວກະສິກອນ ແລະ ສາມາດເຮັດ ບົດບາດໜ້າທີ່ ໃນການສາທິດ, ສະໜອງການຝຶກອົບຮົມ ແລະ ບໍລິການຖ່າຍທອດເຕັກນິກ ວິຊາການ ດ້ານການປູກຝັງ, ລ້ຽງສັດໃຫ້ຊາວກະສິກອນ, ຜູ້ປະກອບການ ແລະ ພາກສ່ວນທີ່ກ່ຽວຂ້ອງໃນທົ່ວສັງຄົມ.

- ຮອດປີ 2025 ຕ້ອງປັບປຸງ ຫຼື ພັດທະນາ ສູນ ແລະ ສະຖານີບໍລິການເຕັກນິກແບບຢ່າງ ຕາມທ່າແຮງຂອງເຂດການຜະລິດໃຫ້ໄດ້ໜຶ່ງສູນ ຫຼື ໜຶ່ງສະຖານີຕໍ່ເຂດການຜະລິດໜຶ່ງທີ່ສາມາດປະຕິບັດບົດບາດໜ້າທີ່ໄດ້ຢ່າງໜັກແໜ້ນ.
- ເພີ່ມທະວີການຮ່ວມມືກັບຄູ່ຮ່ວມພັດທະນາຈາກພາກລັດ, ເອກະຊົນ ກໍຄືຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ ເພື່ອເປັນກຳລັງແຮງຍູ້ການຜະລິດສິນຄ້າໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ.
- ຊຸກຍູ້, ສົ່ງເສີມ ການນຳໃຊ້ກົນຈັກກະສິກຳ ເຂົ້າສູ່ການຜະລິດແລະ ການຫຼຸດຜ່ອນຜົນເສຍຫາຍຫຼັງການເກັບກ່ຽວ ເພື່ອປົດປ່ອຍແຮງງານຄົນ ຈາກຂະແໜງ ກະສິກຳ ໄປສູ່ຂະແໜງອຸດສາຫະກຳ.

## 8). ການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ ທີ່ເໝາະສົມ

ເພື່ອຜັນຂະຫຍາຍທິດທາງ, ເປົ້າໝາຍ ແລະ ຕົວເລກຄາດໝາຍລວມຂອງຍຸດທະສາດຂະແໜງການກະສິກຳ ແລະ ປ່າໄມ້ ຮອດປີ 2025 ໃຫ້ບັນລຸຄາດໝາຍ ແລະ ມີປະສິດທິຜົນສູງ, ເປົ້າໝາຍສຳລັບວຽກງານການຄົ້ນຄວ້າ ຕ້ອງໄດ້ສຸມໃສ່ຈັດຕັ້ງປະຕິບັດໜ້າວຽກສຳຄັນຕົ້ນຕໍດັ່ງນີ້: ຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີທີ່ທັນສະໄໝ ເພື່ອຄ້ຳປະກັນສະບຽງອາຫານ ແລະ ໂພສະນາການ, ຜະລິດເປັນສິນຄ້າ ແລະ ການຄຸ້ມຄອງນຳໃຊ້ຊັບພະຍາກອນໃຫ້ມີປະສິດທິຜົນສູງ ແລະ ມີຄວາມຍືນຍົງ. ວຽກງານການຄົ້ນຄວ້າແມ່ນເລັ່ງໃສ່ 4 ຂົງເຂດໃຫຍ່ຄື: (1) ການຄົ້ນຄວ້າ ເພື່ອຊອກຫາມາດຕະການ ແລະ ວິທີການທີ່ເໝາະສົມເພື່ອການຄຸ້ມຄອງນຳໃຊ້ຊີວະນາໆພັນກະສິກຳ ແລະ ປ່າໄມ້ໃຫ້ມີຜົນປະໂຫຍດສູງສຸດ ແລະ ມີຄວາມຍືນຍົງ; (2) ການຄົ້ນຄວ້າເພື່ອ ຊອກຫາເຕັກນິກ-ເຕັກໂນໂລຊີສຳລັບ ການຜະລິດກະສິກຳ ແລະ ປ່າໄມ້ ໃນການປັບຕົວຕໍ່ສະພາບການປ່ຽນແປງດິນຟ້າອາກາດ; (3) ການຄົ້ນຄວ້າແນວພັນ ແລະ ເຕັກໂນໂລຊີສຳລັບການຍົກສູງ ຜະລິດຕະພາບ ຂອງການຜະລິດກະສິກຳ ແລະ ປ່າໄມ້; ແລະ (4) ການຄົ້ນຄ້ວານະໂຍບາຍ ເພື່ອສະໜອງ ຂໍ້ມູນ ແລະ ຄຳເຫັນສ່ອງແສງໃຫ້ແກ່ຜູ້ກຳນົດນະໂຍບາຍໃນລະດັບຕ່າງໆ. ຄຽງຄູ່ກັບວຽກງານ ການຄົ້ນຄວ້າຍັງຈະຕ້ອງໄດ້ປັບປຸງລະບົບຂໍ້ມູນຂ່າວສານເພື່ອເຜີຍແຜ່ ແລະ ແລກປ່ຽນຜົນ ຂອງການຄົ້ນຄວ້າ, ເຮັດໃຫ້ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ສາມາດເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບຜົນ ຂອງການຄົ້ນຄວ້າ.

ເພື່ອເຮັດໃຫ້ວຽກງານການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ ສະໜັບສະໜູນໄດ້ເປົ້າໝາຍຂອງແຜນງານການຜະລິດສະບຽງອາຫານ, ວຽກງານການຄົ້ນຄວ້າໃນຕໍ່ໜ້າ ຕ້ອງເລັ່ງໃສ່ຈັດຕັ້ງປະຕິບັດບັນດາມາດຕະການ ຫຼື ໂຄງການຄົ້ນຄວ້າດັ່ງນີ້:

- ສຶກສາ, ເຕົ້າໂຮມ ແລະ ອະນຸລັກແນວພັນເຂົ້າ ແລະ ພືດສະບຽງທີ່ມີຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ ແລະ ເປັນເອກະລັກສະເພາະຂອງທ້ອງຖິ່ນເພື່ອອະນຸລັກຮັກສາ ແລະ ນຳໃຊ້ເຂົ້າໃນການປັບປຸງພັນເຂົ້າ ແລະ ພືດສະບຽງໃນສະເພາະໜ້າ ແລະ ຍາວນານ.
- ສຶກສາ, ຄົ້ນຄວ້າ, ພັດທະນາ ແລະ ນຳໃຊ້ແນວພັນເຂົ້າ ແລະ ແນວພັນພືດສະບຽງທີ່ມີຄວາມ ທົນທານ ຫຼື ສາມາດປັບໂຕເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດເຊັ່ນ: ທົນຕໍ່ສະພາບ ນ້ຳຖ້ວມ ແຫ້ງແລ້ງ ແລະ ອາກາດໜາວ; ໄປຄຽງຄູ່ການຄົ້ນຄວ້າ ແລະ ການພັດທະນານຳໃຊ້ເຕັກນິກ ການປູກ ທີ່ເໝາະສົມ, ເຕັກນິກການນຳໃຊ້ນ້ຳແບບປະຫຍັດ ແລະ ການນຳໃຊ້ນ້ຳໃຫ້ມີປະສິດທິຜົນສູງ

ໃນເຂດທີ່ມີຄວາມສ່ຽງຕໍ່ໄພແຫ້ງແລ້ງ ໂດຍສະເພາະເຂດນາໂຄກ (ນານໍ້າຝົນ) ທີ່ຢູ່ນອກເຂດ ຊົນລະປະທານ.

- ຄົ້ນຄວ້າແນວພັນເຂົ້າ ແລະ ເຕັກໂນໂລຊີສຳລັບການຍົກສູງຜະລິດຕະພາບຂອງການຜະລິດເຂົ້າ, ຊຶ່ງລວມທັງເຕັກນິກ ແລະ ການຈັດການພາຍຫຼັງເກັບກ່ຽວ ໃນເຂດທົ່ງພຽງໂດຍການສູ້ຊົນຍົກສະມັດຕະພາບສະເລ່ຍໃຫ້ໄດ້ 4,5 ຫາ 5 ໂຕນ/ເຮັກຕາ ສຳລັບນາປີ, ແລະ 5,5 ຫາ 6 ໂຕນ/ເຮັກຕາ ສຳລັບນາແຊງເພື່ອການຄໍ້າປະກັນທາງດ້ານສະບຽງອາຫານ ແລະ ໂພສະນາການ.
- ຄົ້ນຄວ້າເຕັກນິກ-ເຕັກໂນໂລຊີສຳລັບການຜະລິດເຂົ້າ ແລະ ການປູກພືດສະບຽງແບບປະສົມປະສານໃນລະບົບການຜະລິດກະສິກຳເຂດພູພຽງ ແລະ ພູດອຍ; ການຈັດການຫລັງເກັບກ່ຽວ, ຫຼຸດຜ່ອນຜົນເສັຽຫາຍເພື່ອເປັນການຍົກຜະລິດຕະພາບຂອງການປູກເຂົ້າ ແລະ ພືດສະບຽງເພື່ອຄໍ້າປະກັນທາງດ້ານສະບຽງອາຫານ ແລະ ໂພສະນາການ.
- ປັບປຸງລະບົບການຜະລິດ ແລະ ສະໜອງແນວພັນເຂົ້າ ແລະ ພືດສະບຽງ ໂດຍການສ້າງເຄືອຂ່າຍເພື່ອຜະລິດ, ຊຶ່ງລວມທັງຜູ້ປະກອບການ ໃນການສະໜອງແນວພັນເຂົ້າ ແລະ ພືດສະບຽງ; ໂດຍສະເພາະການຜະລິດແນວພັນເຂົ້າທີ່ມີຄຸນະພາບເພື່ອສະໜອງໃຫ້ແກ່ການຜະລິດໃນຂອບເຂດທົ່ວປະເທດໃຫ້ໄດ້ 100.000 ໂຕນ ຮອດປີ 2025; ລວມທັງການສ້າງເຄືອຂ່າຍເພື່ອສະໜອງເຕັກນິກ-ເຕັກໂນໂລຊີ ໃຫ້ແກ່ລະບົບການປູກເຂົ້າ ແລະ ພືດສະບຽງໃນເຂດທົ່ງພຽງ, ພູພຽງ ແລະ ເຂດພູດອຍ.
- ຄົ້ນຄ້ວາເພື່ອສະໜອງຂໍ້ມູນ ໃນການກຳນົດນະໂຍບາຍໃນລະດັບຕ່າງໆ ເພື່ອປັບປຸງ ຫຼື ກຳນົດນະໂຍບາຍ ໃນການພັດທະນາກະສິກຳສະອາດ ແລະ ຍືນຍົງ ໂດຍສະເພາະ ການຜະລິດກະສິກຳເພື່ອຄໍ້າປະກັນສະບຽງອາຫານ ແລະ ໂພສະນາການ.
- ປັບປຸງລະບົບຂໍ້ມູນຂ່າວສານ ເພື່ອການເຜີຍແຜ່ ແລະ ແລກປ່ຽນຜົນຂອງການຄົ້ນຄວ້າ ໃນ ສປປ. ລາວ, ເຮັດໃຫ້ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ສາມາດເຂົ້າເຖິງຂໍ້ມູນຂ່າວສານ ແລະ ນຳໃຊ້ຜົນ ຂອງການ ຄົ້ນຕ່າງໆ ສຳລັບການຜະ ລິດ ແລະ ໃຊ້ເປັນບ່ອນອີງໃນການຕັດສິນໃຈໄດ້ສະດວກຍິ່ງຂຶ້ນ.
- ປັບປຸງ ແລະ ກໍ່ສ້າງຄວາມສາມາດ ຂອງຂະແໜງຄົ້ນຄວ້າກະສິກຳ ແລະ ປ່າໄມ້ ລວມທັງການປັບປຸງພະລາບົດບາດ, ໂຄງຮ່າງການຈັດຕັ້ງ, ລະບຽບການພາຍໃນສຳລັບຄຸ້ມຄອງການຄົ້ນຄວ້າ, ພັດທະນາວິຊາການສະເພາະດ້ານ ແລະ ສ້າງຄວາມມາດໃຫ້ແກ່ເຄືອຂ່າຍການຄົ້ນຄວ້າ ລວມທັງຜູ້ປະກອບການໃນລະດັບສູນກາງ ແລະ ທ້ອງຖິ່ນ ເພື່ອການຈັດຕັ້ງປະຕິບັດ ແລະ ຂະຫຍາຍຜົນຂອງການຄົ້ນຄ້ວາຮັບໃຊ້ເຂົ້າໃນການຜະລິດຕົວຈິງ.

### 9). ການສ້າງຄັງແຮ

ເພື່ອຮັບປະກັນໃຫ້ແກ່ ການຄໍ້າສະບຽງອາຫານ ໃນເວລາເກີດມີສະພາບບໍ່ສະຫງົບ ເຊັ່ນ: ເກີດ ໄພພິບັດ ຈາກທຳມະຊາດ, ເກີດສະພາບຂາດແຄນ, ວິກິດການດ້ານສະບຽງອາຫານ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ສະພາບການອື່ນໆ ພ້ອມທັງປະຕິບັດພັນທະຕໍ່ສາກົນ ໂດຍສະເພາະ ຕໍ່ປະເທດອາຊຽນດ້ວຍກັນ. ດັ່ງນັ້ນ ສປປລາວ ມີຄວາມຈຳເປັນຕ້ອງໄດ້ ສ້າງຄັງແຮສະບຽງອາຫານ ແນໃສ່ ເພື່ອຄໍ້າ

ປະກັນສະບຽງອາຫານ ໃຫ້ໄດ້ຢ່າງຕ່ຳ 3-4 ເດືອນ ເປົ້າໝາຍ ແມ່ນເພື່ອຮັບປະກັນສະຖຽນລະພາບ ຄວາມໝັ້ນຄົງ ດ້ານເສດຖະກິດ-ສັງຄົມຂອງຊາດ ພ້ອມທັງຮັກສາຄວາມໝັ້ນທ່ຽງ ດ້ານລາຄາສະບຽງ ອາຫານພາຍໃນປະເທດ. ການສ້າງຄັງແຮເຂົ້າ ແມ່ນເລັ່ງໃສ່ 2 ລະດັບ ຄື:

**<u>ການສ້າງຄັງແຮເຂົ້າແຫ່ງຊາດ</u>:** ສ້າງໃຫ້ມີອົງກອນຮັບຜິດຊອບສະເພາະ, ມີຄະນະກຳມະການ ຊີ້ນຳລະດັບຊາດ ແລະ ລະດັບທ້ອງຖິ່ນ ຊຶ່ງມີພາລະບົດບາດ, ສິດ, ໜ້າທີ່ ແລະ ມີນິຕິກຳຕ່າງໆໃນ ການຄຸ້ມຄອງຄັງແຮເຂົ້າ ແລະ ມີລະບົບການຕິດຕາມກວດກາ, ມີກົນໄກປະສານງານກັນຢ່າງລະອຽດ ແລະ ມີງົບປະມານຮັບໃຊ້ສະເພາະ ລວມທັງເງື່ອນໄຂອຳນວຍຄວາມສະດວກຕ່າງໆ ເພື່ອຮັບໃຊ້ວຽກງານດັ່ງກ່າວ. ສ້າງຄັງແຮເຂົ້າຂອງແຫ່ງຊາດໃຫ້ໄດ້ທັງໝົດ 400.000 ໂຕນເຂົ້າເປືອກ, ໃນນັ້ນປະກອບດ້ວຍຄັງແຮເຂົ້າເພື່ອໄພພິບັດ ແລະ ປ້ອງກັນຊາດປ້ອງກັນຄວາມສະຫງົບ, ຄັງແຮສຳລັບແຊກແຊງລາຄາເຂົ້າ, ຄັງແຮເຂົ້າອາຊຽນ ແລະ ພັນທະສາກົນ ແລະ ຄັງແຮແນວພັນເຂົ້າ.

**<u>ສ້າງຄັງແຮເຂົ້າປວງຊົນ</u>**: ຕົ້ນຕໍ ແມ່ນເລັ່ງໃສ່ ການສ້າງທະນາຄານເຂົ້າຊຸມຊົນ ໃນກຸ່ມບ້ານ ຫຼື ເຂດທີ່ມີຄວາມສ່ຽງ ແລະ ມັກເກີດ ແລະ ໄດ້ຮັບມີຜົນກະທົບຈາກໄພພິບັດທຳມະຊາດເລື້ອຍໆ ເຊັ່ນ: ແຫ້ງແລ້ງ, ນ້ຳຖ້ວມ, ພະຍຸ, ພະຍາດລະບາດຮ້າຍແຮງ ແລະ ປະກົດການອື່ນໆ ເພື່ອເປັນບ່ອນເກັບຊື້, ສະໜອງ ເຂົ້າ ແລະ ຈໍລະຈອນແຈກຢາຍ ໃຫ້ກຸ່ມເປົ້າຫມາຍອື່ນໆ.

### 3.2.1.2 ມາດຕະການດ້ານການລ້ຽງສັດ, ສັດຕະວະແພດ ແລະ ການປະມົງ

ເພື່ອເຮັດໃຫ້ທິດທາງລວມ ປະກົດຜົນເປັນຈິງ ແລະ ສາມາດບັນລຸເປົ້າໝາຍທີ່ວາງໄວ້ ໃນຕໍ່ຫນ້າ ຈະຕ້ອງເອົາໃຈໃສ່ຈັດຕັ້ງປະຕິບັດ ບັນດາຫນ້າວຽກແຕ່ລະດ້ານ ດັ່ງລຸ່ມນີ້:

**1). ການພັດທະນາ ຍົກຜະລິດຕະພາບ ການລ້ຽງສັດ ແລະ ການປະມົງ**

**(1). <u>ການພັດທະນາການລ້ຽງສັດໃຫຍ່ ງົວ-ຄວາຍ</u>**

ສັດໃຫຍ່ປະເພດງົວຄວາຍ ມີບົດບາດ ໃນການສະຫນອງສະບຽງ ທີ່ສຳຄັນ ອັນດັບທີ່ 4 ຖ້າທຽບກັບປະລິມານຊີ້ນສັດອື່ນໆ. ຄາດໝາຍຮອດປີ 2015 ແມ່ນຈະຕ້ອງຜະລິດ ຊີ້ນຄວາຍ ໃຫ້ໄດ້ 23.000 ໂຕນ, ຊີ້ນງົວໃຫ້ໄດ້ 24.000 ໂຕນ ແລະ ຄາດຄະເນ ຮອດປີ 2020 ຈະຕ້ອງຮັກສາ ລະດັບການສະຫນອງຊີ້ນຄວາຍ ໃຫ້ໄດ້ 15.000 ໂຕນ ແລະ ຊີ້ນງົວ ໃຫ້ໄດ້ 30.000 ໂຕນ. ຮອດປີ 2025 ຈະຕ້ອງຜະລິດຊີ້ນຄວາຍໃຫ້ໄດ້ 17.000 ໂຕນ ແລະ ຊີ້ນງົວ ໃຫ້ໄດ້ 38.000 ໂຕນ. ສະນັ້ນ, ເພື່ອເຮັດໃຫ້ບັນລຸຄາດໝາຍດັ່ງກ່າວນີ້ຈະຕ້ອງເລັ່ງໃສ່ ການພັດທະນາການລ້ຽສັດໃຫຍ່ດັ່ງນີ້:

(1.1) **ການສຳຫຼວດເຂດການລ້ຽງສັດໃຫຍ່:**

ສຳຫລວດເນື້ອທີ່ດິນທີ່ເປັນທົ່ງ ຫຍ້າຄືນໃໝ່ ແນໃສ່ ຈັດສັນ ແລະ ກຳນົດເຂດທີ່ຈະອະນຸລັກ ໃຫ້ເປັນເຂດລ້ຽງສັດໃຫຍ່ພັນພື້ນເມືອງ ແລະ ເຂດສົ່ງເສີມການລົງທືນການສ້າງທົ່ງຫຍ້າ, ສ້າງຟາມລ້ຽງງົວພັນຊີ້ນ

ແລະ ຊອກແຫລ່ງເຫມາະສົມທີ່ມີຄວາມເປັນໄປໄດ້ເພື່ອພັດທະນາການ ລ້ຽງງົວນົມ ຫລື ກຳນົດເປັນເຂດລ້ຽງສັດໃຫຍ່ແບບຄົບວົງຈອນ ທີ່ຕິດພັນກັບການປຸງແຕ່ງ ແລະ ຕະຫລາດຢ່າງຍືນຍົງ.

(1.2) **<u>ການພັດທະນາການລ້ຽງຄວາຍ</u>**:

**ຄວາຍ**ແມ່ນຊັບສົມບັດທີ່ສຳຄັນ ຂອງຊາດ ແລະ ທີ່ສາມາດພັດທະນາໃຫ້ກາຍເປັນສິນຄ້າໄດ້ສູງ. ໃນຕໍ່ຫນ້າຈະຕ້ອງໄດ້ປົກປັກຮັກສາ ແລະ ສົ່ງເສີມໃຫ້ມີການການລ້ຽງຄວາຍເພີ່ມຂື້ນ ໂດຍມີຄາດຫມາຍ ສູ້ຊົນສະຫນອງຄວາຍ ຮອດປີ 2020 ໃຫ້ໄດ້ໃນລະດັບ 124.000 ໂຕ ແລະ ໃນປີ 2025 ຕ້ອງສະຫນອງຄວາຍໃຫ້ໄດ້ບໍ່ຕໍ່າກວ່າ 137.000 ໂຕຕໍ່ປີ ຊຶ່ງຫນ້າວຽກຈຸດສຸມທີ່ຕ້ອງໄດ້ເຮັດໃຫ້ບັນລຸມີດັ່ງນີ້:

- ສ້າງສູນປັບປຸງ ພັດທະນາ ແນວພັນຄວາຍພື້ນເມືອງຂຶ້ນ ຢູ່ໃນເຂດທີ່ເໝາະສົມ ຊຶ່ງຈະຕ້ອງມີການເລືອກເອົາຈຸດ ທີ່ຍັງມີຄວາຍພັນພື້ນເມືອງທີ່ດີ ໃຫ້ເປັນທີ່ຕັ້ງຂອງສູນດັ່ງກ່າວ ແຂວງທີ່ຄວນພິຈາລະນາເຊັ່ນ: ຜົ້ງສາລີ, ຫລວງພະບາງ, ວຽງຈັນ, ບໍລິຄຳໄຊ ແລະ ອັດຕະປື ໂດຍມີເປົ້າໝາຍ ສ້າງໃຫ້ມີ 1 ແຫ່ງ.

- ສົ່ງເສີມເຕັກນິກການລ້ຽງຄວາຍ ເພື່ອຍົກສູງຜະລິດຕະພາບ ໃນຂອບເຂດທົ່ວປະເທດ ແລະ ໃນເຂດທີ່ມີທ່າແຮງເຊັ່ນ: ພາກເຫນືອ ສຸມໃສ່ ຫລວງພະບາງ, ຫົວພັນ ແລະ ໄຊຍະບູລີ. ພາກກາງ ສຸມໃສ່ ສະຫວັນນະເຂດ, ຄຳມ່ວນ ແລະ ວຽງຈັນ, ພາກໃຕ້ສຸມໃສ່ ຈຳປາສັກ, ສາລະວັນ ແລະ ອັດຕະປື, ໂດຍການເພີ່ມທະວີການກັນພະຍາດ, ການປູກຫຍ້າລ້ຽງຄວາຍ, ການສ້າງກອງທຶນ ແລະ ສົ່ງເສີມປະຊາຊົນໃຫ້ເຂົ້າເຖິງສິນເຊື່ອລ້ຽງຄວາຍ ລວມທັງການຍົກຄຸນນະພາບ ຂອງຜະລິດຕະພັນຄວາຍ ໃຫ້ມີຄວາມປອດໄພສູງຂຶ້ນ.

(1.3) **<u>ການພັດທະນາການລ້ຽງງົວ</u>**:

**ງົວ** ແມ່ນສັດທີ່ມີບົດບາດສຳຄັນ ໃນການສະຫນອງສະບຽງອາຫານ ແລະ ສາມາດສ້າງລາຍຮັບໃຫ້ແກ່ປະເທດຊາດ. ໃນຕໍ່ຫນ້າຈະຕ້ອງໄດ້ປົກປັກຮັກສາ ແລະ ສົ່ງເສີມໃຫ້ມີການການລ້ຽງງົວເພີ່ມຂື້ນ ໂດຍມີຄາດຫມາຍ ສູ້ຊົນສະຫນອງງົວ ຮອດປີ 2020 ໃຫ້ໄດ້ໃນລະດັບ 315.000 ໂຕ ແລະ ໃນປີ 2025 ໃຫ້ໄດ້ບໍ່ຕໍ່າກວ່າ 392.000 ໂຕຕໍ່ປີ ຊຶ່ງຫນ້າວຽກຈຸດສຸມ ທີ່ຕ້ອງໄດ້ເຮັດໃຫ້ບັນລຸມີດັ່ງນີ້:

- ສ້າງເຂດອະນຸລັກຮັກສາພັນງົວພື້ນເມືອງທີ່ດີ ດ້ວຍການສຳຫລວດສຶກສາຄວາມເປັນໄດ້ຢູ່ໃນເຂດຜາໄຊ, ໜອງແຮດ ແຂວງຊຽງຂວາງ; ເຂດອາໂນ-ພູແທ່ນ ເມືອງຫລາ ແຂວງອຸດົມໄຊ; ເມືອງຮົ່ມ, ເມືອງທ່າໂທມ, ລ້ອງແຈ້ງ ແຂວງໄຊສົມບູນ. ເຂດເມືອງວຽງທອງ ແຂວງບໍລິຄຳໄຊ ແລະ ເຂດອື່ນໆທີ່ມີເງື່ອນໄຂເໝາະສົມ.

- ປັບປຸງສູນ ແລະ ສະຖານີ ພັດທະນາ ແລະ ຂະຫຍາຍພັນງົວລູກປະສົມ ຢູ່ແຕ່ລະພາກຂອງປະເທດ. ພາກເໜືອ ແມ່ນສຸມໃສ່ສະຖານີພູຂີ້ເຫລົ້າ (ແຂວງຊຽງຂວາງ), ພາກກາງແມ່ນສູນຄົ້ນຄວ້າການລ້ຽງສັດນ້ຳຊວງ ແລະ ພາກໃຕ້ ແມ່ນ ສະຖານີໜອງຫີນຂອງແຂວງຈຳປາສັກ. ໂດຍໃຫ້ສູນ ແລະ ສະຖານີ ເປັນບ່ອນອະນຸລັກ ແລະ ພັດທະນາພັນງົວ, ໃຫ້ການບໍລິການສະຫນອງແນວພັນງົວ ລວມທັງນ້ຳເຊື້ອທີ່ດີ ແລະ ຖ່າຍທອດເຕັກນິກ ການປະສົມພັນງົວທີ່ເໝາະສົມ ໃຫ້ແກ່ຊາວກະສິກອນ ແລະ ຜູ້ປະກອບການຢູ່ແຕ່ລະພາກໃຫ້ທົ່ວເຖິງ.

- ສົ່ງເສີມການລ້ຽງງົວພື້ນເມືອງຂອງປະຊາຊົນບັນດາເຜົ່າ ໃນຂອບເຂດທົ່ວປະເທດຢ່າງແຂງແຮງ ໂດຍຕ້ອງໃຫ້ຕິດພັນກັບການສົ່ງເສີມການປູກຫຍ້າສອນຄົວ, ການບຸກເບີກສ້າງທົ່ງຫຍ້າລ້ຽງສັດ, ການປັບປຸງຮູບແບບການລ້ຽງ ແບບທຳມະຊາດໄປສູ່ການລ້ຽງເປັນຟາມ, ການຫັນເອົາການລ້ຽງງົວ ໃຫ້ເປັນອາຊີບຖາວອນ ແລະ ແກ້ໄຂຄວາມທຸກຍາກຂອງຊາວຊົນນະບົດ.

ເຂດແຂວງທີ່ເປັນບຸລິມມະສິດ ຂະຫຍາຍການລ້ຽງງົວ ເພື່ອສະໜອງເປັນສະບຽງພາຍໃນປະເທດ ແມ່ນສຸມໃສ່: ແຂວງໄຊຍະບູລີ, ຫລວງພະບາງ, ຫົວພັນ, ບໍ່ແກ້ວ, ອຸດົມໄຊ, ຊຽງຂວາງ, ວຽງຈັນ, ນະຄອນຫລວງ, ສະຫວັນນະເຂດ, ຈຳປາສັກ ແລະ ສາລະວັນ.

## (2). ການພັດທະນາການລ້ຽງໝູ

**ໝູ** ແມ່ນສັດທີ່ມີບົດບາດ ໃນການສະໜອງຊີ້ນ ໃຫ້ແກ່ປະຊາຊົນລາວ. **ຄາດໝາຍ ຮອດປີ** 2020 ຈະຕ້ອງຜະລິດຊີ້ນໝູ ໃຫ້ໄດ້ 97.500 ໂຕນ ແລະ ໃນປີ 2025 ຕ້ອງບໍ່ໃຫ້ຫລຸດ 116.200 ໂຕນ, ເພື່ອບັນລຸຕົວເລກຄາດໝາຍດັ່ງກ່າວນັ້ນ ຕ້ອງເລັ່ງໃສ່ ການຫັນປ່ຽນການລ້ຽງຫມູແບບດັ້ງເດີມ ໄປສູ່ການລ້ຽງແບບເປັນຟາມຫລາຍຂື້ນ ຊຶ່ງຄາດຫມາຍຮອດປີ 2025 ຕ້ອງ ເພີ່ມແມ່ພັນຫມູພັນອຸດສາຫະກຳ ໃຫ້ໄດ້ໃນລະດັບ 45.000 ແມ່ ໄປພ້ອມກັບສູ້ຊົນຜະລິດອາຫານຫມູໃຫ້ພຽງພໍ ແລະ ປັບປຸງຄຸນນະພາບຂອງອາຫານໃຫ້ສູງຂຶ້ນ; ເປີດກວ້າງຂະບວນການສັກຢາກັນພະຍາດ ແລະ ຂ້າແມ່ກາຝາກໃຫ້ຫມູ ຢ່າງເອົາຈິງເອົາຈັງ ເພື່ອຫລຸດຜ່ອນຄວາມເສັຍຫາຍເນື່ອງຈາກການເກີດພະຍາດລະບາດໃຫ້ຫລຸດລົງ.

ເຂດທີ່ເປັນບຸລິມມະສິດ ສົ່ງເສີມການລ້ຽງໝູພື້ນເມືອງ ເພື່ອສະໜອງເປັນສະບຽງອາຫານ ພາຍໃນປະເທດ ໄດ້ແກ່: ແຂວງຜົ້ງສາລີ, ອຸດົມໄຊ, ຫລວງພະບາງ, ຫົວພັນ, ຊຽງຂວາງ, ວຽງຈັນ, ສະຫວັນນະເຂດ, ຄຳມ່ວນ, ສາລະວັນ, ຈຳປາສັກ ແລະ ເຊກອງ.

## (3). ການພັດທະນາການລ້ຽງແບ້

**ແບ້** ແມ່ນສັດເສດຖະກິດຊະນິດໜຶ່ງ ທີ່ຄ່ອຍໆມີບົດບາດ ໃນການສະໜອງສະບຽງອາຫານ ຢູ່ພາຍໃນ; ໃນປີ 2025 ຈະຕ້ອງສູ້ຊົນ ສະໜອງແບ້ເພື່ອການບໍລິໂພກ ໃນລະດັບ 250.000 ໂຕ ຫລື ໃຫ້ມີຊີ້ນແບ້ປະມານ 4.000 ຫາ 5.000 ໂຕນ ຕໍ່ປີ. ເພື່ອບັນລຸຕົວເລກຄາດໝາຍດັ່ງກ່າວ, ຕ້ອງເລັ່ງໃສ່ສົ່ງເສີມ ການລົງທຶນໃສ່ການສ້າງຟາມ ຂະຫຍາຍແນວພັນແບ້ພື້ນເມືອງ ຫລື ລູກປະສົມ ຢູ່ເຂດທີ່ມີເງື່ອນໄຂ ເຊັ່ນ: ແຂວງ ຜົ້ງສາລີ, ອຸດົມໄຊ, ຫົວພັນ, ຊຽງຂວາງ, ວຽງຈັນ, ບໍລິຄຳໄຊ, ສາລະວັນ, ເຊກອງ ແລະ ອັດຕະປື ເພື່ອໃຫ້ມີແຫລ່ງສະໜອງແນວພັນແບ້. ຄຽງຄູ່ກັນນັ້ນ ຕ້ອງໄດ້ປັບປຸງພັດທະນາພັນແບ້ພື້ນເມືອງ ໃຫ້ມີຂະໜາດໃຫຍ່ ແລະ ທົນທານຕໍ່ສະພາບແວດລ້ອມ ເພື່ອນຳໄປສົ່ງເສີມໃຫ້ຊາວກະສິກອນ ລ້ຽງໃຫ້ກວ້າງຂວາງອອກ.

## (4). ການພັດທະນາການລ້ຽງສັດປີກ

**ສັດປີກ** ແມ່ນມີບົດບາດສຳຄັນ ຕໍ່ໂຄງປະກອບການບໍລິໂພກຊີ້ນຂອງປະຊາຊົນລາວ; ຮອດປີ 2025 ຕ້ອງຜະລິດຊີ້ນສັດປີກໃຫ້ໄດ້ ໃນລະດັບ 79.000 ໂຕນ ແລະ ໄຂ່ ໃຫ້ມີ ປະມານ 54.000 ໂຕນຕໍ່ປີ ດ້ວຍການເພີ່ມການສະໜອງສັດປີກໃຫ້ເຖິງ 70 ຫາ 80.000.000 ໂຕ. ສະນັ້ນ, ເພື່ອບັນລຸ ຕົວເລກຄາດໝາຍດັ່ງກ່າວຕ້ອງເລັ່ງໃສ່ ສົ່ງເສີມການລ້ຽງສັດປີກພື້ນເມືອງ ໃນເຂດຊົນນະບົດ ເພື່ອສະໜອງ ສະບຽງອາຫານກັບທີ່ ໃຫ້ເພີ່ມຂຶ້ນ ໂດຍການເປີດຂະບວນການສົ່ງເສີມການລ້ຽງ ໃຫ້ຖືກຕາມເຕັກນິກ, ມີການສັກຢາກັນພະຍາດ ແລະ ປະຕິບັດຫລັກການຄວາມປອດໄພດ້ານຊີວະທີ່ດີໃຫ້ເພີ່ມຂຶ້ນ.

ເຂດທີ່ເປັນບຸລິມມະສິດ ສົ່ງເສີມການລ້ຽງສັດປີກພື້ນເມືອງ ເພື່ອສະໜອງເປັນສະບຽງພາຍໃນປະເທດໄດ້ແກ່: ແຂວງຫລວງພະບາງ, ໄຊຍະບູລີ, ອຸດົມໄຊ, ຫົວພັນ, ຊຽງຂວາງ, ວຽງຈັນ, ນະຄອນຫລວງ, ສະຫວັນນະເຂດ, ສາລະວັນ ແລະ ຈຳປາສັກ.

### (5). ການພັດທະນາການລ້ຽງປາ ແລະ ສັດນ້ຳ

**ປາ ແລະ ສັດນ້ຳ** ແມ່ນແຫລ່ງທາດຊີ້ນອັນດັບໜຶ່ງຂອງປະເທດ, ຮອດປີ 2025 ຈະຕ້ອງສູ້ຊົນໃຫ້ຜົນຜະລິດປາ ແລະ ສັດນ້ຳ ໃຫ້ໄດ້ 274.000 ໂຕນ. ສະນັ້ນ, ເພື່ອເຮັດໃຫ້ບັນລຸຄາດໝາຍດັ່ງກ່າວ ຈະຕ້ອງເລັ່ງໃສ່ພັດທະນາການລ້ຽງປາ ແລະ ສັດນ້ຳ ດັ່ງນີ້:

- ສູ້ຊົນຂະຫຍາຍຜົນຜະລິດປາລ້ຽງໃຫ້ໄດ້ໃນລະດັບ 75% ຂອງຄວາມຕ້ອງການ ດ້ວຍການສົ່ງເສີມໃຫ້ມີການຂະຫຍາຍບ່ອນລ້ຽງ ແລະ ສະໜອງລູກປາໃຫ້ໄດ້ 1.000 ລ້ານໂຕ/ປີ ໃນນີ້ ຕ້ອງສູ້ຊົນຜະລິດແນວພັນປາພື້ນເມືອງ ທີ່ເປັນເສດຖະກິດ ໃຫ້ກວມເອົາປະມານ 30% ຂອງລູກປາທັງໝົດ.
- ສຸມໃສ່ພັດທະນາ, ສົ່ງເສີມ ແລະ ຖ່າຍທອດເຕັກນິກການລ້ຽງປາພັນປັບປຸງ ແລະ ປານ້ຳຂອງ ທີ່ມີທ່າແຮງດ້ານເສດຖະກິດ ແລະ ສັດນ້ຳທຸກຊະນິດ ໃນທຸກຮູບແບບ ຢູ່ໃນເຂດທີ່ມີເຖື່ອນໄຂ ເຊັ່ນ: ການລ້ຽງປາປະສົມປະສານກັບການລ້ຽງສັດ, ການສ້າງຟາມລ້ຽງປາ, ລ້ຽງປາໃສ່ນາເຂົ້າ, ລ້ຽງໃສ່ອ່າງເກັບນ້ຳ, ລ້ຽງໃສ່ແຫຼ່ງນ້ຳທຳມະຊາດ ແລະ ລ້ຽງໃສ່ໜອງ ແລະ ແຫລ່ງອື່ນໆ ໂດຍຕ້ອງສູ້ຊົນໃຫ້ມີການຂະຫຍາຍຕົວໃນລະດັບ 10% ຕໍ່ປີ.
- ຍົກສູງການຄຸ້ມຄອງ, ປົກປັກຮັກສາແຫລ່ງນ້ຳ ແລະ ການຊົມໃຊ້ຊັບພະຍາກອນສັດນ້ຳ ຢ່າງຍືນຍົງ ໂດຍການສ້າງເຂດວັງສະຫງວນ ແລະ ບ່ອນອະນຸລັກຮັກສາພັນປາພື້ນເມືອງໃຫ້ໄດ້ 500 ແຫ່ງ ໂດຍສຸມໃສ່: ແຂວງບໍ່ແກ້ວ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ, ເຊກອງ ແລະ ແຂວງອັດຕະປື.
- ປັບປຸງບັນດາສະຖານີ ຜະລິດແນວພັນປາທີ່ມີແລ້ວ 62 ແຫ່ງໃນທົ່ວປະເທດໃຫ້ສາມາດດຳເນີນການຜະລິດລູກປາ ສະໜອງໃຫ້ແກ່ຜູ້ລ້ຽງ ແລະ ຕ້ອງອອກແຮງສຳຫລວດ ເພື່ອສ້າງສະຖານີຂອງລັດຂຶ້ນໃໝ່ ໃຫ້ມີຢູ່ທຸກແຂວງ ເພື່ອແນ່ໃສ່ ຍົກຄວາມສາມາດ ໃນການສະໜອງລູກປາໃຫ້ໄດ້ 60% ຂອງຄວາມຕ້ອງການທັງໝົດທົ່ວປະເທດ ແລະ ໃຫ້ເປັນບ່ອນຮຽນຮູ້ ຖ່າຍທອດເຕັກນິກການລ້ຽງປາ ແລະ ສັດນ້ຳໃຫ້ແກ່ຊາວກະສິກອນ.

### (6). ການລ້ຽງສັດປ່າ

**ສັດປ່າ ແລະ ແມງໄມ້** ຢູ່ ສປປ ລາວ ຍັງແມ່ນແຫລ່ງທາດຊີ້ນ ແລະ ສະໜອງທາດໂປຕີນໜຶ່ງຂອງຊາວຊົນນະບົດ ຊຶ່ງເປົ້າໝາຍ ຕ້ອງນຳໃຊ້ມັນໃຫ້ເກີດປະໂຫຍດ ແລະ ຮັບປະກັນຄວາມຍືນຍົງ, ສະນັ້ນ ຕ້ອງສູ້ຊົນສຶກສາຄົ້ນຄວ້າແລະ ສົ່ງເສີມການລ້ຽງສັດປ່າບາງຊະນິດ ທີ່ໃກ້ຈະສູນພັນ ແລະ ສັດປ່າປະເພດຄຸ້ມຄອງ ຕາມທີ່ກົດໝາຍ ກຳນົດ ແນໃສ່ເພື່ອເປົ້າໝາຍ ການສຶກສາຄົ້ນຄວ້າດ້ານວິທະຍາສາດ ແລະ ເສດຖະກິດ ເພື່ອໃຫ້ເປັນທາງເລືອກ ໃນການສ້າງລາຍຮັບ ໃຫ້ແກ່ປະຊາຊົນ ຕິດພັນກັບການຮັບປະກັນການປົກປັກຮັກສາຄວາມຫລາກຫລາຍ ທາງດ້ານຊີວະນາໆພັນ.

(7). <u>ການບໍລິການສັດຕະວະແພດ ແລະ ການຄຸ້ມຄອງນຳໃຊ້ຢາສັດຕະວະແພດ</u>

ການບໍລິການສັດຕະວະແພດ ນັບໄດ້ວ່າເປັນປັດໃຈທີ່ຂາດບໍ່ໄດ້ສຳລັບການລ້ຽງສັດ ຍ້ອນວ່າມັນມີບົດບາດໃນການຮັບປະກັນ ທາງດ້ານສຸຂະພາບ-ພະລານາໄມຂອງສັດ, ຫລຸດຜ່ອນຄວາມສ່ຽງຕໍ່ຜູ້ບໍລິໂພກ ແລະ ຊ່ວຍເພີ່ມຜົນຜະລິດໃຫ້ແກ່ການລ້ຽງສັດ. ສະນັ້ນ, ຈຶ່ງຈຳເປັນຕ້ອງໄດ້ເອົາໃຈໃສ່ປັບປຸງ ໃຫ້ຄຽງຄູ່ກັບວຽກງານອື່ນໆ ໂດຍຫນ້າວຽກບຸລິມມະສິດທີ່ຕ້ອງໄດ້ພັດທະນາມີດັ່ງນີ້:

– ປັບປຸງ ສູນຜະລິດຢາສັດຕະວະແພດ ຂອງກະຊວງກະສິກຳ ແລະ ປ່າໄມ້ ໃຫ້ໄດ້ມາດຖານຂອງອາຊຽນ ເພື່ອໃຫ້ສາມາດເພີ່ມການຜະລິດ ແລະ ແຈກຢາຍຢາກັນພະຍາດສັດ ທີ່ມີຄຸນນະພາບ ໃຫ້ແກ່ຊາວກະສິກອນໃຫ້ພຽງພໍກັບຄວາມຕ້ອງການ.

– ຂະຫຍາຍຕາໜ່າງການບໍລິການ ຢາສັດຕະວະແພດ ທັງຂອງພາກລັດ ແລະ ເອກະຊົນໃຫ້ກວ້າງຂວາງ ແລະ ທົ່ວເຖິງທຸກເມືອງ ແລະ ໃຫ້ໄດ້ຂະຫຍາຍໄປສູ່ສູນບໍລິການເຕັກນິກເທື່ອລະກ້າວ.

– ພັດທະນາລະບົບການຄຸ້ມຄອງ ແລະ ຊຸກຍູ້ສົ່ງເສີມການບໍລິການປິ່ນປົວພະຍາດສັດຂອງນັກວິຊາຊີບສັດຕະວະແພດ, ການຜະລິດ, ການນຳເຂົ້າ ແລະ ຈຳຫນ່າຍຢາສັດຕະວະແພດ ແລະ ອຸປະກອນການສັດຕະວະແພດ ຕາມລະບຽບກົດໝາຍກຳນົດ.

## 2). ການປັບປຸງ ພັດທະນາ ລະບົບດຳເນີນມາດຕະການ ດ້ານສຸຂະນາໄມສັດ ແລະ ຜະລິດຕະພັນສັດ

ເພື່ອປ້ອງກັນຄວາມສ່ຽງ ທີ່ອາດເປັນອັນຕະລາຍຕໍ່ສຸຂະພາບຂອງຄົນ ແລະ ສັດ ຈະຕ້ອງໄດ້ ເອົາໃຈໃສ່ປັບປຸງລະບົບ ການນຳໃຊ້ມາດຕະການ ດ້ານສຸຂະນາໄມຢ່າງຮອບດ້ານດັ່ງນີ້:

**(1) <u>ການຮັບປະກັນຄວາມສ່ຽງຈາກພະຍາດສັດ:</u>**

(1.1) ປັບປຸງ ແລະ ພັດທະນາລະບົບການເຝົ້າລະວັງພະຍາດສັດ ພະຍາດປາ ແລະ ສັດນ້ຳ ໂດຍການຂະຫຍາຍຕາໜ່າງ ດ້ານລະບາດວິທະຍາ ໃຫ້ລົງຮອດບ້ານ ໃນຂອບເຂດທົ່ວປະເທດ ເພື່ອດຳເນີນການເຝົ້າລະວັງ, ລາຍງານສະພາບການລະບາດ ຂອງພະຍາດສັດ ແລະ ພະຍາດປາ ໃຫ້ຖືກຕ້ອງວ່ອງໄວ ແລະ ສາມາດຕອບໂຕ້ການລະບາດໃຫ້ທັນກັບສະພາບການ.

(1.2) ປຸກລະດົມຂະບວນການສັກຢາກັນພະຍາດສັດ ຢ່າງກວ້າງຂວາງ; ສຳລັບສັດໃຫຍ່ ຕ້ອງໄດ້ສູ້ຊົນເຮັດໃຫ້ອັດຕາການຕາຍ ຍ້ອນເກີດພະຍາດເຕົ້າໂຮມເລືອດງົວ-ຄວາຍຫລຸດລົງຢ່າງຕັ້ງໜ້າ, ກັນ ແລະ ຄວບ

ຄຸມພະຍາດປາກເປື່ອຍລົງເລັບ. ສຳລັບໝູຕ້ອງໄດ້ເອົາໃຈໃສ່ເຝົ້າລະວັງ ແລະ ກັນພະຍາດອະຫິວາໝູ ແລະ ພະຍາດຫູກ່ຳໝູ ໂດຍປັບປຸງລະບົບຄວາມປອດໄພທາງດ້ານຊີວະ ແລະ ປັບປຸງມາດຕະຖານຟາມລ້ຽງ ໃຫ້ສູງຂຶ້ນ ເພື່ອຮັບປະກັນບໍ່ໃຫ້ມີກໍລະນີເກີດພະຍາດລະບາດຮ້າຍແຮງເກີດຂຶ້ນ; ສຳລັບການລ້ຽງໝູແບບພື້ນເມືອງ ແມ່ນສົ່ງເສີມ ແລະ ປຸກລະດົມ ການນຳໃຊ້ຢາປ້ອງກັນພະຍາດໝູຢ່າງແຂງແຮງ, ໂດຍສະເພາະແມ່ນເຂດທີ່ມີຄວາມສ່ຽງມັກເກີດພະຍາດໃນແຕ່ລະປີ. ສຳລັບສັດປີກ ຕ້ອງໄດ້ປຸກລະດົມໃຫ້ມີການການນຳໃຊ້ຢາກັນພະຍາດນິວຄາເຊີນ ແລະ ພະຍາດອະຫິວາສັດປີກໃຫ້ກວ້າງຂວາງ ແລະ ຕໍ່ເນື່ອງ ເພື່ອແກ້ໄຂບັນຫາສັດປີກຕາຍ ຍ້ອນພະຍາດລະບາດ ໃຫ້ຫລຸດລົງຢ່າງຕັ້ງໜ້າ.

(1.3) ພັດທະນາຫ້ອງວິໄຈພະຍາດສັດຂັ້ນສູນກາງ ໃຫ້ໄດ້ມາດຕະຖານຂົງເຂດ ແລະ ສາກົນ ISO/IEC 17025 ເພື່ອໃຫ້ ກາຍເປັນສູນວິໄຈອ້າງອີງແຫ່ງຊາດ, ເປັນບ່ອນຮ່ວມມື ແລະ ແລກປ່ຽນບົດຮຽນກັບຕ່າງປະເທດ ສຳລັບ ການວິໄຈພະຍາດສັດ ວິໄຈສານຕົກຄ້າງ ຈາກຜະລິດຕະພັນສັດ ແລະ ໃຫ້ເປັນບ່ອນຝຶກອົບຮົມໃຫ້ແກ່ ຕາ ໜ່າງວິໄຈພະຍາດສັດ ຂັ້ນແຂວງ ແລະ ນັກສຶກສາຈາກສະຖາບັນສຶກສາ ທີ່ກ່ຽວຂ້ອງ.

(1.4) ປັບປຸງພັດທະນາ ບັນດາຫ້ອງວິໄຈລະດັບແຂວງ (*ຜົ້ງສາລີ, ຫົວພັນ, ຫລວງນ້ຳທາ, ອຸດົມໄຊ, ຫລວງພະບາງ, ຊຽງຂວາງ, ນະຄອນຫລວງວຽງຈັນ, ສະຫວັນນະເຂດ, ແລະ ຈຳປາສັກ*) ເພື່ອໃຫ້ສາມາດບົ່ງມະຕິພະຍາດສັດ ໄດ້ໂດຍພື້ນຖານ ແລະ ເປັນເຄື່ອງມືສຳຄັນ ໃນການສັງລວມຂໍ້ມູນດ້ານພະຍາດສັດຂອງແຕ່ລະຂົງເຂດ ສະໜອງໃຫ້ແກ່ສູນວິໄຈພະຍາດສັດແຫ່ງຊາດ.

(1.5) ພັດທະນາ ຫ້ອງວິໄຈພະຍາດປາ ແລະ ສັດນ້ຳໃນລະດັບສູນກາງ ເພື່ອໃຫ້ສາມາດບົ່ງມະຕິພະຍາດປາໄດ້ໂດຍພື້ນຖານ ແລະ ເປັນເຄື່ອງມືສຳຄັນໃນການສັງລວມຂໍ້ມູນດ້ານພະຍາດປາຂອງລາວ ແນໃສ່ນຳໃຊ້ໃນການວາງແຜນຄວບຄຸມ ແລະ ປ້ອງກັນໃຫ້ທັນການ.

(1.6) ສຶກສາ ແລະ ກຳນົດເຂດທີ່ມີເງື່ອນໄຂ ເປັນເຂດປອດ ຫລື ເຂດກັນຊົນ ຂອງພະຍາດລະບາດສັດບາງຊະນິດ ແນໃສ່ກ້າວໄປສູ່ສະເໜີໃຫ້ເປັນ ເຂດປອດພະຍາດຢ່າງເປັນທາງການ.

(1.7) ຮ່ວມມືປະສານສົມທົບ ກັບອົງການຈັດຕັ້ງສາກົນ ແລະ ຕ່າງປະເທດໃນການສະກັດກັ້ນ ພະຍາດລະບາດສັດ ຂ້າມຊາຍແດນ ເຊັ່ນ: ພະຍາດໄຂ້ຫວັດສັດປີກ, ພະຍາດປາກເປື່ອຍລົງເລັບ ພະຍາດອື່ນໆ ລວມທັງພະຍາດອຸບັດຂຶ້ນໃໝ່ ແລະ ພະຍາດຕິດຕໍ່ຈາກສັດສູ່ຄົນ.

**(2) <u>ການຮັບປະກັນຄວາມສ່ຽງຈາກອາຫານສັດ</u>**

ປັບປຸງ ແລະ ພັດທະນາສູນວິໄຈອາຫານສັດ ໃຫ້ໄດ້ມາດຖານຂອງຂົງເຂດ ແລະ ສາກົນເທື່ອລະກ້າວ ແນໃສ່ໃຫ້ເປັນບ່ອນກວດກາ ແລະ ຢັ້ງຢືນຄຸນນະພາບ ຂອງວັດຖຸດິບອາຫານສັດ, ອາຫານເຂັ້ມຂຸ້ນ, ອາຫານເຄິ່ງສຳເລັດຮູບ ແລະ ສຳເລັດຮູບ ທີ່ຜະລິດຢູ່ພາຍໃນ ຫລື ນຳເຂົ້າຈາກຕ່າງປະເທດ ໃຫ້ຖືກຕ້ອງວ່ອງໄວ ເປັນທີ່ເຊື່ອຖືຂອງຜູ້ລ້ຽງສັດ ແລະ ຜູ້ປະກອບການທາງດ້ານການລ້ຽງສັດ ແລະ ການປະມົງ.

**(3) <u>ການຮັບປະກັນຄວາມສ່ຽງຈາກຢາສັດຕະວະແພດ</u>**

ພັດທະນາ ແລະ ປັບປຸງ ລະບົບການຄຸ້ມຄອງການຜະລິດ, ການນຳເຂົ້າ ແລະ ຈຳໜ່າຍຢາສັດຕະວະແພດ ດ້ວຍການພັດທະນາລະບົບຂຶ້ນທະບຽນ ແລະ ການກວດກາຕິດຕາມຄຸນນະພາບ ໃຫ້ໄດ້ມາດຕະຖານຕ່ຳສຸດຂອງຂົງເຂດ ແລະ ສາກົນ.

**(4) <u>ການຮັບປະກັນຄວາມປອດໄພດ້ານຜະລິດຕະພັນສັດ</u>**

(4.1) ພັດທະນາລະບົບການຮັບປະກັນຄວາມສ່ຽງ, ການວິເຄາະຄວາມສ່ຽງ, ການກວດກາ-ວິໄຈ, ການຢັ້ງຢືນ ລວມທັງການຈັດທະບຽນອະນຸຍາດ ໃຫ້ແກ່ບັນດາຜູ້ປະກອບການຟາມລ້ຽງ, ໂຮງງານຂ້າສັດ, ໂຮງງານປຸງແຕ່ງຜະລິດຕະພັນສັດ ລວມທັງຕະຫລາດ ແລະ ການບໍລິການຊື້-ຂາຍສັດ, ປາ ແລະ ສັດນ້ຳ.

(4.2) ສ້າງຄວາມເຂັ້ມແຂງໃຫ້ແກ່ ບັນດາດ່ານກວດກາສັດຕະວະແພດສາກົນ ໃຫ້ສາມາດປະຕິບັດສິດ ແລະ ໜ້າທີ່ຂອງຕົນຢ່າງມີປະສິດທິພາບ, ເພີ່ມການປະສານງານ ແລກປ່ຽນຂໍ້ມູນຂ່າວສານ ແລະ ການຮ່ວມມື ກັບດ່ານກວດກາສັດຕະວະແພດຂອງປະເທດໃກ້ຄຽງຢ່າງໃກ້ສິດ ແລະ ເປັນບ່ອນໃຫ້ຄຳແນະນຳໃຫ້ແກ່ດ່ານກວດກາສັດຕະວະແພດ ປະຈຳດ່ານທ້ອງຖິ່ນ ແລະ ປະສານສົມທົບດ່ານສັດຕະວະແພດພາຍໃນຕາມລະບຽບການ.

(4.3) ປັບປຸງ ແລະ ພັດທະນາທົ່ວລະບົບ ໃນການຂ້າສັດ, ການກວດກາອະນາໄມຊີ້ນ, ການຕັດແຕ່ງ, ການຫຸ້ມຫໍ່ ລວມເຖິງການຂົນສົ່ງ, ເກັບຮັກສາ ຈົນຮອດຕະຫລາດຂາຍຊີ້ນ ໃນທົ່ວປະເທດ ໃຫ້ຮັບປະກັນຄວາມສະອາດ ໄດ້ມາດຕະຖານສຸຂະນາໄມຂອງແຕ່ລະຂັ້ນຕອນ.

### 3). ການຄົ້ນຄວ້າແນວພັນ ແລະ ເຕັກໂນໂລຊີ ສຳລັບການລ້ຽງສັດ ແລະ ການປະມົງ

ສຸມໃສ່ພັດທະນາ ແລະ ປັບປຸງລະບົບການຄົ້ນຄວ້າ ດ້ານການລ້ຽງສັດ ແລະ ການປະມົງໂດຍເນັ້ນໃສ່ການຄົ້ນຄວ້າທົດລອງເພື່ອການອະນຸລັກ ແລະ ປັບປຸງແນວພັນສັດພື້ນເມືອງໃຫ້ມີຄຸນນະພາບ ແທດເໝາະກັບລະບົບການລ້ຽງແຕ່ລະທ້ອງຖິ່ນ ແລະ ສາມາດປັບຕົວເຂົ້າກັບສະພາບການປ່ຽນແປງຂອງດິນຟ້າອາກາດ, ຊຶ່ງລວມທັງການຄົ້ນຄວ້າເພື່ອປັບປຸງອາຫານໃຫ້ມີຄຸນນະພາບ, ການປ້ອງກັນ ແລະ ຄວບຄຸມພະຍາດ ແລະ ການຍົກລະດັບທາງດ້ານເຕັກນິກວິທີການລ້ຽງສັດ ຂອງຊາວກະສິກອນໃຫ້ມີຜົນຜະລິດສູງຂຶ້ນ, ໂດຍເນັ້ນໃສ່:

- ຄົ້ນຄວ້າ, ສັງລວມ ແລະ ຂະຫຍາຍແນວພັນສັດພັນພື້ນເມືອງ ເພື່ອອະນຸລັກ ແລະ ປັບປຸງພັນໃຫ້ມີຜົນຜະລິດສູງ, ມີຄຸນນະພາບດີ, ທົນທານຕໍ່ພະຍາດສັດຕ່າງໆ ແລະ ມີຄວາມທົນທານຕໍ່ສະພາບການ ປ່ຽນແປງຂອງດິນຟ້າອາກາດ.
- ປັບປຸງລະບົບການຜະລິດ ແລະ ສະໜອງແນວພັນສັດ, ແນວພັນປາ ແລະ ສັດນ້ຳ ໂດຍການສ້າງເຄືອຂ່າຍເພື່ອຜະລິດ, ຊຶ່ງລວມທັງຜູ້ປະກອບການ ໃນການສະໜອງແນວພັນສັດ ແລະ ແນວພັນປາ ແລະ ສັດນ້ຳທີ່ມີຄຸນະພາບໃຫ້ແກ່ການຜະລິດໃນຂອບເຂດທົ່ວປະເທດ; ລວມທັງການສ້າງເຄືອຂ່າຍເພື່ອສະໜອງເຕັກນິກ-ເຕັກໂນໂລຊີໃຫ້ແກ່ລະບົບການລ້ຽງສັດ ແລະ ການປະມົງໃນເຂດທົ່ງພຽງ, ພູພຽງ ແລະ ເຂດພູດອຍ.

- ຄົ້ນຄ້ວາ ແລະ ນຳໃຊ້ເຕັກນິກ-ເຕັກໂນໂລຊີ ສຳລັບການປັບປຸງ ແລະ ຍົກຜະລິດຕະພາບຂອງລະບົບການລ້ຽງສັດ ແລະ ການປະມົງແບບຄອບຄົວ ຫຼື ຟາມຂະໜາດນ້ອຍໃນການຄ້ຳປະກັນສະບຽງອາຫານ ແລະ ໂພສະນາການ.
- ຄົ້ນຄວ້າເຕັກນິກ-ເຕັກໂນໂລຊີ ໂດຍການນຳໃຊ້ວິທະສາດທີ່ທັນສະໄໝເຂົ້າໃນການລ້ຽງສັດ ແລະ ການປະມົງ ທີ່ເປັນຟາມຂະໜາດໃຫຍ່, ເຕັກນິກ-ເຕັກໂນໂລຊີສຳລັບການປຸງແຕ່ງ, ຮັບປະກັນຄຸນນະ ພາບ, ຄ້ຳປະກັນສະບຽງອາຫານ ແລະ ດ້ານໂພສະນາການ.
- ຄົ້ນຄ້ວາເພື່ອສະໜອງຂໍ້ມູນ ແລະ ຄຳເຫັນສ່ອງແສງໃຫ້ແກ່ຜູ້ກຳນົດນະໂຍບາຍໃນລະດັບຕ່າງໆ ເພື່ອການປັບປຸງນະໂຍບາຍຕ່າງໆ ທີ່ກ່ຽວຂ້ອງເພື່ອຊຸກຍູ້ສົ່ງເສີມການປັບປຸງ, ພັດທະນາ ແລະ ຂະຫຍາຍແນວພັນສັດ ແລະ ແນວພັນປາ ລວມທັງນະໂຍບາຍໃນການນຳໃຊ້ ຫຼື ການເຂົ້າເຖິງແນວພັນສັດ, ແນວພັນປາ ແລະ ເຕັກນິກ-ເຕັກໂນໂລຊີສຳລັບການຜະລິດ ແລະ ການປຸງແຕ່ງ.

4). **ການພັດທະນາວຽກງານສົ່ງເສີມການລ້ຽງສັດ ແລະ ການປະມົງ**

- ຈັດຕັ້ງ ແລະ ປັບປຸງກຸ່ມຜູ້ລ້ຽງສັດ ແລະ ການປະມົງໃຫ້ມີຄວາມເຂັ້ມແຂງເຫື່ອລະກ້າວ ແນໃສ່ພັດທະນາກຸ່ມການລ້ຽງສັດ ແລະ ການປະມົງໃຫ້ມີການຈັດຕັ້ງ ທີ່ສາມາດເຂົ້າເຖິງເຕັກນິກ ແລະ ເຕັກໂນໂລຢີທີ່ທັນສະໄໝ ເພື່ອເພີ່ມຂີດຄວາມສາມາດໃນພັດທະນາການຜະລິດສັດ ແລະ ປາໃຫ້ສູງຂຶ້ນ.
- ສົ່ງເສີມພາກທຸລະກິດ ແລະ ຜູ້ປະກອບການເຂົ້າຮ່ວມຢ່າງຕັ້ງໜ້າ ໃນການຂະຫຍາຍ ແລະ ສະໜອງແນວພັນສັດ, ອາຫານສັດ, ຢາກັນ ແລະ ປິ່ນປົວພະຍາດສັດ ລວມທັງການປັບປຸງຍົກລະດັບການປຸງແຕ່ງ ຜະລິດຕະພັນທີ່ສອດຄ່ອງກັບທິດຂະຫຍາຍ ສຳພັນເສດຖະກິດລະຫວ່າງ ການຜະລິດ, ການຕະຫລາດ ແລະ ການບໍລິການປັດໃຈການຜະລິດທີ່ສອດຄ່ອງ ແລະ ຍືນຍົງ.
- ປັບປຸງຕາໜ່າງການສົ່ງເສີມທີ່ມີແລ້ວ ໃຫ້ມີຄວາມສາມາດຖ່າຍທອດເຕັກນິກ ດ້ານການລ້ຽງສັດ, ລ້ຽງປາ ແລະ ບໍລິການສຸຂະພາບສັດ ໃຫ້ແກ່ຊາວກະສິກອນ ແລະ ຜູ້ປະກອບການໃຫ້ທົ່ວເຖິງ.

### 3.2.1.3. ການຮັບປະກັນທາງດ້ານສະບຽງອາຫານ ແລະ ໂພສະນາການ

ການເພີ່ມຜົນຜະລິດແມ່ນຍັງຖືວ່າເປັນບຸລິມະສິດ ແລະ ຈະສືບຕໍ່ມີບົດບາດທີ່ສຳຄັນໃນ ການພັດທະນາດ້ານກະສິກຳ, ແຕ່ວ່າ ເພື່ອໃຫ້ປະສົບຜົນສຳເລັດ ການຮັບປະກັນ ທາງດ້ານສະບຽງອາຫານ ຈຳເປັນຕ້ອງອີງໃສ່ການຜະລິດດ້ານສະບຽງອາຫານທີ່ຫຼາກຫຼາຍ (ນອກຈາກເຂົ້າ). ຂໍ້ມູນກ່ຽວກັບຊົນນະບົດຂອງ ສປປ ລາວ ນັ້ນແມ່ນມີການປ່ຽນແປງ ຈາກການສືບຕໍ່ຮູບແບບ ທີ່ອີງໃສ່ຊັບພະຍາກອນທາງທຳມະຊາດ ແລະ ປ່າໄມ້ ໄປສູ່ການຜະລິດ ທີ່ອີງໃສ່ຕະຫຼາດຊົນນະບົດ ເປັນພື້ນຖານ ຊຶ່ງໃນນັ້ນການຜະລິດສະບຽງອາຫານສຳລັບບໍລິໂພກເອງ ແມ່ນໄດ້ຖືກນຳມາປະຕິບັດ ຄຽງຄູ່ກັນກັບການຜະລິດເພື່ອໃຫ້ກາຍເປັນສິນຄ້າ. ການປ່ຽນແປງສູ່ການຜະລິດກະສິກຳ ເພື່ອເປັນສິນຄ້ານັ້ນ ແມ່ນມີການກ່ຽວພັນ ກັບການຮັບປະກັນ ດ້ານສະບຽງອາຫານອີກທາງໜຶ່ງທີ່ນອນໃນຫຼາຍວິທີ, ຊຶ່ງໃນນັ້ນ ມັນຂຶ້ນກັບຄວາມສາມາດເຂົ້າເຖິງເນື້ອທີ່ດິນ ເພື່ອທຳການຜະລິດ ແລະ ການເຂົ້າເຖິງແຫຼ່ງຊັບພະຍາກອນທີ່ມີ. ໂດຍລວມແລ້ວ ຂໍ້ມູນທາງດ້ານສະບຽງອາຫານ

ແລະ ໂພສະນາການຂອງສປປລາວ ແມ່ນຫຼາກຫຼາຍ, ຊຶ່ງຂຶ້ນກັບທັງສອງປັດໃຈຄື ການພັດທະນາ ໃນທາງດ້ານບວກ ແລະ ທາງດ້ານລົບ. ບາງສິ່ງທີ່ຕ້ອງໄດ້ເຮັດ ທີ່ຖືເປັນບຸລິມະສິດ ແມ່ນການຄາດຄະເນ ເພື່ອຂະຫຍາຍ ການປະກອບສ່ວນດ້ານການພັດທະນາກະສິກຳ ໄປສູ່ການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພສະນາການ. ບັນດາອົງປະກອບ ໃນການຄ້ຳປະກັນສະບຽງອາຫານ ແລະ ໂພສະນາການ ປະກອບມີ:

ກ/. <u>ຄວາມພ້ອມທາງດ້ານສະບຽງອາຫານ</u> (Food Availability)

<u>ການກະສິກຳທີ່ເນັ້ນທາງດ້ານໂພສະນາການ</u>

ໂດຍທົ່ວໄປແລ້ວ ໃນປະຈຸບັນ ຢູ່ ສປປລາວ ມີຄວາມພ້ອມ ແລະ ຄວາມອາດສາມາດສະໜອງ ທາງດ້ານເຂົ້າ ຢ່າງພຽງພໍ ຖ້າທຽບກັບຄວາມຕ້ອງການຕໍ່ຫົວຄົນ ໂດຍທີ່ບໍ່ໄດ້ອີງໃສ່ພື້ນທີ່ທາງພູມສາດ. ແຕ່ເຖິງຢ່າງໃດກໍຕາມ ແຫຼ່ງອາຫານທີ່ອຸດົມດ້ວຍສານອາຫານ ເຊັ່ນ: ພືດໃບຂຽວ, ພືດຕະກູນຖົ່ວ, ສາລີ, ໝາກໄມ້ ແລະ ແຫຼ່ງໂປຼຕີນຈາກສັດ ແມ່ນມີຄວາມແຕກຕ່າງກັນ ແລະ ຂຶ້ນກັບການເຂົ້າເຖິງແຫຼ່ງທຳມະຊາດ. ການຕັດສິນໃຈໃນການພັດທະນາ ແບບກຸ້ມຕົນເອງ ໃນລະດັບຊຸມຊົນ ຄວນໄດ້ຮັບການສະໜັບສະໜູນ, ການປູກລະດົມຄົວເຮືອນ ເພື່ອພັດທະນາອາຫານ ໃຫ້ປະກອບມີສານອາຫານທີ່ເປັນປະໂຫຍດ ໂດຍການເຮັດສວນຄົວ, ປັບປຸງໃຫ້ມີປັດໃຈນຳເຂົ້າທາງດ້ານກະສິກຳທີ່ສາມາດຊື້ໄດ້ (ຕົວຢ່າງ: ການຊ່ວຍເຫລືອ ຫຼື ສະໜັບສະໜູນຈາກລັດ ຫຼື ອົງການຈັດຕັ້ງທາງສັງຄົມຕ່າງໆ...) ແລະ ປັດໃຈນຳເຂົ້າກ່ຽວກັບການລ້ຽງສັດ ສັດປີກ ແລະ ສະໜັບສະໜູນດ້ານສັດຕະວະແພດ. ໃນຂະນະທີ່ການເຂົ້າເຖິງແຫຼ່ງອາຫານ ທີ່ໄດ້ມາຈາກປ່າ ແມ່ນລຶດໜ້ອຍຖອຍລົງ, ດັ່ງນັ້ນ ມັນມີຄວາມຈຳເປັນຕ້ອງໄດ້ໃຫ້ການຊ່ວຍເຫລືອ ເພື່ອໃຫ້ບັນດາອາຫານເຫຼົ່ານັ້ນ ມີຫລາຍຂຶ້ນ ດ້ວຍວິທີການປູກທົດແທນເອົາເອງ ແລະ ການສະໜັບສະໜູນດ້ານນະໂຍບາຍຕ່າງໆ ເພື່ອໃຫ້ສາມາດເຂົ້າເຖິງທີ່ດິນທຳກິນໃຫ້ຫລາຍຂຶ້ນ ແລະ ຫຼຸດຜ່ອນຜົນກະທົບ ຂອງການສຳປະທານເຊົ່າ ແລະ ບັນຫາທີ່ກ່ຽວຂ້ອງກັບການນຳໃຊ້ຢາຂ້າສັດຕູພືດ ແລະ ປຸຍເຄມີຫຼາຍເກີນໄປ. ການສະໜັບສະໜູນ ໃນລະດັບຄົວເຮືອນ ກ່ຽວກັບການວາງແຜນທາງດ້ານການເງິນ ແລະ ວິທີການດຳລົງ ຊີວິດ ຈະເປັນຂໍ້ມູນໃນການຕັດສິນໃຈໃນລະດັບຄົວເຮືອນ. ການປັບປຸງຄວາມຫຼາກຫຼາຍ ດ້ານໂພສະນາການ ແມ່ນສຳຄັນ ຕໍ່ການແກ້ໄຂຄວາມອຶດຫິວ ແລະ ບັນຫາການຂາດສານອາຫານໃນລາວ. ການບໍລິໂພກປາ ແລະ ສັດນ້ຳອື່ນໆ ແມ່ນສ່ວນໜຶ່ງທີ່ຄວາມສຳຄັນ ຂອງອາຫານລາວ ແລະ ຄວນສືບຕໍ່ໃຫ້ການສະໜັບສະໜູນ ໂດຍການສົ່ງເສີມວິທີການແບບດັ່ງເດີມ ຕິດພັນກັບການຜະລິດແບບໃໝ່ ເພື່ອເຮັດໃຫ້ຜົນຜະລິດ ຂອງສັດນ້ຳເພີ່ມຂຶ້ນ ເຊັ່ນ: ການ ບໍລິຫານຈັດການນ້ຳ, ການປັບປຸງການເຊື່ອມໂຍງ ແລະ ການປະສົມປະສານ ລະຫວ່າງ ການພັດທະນາ ອ່າງເກັບນ້ຳ ເຂື່ອນໄຟຟ້າ, ຊົນລະປະທານ, ການປະມົງ ແລະ ອື່ນໆ.

<u>ຜົນເສຍຫາຍຫຼັງການເກັບກ່ຽວ</u>

ເຖິງວ່າອັດຕາຜົນຜະລິດໂດຍລວມ ແມ່ນສູງພຽງພໍໃນການຮັບປະກັນ ການກຸ້ມຕົນເອງໃນລະດັບຊາດ, ປະລິມານຂອງອາຫານທັງໝົດໃນຄົວເຮືອນອາດຈະນ້ອຍກວ່າ ຫຼື ມີຄຸນນະພາບຕ່ຳ ກວ່າຕົວເລກ ຜົນຜະລິດສະເລ່ຍ. ຜົນເສຍຫາຍຫຼັງການເກັບກ່ຽວ ສາມາດຫຼຸດຜ່ອນໄດ້ ແລະ ເຕັກນິກຫຼັງການ ເກັບກ່ຽວ ສາມາດປັບປຸງ ເພື່ອຍົກສູງປະສິດທິຜົນຂອງການຜະລິດໄດ້. ໃນຂັ້ນຕົ້ນ, ການຂະຫຍາຍ ເຄື່ອງກົນ ຈັກ ເຂົ້າໃສ່ການ

ຜະລິດ ລວມທັງການປັບປຸງລະບົບການປຸງແຕ່ງ ໂດຍສະເພາະ ໂຮງສີເຂົ້າ ຕະຫຼອດຮອດ ການປັບປຸງສະຖານທີ່ ຫຼື ສາງເກັບມ້ຽນ ແມ່ນ ຈະສາມາດຊ່ວຍຫຼຸດຜ່ອນການສູນເສຍ ໄດ້ເຊັ່ນກັນ.

ຂ/. <u>ການເຂົ້າເຖິງອາຫານ</u> (Food Accessibility)

ສຳລັບຊາວກະສິກອນໃນຊົນນະບົດນັ້ນ, ການປູກພືດສຳລັບການບໍລິໂພກເອງ ເປັນພຽງແຕ່ໜຶ່ງໃນບັນດາວິທີການຕ່າງໆ ສຳລັບການເຂົ້າເຖິງອາຫານ, ຄຽງຄູ່ກັບການຂາຍແຮງງານ, ການຊອກຫາອາຫານໃນແຫຼ່ງທຳມະຊາດ (ຢູ່ໃນປ່າ), ການຊື້ຫາຕາມຕະຫຼາດ ແລະ ການແລກປ່ຽນຕ່າງໆ. ການເຂົ້າເຖິງແຫຼ່ງອາຫານຈາກປ່າ ທີ່ເປັນໂປຼຕີນຈາກເຄື່ອງປ່າຂອງດົງ ແມ່ນມີຄວາມສຳຄັນ ເພື່ອຮັບປະກັນໃຫ້ມີອາຫານພຽງພໍໃນຄອບຄົວ. ແຫຼ່ງຊີ້ນຈາກປ່າ ແລະ ຢູ່ໃນນໍ້າ ໂດຍສະເພາະ ປາ, ແມ່ນເປັນແຫຼ່ງໂປຼຕີນ ຈາກສັດ ທີ່ຫຼາຍທີ່ສຸດໃນສປປລາວ (NUDP/NAFRI 2012). ວິທີການສອງຂັ້ນຕອນ ເພື່ອສະໜັບສະໜູນການນຳໃຊ້ຜະລິດຕະພັນຈາກປ່າ (ເຊັ່ນ: ເຄື່ອງປ່າຂອງດົງ) ແລະ ວິທີການຫາປາ ແບບຍືນຍົງ ຕ້ອງໄດ້ຮັບການພັດທະນາ ໄປຄຽງຄູ່ກັບການສະໜັບສະໜູນ ການຂະຫຍາຍຕົວທາງດ້ານກະສິກຳ ໃນລະດັບຄອບຄົວ ເພື່ອປ່ຽນແທນການນຳໃຊ້ ແລະ ເອື່ອຍອີງໃສ່ແຫຼ່ງອາຫານຈາກປ່າ ໂດຍສະເພາະໃນເຂດພື້ນທີ່ຫາໄດ້ຍາກ. ການນຳໃຊ້ແຕ່ລະວິທີ ຈະແຕກຕ່າງກັນໃນແຕ່ລະພື້ນທີ່ ຂຶ້ນກັບສະພາບຂອງທ້ອງຖິ່ນ. ບັນດາບ້ານທີ່ມີທ່າແຮງດ້ານຕະຫຼາດ ແມ່ນໄດ້ຮັບຄວາມຮູ້ດ້ານການຕະຫຼາດ ແລະ ຄວາມເຊື່ອໝັ້ນ ແລະ ມີຄວາມສາມາດໃນການຂາຍຜົນຜະລິດຂອງຕົນ ຊຶ່ງນັ້ນແມ່ນເປັນສິ່ງກະຕຸກຊຸກຍູ້ໃຫ້ການຜະລິດ ມີການຂະຫຍາຍຕົວ. ກຸ່ມຊາວນາ ແລະ ຜູ້ຜະລິດຈະໄດ້ຮັບຜົນປະໂຫຍດ ຈາກການປັບປຸງການເຊື່ອມໂຍງເຂົ້າກັບຕະຫຼາດ ແລະ ກັບສະຖາບັນສິນເຊື່ອ/ການເງິນ, ລວມທັງ ທະນາຄານ. ສູນສົ່ງເສີມ ແລະ ບໍລິການເຕັກນິກ ຫຼື ໂຮງຮຽນຊາວນາ ຕ້ອງຖືກນຳມາໃຊ້ ເພື່ອຍົກສູງຄວາມສາມາດ ທາງດ້ານເຕັກນິກວິຊາການໃຫ້ຊາວນາ ເພື່ອໃຫ້ເຂົາເຈົ້າໄດ້ຮຽນຮູ້ ກ່ຽວກັບ ເຕັກນິກອັນໃໝ່ ໃນການຜະລິດກະສິກຳເປັນສິນຄ້າ.

ຄ/. <u>ຄວາມປອດໄພທາງດ້ານສະບຽງອາຫານ ແລະ ໂພສະນາການ</u> (Food Safety and Nutrition)

<u>ການເກັບຮັກສາອາຫານ</u> (Food Preservation)

ໃນຂະນະທີ່ມີຫຼາຍວິທີປະຕິບັດ ໃນການຮັກສາອາຫານຢູ່ໃນ ສປປລາວ (ລວມທັງ ການແຊ່ເຄັມ, ຕາກແຫ້ງ, ການໝັກ, ການດອງ ແລະ ອື່ນໆ) ຊຶ່ງວິທີການເຫຼົ່ານີ້ປາກົດວ່າ ໄດ້ນຳໃຊ້ບາງຄັ້ງເທົ່ານັ້ນ; ແຕ່ສິ່ງທີ່ດີທີ່ສຸດ ຄວນໝູນໃຊ້ ແລະ ນຳເອົາວິທີດັ່ງກ່າວ ມາຜັນຂະຫຍາຍ ເພື່ອໃຫ້ສາມາດ ເກັບຮັກສາອາຫານໄວ້ກິນໃນຊ່ວງລະດູທີ່ຂາດແຄນ. ໄປຄຽງຄູ່ກັນນັ້ນ ກໍຄວນມີການຝຶກອົບຮົມ ເພື່ອເພີ່ມພູນຄວາມຮູ້ ໃຫ້ແກ່ປະຊາຊົນ ກ່ຽວກັບ ເຕັກນິກການເກັບຮັກສາອາຫານ ໃນທ້ອງຖິ່ນທີ່ພວກເຮົາບໍ່ຄ່ອຍໄດ້ນຳໃຊ້ວິທີດັ່ງກ່າວ, ໂດຍສະເພາະ ແມ່ນຢູ່ເຂດພູສູງພາກເໜືອ.

<u>ຄວາມຮູ້ດ້ານໂພສະນາການ</u> (Nutrition Knowledge)

ຄວາມຮູ້ດ້ານໂພສະນາການ ແລະ ຄວາມເຂົ້າໃຈ ກ່ຽວກັບຄວາມປອດໄພ ແລະ ສຸຂະອະນາໄມ ໃນວິທີການກຽມອາຫານ ສ່ວນໃຫຍ່ແມ່ນຍັງບໍ່ທັນຄົບຖ້ວນ ແລະ ຖືກຕ້ອງ. ການຂາດສານອາຫານສ່ວນໃຫຍ່ແມ່ນເຂົ້າໃຈພຽງແຕ່ ການບໍລິໂພກເຂົ້າບໍ່ພຽງພໍເທົ່ານັ້ນ. ມັນມີຄວາມຈຳເປັນຕ້ອງປັບປຸງຄວາມຮູ້ ດ້ານໂພສະ

ນາການ ແລະ ການສຶກສາກ່ຽວກັບຄວາມປອດໄພດ້ານອາຫານ ຜ່ານຊ່ອງທາງການສຶກສາເປັນລະບົບ ແລະ ການສ້າງເປັນແຜນງານພັດທະນາຕ່າງໆແບບຄົບຊຸດ. ມີຫຼາຍຕົວຢ່າງທີ່ດີສຳລັບວຽກງານນີ້ ເຊັ່ນ: ວິທີການ ຫຼື ຮູບແບບ "ການເຊື່ອມໂຍງ ວຽກງານກະສິກຳ, ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການໂພສະນາການ" ທີ່ຍົກສູງຄວາມ ເຂົ້າໃຈໃຫ້ປະຊາຊົນ ໃນເຂດຊົນນະບົດ ໄດ້ເຂົ້າໃຈກ່ຽວກັບການເຊື່ອມໂຍງ ລະຫວ່າງ ວຽກງານກະສິກຳ ແລະ ສາທາລະນະສຸກ, ການຄ້ຳປະກັນສະບຽງອາຫານ ແລະ ໂພສະນາການ.

ງ/. <u>ຄວາມມີສະຖຽນລະພາບ</u> (Food Stability)

ລະດູການ ຍັງຖືເປັນປັດໃຈຫຼັກ ຕໍ່ຄວາມບໍ່ໝັ້ນຄົງທາງດ້ານອາຫານຢູ່ໃນ ສປປລາວ, ຊຶ່ງມັນມີຜົນຕໍ່ຄວາມຫຼາກຫຼາຍຂອງອາຫານ, ຮູບແບບການບໍລິໂພກ, ວິທີການດຳລົງຊີວິດ ຕະຫຼອດຮອດຄວາມສ່ຽງ ແລະ ມີຄວາມຈຳເປັນ ຕ້ອງໄດ້ມີການສຶກສາລະອຽດຕື່ມ ກ່ຽວກັບບົດບາດ ແລະ ການປ່ຽນແປງຕາມລະດູການ ແລະ ຕໍ່ຄວາມສ່ຽງໂດຍລວມ. ເພື່ອແກ້ໄຂບັນຫາດັ່ງກ່າວ ຕ້ອງໄດ້ເອົາໃຈໃສ່ ໃນການຫຼຸດຜ່ອນ ຄວາມສ່ຽງຕໍ່ການຂາດແຄນອາຫານ ໃນບາງລະດູການ ໂດຍສະເພາະ ໃນເຂດຊົນນະບົດ ແລະ ເຂດພູດອຍຫ່າງໄກສອກຫຼີກ. ສິ່ງເຫຼົ່ານີ້ສາມາດບັນລຸໄດ້ດ້ວຍວິທີຕ່າງໆດັ່ງຕໍ່ໄປນີ້ 1) ປັບປຸງລະບົບການເກັບຮັກສາ ແລະ ສະໜອງອາຫານ ທີ່ມີທາດບຳລຸງຢ່າງສະໝ່ຳສະເໝີໃນແຕ່ລະປີ, 2) ຫຼຸດຜ່ອນຜົນກະທົບ ຂອງສະພາບດິນຟ້າອາກາດ ກໍຄື ຜົນກະທົບທາງທຳມະຊາດ ຕໍ່ກັບການດຳລົງຊີວິດ ໃນຊົນນະບົດ, 3) ສ້າງໂອກາດ ເພື່ອສ້າງລາຍຮັບເພີ່ມເຕີມ ນອກຈາກການປູກຝັງ, ລ້ຽງສັດ ຫຼື ສ້າງວິຖີໃນການດຳລົງຊີວິດ ທີ່ບໍ່ເພິ່ງພາສະພາບດິນຟ້າອາກາດ ຫຼື ເອື່ອຍອີງໃສ່ແຕ່ທຳມະຊາດ.

### 3.2.2 ມາດຕະການສຳລັບການຜະລິດເປັນສິນຄ້າ

#### 3.2.2.1 ມາດຕະການດ້ານການປູກຝັງ

**1). ການຈັດແບ່ງເຂດສຳລັບການຜະລິດພືດສິນຄ້າ**

ການຜະລິດເປັນສິນຄ້າກະສິກຳ ແມ່ນອີງໃສ່ຄວາມອາດສາມາດ ແລະ ທ່າແຮງຕົວຈິງ ໂດຍສະເພາະປັດໃຈດ້ານກາຍຍະພາບ (ທີ່ຕັ້ງ, ທີ່ດິນ, ແຫລ່ງນ້ຳ...), ເສດຖະກິດ-ສັງຄົມ ແລະ ລັກສະນະຈຸດພິເສດການຜະລິດຕາມເຂດແຄ້ວນ ທັງນີ້ກໍ່ເພື່ອໃຫ້ສອດຄ່ອງກັບພາວະການຜະລິດ, ການແປຮູບ ແລະ ການຕະຫລາດທີ່ສາມາດແຂ່ງຂັນ ແລະ ເຊື່ອມໂຍງກັບຕະຫລາດພາກພື້ນ ແລະ ສາກົນໄດ້ ຕາມນະໂຍບາຍຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ຊາວກະສິກອນຜູ້ຜະລິດສາມາດເຂົ້າເຖິງ ການບໍລິການຂອງລັດ, ມີຄວາມໝັ້ນຄົງໃນອາຊີບ ແລະ ມີຄຸນນະພາບຊີວິດທີ່ດີຂຶ້ນ, ຜູ້ບໍລິໂພກ ໄດ້ບໍລິໂພກສິນຄ້າທີ່ມີຄຸນນະພາບ, ສະອາດ ປອດໄພ. ບົນພື້ນຖານທ່າແຮງ ແລະ ຄວາມອາດສາມາດຕົວຈິງ ຄືດັ່ງກ່າວ ຈຶ່ງໄດ້ຈັດສັນ ແລະ ກຳນົດເຂດການຜະລິດສິນຄ້າກະສິກຳ ຕາມເຂດແຄ້ວນ ແລະ ທ່າແຮງ ດັ່ງນີ້:

**ກ). <u>ພືດທີ່ເປັນສິນຄ້າບຸລິມະສິດ ລະດັບຊາດ</u>**

(1) <u>ເຂົ້າ</u>

**ເຂດພູດອຍ ແລະ ພູພຽງ**: ເຂດຜະລິດເຂົ້າເປັນສິນຄ້າ ແມ່ນສົ່ງເສີມປູກເຂົ້າພັນພື້ນເມືອງ ທີ່ມີຄຸນລັກສະນະສະເພາະ ເຊັ່ນ: ເຂົ້າໄກ່ນ້ອຍ ຢູ່ແຂວງ ຊຽງຂວາງ (ສຸມໃສ່ ເຂດເມືອງແປກ, ເມືອງຄູນ, ເມືອງພູກູດ, ເມືອງຜາໄຊ ແລະ ເມືອງຄຳ) ແລະ ຢູ່ແຂວງຫົວພັນ (ສຸມໃສ່ ເມືອງຊຳເໜືອ ແລະ ວຽງໄຊ) ມີເນື້ອທີ່ທັງໝົດ 13.000-15.000 ເຮັກຕາ ຊຶ່ງສາມາດຜະລິດໄດ້ປະມານ 40.000-50.000 ໂຕນເຂົ້າເປືອກ ໂດຍການປັບປຸງ ແລະ ຈັດຕັ້ງກຸ່ມການຜະລິດ ແລະ ສູນບໍລິການເຕັກນິກ ທີ່ເນັ້ນການຜະລິດຕາມມາດຕະຖານກະສິກຳສະອາດ (GAP ແລະ OA) **ແລະ ການຢັ້ງຢືນ ບັນດາພືດ** ທີ່ມີຄຸນລັກສະນະສະເພາະ ຕາມພູມສັນຖານ (Geographic Indication=GI). ນອກນັ້ນ, ຍັງມີເຂົ້າກ່ຳ ແລະ ເຂົ້າພື້ນເມືອງອື່ນໆ ໃນເຂດພູພຽງ ແລະ ພູສູງ.

**ເຂດທົ່ງພຽງ**: ເຂດຜະລິດເຂົ້າເປັນສິນຄ້າ ໃນເຂດທົ່ງພຽງ ເພື່ອສົ່ງອອກ ແລະ ເປັນວັດຖຸດິບປ້ອນໂຮງງານ ປຸງແຕ່ງພາຍໃນ ແມ່ນເລັ່ງໃສ່ສົ່ງເສີມ ການຜະລິດຢູ່ 7 ທົ່ງພຽງໃຫຍ່ເປັນຕົ້ນຕໍ ເຊັ່ນ: ທົ່ງພຽງວຽງຈັນ, ທົ່ງພຽງບໍລິຄຳໄຊ, ທົ່ງພຽງເຊບັ້ງໄຟ, ທົ່ງພຽງເຊບັ້ງຫຽງ, ທົ່ງພຽງເຊໂດນ, ທົ່ງພຽງຈຳປາສັກ ແລະ ທົ່ງພຽງອັດຕະປື ຊຶ່ງມີເນື້ອທີ່ປູກເຂົ້າທັງໝົດ 650.000-800.000 ເຮັກຕາ ດ້ວຍຜົນຜະລິດ 3,0-3,3 ລ້ານໂຕນເຂົ້າເປືອກ. ໃນເຂດທີ່ສາມາດສະໜອງນ້ຳຊົນລະປະທານ ຮັບປະກັນທົດໃນລະດູແລ້ງ ແລະ ມີຄວາມສ່ຽງໜ້ອຍ ທີ່ຈະມີຜົນກະທົບຈາກໄພທຳມະຊາດ ເຊັ່ນ: ນ້ຳຖ້ວມ ແລະ ໄພແລ້ງ ໃນທົ່ງພຽງຕ່າງໆ ໂດຍສະເພາະ ໃນເຂດພື້ນທີ່ໆໄດ້ກຳນົດເປັນໂຄງການຊົນລະກະເສດ ແມ່ນຈະໄດ້ກຳນົດເປັນຈຸດສຸມ ຂອງຈຸດສຸມ ໃນການປູກເຂົ້າເປັນສິນຄ້າ, ໃນເນື້ອທີ່ 200.000-250.000 ເຮັກຕາ, ຜົນຜະລິດປະມານ 1,1-1,3 ລ້ານໂຕນ ໂດຍສົ່ງເສີມການຜະລິດແບບການຈັດຕັ້ງເປັນກຸ່ມ ຫລື ສະຫະກອນການຜະລິດ ແລະ ມີສູນບໍລິການເຕັກນິກ ທີ່ເນັ້ນການຜະລິດຕາມມາດຕະຖານກະສິກຳທີດີ (GAP), ຊຶ່ງມີການປັບພື້ນທີ່ນາ ໃຫ້ສາມາດນຳໃຊ້ກົນຈັກ ເຂົ້າໃນຂະບວນການຜະລິດສະດວກ ເຊັ່ນ: ກຽມດິນ, ປັກດຳ, ເກັບກ່ຽວ, ແປຮູບ, ຫຸ້ມຫໍ່ ແລະ ເກັບຮັກສາເປັນຕົ້ນ ທີ່ນຳໃຊ້ພັນເຂົ້າປັບປຸງທີ່ມີຄຸນນະພາບ ທີ່ຕະຫຼາດຕ້ອງການ, ສາມາດຜະລິດ ແລະ ສະໜອງເມັດພັນເຂົ້າ ໄດ້ກັບທີ່ ເຊັ່ນ: ແນວພັນເຂົ້າໜຽວທ່າດອກຄຳ 8, ທ່າດອກຄຳ 11, ທ່າສະໂນ 3, ທ່າສະໂນ 7, ໂພນງາມ; ແນວພັນເຂົ້າຈ້າວເຊບັ້ງໄຟ 2, ວຽງຈັນ 450-1, ຫອມສະຫວັນ, ຫອມຈຳປາ, CR.203 ແລະ ອື່ນໆ, ໃນນີ້ ສຸມໃສ່ເຂດທົ່ງພຽງແຂວງຄຳມ່ວນ ແລະ ສະຫວັນນະເຂດ ເປັນເຂດຈຸດສຸມທົດລອງ ເພື່ອສົ່ງເສີມການປູກເຂົ້າຄຸນນະພາບ ເພື່ອສົ່ງອອກ. ນອກຈາກນັ້ນ ສຳລັບທົ່ງພຽງກາງ ແລະ ທົ່ງພຽງນ້ອຍພາກເໜືອ ແມ່ນສຸມໃສ່ ຜະລິດເຂົ້າເປັນສິນຄ້າ ເພື່ອສະໜອງ ໃຫ້ ສປຈີນ ໂດຍມອບໃຫ້ສູນຜະລິດພັນເຂົ້າແຂວງຫຼວງນ້ຳທາ ເຮັດໜ້າທີ່ຂະຫຍາຍແນວພັນເຂົ້າ ຕາມທີ່ຕະຫຼາດ ສປຈີນ ຕ້ອງການ.

(2) <u>**ສາລີແຂງ (ອາຫານສັດ)**</u>

**ເຂດພູດອຍ ແລະ ພູພຽງ**: ເຂດຜະລິດສາລີອາຫານສັດເປັນສິນຄ້າ (ສາລີແຂງ) ສຸມໃສ່ສົ່ງເສີມຢູ່ 10 ແຂວງ, 30 ເມືອງທົ່ວປະເທດ ເຊັ່ນ: ແຂວງໄຊຍະບູລີ, (ເມືອງປາກລາຍ, ເມືອງແກ່ນທ້າວ, ເມືອງໄຊຍະບູລີ, ເມືອງພຽງ, ເມືອງບໍ່ແຕນ...), ແຂວງອຸດົມໄຊ (ເມືອງຮຸນ, ເມືອງນາໝໍ້, ເມືອງໄຊ, ເມືອງຫລ້າ...),

ແຂວງບໍ່ແກ້ວ (ເມືອງຫ້ວຍຊາຍ, ຕົ້ນເຜີ້ງ, ຜາອຸດົມ...), ແຂວງຊຽງຂວາງ (ເມືອງຄຳ, ໜອງແຮດ..), ແຂວງຫົວພັນ (ເມືອງຊຳເໜືອ, ຊຽງຄໍ້, ສົບເບົາ, ແອດ, ຫົວເມືອງ...), ແຂວງຫລວງພະບາງ (ເມືອງນານ, ນໍ້າບາກ, ເມືອງງອຍ...), ແຂວງວຽງຈັນ (ເມືອງໝື່ນ, ຊະນະຄາມ, ກາສີ...) ແລະ ແຂວງຫລວງນໍ້າທາ, (ເມືອງຫລວງນໍ້າທາ, ວຽງພູຄາ, ນາແລ...) ຊຶ່ງມີເປົ້າໝາຍການຜະລິດເພື່ອສະໜອງໃຫ້ແກ່ການປຸງແຕ່ງພາຍໃນ ແລະ ສົ່ງອອກ. ໃນນີ້ຊຸກຍູ້ ແລະ ສົ່ງເສີມ ໃຫ້ກຸ່ມ ຜູ້ຜະລິດ ແລະ ຜູ້ປະກອບການ ລົງທຶນໃສ່ການຍົກສູງດ້ານຄຸນນະພາບ ແລະ ຫລຸດຜ່ອນຜົນເສຍຫາຍ ຫລັງການເກັບກ່ຽວ ໂດຍເນັ້ນໃສ່ ວິທະຍາການຫລັງການເກັບກ່ຽວ ເຊັ່ນ: ສ້າງໂຮງອົບ, ສາງເກັບມ້ຽນ ແລະ ໂຮງເຮືອນພັກຜົນຜະລິດ ກ່ອນການຂົນສົ່ງ.

**ເຂດທົ່ງພຽງ**: ເຂດຜະລິດສາລີອາຫານສັດໃນເຂດ 7 ທົ່ງພຽງໃຫຍ່, ເນັ້ນໃສ່ 3 ທົ່ງພຽງຕົ້ນຕໍ ທີ່ມີເນື້ອທີ່ທຳການຜະລິດ ແລະ ມີມູນເຊື້ອໃນການຜະລິດ ສາລີອາຫານສັດ ໃນຈຳນວນຫຼາຍ ເຊັ່ນ: ທົ່ງພຽງວຽງຈັນ ແມ່ນສຸມໃສ່ ເຂດເມືອງທຸລະຄົມ ແລະ ນາຊາຍທອງ, ທົ່ງພຽງເຊໂດນ ສຸມໃສ່ເມືອງສາລະວັນເປັນຈຸດສຸມ, ສຳລັບທົ່ງພຽງຈຳປາສັກ ສຸມໃສ່ບາງເຂດຂອງເມືອງຈຳປາສັກ ແລະ ເມືອງປະທຸມພອນ ຄາດຄະເນຜົນຜະລິດ ບໍ່ໃຫ້ຫຼຸດ 200.000 ໂຕນ.

### (3) <u>ກາເຟ</u>

**ເຂດພູດອຍ ແລະ ພູພຽງ**: ເຂດຜະລິດກາເຟ ເປັນສິນຄ້າ ຕົ້ນຕໍແມ່ນ ສົ່ງເສີມຜະລິດ ຢູ່ພູພຽງບໍລິເວນເປັນຫລັກ ເຊັ່ນ: ຢູ່ເມືອງປາກຊ່ອງ, ເມືອງບາຈຽງ ແຂວງຈຳປາສັກ, ເມືອງເລົ່າງາມ ແຂວງສາລະວັນ, ເມືອງທ່າແຕງ ແຂວງເຊກອງ ຊຶ່ງປະຈຸບັນ ມີເນື້ອທີ່ທັງໝົດ ປະມານ 130.000 ເຮັກຕາ ຄາດຄະເນຜົນຜະລິດ ຈະໄດ້ເຖິງ 280.000 ໂຕນ ໂດຍສຸມໃສ່ຍົກລະດັບ ແລະ ສົ່ງເສີມການຜະລິດ ໃຫ້ໄດ້ຕາມມາດຕະຖານກະສິກຳອິນຊີ (OA) ແລະ ກະສິກຳທີ່ດີ (GAP). ນອກຈາກນີ້ ຍັງສົ່ງເສີມການປູກກາເຟ ທີ່ມີຄຸນລັກສະນະສະເພາະ ຂອງທ້ອງຖິ່ນ (GI) ແລະ ພາກເໜືອຈຳນວນໜຶ່ງ ກຳກຳລັງປູກ ແລະ ບາງແຂວງ/ ບາງເຂດກຳກຳລັງທົດລອງ ຊຶ່ງກໍເຫັນວ່າ ຢູ່ຫຼາຍແຂວງມີຄວາມເໝາະສົມ ແລະ ໄດ້ຮັບຜົນສຳເລັດ ຊຶ່ງຄາດ ວ່າຮອດປີ 2020 ແລະ 2025 ເນື້ອທີ່ປູກກາເຟ ຈະເພີ່ມຂຶ້ນຫຼາຍພໍສົມຄວນ.

### (4) <u>ອ້ອຍ</u>

ສົ່ງເສີມການປູກອ້ອຍ ເພື່ອເປັນວັດຖຸດິບປ້ອນໂຮງງານນໍ້າຕານ ພາຍໃນປະເທດ ໂດຍສຸມໃສ່ເຂດເມືອງໄຊບູລີ, ອາດສະພັງທອງ, ຈຳພອນ, ພະລານໄຊ, ຊົນບູລີ ແລະ ອຸທຸມພອນ ແຂວງສະຫວັນນະເຂດ; ເມືອງປາກຊັນ, ບໍລິຄັນ, ໄຊຈຳພອນ ແຂວງບໍລິຄຳໄຊ; ເມືອງສາມັກຄີໄຊ, ພູວົງ, ໄຊເຊດຖາ ແລະ ເມືອງຊານໄຊ ແຂວງອັດຕະປື; ເມືອງລະມາມ ແຂວງເຊກອງ, ຊຶ່ງມີເນື້ອທີແຜນການປະມານ 60.000 ເຮັກຕາ, ຄາດຄະເນຜົນຜະລິດໃຫ້ໄດ້ ປະມານ 2,4 ລ້ານໂຕນ. ຊຸກຍູ້ການປູກອ້ອຍ ຕິດພັນກັບໂຮງງານປຸງແຕ່ງ ແລະ ນຳໃຊ້ສິ່ງເສດເຫຼືອຈາກການປຸງແຕ່ງ ເພື່ອນຳໃຊ້ໃຫ້ໝົດຄຸນຄ່າ ແລະ ນຳໄປຜະລິດ ເປັນຜະລິດຕະພັນອື່ນໆ ເຊັ່ນ: ຝຸ່ນ, ພະລັງງານທົດແທນ ແລະ ອື່ນໆ.

(5) **ມັນຕົ້ນ**

ສົ່ງເສີມການປູກມັນຕົ້ນ ເພື່ອເປັນສິນຄ້າ ທີ່ສຳຄັນແມ່ນ ເພື່ອເປັນວັດຖຸດິບ ປ້ອນໂຮງງານປຸງແຕ່ງເປັນຜະລິດຕະພັນ ເພື່ອສົ່ງອອກ; ສຳລັບເຂດພູດອຍ ແລະ ພູພຽງ ແມ່ນສຸມໃສ່: ເມືອງປາກແຊງ, ວຽງຄຳ ແລະ ພູຄູນ ແຂວງຫລວງພະບາງ, ເມືອງຜາໄຊ ແລະ ເມືອງແປກ ແຂວງຊຽງຂວາງ, ເມືອງຮົ່ມ, ເມືອງຊະນະຄາມ, ເມືອງໝື່ນ, ເມືອງເຟືອງ ແລະ ເມືອງຫີນເຫີບ ແຂວງວຽງຈັນ, ເມືອງຄຳເກີດ ແຂວງບໍລິຄຳໄຊ, ເມືອງເຊໂປນ ແລະ ເມືອງນອງ ແຂວງສະຫວັນນະເຂດ ເມືອງເລົ່າງາມ ແລະ ເມືອງຕະໂອ້ຍ ແຂວງສາລະວັນ. ສຳລັບເຂດທົ່ງພຽງ ແມ່ນສຸມໃສ່: ເມືອງໄຊທານີ, ປາກງື່ມ ແລະ ເມືອງສັງທອງ ນະຄອນຫລວງວຽງຈັນ, ເມືອງປາກຊັນ, ປາກກະດິງ, ບໍລິຄັນ ແຂວງບໍລິຄຳໄຊ; ເມືອງຊົນບູລີ, ເມືອງພີນ ແຂວງສະຫວັນນະເຂດ; ເມືອງຄົງເຊໂດນ ແລະ ນະຄອນເພັງ ແຂວງສາລະວັນ ຊຶ່ງມີແຜນການຜະລິດໃນເນື້ອທີ່ 57.000 ເຮັກຕາ, ຄາດຄະເນຜົນຜະລິດ ໃຫ້ໄດ້ ປະມານ 1,6 ລ້ານໂຕນ.

(6) **ຢາງພາລາ**

ເພື່ອໃຫ້ສອດຄ່ອງກັບຍຸດທະສາດປ່າໄມ້ ຮອດປີ 2020 ຊຶ່ງໄດ້ກຳນົດ ເນື້ອທີ່ປູກໄມ້ອຸດສາຫະກຳປະເພດຕ່າງໆ ເພື່ອເປົ້າໝາຍທາງດ້ານເສດຖະກິດ ທັງໝົດ ບໍ່ໃຫ້ເກີນ 500.000 ເຮັກຕາ, ໃນນີ້ ລວມທັງການປູກຢາງພາລາ; ເຖິງຢ່າງໃດກໍຕາມ ມາຮອດປະຈຸບັນ ສະເພາະເນື້ອທີ່ປູກຢາງພາລາ ໃນທົ່ວປະເທດມີທັງໝົດ ປະມານເກືອບ 300.000 ເຮັກຕາ, ໃນນີ້ ພື້ນທີ່ປູກຢາງພາລາ ສະເພາະໃນເຂດພູດອຍ ແລະ ພູພຽງ ລວມທັງການປູກຂອງປະຊາຊົນ ແລະ ຜູ້ປະກອບການ ມີເນື້ອທີ່ທັງໝົດ ເກືອບ 170.000 ເຮັກຕາ, ຄາດວ່າຈະໄດ້ນ້ຳຢາງດິບທັງໝົດ ປະມານ 230.000-250.000 ໂຕນ, ຊຶ່ງປູກຫຼາຍ ຢູ່ແຂວງຫລວງນ້ຳທາ, ບໍ່ແກ້ວ, ອຸດົມໄຊ, ຜົ້ງສາລີ, ຫລວງພະບາງ, ໄຊຍະບູລີ, ແລະ 3 ເມືອງ ຂອງແຂວງວຽງຈັນ.

ສຳລັບເນື້ອທີ່ປູກຢາງພາລາ ຢູ່ເຂດທົ່ງພຽງ ໃນປະຈຸບັນ ລວມທັງການປູກ ຂອງປະຊາຊົນ ແລະ ຜູ້ປະກອບການ ມີເນື້ອທີ່ທັງໝົດປະມານເກືອບ 130.000 ເຮັກຕາ, ຄາດວ່າຈະໄດ້ນ້ຳຢາງດິບທັງໝົດປະມານ 190.000-200.000 ໂຕນ, ສ່ວນຫລາຍແມ່ນ ຢູ່ແຂວງບໍລິຄຳໄຊ, ແຂວງຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ເຊກອງ, ອັດຕະປື ແລະ ແຂວງຈຳປາສັກ.

ຊຸກຍູ້ສົ່ງເສີມການປູກຢາງພາລາ ຕິດພັນກັບການປຸງແຕ່ງ ໂດຍການສ້າງໂຮງງານປຸງແຕ່ງພາຍໃນປະເທດ ໃຫ້ສົມດູນ ກັບຄວາມອາດສາມາດສະໜອງຂອງວັດຖຸດິບ ໂດຍສຸມໃສ່ບັນດາແຂວງ ທີ່ມີພື້ນທີ່ການຜະລິດ ຫຼາຍກວ່າ 10.000 ເຮັກຕາຂຶ້ນໄປ ພ້ອມທັງສ້າງມາດຕະການທາງດ້ານນະໂຍບາຍ ເພື່ອສົ່ງເສີມ, ສະໜັບສະໜູນ ແລະ ຫຼຸດຜ່ອນການສົ່ງອອກເປັນວັດຖຸດິບ.

ຂ). **ພືດສິນຄ້າອື່ນໆທີ່ມີທ່າແຮງ ແລະ ເປັນເອກະລັກຂອງທ້ອງຖິ່ນ**

(1) **ໝາກເດືອຍ**

ສຳລັບໝາກເດືອຍ ແມ່ນເນັ້ນໃສ່ສະເພາະ ເຂດພູດອຍ ແລະ ພູພຽງ ໂດຍສຸມໃສ່ ສົ່ງເສີມຢູ່ບັນດາ ເມືອງ ຂອງບາງແຂວງ ຄື: ໄຊຍະບູລີ (ເມືອງຄອບ, ເມືອງໄຊຍະບູລີ, ເມືອງຊຽງຮ່ອນ, ເມືອງເງິນ, ປາກລາຍ, ເມືອງພຽງ...), ແຂວງວຽງຈັນ (ເມືອງຊະນະຄາມ, ເມືອງໝື່ນ, ເມືອງແມດ, ເມືອງເຟືອງ,...), ແຂວງ ຫລວງພະບາງ (ເມືອງປາກແຊງ, ປາກອູ, ຈອມເພັດ, ຊຽງເງິນ, ນ້ຳບາກ, ເມືອງນານ, ເມືອງງອຍ...) ຊຶ່ງມີ ແຜນການຜະລິດໃນເນື້ອທີ່ 60.000 ເຮັກຕາ, ດ້ວຍຜົນຜະລິດ 180.000 ໂຕນ. ເນື່ອງຈາກ ພືດດັ່ງກ່າວ ສ່ວນໃຫຍ່ແມ່ນຜະລິດ ເປັນວັດຖຸດິບ ສົ່ງໄປປະເທດໃກ້ຄຽງ ເຊັ່ນ: ສປ ຈີນ, ສສ.ວຽດນາມ, ປະເທດໄທ..... ເຖິງຢ່າງໃດກໍຕາມ ເພື່ອສ້າງມູນຄ່າເພີ່ມ ໃນຕໍ່ໜ້າ ຕ້ອງໄດ້ສົ່ງເສີມການລົງທຶນເຂົ້າໃສ່ການ ປຸງແຕ່ງ ໄປຄຽງ ຄູ່ກັບການເກັບຮັກສາ ຫຼັງການເກັບກ່ຽວ ເປັນຕົ້ນແມ່ນ: ສາງເກັບມ້ຽນ ແລະ ໂຮງເຮືອນພັກ ຜົນ ຜະລິດ ກ່ອນການສົ່ງອອກ.

(2) <u>**ໝາກງາ**</u>

ເຂດປູກໝາກງາ ເປັນສິນຄ້າ ແມ່ນສຸມໃສ່ຜະລິດຢູ່ ບາງແຂວງ ພາກເໜືອເປັນຕໍ ເຊັ່ນ: ແຂວງ ຫລວງພະບາງ, (ເມືອງປາກແຊງ, ປາກອູ, ຈອມເພັດ, ຊຽງເງິນ, ນ້ຳບາກ, ນານ, ເມືອງງອຍ...) ແຂວງ ອຸດົມໄຊ (ເມືອງງາ, ເມືອງໄຊ, ເມືອງແບ່ງ, ເມືອງຮຸນ, ເມືອງຫລາ...) ແລະ ໄຊຍະບູລີ (ເມືອງໄຊຍະບູລີ, ທົ່ງສາ, ເມືອງພຽງ ບໍ່ແຕນ ແລະ ແກ່ນທ້າວ), ຊຶ່ງມີແຜນການຜະລິດໃນເນື້ອທີ່ 5.000 ເຮັກຕາ, ຄາດ ຄະເນຜົນຜະລິດ ໃຫ້ໄດ້ 7.500 ໂຕນ ຊາແຫ້ງ.

(3) <u>**ຊາຕົ້ນນ້ຳ**</u>

ເຂດພູດອຍ ແລະ ພູພຽງ: ເຂດຜະລິດ ຊາຕົ້ນນ້ຳ ເປັນສິນຄ້າ ແມ່ນສຸມໃສ່ ສົ່ງເສີມຜະລິດ ຢູ່ພູພຽງ ບໍລິເວນ ເຊັ່ນ: ເຂດເມືອງປາກຊອງ, ເມືອງບາຈຽງ ແຂວງຈຳປາສັກ, ເມືອງເລົ່າງາມ ແຂວງສາລະວັນ ແລະ ເມືອງທ່າແຕງ ແຂວງເຊກອງ ແລະ ບາງແຂວງພາກເໜືອ ເຊັ່ນ: ຜົ້ງສາລີ ແລະ ແຂວງອື່ນໆ ທີ່ມີ ທ່າແຮງ ແລະ ມີມູນເຊື້ອມາກ່ອນແລ້ວ ໂດຍສຸມໃສ່ຍົກລະດັບ ແລະ ສົ່ງເສີມການຜະລິດ ຕິດພັນ ກັບການປຸງແຕ່ງ ໃຫ້ໄດ້ ຕາມມາດຕະຖານ ກະສິກຳອິນຊີ (OA) ແລະ ກະສິກຳທີ່ດີ (GAP) ແນໃສ່ ຮັບປະກັນຜົນຜະລິດທີ່ສະອາດ ປອດໄພ.

(4) <u>**ຢາສູບ**</u>

ເຂດພູດອຍ ແລະ ພູພຽງ: ເນັ້ນໃສ່ບາງແຂວງທີ່ມີມູນເຊື້ອການຜະລິດ ແລະ ມີທ່າແຮງ ຕະຫຼາດຮອງ ຮັບ ເປັນຕົ້ນ: ເມືອງນ້ຳບາກ ແຂວງຫຼວງພະບາງ; ເມືອງນາໝໍ້, ເມືອງແບ່ງ ແລະ ເມືອງໄຊ ແຂວງອຸດົມໄຊ ແລະ ເມືອງປາກລາຍ ແຂວງໄຊຍະບູລີ ຄາດຄະເນເນື້ອທີ່ການຜະລິດ ປະມານ 3.000 ເຮັກຕາ ຜົນຜະລິດ 30.000 ໂຕນໃບຢາດິບ.

ສຳລັບເຂດທົ່ງພຽງ ແມ່ນສຸມໃສ່: ເມືອງທຸລະຄົມ ແຂວງວຽງຈັນ; ເມືອງປາກຊັນ, ປາກກະດິງ ແຂວງບໍລິຄຳໄຊ; ເມືອງທ່າແຂກ, ຫີນບູນ, ໜອງບົກ, ເຊບັ້ງໄຟ ແຂວງຄຳມ່ວນ, ເມືອງໄຊບູລີ, ສອງຄອນ,

ອາດສະພັງທອງ, ອາດສະພອນ, ຈຳພອນ ແຂວງສະຫວັນນະເຂດ; ເມືອງນະຄອນເພັງ ແຂວງສາລະວັນ; ເມືອງໂຂງ ແຂວງຈຳປາສັກ ຕົ້ນຕໍແມ່ນເພື່ອເປັນວັດຖຸດິບ ປ້ອນໂຮງງານປຸງແຕ່ງພາຍໃນ ແລະ ສົ່ງອອກ ຊຶ່ງມີເນື້ອທີ່ແຜນການທັງໝົດ 15.000 ເຮັກຕາ, ຄາດຄະເນຜົນຜະລິດປະມານ 150.000 ຫາ 200.000 ໂຕນ ໃບຢາດິບ.

(5) **ປະເພດຖົ່ວຕ່າງໆ**

ສຳລັບຖົ່ວ ຕົ້ນຕໍ ແມ່ນເລັ່ງໃສ່ ຖົ່ວດິນ, ຖົ່ວເຫລືອງ, ຖົ່ວຂຽວ..., ນອກນັ້ນ ແມ່ນປະເພດຖົ່ວທີ່ເປັນສິນຄ້າພາຍໃນ ເຊັ່ນ: ຖົ່ວດຳ, ຖົ່ວເບີ, ຖົ່ວຝັກຍາວ ແລະ ຖົ່ວອື່ນໆ ໂດຍກຳນົດເຂດປູກ ຄື: ເຂດພູດອຍ ແລະ ພູພຽງ ແມ່ນສຸມໃສ່ ເຂດເມືອງຫລວງພະບາງ, ເມືອງນານ, ຊຽງເງິນ ແຂວງຫລວງພະບາງ; ເມືອງຄອບ, ປາກລາຍ, ແກ່ນທ້າວ, ບໍ່ແຕນ ແຂວງໄຊຍະບູລີ; ເມືອງວັງວຽງ, ກາສີ, ເມືອງເຟືອງ ແລະ ຊະນະຄາມ ແຂວງວຽງຈັນ; ເມືອງສັງທອງ ນະຄອນຫລວງວຽງຈັນ; ເມືອງຄຳເກີດ ແລະ ເມືອງວຽງທອງ ແຂວງບໍລິຄຳໄຊ; ເມືອງເລົ່າງາມ ແຂວງສາລະວັນ; ເມືອງບາຈຽງ ແລະ ເມືອງປາກຊ່ອງ ແຂວງຈຳປາສັກ ຊຶ່ງມີ ແຜນການຜະລິດໃນເນື້ອທີ່ 70.000-80.000 ເຮັກຕາ, ຄາດຄະເນຜົນຜະລິດ ໃຫ້ໄດ້ 135.000-140.000 ໂຕນ.

ສຳລັບເຂດທົ່ງພຽງ ແມ່ນສຸມໃສ່: ເມືອງທຸລະ ຄົມ, ໂພນໂຮງ ແຂວງວຽງຈັນ; ເມືອງຫີນບູນ, ເມືອງໜອງບົກ ແຂວງຄຳມ່ວນ; ເມືອງສາລະວັນ, ຄົງເຊໂດນ, ນະຄອນເພັງ, ວາປີ ແຂວງສາລະວັນ; ເມືອງຊະນະສົມບູນ, ໂພນທອງ, ເມືອງຈຳປາສັກ ແລະ ເມືອງປະທຸມພອນ ແຂວງຈຳປາສັກ ຊຶ່ງມີເນື້ອທີ່ແຜນການຜະລິດທັງໝົດ 7.000 ເຮັກຕາ, ຄາດຄະເນຜົນຜະລິດປະມານ 15.000 ໂຕນ.

(6) **ປະເພດຜັກຕ່າງໆ**

ສຳລັບຜັກປະເພດຕ່າງໆ ແມ່ນເນັ້ນໜັກໃສ່ ພື້ນທີ່ໆມີທ່າແຮງ ແລະ ເໝາະສົມທາງດ້ານນິເວດກະສິກຳ ໂດຍສະເພາະໃນເຂດພື້ນທີ່ຊານເມືອງ ແລະ ເຂດທີ່ມີມູນເຊື້ອ ແລະ ສາມາດ ເຂົ້າເຖິງຕະຫຼາດພາຍໃນ ແລະ ປະເທດໃກ້ຄຽງໄດ້ ຊຶ່ງຕົ້ນຕໍແມ່ນສຸມໃສ່ ຢູ່ພູພຽງບໍລິເວນ (ເມືອງ ປາກຊ່ອງ, ບາຈຽງ, ທ່າແຕງ ແລະ ເລົ່າງາມ) ແລະ ເຂດພູດອຍພາກເໜືອ ເປັນຕົ້ນແມ່ນ: ເມືອງພູຄູນ ແຂວງ ຫຼວງພະບາງ, ເມືອງຄຳ, ເມືອງຄູນ, ເມືອງແປກ ແລະ ເມືອງທ່າໂທມ ແຂວງຊຽງຂວາງ, ເມືອງສິງ ແຂວງຫຼວງນ້ຳທາ ແລະ ເມືອງອື່ນໆ ທີ່ມີທ່າແຮງ ເພື່ອສະໜອງເຂົ້າສູ່ຕົວເມືອງໃຫຍ່ ແລະ ເນັ້ນໃສ່ ການປູກຜັກສວນຄົວແບບປະສົມປະສານ. ນອກຈາກນັ້ນ ແມ່ນຢູ່ບັນດາທົ່ງພຽງຕ່າງໆ ທີ່ມີທ່າແຮງ ເປັນຕົ້ນແມ່ນ: ທົ່ງພຽງວຽງຈັນ ສຸມໃສ່: ເມືອງ ຫາດຊາຍຟອງ, ເມືອງສີໂຄດຕະບອງ, ເມືອງນາຊາຍທອງ, ເມືອງທຸລະຄົມ ແລະ ອື່ນໆ, ທົ່ງພຽງເຊບັ້ງໄຟ ສຸມໃສ່: ເມືອງເຊບັ້ງໄຟ, ເມືອງໜອງບົກ, ເມືອງທ່າແຂກ, ທົ່ງພຽງເຊບັ້ງຫຽງ ສຸມໃສ່: ເມືອງໄຊພູທອງ, ເມືອງສອງຄອນ, ເມືອງຈຳພອນ, ເມືອງໄກສອນ ແລະ ທົ່ງພຽງຈຳປາສັກ ແມ່ນສຸມໃສ່: ເມືອງໂພນທອງ, ເມືອງຈຳປາສັກ ເພື່ອສະໜອງ ໃຫ້ແກ່ຕົວເມືອງ, ເຂດທ່ອງທ່ຽວ ແລະ ບັນດາໂຄງການພັດທະນາພື້ນຖານໂຄງລ່າງຕ່າງໆ.

(7) **ໄມ້ໃຫ້ໝາກ**

ໄມ້ໃຫ້ໝາກ ເປັນສິນຄ້າ ພາຍໃນ ແລະ ສົ່ງອອກ ແມ່ນເລັ່ງໃສ່ ພື້ນທີ່ໆມີທ່າແຮງ ແລະ ເໝາະສົມທາງດ້ານນິເວດກະສິກຳ, ເຂດທີ່ມີມູນເຊື້ອ ແລະ ສາມາດເຂົ້າເຖິງຕະຫຼາດ ພາຍໃນ ແລະ ຕ່າງປະເທດໄດ້ ໂດຍເນັ້ນໃສ່: ໝາກກ້ວຍ, ໝາກໂມ, ໝາກນັດ ຢູ່ເມືອງຕົ້ນເຜີ້ງ ແຂວງບໍ່ແກ້ວ, ເມືອງສິງ, ເມືອງລອງ ແຂວງຫລວງນ້ຳທາ, ເມືອງໄຊ ແຂວງອຸດົມໄຊ, ເມືອງປາກອູ, ຊຽງເງິນ, ເມືອງຫລວງພະບາງ ແຂວງຫລວງພະບາງ, ເມືອງເຊໂປນ ແຂວງສະຫວັນນະເຂດ, ເມືອງເລົ່າງາມ ແຂວງສາລະວັນ; ນອກນັ້ນແມ່ນເລັ່ງໃສ່: ໝາກພ້າວ, ລຳໃຍ, ໝາກມ່ວງ, ໝາກມີ້, ໝາກເງາະ, ຖົ່ວລຽນ, ໝາກມັງກອນ, ໝາກຂຽບ ແລະ ອື່ນໆທີ່ມີທ່າແຮງ ແລະ ເປັນເອກະລັກ ຢູ່ບັນດາເມືອງ ແລະ ແຂວງ ພາກເໜືອ, ພາກກາງ ແລະ ພາກໃຕ້ ຕາມເງື່ອນໄຂ ທ່າແຮງຕົວຈິງ ຊຶ່ງມີແຜນການຜະລິດໃນເນື້ອທີ່ 10.000-15.000 ເຮັກຕາ, ຄາດຄະເນຜົນຜະລິດ ໃຫ້ໄດ້ 300.000-400.000 ໂຕນ.

## 2). ການປ້ອງກັນພືດ

ວຽກງານປ້ອງກັນ-ກັກກັນພືດ ເປັນວຽກງານໜຶ່ງທີ່ມີບົດບາດສຳຄັນ ໃນການປະກອບສ່ວນ ເຂົ້າໃນການປົກປ້ອງການກະສິກຳ ຂອງ ສປປ ລາວ ເປັນຕົ້ນ ສຸຂະພາບຂອງຄົນ, ພືດ-ສັດ, ການອະນຸລັກ ຊີວະນາໆພັນ ແລະ ການອຳນວຍຄວາມສະດວກ ດ້ານການຄ້າໃຫ້ໄດ້ທັງປະລິມານ, ຄຸນນະພາບ ແລະ ຄວາມປອດໄພ ບົນພື້ນຖານປະຕິບັດ ຕາມມາດຕະຖານສາກົນດ້ານສຸຂະນາໄມພືດ ພາຍໃຕ້ສັນຍາດ້ານ ສຸຂະນາໄມ ແລະ ສຸຂະນາໄມພືດ ຂອງອົງການການຄ້າໂລກ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວເປັນພາຄີ. ເພື່ອຍົກສູງວຽກງານປ້ອງກັນ-ກັກກັນພືດ ໃຫ້ມີຄວາມເຂັ້ມແຂງ ແລະ ທຽບເທົ່າກັບສາກົນ ຈຶ່ງມີຄວາມຈຳເປັນຕ້ອງສ້າງ ແລະ ປັບປຸງບັນດານິຕິກຳ ໄປຄຽງຄູ່ກັບການພັດທະນາ ບຸກຄະລາກອນ ລົງເລິກວິຊາສະເພາະດ້ານປ້ອງກັນພືດ ແລະ ພື້ນຖານວັດຖຸ-ເຕັກນິກ ຂອງດ່ານປ້ອງກັນພືດ ຊຶ່ງດັ່ງລາຍ ລະອຽດລຸ່ມນີ້:

- ສ້າງ ແລະ ໂຄສະນາເຜີຍແຜ່ ບັນດານິຕິກຳ, ລະບຽບການ ແລະ ຄູ່ມືວິຊາການ ລວມທັງມາດຕະຖານສາກົນດ້ານສຸຂານາໄມພືດ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນ.
- ເຈລະຈາເປີດຕະຫຼາດສິນຄ້າກະສິກຳຂອງ ສປປ ລາວ ກັບບັນດາປະເທດອາຊຽນ, ອາຊຽນ+3 ແລະ ສືບຕໍ່ຄົ້ນຄ້ວາເຮັດສັນຍາສອງຝ່າຍກັບ ສປ ຈີນ ດ້ານສຸຂະນາໄມ ແລະ ສຸຂະນາໄມພືດ ກ່ຽວກັບພືດທີ່ມີທ່າແຮງສົ່ງອອກຂອງ ສປປ ລາວ ເຊັ່ນ: ເຂົ້າ, ໝາກເດືອຍ, ໝາກໂມ, ໝາກກ້ວຍ, ຢາສູບ, ມັນຕົ້ນ ແລະ ພືດຜັກອື່ນໆ.
- ສ້າງ ແລະ ປັບປຸງດ່ານປ້ອງກັນພືດສາກົນລວມມີ ຫ້ອງການກັກກັນພືດປະຈຳດ່ານ, ຫ້ອງວິໄຈ ສັດຕູພືດປະຈຳດ່ານ, ສະຖານກັກກັນພືດປະຈຳດ່ານ ໃຫ້ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ໂດຍເລັ່ງໃສ່ ຈຳນວນ 20 ດ່ານທົ່ວປະເທດ ຄື: ດ່ານປ່າຄາ ແຂວງຜົ້ງສາລີ, ດ່ານນ້ຳໂສຍ ແຂວງຫົວພັນ, ດ່ານບໍ່ເຕັນ ແຂວງຫຼວງນ້ຳທາ, ດ່ານຂົວມິດຕະພາບ ລາວ-ມຽນມາ ແຂວງຫຼວງນ້ຳທາ, ດ່ານນ້ຳກັ່ນ ແຂວງຊຽງຂວາງ, ດ່ານຂົວມິດຕະພາບນ້ຳເຫືອງ ແຂວງໄຊຍະບູລີ, ດ່ານສະໜາມບິນ

ສາກົນຫຼວງພະບາງ ແຂວງຫຼວງພະບາງ, ດ່ານຂົວມິດຕະພາບລາວ-ໄທ 4 (ຫຼື ດ່ານຫ້ວຍຊາຍ) ແຂວງບໍ່ແກ້ວ, ດ່ານຂົວມິດຕະພາບລາວ-ໄທ 1 ນະຄອນຫຼວງວຽງຈັນ, ດ່ານສະໜາມບິນສາກົນ ວັດໄຕ ນະຄອນຫຼວງວຽງຈັນ, ດ່ານຂົວມິດຕະພາບລາວ-ໄທ 5 (ຫຼື ດ່ານປາກຊັນ) ແຂວງບໍລິຄຳໄຊ, ດ່ານນ້ຳພ້າວ ແຂວງບໍລິຄຳໄຊ, ດ່ານຂົວມິດຕະພາບລາວ-ໄທ 3 ແຂວງຄຳມ່ວນ, ດ່ານນາເພົ້າ ແຂວງຄຳມ່ວນ, ດ່ານຂົວມິດຕະພາບລາວ-ໄທ 2 ແຂວງສະຫວັນນະເຂດ, ດ່ານແດນສະຫວັນ ແຂວງສະຫວັນນະເຂດ, ດ່ານລະໄລ ແຂວງສາລະວັນ, ດ່ານວັງເຕົ່າ ແຂວງຈຳປາສັກ, ດ່ານໜອງນົກຂຽນ ແຂວງຈຳປາສັກ ແລະ ດ່ານພູເກືອ ແຂວງອັດຕະປື.

- ສ້າງ ແລະ ປັບປຸງຫ້ອງວິໄຈສັດຕູພືດຂັ້ນສູນກາງໃຫ້ໄດ້ມາດຕະຖານສາກົນ ISO 17025 ຢູ່ສູນປ້ອງກັນພືດ, ກົມປູກຝັງ.
- ສ້າງບັນຊີສັດຕູພືດ ສຳລັບພືດທີ່ເປັນສິນຄ້າ ເພື່ອເປັນຂໍ້ມູນ ໃນການສຶກສາຄວາມສ່ຽງ ເພື່ອການເປີດຕະຫຼາດ ສູ່ສາກົນ.
- ພັດທະນາບຸກຄາລະກອນ ສ້າງວິຊາການສະເພາະດ້ານປ້ອງກັນພືດໃຫ້ໄດ້ 3-5 ຄົນ ຕໍ່ດ່ານ.
- ສ້າງຕາໜ່າງປ້ອງກັນພືດທົ່ວປະເທດ ສ້າງວິຊາການປ້ອງກັນພືດ (ໝໍພືດ) ປະຈຳບ້ານໃຫ້ໄດ້ 1-2 ຄົນ ຕໍ່ ກຸ່ມບ້ານ.

### 3). ການຄົ້ນຄວ້າດ້ານແນວພັນ ແລະ ເຕັກໂນໂລຊີ ສຳລັບການປູກຝັງເພື່ອເປັນສິນຄ້າ

- ສຶກສາ, ສັງລວມ ແລະ ອະນຸລັກແນວພັນພືດພື້ນເມືອງໃຫ້ມີຄວາມລາກຫຼາຍ ທາງດ້ານຊີວະນາໆພັນພ້ອມທັງພັດທະນາແນວພັນພືດພື້ນເມືອງເຊັ່ນ: ເຂົ້າກ່ຳ, ເຂົ້າໄກ່ນ້ອຍ, ພືດຜັກ ແລະ ໄມ້ໃຫ້ໝາກ ແລະ ແນວພັນມອນ ແລະ ມ້ອນ...ທີ່ເປັນທ່າແຮງ ໃນການຜະລິດເປັນສິນຄ້າພິເສດ ສຳລັບຕະຫຼາດພິເສດ ແລະ ສະເພາະ.
- ຄົ້ນຄ້ວາເຕັກໂນໂລຊີ ສຳຫຼັບການປັບປຸງລະບົບການປູກພືດເສດຖະກິດ ທີ່ມີທ່າແຮງສະເພາະຂອງທ້ອງຖິ່ນ ເຊັ່ນ: ການປູກເຂົ້າກ່ຳ, ເຂົ້າໄກ່ນ້ອຍ, ພືດຜັກ ແລະ ໄມ້ໃຫ້ໝາກ ແລະ ການປູກມອນ-ລ້ຽງມ້ອນເພື່ອກຳນົດເປັນສິນຄ້າ ທີ່ເປັນເອກະລັກຂອງທ້ອງຖິ່ນ ສຳລັບຕະຫລາດສະເພາະ.
- ຄົ້ນຄວ້າ, ຜະລິດ ແລະ ຂະຫຍາຍແນວພັນພືດທີ່ມີທ່າແຮງໄດ້ປຽບ ແລະ ພືດເສດຖະກິດບຸລິມະສິດທາງຍຸດທະສາດທີ່ໃຫ້ຜົນຜະລິດສູງ, ໂດຍສະເພາະແມ່ນການປູກເຂົ້າທີ່ມີຄຸນນະພາບ ແລະ ພືດເສດຖະກິດອື່ນໆທີ່ມີທ່າແຮງເຊັ່ນ: ສາລີ, ມັນຕົ້ນ, ອ້ອຍ, ກາເຟ, ຢາງພາລາ, ພືດຜັກ ແລະ ໄມ້ໃຫ້ໝາກ…ເພື່ອການສົ່ງເສີມຜະລິດເປັນສິນຄ້າເພື່ອຕອບສະໜອງຕະຫຼາດພາຍໃນ ແລະ ສົ່ງອອກ.
- ປັບປຸງລະບົບການຜະລິດ ແລະ ສະໜອງແນວພັນພືດເປັນສິນຄ້າ ໂດຍການສ້າງເຄືອຂ່າຍເພື່ອຜະລິດ, ຊຶ່ງລວມທັງຜູ້ປະກອບການ ໃນສະໜອງແນວພັນພືດເປັນສິນຄ້າທີ່ມີຄຸນະພາບໃຫ້ແກ່ການຜະລິດໃນຂອບເຂດທົ່ວປະເທດ; ສ້າງເງື່ອນໄຂການຜະລິດກຸ້ມຕົນເອງທາງດ້ານແນວພັນ ເພື່ອຫຼຸດຜ່ອນການນຳເຂົ້າແນວພັນຈາກຕ່າງປະເທດເທື່ອລະກ້າວ.

- ຄົ້ນຄ້ວາເຕັກໂນໂລຊີສຳລັບການປູກພືດເປັນສິນຄ້າ, ຊຶ່ງລວມທັງ ເຕັກນິກການປູກເພື່ອຍົກຜະລິດຕະພາບ, ການປະຕິບັດການຫຼັງການເກັບກ່ຽວ ແລະ ການປຸງແຕ່ງ ທີ່ໄດ້ມາດຕະຖານສາກົນໄປຄຽງຄູ່ກັນເຊັ່ນ: GAP, SPS... ກ້າວໄປສູ່ການຜະລິດແບບເປັນຟາມຂະໜາດໃຫຍ່ ເພື່ອຮອງຮັບການເຊື່ອມໂຍງກັບສາກົນ ແລະ ປະຕິບັດພັນທະ ທີ່ ສປປລາວ ເປັນສະມາຊິກອົງການການຄ້າໂລກ ແລະ ການເປັນສະມາຊິກຂອງປະຊາຄົມເສດຖະກິດອາຊຽນ.
- ຄົ້ນຄວ້ານະໂຍບາຍໃນການເຂົ້າເຖິງແນວພັນ ແລະ ການນຳໃຊ້ເຕັກນິກການຜະລິດເພື່ອຫຼຸດຜ່ອນຕົ້ນທຶນການຜະລິດ ຊຶ່ງລວມທັງການນຳໃຊ້ກົນຈັກກະສິກຳ ເພື່ອຫຼຸດຜ່ອນການນຳໃຊ້ແຮງງານ ແລະ ເປັນການປົດປ່ອຍແຮງງານຈາກຂະແໜງການກະສິກຳໄປສູ່ຂະແໜງອຸດສາຫະ ກຳແລະການບໍລິການ.
- ຄົ້ນຄວ້າຂໍ້ມູນເພື່ອກຳນົດນະໂຍບາຍ ແລະ ກົນໄກສຳລັບການຜະລິດ ແລະ ການຕະຫຼາດສຳລັບລະບົບການຜະລິດເປັນສິນຄ້າຂອງຊາວກະສິກອນ ແລະ ຜູ້ປະກອບການຂະໜາດນ້ອຍ.
- ຄົ້ນຄວ້າຂໍ້ມູນເພື່ອກຳນົດນະໂຍບາຍການຜະລິດ ແລະ ການຕະຫລາດ, ຂໍ້ມູນຂ່າວສານດ້ານການຕະຫຼາດສິນຄ້າກະສິກຳ ເພື່ອເຊື່ອມໂຍງກັບສາກົນ ແລະ ໃຫ້ສອດຄ່ອງກັບພັນທະ ທີ່ ສປປ ລາວ ເປັນສະມາຊິກອົງການການຄ້າໂລກ ແລະ ກະກຽມໃຫ້ແກ່ການເຂົ້າເປັນປະຊາຄົມເສດຖະກິດອາຊຽນ.

**4). ການປຸງແຕ່ງ ແລະ ການຕະຫຼາດ**

ເພີ່ມທະວີການປະສານງານ ລະຫວ່າງຂະແໜງການກະສິກຳ ແລະ ປ່າໄມ້ ກັບຂະແໜງ ທີ່ກ່ຽວຂ້ອງ ແນໃສ່ເພື່ອປັບປຸງ ແລະ ພັດທະນາຕ່ອງໂສ້ການຜະລິດ ຕິດພັນກັບການປຸງແຕ່ງ ແລະ ການຕະຫຼາດ ໃຫ້ເປັນລະບົບຄົບຊຸດ ແລະ ມີຄວາມເຂັ້ມແຂງຂຶ້ນ ເປັນຕົ້ນແມ່ນ: ຂະແໜງອຸດສາຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳ, ສະມາຄົມໂຮງສີ, ສະມາຄົມຜູ້ຜະລິດ-ຜູ້ປຸງແຕ່ງ ແລະ ຜູ້ເຮັດບໍລິການດ້ານກະສິກຳອື່ນໆ ເພື່ອເຊື່ອມໂຍງການຜະລິດ ກັບການປຸງແຕ່ງ ແລະ ການຕະຫຼາດ ໃຫ້ເປັນຕ່ອງໂສ້ອັນດຽວ. ໃນນັ້ນ ບົດບາດ ຂອງຂະແໜງກະສິກຳ ແລະ ປ່າໄມ້ ແມ່ນຊຸກຍູ້ຂະບວນການ ຜະລິດສິນຄ້າກະສິກຳ ຂອງບັນດາກຸ່ມ, ສະມາຄົມ ຫຼື ສະຫະກອນ ເພື່ອປັບປຸງ ແລະ ຂະຫຍາຍກຳລັງການຜະລິດ ໃຫ້ກ້ວາງຂວາງ, ມີກຳລັງແຮງ, ມີຄວາມເປັນເຈົ້າ ແລະ ດຳເນີນການຜະລິດ ຕາມມາດຕະຖານຄວາມຕ້ອງການຂອງຜູ້ບໍລິໂພກ ຫຼື ຄວາມຕ້ອງການຂອງຕະຫຼາດ. ພ້ອມກັນນັ້ນ ກໍປະສານສົມທົບກັບພາກສ່ວນ ກ່ຽວຂ້ອງທັງຂັ້ນສູນກາງ ແລະ ທ້ອງຖິ່ນເພື່ອເຂົ້າຮ່ວມໃນງານວາງສະແດງ ແລະ ຕະຫຼາດນັດສິນຄ້າກະສິກຳ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອໂຄສະນາສິນຄ້າກະສິກຳຂອງລາວ ແລະ ຂະຫຍາຍຕະຫຼາດໃຫ້ກວ້າງຂວາງ.

ຂະແໜງອຸດສາຫະກຳ ແລະ ການຄ້າ ກໍຄືຜູ້ປະກອບການດ້ານກະສິກຳ ແມ່ນມີບົດບາດດ້ານ ການປັບປຸງ ແລະ ຍົກລະດັບຄວາມອາດສາມາດ ໃນການປຸງແຕ່ງເພື່ອສ້າງມູນຄ່າເພີ່ມ ເຊັ່ນ: ປັບປຸງບັນດາໂຮງສີເຂົ້າໃຫ້ທັນສະໄໝ, ໂຮງງານປຸງແຕ່ງຜົນຜະລິດກະສິກຳ ເຊັ່ນ: ສາລີແຂງ, ອ້ອຍ, ມັນຕົ້ນ, ກາເຟ, ຊາ, ຢາງພາລາ, ພືດ-ຜັກ, ໝາກໄມ້ ແລະ ອື່ນໆ, ຮັບປະກັນຄຸນນະພາບ ຄວາມສະອາດ ແລະ ປອດໄພໃນຂອດປຸງແຕ່ງ ຕາມມາດຕະຖານ GMP, ສ້າງໃຫ້ໄດ້ເຄື່ອງໝາຍການຄ້າ ຜະລິດຕະພັນກະສິກຳ ທີ່ເປັນ

ເອກະລັກສະເພາະຂອງລາວ, ຂະຫຍາຍ ແລະ ປັບປຸງອຸດສາຫະກຳປຸງແຕ່ງຜົນຜະລິດກະສິກຳ ແລະ ປ່າໄມ້ ເພື່ອແນໃສ່ ເຮັດໃຫ້ໂຄງປະກອບເສດຖະກິດ ທີ່ມີກະສິກຳ ຕິດພັນກັບອຸດສາຫະກຳ ແລະ ການບໍລິການ ເກີດຂຶ້ນ ຢ່າງເດັ່ນຊັດ.

### 3.2.2.2 ມາດຕະການດ້ານການລ້ຽງສັດ, ສັດຕະວະແພດ ແລະ ການປະມົງ

#### 1). ການຊຸກຍູ້ສົ່ງເສີມ ການລ້ຽງສັດເປັນສິນຄ້າ

##### (1) ການລ້ຽງງົວເປັນສິນຄ້າ

**ງົວ** ແມ່ນສັດທີ່ມີຄວາມອາດສາມາດພັດທະນາ ໃຫ້ເປັນສິນຄ້າສົ່ງອອກ, ເປົ້າໝາຍການສົ່ງອອກຊີ້ນ ແມ່ນ ໃນລະດັບ 15.000 ໂຕນ, ໃນນີ້ ເປັນຊີ້ນງົວພັນພື້ນເມືອງ 10.500 ໂຕນ ແລະ ເປັນງົວ ພັນຊີ້ນ ລູກປະສົມ 4.500 ໂຕນ ໂດຍຈະຕ້ອງສົ່ງເສີມໃຫ້ມີການລ້ຽງງົວແບບເປັນຟາມ ງົວພື້ນເມືອງ ໃນລະ ດັບ 87.500 ໂຕ ແລະ ງົວລູກປະສົມ ບໍ່ຕ່ຳກວ່າ 28.000 ໂຕ.

ເປົ້າໝາຍສົ່ງເສີມການລົງທຶນ ເພື່ອລ້ຽງງົວເປັນສິນຄ້າ ແມ່ນເລັ່ງໃສ່: ແຂວງຜົ້ງສາລີ , ອຸດົມໄຊ, ຫລວງພະບາງ, ຫົວພັນ, ຊຽງຂວາງ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ ແລະ ອັດຕະປື. ເພື່ອເຮັດໃຫ້ບັນລຸຄາດໝາຍຂ້າງເທິງນີ້ ຕ້ອງໄດ້ສຸມໃສ່ປະຕິບັດມາດຕະການດັ່ງລຸ່ມນີ້:

(1.1) ສົ່ງເສີມບຸກຄົນ ແລະ ຜູ້ປະກອບການ ຫລື ກຸ່ມຜູ້ຜະລິດ ສ້າງຟາມລ້ຽງງົວພື້ນເມືອງເພື່ອສົ່ງອອກ ໃຫ້ມີການຂະຫຍາຍຕົວ ໂດຍໃຫ້ຕິດພັນກັບການປັບປຸງພັນ; ເພີ່ມນ້ຳໜັກໃຫ້ ໄດ້ 300 ກິໂລ/ໂຕ, ສ້າງເຂດປອດພະຍາດສັດ ແລະ ການນຳໃຊ້ມາດຕະການ ດ້ານສຸຂະນາໄມຕາມມາດຕະຖານຂອງສາກົນ.

(1.2) ສົ່ງເສີມການລ້ຽງງົວພັນຊີ້ນລູກປະສົມ ດ້ວຍການປະສົມພັນທຽມ ຢູ່ບັນດາແຂວງທີ່ມີເງື່ອນໄຂ ເພື່ອຍົກນ້ຳໜັກງົວໃຫ້ໄດ້ 400 ກິໂລ/ໂຕ; ເພີ່ມຜົນຜະລິດຊີ້ນໃຫ້ໄດ້ 160 ກິໂລ/ໂຕ ເພື່ອເພີ່ມລາຍຮັບຂອງຊາວກະສິກອນໃຫ້ສູງຂຶ້ນ.

(1.3) ຊຸກຍູ້ພາກທຸລະກິດ ແລະ ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃສ່ການສ້າງຟາມລ້ຽງງົວນົມໃຫ້ໄດ້ 2 ແຫ່ງໃນເຂດທົ່ງພຽງ ທີ່ໃກ້ກັບຕົວເມືອງໃຫຍ່ ຫລື ໃນເຂດພູພຽງ ທີ່ມີເງື່ອນໄຂ ແລະ ມີອາກາດເໝາະສົມ ເຊັ່ນ: ນະຄອນຫລວງວຽງຈັນ, ແຂວງຊຽງຂວາງ ຫລື ແຂວງວຽງຈັນ ຫລື ແຂວງຈຳປາສັກ ເພື່ອສະໜອງນ້ຳນົມໃຫ້ແກ່ສັງຄົມ ແນໃສ່ສ້າງໃຫ້ເກີດຫນໍ່ແໜງການລ້ຽງງົວນົມຂຶ້ນ ຢູ່ພາຍໃນປະເທດ ທັງເປັນບ່ອນຖອດຖອນບົດຮຽນກ່ຽວກັບການລ້ຽງງົວນົມ.

(1.4) ຄຽງຄູ່ກັບການສົ່ງເສີມການລ້ຽງງົວເປັນສິນຄ້າ ຕ້ອງໄດ້ສົ່ງເສີມຊາວກະສິກອນຂະ ຫຍາຍການປູກພືດອາຫານສັດຢ່າງກວ້າງຂວາງ ຊຶ່ງຄາດໝາຍບໍ່ໃຫ້ຫລຸດປະມານ 15 ພັນເຮັກຕາ.

(1.5) ສົ່ງເສີມການສ້າງຕັ້ງໂຮງງານຂ້າສັດທີ່ທັນສະໄໝ ໄດ້ມາດຕະຖານເພື່ອສະໜອງຊີ້ນຢູ່ພາຍ ໃນ ແລະ ສົ່ງອອກ ໃນຂະໜາດ 70 ຫາ 100 ໂຕ/ວັນ; ຄາດໝາຍຢ່າງໜ້ອຍ 5 ຈຸດ.

(1.6) ສືບຕໍ່ສຳຫລວດຄວາມອາດສາມາດຂອງທົ່ງຫຍ້າທຳມະຊາດ, ຈັດສັນເຂດປູກພືດອາຫານສັດ, ແລະ ສົ່ງເສີມການນຳໃຊ້ສິ່ງເສດເຫລືອ ຈາກການປູກຝັງ ແລະ ອຸດສາຫະກຳປຸງແຕ່ງ ເພື່ອນຳໃຊ້ໃຫ້ເກີດປະ ໂຫຍດສູງສຸດໃຫ້ແກ່ການລ້ຽງງົວ ແລະ ສັດໃຫຍ່.

**(2) ການລ້ຽງໝູພັນ**

ສຳລັບການລ້ຽງໝູເປັນສິນຄ້າ ເຖິງວ່າ ສປປ ລາວ ບໍ່ທັນມີຄວາມອາດສາມາດແຂ່ງຂັນໃນຕະຫລາດສາກົນໄດ້ ແຕ່ຈະຕ້ອງໄດ້ເລັ່ງພັດທະນາໃຫ້ເປັນສິນຄ້າເພື່ອສະໜອງຕະຫລາດພາຍໃນ ແລະ ສະໜອງໃຫ້ນັກທ່ອງທ່ຽວໃຫ້ພຽງພໍ. ດັ່ງນັ້ນ ຕ້ອງໄດ້ສຸມໃສ່ ພັດທະນາ ບັນດາໜ້າວຽກຕ່າງໆດັ່ງລຸ່ມນີ້:

(2.1) ສົ່ງເສີມການຜະລິດໝູພັນລູກປະສົມ ໂດຍການຊຸກຍູ້ການລົງທຶນ ຂອງທຸກພາກສ່ວນເສດຖະກິດ ທັງພາກລັດ ແລະ ເອກະຊົນ ເຂົ້າໃສ່ການລ້ຽງ ແລະ ຂະຫຍາຍພັນໝູ ທີ່ມີສາຍເລືອດບໍລິສຸດ, ພໍ່-ແມ່ພັນ ລຸ້ນ 1 (F1) ແລະ ລຸ້ນ 2 (F2) ໃຫ້ມີກະຈາຍຢູ່ແຕ່ລະພາກ ເຊັ່ນ: ພາກເໜືອ ແມ່ນສຸມໃສ່ ແຂວງຫຼວງພະບາງ, ຫຼວງນ້ຳທາ ແລະ ແຂວງອຸດົມໄຊ; ພາກກາງແມ່ນສຸມໃສ່ ແຂວງວຽງຈັນ, ນະຄອນຫຼວງວຽງຈັນ, ຄຳມ່ວນ ແລະ ສະຫວັນນະເຂດ; ພາກໃຕ້ແມ່ນສຸມໃສ່ ແຂວງສາລະວັນ ແລະ ຈຳປາສັກ ໂດຍມີເປົ້າໝາຍຜະລິດ ແລະ ສະໜອງແນວພັນໝູ ສະໜອງ ໃຫ້ແຕ່ລະພາກ ເພື່ອຫລຸດຜ່ອນການນຳເຂົ້າກ້າວໄປສູ່ໃຫ້ກຸ້ມຕົນເອງ.

(2.2) ສົ່ງເສີມການລ້ຽງໝູຊີ້ນ ໂດຍສະເພາະແມ່ນໝູພັນສາມສາຍເລືອດ ຢູ່ໃນເຂດທີ່ມີທ່າແຮງ ໂດຍມີເປົ້າໝາຍ ໃຫ້ສາມາດສະໜອງຊີ້ນໝູພັນ ເພີ່ມຈາກ 15% ໃຫ້ກວມເອົາຫລາຍກວ່າ 50% ຂອງ ຈຳນວນຊີ້ນໝູທັງໝົດ ແລະ ແນໃສ່ຜະລິດຊີ້ນສະໜອງໃຫ້ແກ່ຄວາມຕ້ອງການ ຢູ່ພາຍໃນຕົວເມືອງ ຫລືເທດສະບານ ໃນຂອບເຂດທົ່ວປະເທດໃຫ້ມີຊີ້ນໝູບໍລິໂພກຢ່າງໜັກແໜ້ນ ໂດຍສຸມໃສ່ບາງແຂວງ ເປົ້າໝາຍຄື: ພາກເໜືອໄດ້ແກ່: ແຂວງໄຊຍະບູລີ, ຫລວງພະບາງ, ຫລວງນ້ຳ ແລະ ອຸດົມໄຊ; ພາກກາງແມ່ນ: ນະຄອນຫລວງ, ສະຫວັນນະເຂດ, ຄຳມ່ວນ ແລະ ວຽງຈັນ; ພາກໃຕ້ແມ່ນ: ສາລະວັນ ແລະ ຈຳປາສັກ.

**(3) ການລ້ຽງໄກ່ພັນໄຂ່**

ເປົ້າໝາຍຂອງການພັດທະນາ ການລ້ຽງໄກ່ໄຂ່ເປັນສິນຄ້າ ແມ່ນເພື່ອສະໜອງຄວາມຕ້ອງການຂອງຕະຫລາດພາຍໃນ ໃຫ້ສາມາດກຸ້ມຕົນເອງໄດ້ຢ່າງໝັ້ນຄົງ, ສະນັ້ນ ຕ້ອງໄດ້ເອົາໃຈໃສ່ສົ່ງເສີມການລ້ຽງໄກ່ໄຂ່ສາຍພັນທີ່ໃຫ້ຜົນຜະລິດສູງ ຢູ່ໃນເຂດທີ່ມີທ່າແຮງ ໂດຍມີເປົ້າໝາຍ ໃຫ້ສາມາດສະໜອງໃຫ້ແກ່ຄວາມຕ້ອງການ ຢູ່ພາຍໃນຕົວເມືອງ ຫລື ເທດສະບານ ຢູ່ໃນຂອບເຂດທົ່ວປະເທດ ໃຫ້ມີໄຂ່ບໍລິໂພກຢ່າງໜັກແໜ້ນ ແນໃສ່ ສ້າງໃຫ້ມີອາຊີບ ແລະ ຈັດຕັ້ງກຸ່ມຜູ້ລ້ຽງໄກ່ໄຂ່ຢູ່ແຕ່ລະເຂດຢ່າງຍືນຍົງ, ໂດຍສຸມໃສ່ບາງແຂວງເປົ້າໝາຍ ຄື: ພາກເໜືອໄດ້ແກ່: ແຂວງຫລວງພະບາງ, ໄຊຍະບູລີ, ອຸດົມໄຊ ແລະ ຫລວງນ້ຳທາ; ພາກກາງແມ່ນ: ນະຄອນ ຫລວງວຽງຈັນ, ແຂວງວຽງຈັນ, ບໍລິຄຳໄຊ ແລະ ສະຫວັນນະເຂດ; ພາກໃຕ້ແມ່ນ: ຈຳປາສັກ ແລະ ສາລະວັນ.

**(4) ການລ້ຽງໄກ່ພັນຊີ້ນ**

ການລ້ຽງໄກ່ພັນຊີ້ນ ເຖິງວ່າຍັງບໍ່ແຜ່ຫລາຍ ແຕ່ກໍມີຄວາມຕ້ອງການຂອງຕະຫລາດ ຢູ່ໃນເຂດຕົວເມືອງໃນປະຈຸບັນແມ່ນມີສູງ, ສະນັ້ນ, ຕ້ອງໄດ້ເອົາໃຈໃສ່ ສືບຕໍ່ຂະຫຍາຍການລ້ຽງໄກ່ພັນຊີ້ນ ຢູ່ໃນເຂດທີ່ມີທ່າແຮງໃຫ້ເພີ່ມຂຶ້ນ ເພື່ອໃຫ້ສາມາດສະໜອງຊີ້ນໄກ່ຊີ້ນ ເພີ່ມຈາກ 0,8% ໃຫ້ກວມເອົາ 10% ຂອງ

ຈຳນວນຊີ້ນສັດປີກທັງໝົດ ແນໃສ່ໃຫ້ສາມາດ ເພີ່ມການສະໜອງໃຫ້ແກ່ຄວາມຕ້ອງການຂອງຕະຫລາດໃນຕົວເມືອງ ຫລຸດຜ່ອນການນຳເຂົ້າຈາກຕ່າງປະເທດ. ເຂດທີ່ເປັນບຸລິມມະສິດ ສົ່ງເສີມການລ້ຽງໄກ່ພັນຊີ້ນ ເປັນສິນຄ້າ ສະໜອງຕະຫລາດພາຍໃນ ແມ່ນສຸມໃສ່: ພາກເໜືອ ແມ່ນ: ແຂວງຫລວງພະບາງ, ໄຊຍະບູລີ, ອຸດົມໄຊ ແລະ ຫລວງນ້ຳທາ; ພາກກາງແມ່ນ: ນະຄອນຫລວງ, ວຽງຈັນ, ບໍລິຄຳໄຊ ແລະ ສະຫວັນນະເຂດ; ພາກໃຕ້ແມ່ນ: ຈຳປາສັກ ແລະ ສາລະວັນ.

### (5) ການລ້ຽງເປັດພັນໄຂ່

ເປັດພັນໄຂ່ ແມ່ນສິນຄ້າທີ່ເລີ່ມມີບົດບາດສຳຄັນ ສຳລັບປະເທດເຮົາ, ສະນັ້ນ, ຕ້ອງໄດ້ສົ່ງເສີມການລ້ຽງເປັດພັນໄຂ່ ສາຍພັນທີ່ໃຫ້ຜົນຜະລິດສູງ ຢູ່ໃນເຂດທີ່ມີທ່າແຮງ ໂດຍມີເປົ້າໝາຍ ໃຫ້ສາມາດສະໜອງໄຂ່ເພີ່ມຈາກ 3% ໃຫ້ກວມເອົາ 10% ຂອງຈຳນວນໄຂ່ທັງໝົດ ແລະ ໃຫ້ສາມາດສະໜອງໃຫ້ແກ່ຄວາມຕ້ອງການ ຂອງຕະຫລາດຕົວເມືອງໃຫຍ່ໃຫ້ພຽງພໍ. ເຂດທີ່ເປັນບຸລິມມະສິດ ສົ່ງເສີມການລ້ຽງເປັດພັນໄຂ່ເປັນສິນຄ້າ ສະໜອງຕະຫລາດພາຍໃນແມ່ນສຸມໃສ່: ພາກເໜືອໄດ້ແກ່: ແຂວງອຸດົມໄຊ ແລະ ໄຊຍະບູລີ; ພາກກາງແມ່ນ: ນະຄອນຫລວງ, ບໍລິຄຳໄຊ ແລະ ວຽງຈັນ; ພາກໃຕ້ແມ່ນ: ຈຳປາສັກ.

### (6) ການລ້ຽງປາກະຊັງ

ການລ້ຽງປາກະຊັງແມ່ນຮູບການລ້ຽງປາຢ່າງໜຶ່ງ ທີ່ໃຫ້ຜົນຜະລິດສູງ ຊຶ່ງສາມາດຂະຫຍາຍການຜະລິດໄດ້ຢູ່ໃນປະເທດເຮົາ ສະນັ້ນ ຈະຕ້ອງໄດ້ມີການສົ່ງເສີມ ແລະ ພັດທະນາດັ່ງນີ້:

(6.1) ສົ່ງເສີມການລ້ຽງປາກະຊັງ ຢູ່ໃນເຂດທີ່ມີເຈື່ອນໄຂເໝາະສົມ ໃຫ້ມີການຂະຫຍາຍຕົວ ໂດຍໃຫ້ສາມາດສະໜອງປານິນ ໃຫ້ພຽງພໍຢູ່ແຕ່ລະຕົວເມືອງ ແລະ ເທດສະບານຂອງແຂວງໃນທົ່ວປະເທດ ໂດຍເພີ່ມຈຳນວນຈາກ 4.500 ກະຊັງ ໃຫ້ບັນລຸ 6.500 ກະຊັງໃນປີ 2015 , 10.000 ກະຊັງໃນປີ 2020 ແລະ 18.000 ກະຊັງໃນປີ 2025;

(6.2) ສົ່ງເສີມ ແລະ ຂະຫຍາຍການລ້ຽງປານິນໃສ່ກະຊັງ ເພື່ອສົ່ງອອກຕ່າງປະເທດ ໂດຍສຸມໃສ່ເຂດທີ່ມີໜໍ່ແໜງຢູ່ນະຄອນຫລວງວຽງຈັນ ໃຫ້ເພີ່ມຂຶ້ນ ໂດຍຕ້ອງເອົາໃຈໃສ່ລ້ຽງຢູ່ຕາມເຂດທີ່ເໝາະສົມຕາມລຳແມ່ນ້ຳຂອງ ແລະ ສາຂາຂອງແມ່ນ້ຳຂອງຕ່າງໆ.

ເຂດທີ່ເປັນບຸລິມມະສິດ ສົ່ງເສີມການລ້ຽງປາກະຊັງເປັນສິນຄ້າ ມີຄື: ຫລວງພະບາງ, ບໍ່ແກ້ວ, ວຽງຈັນ, ນະຄອນຫລວງ, ສະຫວັນນະເຂດ, ຄຳມ່ວນ, ບໍລິຄຳໄຊ, ສາລະວັນ, ຈຳປາສັກ, ອັດຕະປື ແລະ ເຊກອງ.

### (7) ການຜະລິດອາຫານສັດ ແລະ ອາຫານປາ

ອາຫານສັດ ນັບວ່າແມ່ນປັດໃຈຂອງການລ້ຽງສັດທີ່ສຳຄັນອັນດັບໜຶ່ງ ຍ້ອນວ່າມັນກວມເອົາມູນຄ່າການລົງທຶນຂອງການລ້ຽງສັດ ເຖິງ 70 ເປີເຊັນ. ຕາມການປະເມີນ ໃນປີ 2015 ສປປລາວເຮົາ ຕ້ອງການອາຫານສັດທັງໝົດ ຫຼາຍກວ່າ 480.000 ໂຕນ ແລະ ໃນປີ 2025 ຄາດວ່າ ຄວາມຕ້ອງການ ຈະສູງເຖິງ 1.200.000 ໂຕນ, ແຕ່ປະຈຸບັນ ພວກເຮົາສາມາດສະໜອງຄວາມຕ້ອງການໄດ້ພຽງແຕ່ 110.000 ໂຕນຕໍ່ປີ. ສະນັ້ນ, ການຜະລິດອາຫານສັດ ຈຶ່ງຈຳເປັນຕ້ອງໄດ້ພັດທະນາ ຍົກລະດັບທັງປະລິມານ ແລະ ຄຸນ

ນະພາບໃຫ້ສູງຂຶ້ນ ໂດຍຊຸກຍູ້ສົ່ງເສີມ ການນຳໃຊ້ວັດຖຸດິບທີ່ມີໃນທ້ອງຖິ່ນ ແລະ ມີຄາດໝາຍຫລຸດຜ່ອນການນຳເຂົ້າຈາກຕ່າງປະເທດໃຫ້ຍັງເຫລືອ 30%.

**(8) ການປຸງແຕ່ງຜະລິດຕະພັນສັດ**

ສົ່ງເສີມການລົງທຶນ ໃສ່ໂຄງລ່າງພື້ນຖານ ກ່ຽວກັບການປຸງແຕ່ງ ໃຫ້ໄດ້ມາດຕະຖານສຸຂະນາໄມ: ໂຮງຂ້າສັດ, ໂຮງງານປຸງແຕ່ງ, ສາງເຢັນ, ການຫຸ້ມຫໍ່ ແລະ ລະບົບການຂົນສົ່ງ ໂດຍໃຫ້ເປັນຕ່ອງໂສ້ ແລະ ຕິດພັນກັນ ລະຫວ່າງ ກຸ່ມຜູ້ຜະລິດ, ກຸ່ມຜູ້ປຸງແຕ່ງ ແລະ ການຕະຫຼາດ.

## 2). ການຄົ້ນຄວ້າດ້ານແນວພັນ ແລະ ເຕັກໂນໂລຊີ ສຳລັບການລ້ຽງສັດ ເພື່ອເປັນສິນຄ້າ

- ຄົ້ນຄວ້າ, ສັງລວມ ແລະ ອະນຸລັກແນວພັນສັດ ແລະ ປາພື້ນເມືອງເຊັ່ນ: ງົວ-ຄວາຍ, ໄກ່ລາດ, ໝູລາດ, ແບ້ ແລະ ປາພື້ນເມືອງ ເພື່ອພັດທະນາ ແລະ ຂະຫຍາຍພັນໃຫ້ເປັນສິນຄ້າຮັບໃຊ້ພາຍໃນ ແລະ ສົ່ງອອກ.
- ຄົ້ນຄວ້າເພື່ອປັບປຸງພັນ, ຜະລິດ ແລະ ຂະຫຍາຍແນວພັນສັດທີ່ມີທ່າແຮງເປັນສິນຄ້າເຊັ່ນ: ງົວພື້ນເມືອງ ແລະ ງົວພັນລູກປະສົມໃຫ້ມີຜົນຜະລິດສູງ, ມີຄຸນນະພາບດີ, ມີຄວາມທົນທານ ຕໍ່ສະພາບການປ່ຽນແປງຂອງດິນຟ້າອາກາດ, ທົນທານຕໍ່ພະຍາດ ແລະ ໂລກລະບາດຕ່າງໆ ໂດຍສະເລ່ຍໜຶ່ງໂຕໃຫ້ໄດ້ນໍ້າໜັກ 300 ກິໂລ/ໂຕ ໃນຂອບເຂດທົ່ວປະເທດ.
- ປັບປຸງລະບົບການຜະລິດ ແລະ ສະໜອງແນວພັນສັດ ແລະ ປາເປັນສິນຄ້າ ໂດຍການສ້າງເຄືອຂ່າຍເພື່ອຜະລິດ, ຊຶ່ງລວມທັງຜູ້ປະກອບການໃນສະໜອງແນວພັນສັດ ແລະ ປາເປັນສິນຄ້າທີ່ມີຄຸນະ ພາບໃຫ້ແກ່ການຜະ ລິດໃນຂອບເຂດທົ່ວປະເທດ; ສ້າງເງື່ອນໄຂການຜະລິດກຸ້ມຕົນເອງທາງດ້ານແນວພັນເພື່ອ ຫຼຸດຜ່ອນການນຳເຂົ້າແນວພັນຈາກຕ່າງປະເທດເທື່ອລະກ້າວ.
- ຄົ້ນຄ້ວາເຕັກໂນໂລຊີທີ່ກ້າວໜ້າ ເພື່ອປັບປຸງລະບົບການລ້ຽງສັດ ແລະ ການປະມົງ ແບບເປັນຟາມທີ່ທັນສະໄໝ ແລະ ການປຸງແຕ່ງເປັນຜະລິດຕະພັນສັດສຳເລັດຮູບ ແລະ ເຄິ່ງສຳເລັດຮູບທີ່ໄດ້ມາດຖານສາກົນເພື່ອການສົ່ງອອກ ແລະ ຮອງຮັບການເຊື່ອມໂຍງກັບສາກົນ ແລະ ພາກພື້ນ, ແລະ ການປະຕິດບັດພັນທະທີ່ ສປປ ລາວ ເປັນສະມາຊິກອົງການການຄ້າໂລກ ແລະ ເປັນສະມາຊິກປະຊາຄົມເສດຖະກິດອາຊຽນ.
- ຄົ້ນຄ້ວາເຕັກນິກ-ເຕັກໂນໂລຊີ ສຳຫຼັບປັບປຸງລະບົບການລ້ຽງສັດ ແລະ ການລ້ຽງປາ ເປັນຕົ້ນແມ່ນການລ້ຽງສັດ ແລະ ປາພື້ນເມືອງເຊັ່ນ: ໄກ່ລາດ, ໄກ່ກະດູກດຳ, ໝູລາດ, ແບ້ ແລະ ປາພື້ນເມືອງ...) ຂອງຊາວກະສິກອນ ແລະ ຜູ້ປະກອບການຂະໜາດນ້ອຍເພື່ອໃຫ້ສາມາດເປັນສິນຄ້າຮັບໃຊ້ພາຍໃນ ແລະ ສຳລັບຕະຫຼາດພິເສດ ສະເພາະ.
- ຄົ້ນຄວ້ານະໂຍບາຍໃນການເຂົ້າເຖິງແນວພັນສັດ ແລະ ປາ, ແລະ ການນຳໃຊ້ເຕັກນິກການຜະລິດເພື່ອຫຼຸດຜ່ອນຕົ້ນທຶນການຜະລິດ ຊຶ່ງລວມທັງການນຳໃຊ້ກົນຈັກກະສິກຳ ເພື່ອຫຼຸດຜ່ອນການນຳໃຊ້ແຮງງານ ຊຶ່ງເປັນການປົດປ່ອຍແຮງງານຈາກຂະແໜງການກະສິກຳ ໄປສູ່ຂະແໜງອຸດສາຫະກຳ ແລະ ການບໍລິການ.

- ຄົ້ນຄວ້າຂໍ້ມູນເພື່ອກຳນົດນະໂຍບາຍ ແລະ ກົນໄກສຳລັບການລ້ຽງສັດ ແລະ ການປະມົງ, ແລະ ລວມທັງການຕະຫຼາດ ສຳລັບລະບົບການຜະລິດເປັນສິນຄ້າ ຂອງຊາວກະສິກອນ ແລະ ຜູ້ປະກອບການຂະໜາດນ້ອຍ.
- ຄົ້ນຄວ້າຂໍ້ມູນເພື່ອກຳນົດນະໂຍບາຍສຳລັບການຜະລິດ ແລະ ການຕະຫລາດ, ຂໍ້ມູນຂ່າວສານດ້ານການຕະຫຼາດສິນຄ້າກະສິກຳ ເພື່ອເຊື່ອມໂຍງກັບສາກົນ ແລະ ໃຫ້ສອດຄ່ອງກັບພັນທະ ທີ່ສປປ ລາວ ເປັນພາຄີ ເຊັ່ນ: ສະມາຊິກອົງການການຄ້າໂລກ, ການເຂົ້າເປັນປະຊາຄົມເສດຖະກິດອາຊຽນ ແລະ ສົນທິສັນຍາອື່ນໆທີ່ກ່ຽວຂ້ອງ.

## IV. ແຜນງານ ແລະ ໂຄງການສະໜັບສະໜູນ

ໃນການພັດທະນາ ເຂດຈຸດສຸມໃຫ້ໄດ້ຮັບຜົນ, ນອກຈາກຈະສຸມໃສ່ວຽກງານດ້ານວິຊາສະເພາະ, ພວກເຮົາມີຄວາມຈຳເປັນຕ້ອງໄດ້ກຳນົດເປັນແຜນງານ ແລະ ໂຄງການສະເພາະ ເພື່ອເປັນບ່ອນອີງ ໃນການຈັດຕັ້ງປະຕິບັດ ເປົ້າໝາຍດ້ານການຜະລິດສະບຽງ ແລະ ຜະລິດສິນຄ້າ ໃຫ້ປະກົດຜົນເປັນຈິງ. ກະຊວງກະສິກຳ ແລະ ປ່າໄມ້ ຂໍສະເໜີ ແຜນງານ, ແຜນດຳເນີນງານ ແລະ ໂຄງການສະໜັບສະໜູນ ລະອຽດ ດັ່ງຕໍ່ໄປນີ້:

### 4.1 ແຜນດຳເນີນງານ ແລະ ໂຄງການສະໜັບສະໜູນຮອດປີ 2020 ແລະ 2025

#### 4.1.1 ແຜນດຳເນີນງານ ແລະ ໂຄງການດ້ານປູກຝັງ

**ທັງໝົດລວມມີ 9 ແຜນດຳເນີນງານ ແລະ 62 ໂຄງການ ຄື:**

1. **<u>ແຜນດຳເນີນງານພັດທະນາທີ່ດິນກະສິກຳ</u>**
   1) ໂຄງການ ພັດທະນາ ນິຕິກຳ ກ່ຽວກັບການຄຸ້ມຄອງທີ່ດິນປູກຝັງ.
   2) ໂຄງການ ສຳຫຼວດ, ກຳນົດເຂດການຜະລິດ ແລະວາງແຜນນຳໃຊ້ທີ່ດິນກະສິກຳ.
   3) ໂຄງການ ອະນຸລັກ ແລະ ພັດທະນາທີ່ດິນກະສິກຳ.
   4) ໂຄງການ ພັດທະນາເຄືອຄ່າຍ ແລະ ສ້າງຄວາມເຂັ້ມແຂງທາງດ້ານສະຖາບັນ.

2. **<u>ແຜນດຳເນີນງານພັດທະນາພື້ນຖານໂຄງລ່າງ</u>**
   1) ໂຄງການ ພັດທະນາຊົນລະກະເສດ.
   2) ໂຄງການ ພັດທະນາສູນ ແລະ ສະຖານີບໍລິການເຕັກນິກກະສິກຳ.
   3) ໂຄງການ ພັດທະນາພື້ນຖານໂຄງລ່າງດ້ານການຄົ້ນຄ້ວາທົດລອງ ແລະ ການທົດສອບ.
   4) ໂຄງການ ສ້າງ ແລະ ພັດທະນາ ຫ້ອງວິໃຈ ກ່ຽວກັບພືດ ໃຫ້ໄດ້ມາດຕະຖານ ISO17025.

3. **<u>ແຜນດຳເນີນງານພັດທະນາກະສິກຳສະອາດ</u>**
   1) ໂຄງການ ປັບປຸງ ແລະ ພັດທະນາ ມາດຕະຖານ ລະບົບການຜະລິດກະສິກຳສະອາດ (ກະສິກຳທີ່ດີ, ກະສິກຳອິນຊີ,...).

2) ໂຄງການ ສ້າງ ຕົວແບບ, ສາທິດ ແລະ ສົ່ງເສີມ ການຜະລິດ ກະສິກຳສະອາດ (ກະສິກຳທີ່ດີ, ກະສິກຳອິນຊີ,...).
3) ໂຄງການ ພັດທະນາລະບົບການຍັ້ງຢືນກະສິກຳສະອາດ ໃຫ້ເຊື່ອມໂຍງກັບພາກພື້ນແລະສາກົນ.
4) ໂຄງການ ພັດທະນາ ມາດຕະຖານ ການຜະລິດພືດເສດຖະກິດ.
5) ໂຄງການ ພັດທະນາ ມາດຕະຖານ ຜະລິດຕະພັນພືດ.
6) ໂຄງການ ສ້າງ ນິຕິກຳ ວ່າດ້ວຍການຄຸ້ມຄອງ ການຜະລິດ ແລະ ຈຳໜ່າຍຜົນຜະລິດກະສິກຳສະອາດ.
7) ໂຄງການ ກໍ່ສ້າງໂຄງລ່າງພື້ນຖານເພື່ອສະໜັບສະໜູນວຽກງານພັດທະນາກະສິກຳສະອາດ.
8) ໂຄງການ ພັດທະນາ ແລະ ສ້າງຄວາມເຂັ້ມແຂງ ດ້ານການຄວບຄຸມລະບົບການຜະລິດກະສິກຳສະອາດ.
9) ໂຄງການ ສົ່ງເສີມ ການປູກຜັກ ແລະ ໄມ້ໃຫ້ໝາກ ເປັນສິນຄ້າ.

## 4. ແຜນດຳເນີນງານ ຄຸ້ມຄອງ ແລະ ຊຸກຍູ້ການຜະລິດ

1) ໂຄງການ ຂຶ້ນທະບຽນຊາວນາ.
2) ໂຄງການ ຂຶ້ນທະບຽນຟາມຜູ້ປະກອບການປູກພືດສິນຄ້າເປົ້າໝາຍເພື່ອການສົ່ງອອກ.
3) ໂຄງການ ຄຸ້ມຄອງປັດໄຈການຜະລິດພືດ (ແນວພັນພືດ, ຝຸ່ນ ແລະ ຢາປາບສັດຕູພືດ).
4) ໂຄງການ ພັດທະນາລະບົບວິທະຍາການຫຼັງການເກັບກ່ຽວ ແລະ ການປຸງແຕ່ງ.
5) ໂຄງການ ປັບປຸງ ແລະ ເຜີຍແຜ່ນິຕິກຳດ້ານການປູກຝັງ.
6) ໂຄງການ ຕິດຕາມກວດກາ ແລະ ຊຸກຍູ້ ການລົງທຶນ ໃນຂະແໜງການປູກຝັງ.
7) ໂຄງການຫຼຸດຜ່ອນຜົນເສຍຫາຍ ການຜະລິດພືດ ຈາກໄພທຳມະຊາດ.
8) ໂຄງການ ພັດທະນາເຄື່ອງມື ແລະ ກົນຈັກຮັບໃຊ້ ວິທະຍາການຫຼັງການເກັບກ່ຽວ.
9) ໂຄງການ ສະໜັບສະໜູນ ການສ້າງບັນດານິຕິກຳຕ່າງໆ ໂດຍສະເພາະ ດ້ານນະໂຍບາຍ, ດ້ານຍຸດທະສາດ ແລະ ບົດແນະນຳຕ່າງໆດ້ານວິຊາການ.

## 5. ແຜນດຳເນີນງານ ພັດທະນາ ວຽກງານປ້ອງກັນ ແລະ ກັກກັນພືດ

1) ໂຄງການສ້າງ ແລະ ເຜີຍແຜ່ ບັນດານິຕິກຳ ດ້ານປ້ອງກັນ ແລະ ກັກກັນພືດ.
2) ໂຄງການ ປັບປຸງລະບົບສຸຂານາໄມພືດທົ່ວປະເທດ (SPS-WTO).
3) ໂຄງການ ສ້າງແຜນຍຸດທະສາດ ປ້ອງກັນພືດ.
4) ໂຄງການ ພັດທະນາລະບົບປ້ອງກັນພືດ ແຫ່ງຊາດ.
5) ໂຄງການ ວິໄຈຄວາມສ່ຽງສັດຕູພືດ ສຳລັບເຈລະຈາການສົ່ງອອກ ແລະ ນຳເຂົ້າພືດ.
6) ໂຄງການ ພັດທະນາເຕັກນິກການບຳບັດ ສິນຄ້າກະສິກຳ ກ່ອນການສົ່ງອອກ (ຮົມຢາ ຂ້າເຊື້ອ, ອົບອາຍນ້ຳ ແລະ ສາຍແສງລັງສີ).
7) ໂຄງການ ສຳຫຼວດ ແລະ ຂຶ້ນບັນຊີສັດຕູພືດ ທີ່ເປັນເປົ້າໝາຍທາງດ້ານເສດຖະກິດ.

8) ໂຄງການ ກວດກາ, ວິໄຈ ປັດໄຈການຜະລິດ ແລະ ສານພິດຕົກຄ້າງໃນຜະລິດຕະພັນພືດ.
9) ໂຄງການ ຕິດຕາມເຝົ້າລະວັງ ແລະ ພະຍາກອນການລະບາດຂອງສັດຕູພືດ.
10) ໂຄງການ ປ້ອງກັນ ແລະ ກຳຈັດສັດຕູພືດ ແລະ ສ້າງຕາໜ່າງປ້ອງກັນພືດຂັ້ນບ້ານ.
11) ໂຄງການປັບປຸງດ່ານປ້ອງກັນພືດ ທົ່ວປະເທດ.

## 6. <u>ແຜນດຳເນີນງານຄົ້ນຄວ້າດ້ານການປູກຝັງ</u>

1) ໂຄງການສຶກສາ, ເຕົ້າໂຮມ ແລະ ອະນຸລັກແນວພັນເຂົ້າ ແລະ ພືດສະບຽງທີ່ມີຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ ແລະ ເປັນເອກະລັກສະເພາະຂອງທ້ອງຖິ່ນເພື່ອອະນຸລັກຮັກສາ ແລະ ນຳໃຊ້ເຂົ້າໃນການປັບປຸງພັນເຂົ້າ ແລະ ພືດສະບຽງໃນສະເພາະໜ້າ ແລະ ຍາວນານ.
2) ໂຄງການ ສຶກສາ, ຄົ້ນຄວ້າ, ພັດທະນາ ແລະ ນຳໃຊ້ແນວພັນເຂົ້າ ແລະ ແນວພັນພືດສະບຽງທີ່ມີຄວາມທົນທານ ຫຼື ສາມາດປັບໂຕເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ການຄົ້ນຄວ້າ ແລະ ການພັດທະນານຳໃຊ້ເຕັກນິກ ການປູກ ທີ່ເໝາະສົມ, ເຕັກນິກການນຳໃຊ້ນ້ຳແບບປະຫຍັດ ແລະ ການນຳໃຊ້ນ້ຳໃຫ້ມີປະສິດທິຜົນສູງ ໃນເຂດທີ່ມີຄວາມສ່ຽງຕໍ່ໄພແຫ້ງແລ້ງ.
3) ໂຄງການຄົ້ນຄວ້າແນວພັນເຂົ້າ ແລະ ເຕັກໂນໂລຊີສຳລັບການຍົກສູງຜະລິດຕະພາບຂອງການຜະລິດເຂົ້າ ແລະ ການຄົ້ນຄວ້າເຕັກນິກ ແລະ ການຈັດການພາຍຫຼັງເກັບກ່ຽວ ເພື່ອການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພສະນາການ.
4) ໂຄງການຄົ້ນຄວ້າເຕັກນິກ-ເຕັກໂນໂລຊີສຳລັບການຜະລິດ ແລະ ການຈັດການຫລັງເກັບກ່ຽວຂອງການປູກເຂົ້າ ແລະ ພືດສະບຽງເຂດພູພຽງ ແລະ ພູດອຍ, ຫຼຸດຜ່ອນຜົນເສັຽຫາຍ ແລະ ຍົກຜະລິດຕະພາບເພື່ອການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພສະນາການ.
5) ໂຄງການປັບປຸງລະບົບການຜະລິດແນວພັນເຂົ້າ ແລະ ພືດສະບຽງ ເພື່ອສະໜອງແນວພັນເຂົ້າ ແລະ ພືດສະບຽງ ທີ່ມີຄຸນະພາບເພື່ອສະໜອງໃຫ້ແກ່ການຜະລິດໃນຂອບເຂດທົ່ວປະເທດ; ລວມທັງການສ້າງເຄືອຂ່າຍເພື່ອສະໜອງເຕັກນິກ-ເຕັກໂນໂລຊີ ໃຫ້ແກ່ລະບົບການປູກເຂົ້າ ແລະ ພືດສະບຽງໃນເຂດທົ່ງພຽງ, ພູພຽງ ແລະ ເຂດພູດອຍ.
6) ໂຄງການຄົ້ນຄ້ວາເພື່ອສະໜອງຂໍ້ມູນ ໃນການກຳນົດນະໂຍບາຍໃນລະດັບຕ່າງໆ ເພື່ອປັບປຸງ ຫຼື ກຳນົດນະໂຍບາຍ ໃນການພັດທະນາກະສິກຳສະອາດ ແລະ ຍືນຍົງ ເພື່ອການຄ້ຳປະກັນ ສະບຽງອາຫານ ແລະ ໂພສະນາການ.
7) ໂຄງການປັບປຸງລະບົບຂໍ້ມູນຂ່າວສານ ເພື່ອການເຜີຍແຜ່ ແລະ ແລກປ່ຽນຜົນຂອງການຄົ້ນຄວ້າໃນ ສປປລາວ ເພື່ອໃຫ້ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ສາມາດເຂົ້າເຖິງຂໍ້ມູນຂ່າວສານ ແລະ ນຳໃຊ້ຜົນ ຂອງ ການຄົ້ນຕ່າງໆ ສຳລັບການຜະລິດ.
8) ໂຄງການປັບປຸງ ແລະ ສ້າງຄວາມສາມາດ ຂອງຂະແໜງຄົ້ນຄວ້າກະສິກຳ ແລະ ປ່າໄມ້ ລວມທັງການປັບປຸງພະລາບົດບາດ, ໂຄງຮ່າງການຈັດຕັ້ງ, ລະບຽບການພາຍໃນສຳລັບຄຸ້ມຄອງ

ການຄົ້ນ ຄວ້າ, ພັດທະນາວິຊາການສະເພາະດ້ານ ແລະ ສ້າງຄວາມມາດໃຫ້ແກ່ເຄື່ອຂ່າຍການຄົ້ນຄວ້າ ລວມທັງຜູ້ປະກອບການໃນລະດັບສູນກາງ ແລະ ທ້ອງຖິ່ນ.

7. **ແຜນດຳເນີນງານ ຜະລິດພືດເປັນສິນຄ້າ**
    1) ໂຄງການ ຜະລິດເຂົ້າເປັນສິນຄ້າສົ່ງອອກ.
    2) ໂຄງການ ຜະລິດພືດເສດຖະກິດ ເປັນສິນຄ້າສົ່ງອອກ (ກາເຟ, ສາລີແຂງ, ມັນຕົ້ນ, ໝາກກ້ວຍ, ໝາກໂມ ແລະ ອື່ນໆທີ່ມີທ່າແຮງ...).
    3) ໂຄງການ ສົ່ງເສີມການພັດທະນາກຸ່ມການຜະລິດ ແລະ ສະຫະກອນ.
    4) ໂຄງການ ສົ່ງເສີມພັດທະນາທຸລະກິດກະສິກຳ.
    5) ໂຄງການ ພັດທະນາ ແລະ ເຜີຍແຜ່ຂໍ້ມູນຂ່າວສານ.
    6) ໂຄງການ ສົ່ງເສີມການຫັນເປັນທັນສະໄໝ.

8. **ແຜນດຳເນີນງານການຄົ້ນຄວ້າດ້ານແນວພັນ ແລະ ເຕັກໂນໂລຊີສຳລັບການປູກຝັງເພື່ອເປັນສິນຄ້າ**
    1) ໂຄງການສຶກສາ, ເຕົ້າໂຮມ ແລະ ອະນຸລັກແນວພັນພືດພື້ນເມືອງໃຫ້ມີຄວາມລາກຫຼາຍ ທາງດ້ານຊີວະນາໆພັນ ພ້ອມທັງພັດທະນາແນວພັນພືດພື້ນເມືອງ ແລະ ແນວພັນນອນ ແລະ ມ້ອນ.ທີ່ເປັນທ່າແຮງ ໃນການຜະລິດເປັນສິນຄ້າພິເສດ ສຳລັບຕະຫຼາດພິເສດ ແລະ ສະເພາະ.
    2) ໂຄງການຄົ້ນຄ້ວາເຕັກໂນໂລຊີ ສຳຫຼັບການປັບປຸງລະບົບການປູກພືດເສດຖະກິດທີ່ມີທ່າແຮງສະເພາະຂອງ ທ້ອງຖິ່ນເຊັ່ນ: ການປູກເຂົ້າກ່ຳ, ເຂົ້າໄກ່ນ້ອຍ, ພືດຜັກ ແລະ ໄມ້ໃຫ້ໝາກ ແລະ ການປູກມອນ-ລ້ຽງມ້ອນເພື່ອສາມາດກຳນົດເປັນສິນຄ້າທ້ອງຖິ່ນ ທີ່ເປັນເອກະລັກ ສຳລັບຕະຫລາດພິເສດ ແລະ ສະເພາະ.
    3) ໂຄງການຄົ້ນຄວ້າ, ຜະລິດ ແລະ ຂະຫຍາຍແນວພັນພືດທີ່ມີທ່າແຮງໄດ້ປຽບ ແລະ ພືດເສດຖະກິດບຸລິມະສິດ ທາງຍຸດທະສາດທີ່ໃຫ້ຜົນຜະລິດສູງ, ໂດຍສະເພາະແມ່ນການປູກເຂົ້າທີ່ມີຄຸນນະພາບ ແລະ ພືດເສດຖະກິດອື່ນໆທີ່ມີທ່າແຮງເຊັ່ນ: ສາລີ, ມັນຕົ້ນ, ອ້ອຍ, ກາເຟ, ຢາງພາລາ, ພືດຜັກ ແລະ ໄມ້ໃຫ້ໝາກ ເພື່ອຜະລິດເປັນສິນຄ້າ ຕອບສະໜອງ ຄວາມຕ້ອງການຂອງຕະຫຼາດພາຍໃນ ແລະ ສົ່ງອອກ.
    4) ໂຄງການປັບປຸງລະບົບການຜະລິດ ແລະ ສະໜອງແນວພັນພືດເປັນສິນຄ້າທີ່ມີຄຸນະພາບໃຫ້ແກ່ການຜະລິດໃນຂອບເຂດທົ່ວປະເທດ ເພື່ອຫຼຸດຜ່ອນການນຳເຂົ້າແນວພັນຈາກຕ່າງປະເທດເທື່ອລະກ້າວ.
    5) ໂຄງການຄົ້ນຄ້ວາເຕັກໂນໂລຊີສຳລັບການປູກພືດເປັນສິນຄ້າ, ຊຶ່ງລວມທັງ ເຕັກນິກການປູກເພື່ອຍົກຜະລິດຕະພາບ, ການປະຕິບັດການຫຼັງການເກັບກ່ຽວ ແລະ ການປຸງແຕ່ງ ທີ່ໄດ້ມາດຕະຖານສາກົນໄປຄຽງຄູ່ກັນເຊັ່ນ: GAP, SPS...ເພື່ອຮອງຮັບການເຊື່ອມໂຍງກັບສາກົນ ແລະ ປະຕິບັດພັນທະ ທີ່ ສປປລາວ ເປັນພາຄີ.

6) ໂຄງການຄົ້ນຄວ້ານະໂຍບາຍໃນການເຂົ້າເຖິງແນວພັນ ແລະ ການນຳໃຊ້ເຕັກນິກການຜະລິດເພື່ອຫຼຸດຜ່ອນຕົ້ນທຶນການຜະລິດ ຊຶ່ງລວມທັງການນຳໃຊ້ກົນຈັກກະສິກຳ ເພື່ອຫຼຸດຜ່ອນການນຳໃຊ້ແຮງງານ ແລະ ເປັນການປົດປ່ອຍແຮງງານຈາກຂະແໜງການກະສິກຳໄປສູ່ຂະແໜງອຸດ ສາຫະ ກຳ ແລະການບໍລິການ.
7) ໂຄງການຄົ້ນຄວ້າຂໍ້ມູນເພື່ອກຳນົດນະໂຍບາຍ ແລະ ກົນໄກສຳລັບການຜະລິດ ແລະ ການສຳລັບລະບົບການຜະລິດເປັນສິນຄ້າຂອງຊາວກະສິກອນ ແລະ ຜູ້ປະກອບການຂະໜາດນ້ອຍ.
8) ໂຄງການຄົ້ນຄວ້າຂໍ້ມູນເພື່ອກຳນົດນະໂຍບາຍການຜະລິດ ແລະ ການຕະຫລາດ, ຂໍ້ມູນຂ່າວສານດ້ານການຕະຫຼາດສິນຄ້າກ່ຽວກັບພືດ ເພື່ອເຊື່ອມໂຍງກັບສາກົນ ແລະ ໃຫ້ສອດຄ່ອງ ກັບພັນທະທີ່ ສປປ ລາວ ເປັນພາຄີ ເຊັ່ນ: ສະມາຊິກອົງການການຄ້າໂລກ, ການເຂົ້າເປັນ ປະຊາຄົມເສດຖະກິດອາຊຽນ ແລະ ອື່ນໆ.

9. <u>ແຜນດຳເນີນງານປັບປຸງ ແລະ ພັດທະນາບຸກຄະລາກອນດ້ານການປູກຝັງ, ປ້ອງກັນ-ກັກກັນພືດ, ບຸກຄະລາກອນດ້ານການວິໃຈ</u>
   1) ໂຄງການສ້າງຄວາມເຂັ້ມແຂງໃຫ້ພະນັກງານວິຊາການສະເພາະດ້ານ (ແມງໄມ້, ພະຍາດພືດ, ນັກວິໄຈໃນຫ້ອງທົດລອງ, ຊ່ຽວຊານສະເພາະພືດ, ປະສົມພັນພືດ...).
   2) ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານກັກກັນພືດ ປະຈຳດ່ານສາກົນທົ່ວປະເທດ.
   3) ໂຄງການສ້າງຂີດຄວາມສາມາດໃນການຄຸ້ມຄອງ ແລະ ບໍລິການຂອງພະນັກງານຂອງຂະແໜງການຂັ້ນສູນກາງ, ຂັ້ນແຂວງ ແລະ ເມືອງ.

### 4.1.2 ແຜນດຳເນີນງານ ແລະ ໂຄງການດ້ານລ້ຽງສັດ ແລະ ການປະມົງ

**ທັງໝົດ ລວມມີ 7 ແຜນດຳເນີນງານ ແລະ 58 ໂຄງການ ຄື:**

1. <u>**ແຜນດຳເນີນງານພັດທະນາ ແລະ ຍົກຜະລິດຕະພາບຂອງການລ້ຽງສັດ ແລະ ການປະມົງ.**</u>
   1) ໂຄງການສຳຫລວດ ສຶກສາທ່າແຮງຄວາມເປັນໄປໄດ້ ໃນການພັດທະນາ ການລ້ຽງສັດໃຫຍ່ຢູ່ໃນໃນເຂດພູດອຍ ແລະ ພູພຽງ.
   2) ໂຄງການສຳຫລວດເພື່ອການພັດທະນາການຜະລິດສັດ ແລະ ປາໃນເຂດຈຸດສຸມຊົນລະກະເສດ.
   3) ໂຄງການພັດທະນາ ແລະ ຂະຫຍາຍການລ້ຽງຄວາຍລາວ.
   4) ໂຄງການພັດທະນາ ແລະ ຂະຫຍາຍເຕັກນິກການລ້ຽງງົວ.
   5) ໂຄງການສົ່ງເສີມການລ້ຽງໝູ.
   6) ໂຄງການສົ່ງເສີມການລ້ຽງສັດປີກໃນເຂດຊົນນະບົດ;
   7) ໂຄງການຄຸ້ມຄອງ, ປົກປັກຮັກສາແຫລ່ງນ້ຳ ແລະ ການຊົມໃຊ້ຊັບພະຍາກອນສັດນ້ຳຢ່າງຍືນຍົງ.
   8) ໂຄງການປັບປຸງບັນດາສະຖານີຜະລິດແນວພັນປາ.
   9) ໂຄງການສຶກສາຄວາມເປັນໄປໄດ້ໃນການລ້ຽງສັດປ່າບາງຊະນິດທີ່ໃກ້ຈະສູນພັນ.

10) ໂຄງການພັດທະນາ ແລະ ສົ່ງເສີມການປູກພືດອາຫານສັດ.
11) ໂຄງການປັບປຸງການຜະລິດ ແລະ ນຳໃຊ້ຢາສັດຕະວະແພດ.
12) ໂຄງການເຝົ້າລະວັງ ແລະ ຄວບຄຸມພະຍາດສັດ, ພະຍາດປາ ແລະ ສັດນ້ຳ.

2. **ແຜນດຳເນີນງານປັບປຸງ ພັດທະນາ ລະບົບດຳເນີນມາດຕະການ ດ້ານສຸຂານາໄມສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ**

1) ໂຄງການປັບປຸງ ແລະ ຂະຫຍາຍຕາໜ່າງການບໍລິການສັດຕະວະແພດ
2) ໂຄງການສ້າງຄວາມເຂັ້ມແຂງໃຫ້ຫ້ອງວິໄຈພະຍາດສັດຂັ້ນສູນກາງ.
3) ໂຄງການປັບປຸງຄວາມອາດສາມາດຂອງຫ້ອງວິໄຈພະຍາດສັດລະດັບແຂວງ.
4) ໂຄງການພັດທະນາ ຫ້ອງວິໄຈພະຍາດປາ ແລະ ສັດນ້ຳໃນລະດັບສູນກາງ.
5) ໂຄງການພັດທະນາການສ້າງເຂດປອດພະຍາດສັດ.
6) ໂຄງການຮ່ວມມືຄວບຄຸມພະຍາດສັດຂ້າມຊາຍແດນ ແລະ ພະຍາດສັດຕິດຕໍ່ຈາກສັດສູ່ຄົນ.
7) ໂຄງການປັບປຸງລະບົບຄວບຄຸມຄຸນນະພາບອາຫານສັດ ແລະ ອາຫານປາ.
8) ໂຄງການຍົກລະດັບຄວາມປອດໄພຜະລິດຕະພັນສັດ
9) ໂຄງການພັດທະນາ ແລະ ປັບປຸງດ່ານກວດກາສັດຕະວະແພດ.
10) ໂຄງການພັດທະນາລະບົບການຄຸ້ມຄອງຢາສັດຕະວະແພດ.
11) ໂຄງການພັດທະນາການຄຸ້ມຄອງທຸລະກິດລ້ຽງສັດ, ສັດຕະວະແພດ ແລະ ການປະມົງ.

3. **ແຜນດຳເນີນງານຄົ້ນຄວ້າທົດລອງດ້ານການລ້ຽງສັດ ແລະ ການປະມົງ**

1) ໂຄງການຄົ້ນຄວ້າ, ສັງລວມ ແລະ ຂະຫຍາຍແນວພັນສັດ ແລະ ປາພັນພື້ນເມືອງເພື່ອອະນຸລັກ ແລະ ປັບປຸງພັນໃຫ້ມີຜົນຜະລິດສູງ, ມີຄຸນນະພາບດີ, ທົນທານຕໍ່ພະຍາດສັດຕ່າງໆ ແລະ ມີຄວາມທົນທານຕໍ່ສະພາບການປ່ຽນແປງຂອງດິນຟ້າອາກາດ.
2) ໂຄງການປັບປຸງລະບົບການຜະລິດ ແລະ ສະໜອງແນວພັນສັດ ແລະ ແນວພັນປາ ແລະ ສັດນ້ຳທີ່ມີຄຸນະພາບໃຫ້ແກ່ການຜະລິດໃນຂອບເຂດທົ່ວປະເທດ ແລະ ລວມທັງການສ້າງເຄືອຂ່າຍເພື່ອສະ ໜອງເຕັກນິກ-ເຕັກໂນໂລຊີໃຫ້ແກ່ລະບົບການລ້ຽງສັດ ແລະ ການປະມົງໃນເຂດທົ່ງພຽງ, ພູພຽງ ແລະ ເຂດພູດອຍ.
3) ໂຄງການຄົ້ນຄ້ວາ ແລະ ນຳໃຊ້ເຕັກນິກ-ເຕັກໂນໂລຊີ ສຳລັບການປັບປຸງ ແລະ ຍົກຜະລິດຕະພາບຂອງລະ ບົບການລ້ຽງສັດ ແລະ ການປະມົງແບບຄອບຄົວ ຫຼື ຟາມຂະໜາດນ້ອຍໃນການຄ້ຳປະກັນສະບຽງອາຫານ ແລະ ໂພສະນາການ.
4) ໂຄງການຄົ້ນຄວ້າເຕັກນິກ-ເຕັກໂນໂລຊີ ໂດຍການນຳໃຊ້ວິທະສາດທີ່ທັນສະໄໝເຂົ້າໃນການລ້ຽງສັດ ແລະ ການປະມົງ ທີ່ເປັນຟາມຂະໜາດໃຫຍ່, ເຕັກນິກ-ເຕັກໂນໂລຊີສຳລັບການປຸງແຕ່ງ, ຮັບປະກັນຄຸນນະພາບ, ຄ້ຳປະກັນສະບຽງອາຫານ ແລະ ດ້ານໂພສະນາການ.

5) ໂຄງການຄົ້ນຄ້ວາເພື່ອສະໜອງຂໍ້ມູນ ແລະ ຄຳເຫັນສ່ອງແສງໃຫ້ແກ່ຜູ້ກຳນົດນະໂຍບາຍ ໃນລະດັບຕ່າງໆ ເພື່ອການປັບປຸງນະໂຍບາຍຕ່າງໆ ທີ່ກ່ຽວຂ້ອງເພື່ອຊຸກຍູ້ສົ່ງເສີມການປັບປຸງ, ພັດທະນາ ແລະ ຂະຫຍາຍແນວພັນສັດ ແລະ ແນວພັນປາ ລວມທັງນະໂຍບາຍໃນການນຳໃຊ້ ຫຼື ການເຂົ້າເຖິງແນວພັນສັດ, ແນວພັນປາ ແລະ ເຕັກນິກ-ເຕັກໂນໂລຊີສຳລັບການຜະລິດ ແລະ ການປຸງແຕ່ງ.

## 4. ແຜນດຳເນີນງານຄົ້ນຄວ້າດ້ານແນວພັນ ແລະ ເຕັກໂນໂລຊີ ສຳລັບການລ້ຽງສັດເປັນສິນຄ້າ

1) ໂຄງການຄົ້ນຄວ້າ, ສັງລວມ ແລະ ອະນຸລັກແນວພັນສັດ ແລະ ປາພື້ນເມືອງເພື່ອພັດທະນາ ແລະ ຂະຫຍາຍພັນໃຫ້ເປັນສິນຄ້າຮັບໃຊ້ພາຍໃນ ແລະ ສົ່ງອອກ.
2) ໂຄງການຄົ້ນຄວ້າເພື່ອປັບປຸງພັນ, ຜະລິດ ແລະ ຂະຫຍາຍແນວພັນສັດ ທີ່ມີທ່າແຮງເປັນສິນຄ້າ ເຊັ່ນ: ງົວພື້ນເມືອງ ແລະ ງົວພັນລູກປະສົມທີ່ມີຜົນຜະລິດສູງ, ຄຸນນະພາບດີ, ທົນທານຕໍ່ສະພາບການປ່ຽນແປງຂອງດິນຟ້າອາກາດ, ທົນທານຕໍ່ພະຍາດ ແລະ ໂລກລະບາດ ຕ່າງໆ.
3) ໂຄງການປັບປຸງລະບົບການຜະລິດ ແລະ ສະໜອງແນວພັນສັດ ແລະ ປາເປັນສິນຄ້າທີ່ມີຄຸນະພາບໃຫ້ແກ່ການຜະ ລິດໃນຂອບເຂດທົ່ວປະເທດ; ສ້າງເງື່ອນໄຂການຜະລິດກຸ້ມຕົນເອງທາງດ້ານແນວພັນ ເພື່ອ ຫຼຸດຜ່ອນການນຳເຂົ້າແນວພັນຈາກຕ່າງປະເທດເທື່ອລະກ້າວ.
4) ໂຄງການຄົ້ນຄ້ວາເຕັກໂນໂລຊີທີ່ກ້າວໜ້າ ເພື່ອປັບປຸງລະບົບການລ້ຽງສັດ ແລະ ການປະມົງແບບເປັນຟາມທີ່ທັນສະໄໝ ແລະ ການປຸງແຕ່ງເປັນຜະລິດຕະພັນສັດສຳເລັດຮູບ ແລະ ເຄິ່ງສຳເລັດຮູບທີ່ໄດ້ມາດ ຖານສາກົນເພື່ອການສົ່ງອອກ ແລະ ຮອງຮັບການເຊື່ອມໂຍງກັບສາກົນ ແລະ ພາກພື້ນ, ແລະ ການປະຕິບັດພັນທະທີ່ ສປປ ລາວ ເປັນສະມາຊິກອົງການການຄ້າໂລກ ແລະ ເປັນສະມາຊິກ ປະຊາຄົມເສດຖະກິດອາຊຽນ.
5) ໂຄງການ ຄົ້ນຄ້ວາເຕັກນິກ-ເຕັກໂນໂລຊີ ສຳຫຼັບປັບປຸງລະບົບການລ້ຽງສັດ ແລະ ການລ້ຽງປາເປັນຕົ້ນແມ່ນການລ້ຽງສັດ ແລະ ປາພື້ນເມືອງເຊັ່ນ: ໄກ່ລາດ, ໄກ່ກະດູກດຳ, ໝູລາດ, ແບ້ ແລະ ປາພື້ນ ເມືອງ...) ຂອງຊາວກະສິກອນ ແລະ ຜູ້ປະກອບການຂະໜາດນ້ອຍເພື່ອເປັນສິນຄ້າຮັບໃຊ້ພາຍໃນ ແລະ ຕະຫຼາດສະເພາະ.
6) ໂຄງການຄົ້ນຄວ້ານະໂຍບາຍໃນການເຂົ້າເຖິງແນວພັນສັດ ແລະ ປາ, ແລະ ການນຳໃຊ້ເຕັກນິກການຜະລິດເພື່ອຫຼຸດຜ່ອນຕົ້ນທຶນການຜະລິດ ຊຶ່ງລວມທັງການນຳໃຊ້ກົນຈັກກະສິກຳ ເພື່ອຫຼຸດຜ່ອນການນຳໃຊ້ແຮງງານ ຊຶ່ງເປັນການປົດປ່ອຍແຮງງານຈາກຂະແໜງການກະສິກຳ ໄປສູ່ຂະແໜງອຸດສາຫະກຳ ແລະ ການບໍລິການ.
7) ໂຄງການ ຄົ້ນຄວ້າຂໍ້ມູນເພື່ອກຳນົດນະໂຍບາຍ ແລະ ກົນໄກສຳລັບການລ້ຽງສັດ ແລະ ການປະມົງ, ແລະ ລວມທັງການຕະຫຼາດສຳລັບລະບົບການຜະລິດເປັນສິນຄ້າຂອງຊາວກະສິກອນ ແລະ ຜູ້ປະກອບການຂະໜາດນ້ອຍ.

8) ໂຄງການຄົ້ນຄວ້າຂໍ້ມູນເພື່ອກຳນົດນະໂຍບາຍສຳລັບການຜະລິດ ແລະ ການຕະຫລາດ, ຂໍ້ມູນຂ່າວສານດ້ານການຕະຫຼາດສິນຄ້າກ່ຽວກັບສັດ ເພື່ອເຊື່ອມໂຍງກັບສາກົນ ແລະ ໃຫ້ສອດຄ່ອງກັບພັນທະ ທີ່ ສປປ ລາວ ເປັນພາຄີ.

5. <u>ແຜນດຳເນີນງານພັດທະນາວຽກງານສົ່ງເສີມການລ້ຽງສັດ ແລະ ການປະມົງ</u>
   1) ໂຄງການປັບປຸງ ແລະ ຂະຫຍາຍລະບົບການສົ່ງເສີມ ແລະ ບໍລິການດ້ານເຕັກນິກການລ້ຽງສັດ, ສັດຕະວະແພດ ແລະ ການປະມົງ.
   2) ໂຄງການພັດທະນາສື່ ແລະ ພັດທະນາລະບົບຂໍ້ມູນຂ່າວສານທາງດ້ານການລ້ຽງສັດ, ສຸຂະພາບສັດ ແລະ ການປະມົງ.
   3) ໂຄງການພັດທະນາກຸ່ມ, ສະມາຄົມ, ສະຫະກອນ ຫລື ບໍລິສັດ ຜູ້ລ້ຽງ, ປຸງແຕ່ງ ແລະ ບໍລິການກ່ຽວກັບສັດລ້ຽງ, ປາ ແລະ ສັດນ້ຳ.
   4) ໂຄງການສ້າງກອງທຶນ ແລະ ຂະຫຍາຍການເງິນຈຸລະພາກກ່ຽວກັບການລ້ຽງສັດແລະການປະມົງ.

6. <u>ແຜນດຳເນີນງານປັບປຸງຄວາມເຂັ້ມແຂງດ້ານການຄຸ້ມຄອງ ແລະ ບໍລິຫານວຽກງານລ້ຽງສັດ, ສັດຕະວະແພດ ແລະ ການປະມົງ.</u>
   1) ໂຄງການຝຶກອົບຮົມ ແລະ ຍົກລະດັບຄວາມສາມາດໃນການຄຸ້ມຄອງ ແລະ ບໍລິການຂອງພະນັກງານລະດັບຕ່າງໆຂອງຂະແໜງການ.
   2) ໂຄງການປັບປຸງ ແລະ ຂະຫຍາຍພະນັກງານລ້ຽງສັດ ແລະ ການປະມົງຂັ້ນບ້ານ.
   3) ໂຄງການສ້າງ ແລະ ປັບປຸງບັນດານິຕິກຳລຸ່ມກົດໝາຍ ເພື່ອຜັນຂະຫຍາຍກົດໝາຍວ່າດ້ວຍການລ້ຽງສັດ ແລະ ສັດຕະວະແພດ ແລະ ກົດໝາຍວ່າດ້ວຍການປະມົງ.
   4) ໂຄງການປັບປຸງຫ້ອງການ, ສຳນັກງານ, ສູນວິຊາການຂອງຂະແໜງການລ້ຽງສັດ ແລະ ການປະມົງຂັ້ນສູນກາງ ແລະ ທ້ອງຖິ່ນ.
   5) ໂຄງການຫັນເປັນທັນສະໄໝ ໃນການຄຸ້ມຄອງບໍລິຫານອົງການ ແລະ ລະບົບຂໍ້ມູນຂ່າວສານຂອງຂະແໜງການ.

7. <u>ແຜນດຳເນີນງານຊຸກຍູ້ສົ່ງເສີມການລ້ຽງສັດ ແລະ ການປະມົງເພື່ອເປັນສິນຄ້າ</u>
   1) ໂຄງການສົ່ງເສີມການສ້າງຟາມລ້ຽງສັດໃຫຍ່ເພື່ອເປັນສິນຄ້າ.
   2) ໂຄງການສົ່ງເສີມການລ້ຽງງົວ ຕິດພັນກັບການປັບປຸງຜະລິດຕະພາບຂອງງົວລາວ.
   3) ໂຄງການສົ່ງເສີມການຜະລິດ ແລະ ຂະຫຍາຍແນວພັນໝູພັນດີ.
   4) ໂຄງການສົ່ງເສີມການລ້ຽງໝູຊີ້ນແບບປອດໄພ ແລະ ຄົບວົງຈອນ.
   5) ໂຄງການສົ່ງເສີມການມລ້ຽງແບ້ເພື່ອເປັນສິນຄ້າ.
   6) ໂຄງການສົ່ງເສີມການຜະລິດແນວພັນສັດປີກ.
   7) ໂຄງການສົ່ງເສີມການລ້ຽງສັດປີກແບບປອດໄພ ແລະ ຄົບວົງຈອນ.

8) ໂຄງການສົ່ງເສີມການຜະລິດແນວພັນປາ ແລະ ສັດນ້ຳ.
9) ໂຄງການສົ່ງເສີມການລ້ຽງປາ ແລະ ສັດນ້ຳທີ່ມີທ່າແຮງດ້ານເສດຖະກິດ.
10) ໂຄງການສົ່ງເສີມການຜະລິດແນວພັນພືດອາຫານສັດເປັນສິນຄ້າ
11) ໂຄງການສົ່ງເສີມການຜະລິດອາຫານສັດ ແລະ ອາຫານປາ.
12) ໂຄງການສົ່ງເສີມການຜະລິດຢາ ແລະ ການບໍລິການດ້ານສັດຕະວະແພດ.
13) ໂຄງການສົ່ງເສີມການປຸງແຕ່ງຜະລິດຕະພັນສັດ, ປາ, ສັດນ້ຳທີ່ມີມາດຕະຖານສຸຂານາໄມສູງ.

## V. ວິທີການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ປະເມີນຜົນ

ເພື່ອຮັບປະກັນເຮັດໃຫ້ຍຸດທະສາດພັດທະນາກະສິກຳ 2025 ຖືກຈັດຕັ້ງປະຕິບັດໄປຕາມທິດທີ່ໄດ້ກຳນົດໄວ້ ໃຫ້ມີຜົນສຳເລັດ ຈຶ່ງສະເໜີ ວິທີການຈັດຕັ້ງປະຕິບັດ ແລະ ການແບ່ງຄວາມຮັບຜິດຊອບ ຄືດັ່ງລຸ່ມນີ້:

### 5.1 ການສ້າງເປັນແຜນງານ, ແຜນດຳເນີນງານ ແລະ ໂຄງການລະອຽດ

ຍຸດທະສາດພັດທະນາກະສິກຳ ຮອດປີ 2025 ແມ່ນກອບວຽກໄລຍະຍາວສຳລັບການພັດທະນາຂະແໜງການ ຊຶ່ງໄດ້ກຳນົດເປັນແຜນດຳເນີນງານຕົ້ນຕໍ ລະອຽດ ເພື່ອສະໜັບສະໜູນ ການຜະລິດ ສະບຽງອາຫານ ແລະ ການຜະລິດເປັນສິນຄ້າກະສິກຳ; ຊຶ່ງແຕ່ລະແຜນງານ ໄດ້ກຳນົດເປັນໂຄງການ ສະເພາະເພື່ອຈັດຕັ້ງ ປະຕິບັດ ໃນແຕ່ລະໄລຍະ. ໃນບາດກ້າວຕໍ່ໄປ ຈະຕ້ອງໄດ້ລົງເລິກ ດຳເນີນການສຶກສາລະອຽດ ເພື່ອ ກຳນົດນະໂຍບາຍ ແຕ່ລະດ້ານ ພ້ອມທັງກຳນົດ ເປັນໂຄງການລະອຽດ ສຳລັບແຕ່ລະໜ້າວຽກ, ກຳນົດສະຖານທີ່ ແລະ ກອບງົບປະມານ ເພື່ອນຳສະເໜີ ອະນຸມັດເປັນແຕ່ລະໄລຍະ ແລ້ວນຳໄປ ຈັດຕັ້ງປະຕິບັດ.

ຍຸດທະສາດພັດທະນາກະສິກຳສະບັບນີ້ ຈະເປັນບ່ອນອີງ ແລະ ເປັນທິດທາງແກ່ ພາກສ່ວນກຳນົດນະໂຍບາຍ ແລະ ພາກສ່ວນຈັດຕັ້ງປະຕິບັດ ຂອງຂະແໜງການກະສິກຳ ລວມທັງເປັນບ່ອນອີງໃຫ້ແກ່ຄູ່ຮ່ວມພັດທະນາ ໃນຂະແໜງການກະສິກຳ. ແຜນດຳເນີນງານ ແລະ ໂຄງການລະອຽດແຕ່ລະດ້ານ ທີ່ຕິດພັນກັບແຜນລົງທຶນ ເພື່ອຈັດຕັ້ງປະຕິບັດຍຸດທະສາດກະສິກຳ, ໄດ້ຖືກກະກຽມເປັນເອກະສານໜຶ່ງຕ່າງຫາກ ຊຶ່ງມີໄລຍະຈັດຕັ້ງ ປະຕິບັດ ຮອດປີ 2020 ແລະ 2025. ແຜນງານດັ່ງກ່າວນີ້ ຈະກາຍເປັນພາກສ່ວນໜຶ່ງຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະ ຮອດປີ 2025.

ເຖິງຢ່າງໃດກໍຕາມ ໃນຂອດຈັດຕັ້ງປະຕິບັດຕົວຈິງ, ຍຸດທະສາດກະສິກຳ ຮອດປີ 2025 ຈະໄດ້ຮັບການທົບທວນຄືນ ແລະ ດັດປັບ ໃຫ້ສອດຄ່ອງ ແລະ ທ່ວງທັນກັບສະພາບ ເພື່ອຕອບສະໜອງ ຕາມແນວທາງ, ແຜນນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດ ໂດຍອີງຕາມສະພາບ ແລະ ເງື່ອນໄຂ ຂອງການປ່ຽນແປງ ທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ໃນແຕ່ລະໄລຍະ.

## 5.2 ການແບ່ງຄວາມຮັບຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງຕ່າງໆ

### 5.2.1 ໜ້າທີ່ແລະ ຄວາມຮັບຜິດຊອບຂອງຂະແໜງການຂອງລັດ ຂັ້ນສູນກາງ

1) ຄົ້ນຄວ້າຜັນຂະຫຍາຍແນວທາງ, ມະຕິ ຂອງພັກ ໃຫ້ເປັນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການລະອຽດ ໃນຂະແໜງການກະສິກຳ.
2) ຄົ້ນຄວ້າກຳນົດ ຫຼື ປັບປຸງນະໂຍບາຍ, ມາດຖານເຕັກນິກ, ລະບຽບການ ແລະ ສະເໜີປັບປຸງ ແລະ ສ້າງກົດໝາຍ ທີ່ກ່ຽວຂ້ອງ ສຳລັບຄຸ້ມຄອງຂະແໜງການ ໃຫ້ສອດຄ່ອງກັບແນວທາງ, ນະໂຍບາຍ ຂອງພັກ. ຄົ້ນຄວ້າຜັນຂະຫຍາຍບັນ ດາກົດໝາຍ ທີ່ກ່ຽວພັນກັບຂະແໜງການກະສິກຳ ມາເປັນນິຕິກຳລຸ່ມກົດໝາຍ ຂອງຂະແໜງການຕົນ.
3) ກຳນົດຕຳແໜ່ງງານ ໃຫ້ລະອຽດ ກ່ຽວກັບແຜນຄວາມຕ້ອງການ ບັນຈຸລັດຖະກອນ ຢູ່ແຕ່ລະຂັ້ນ; ແຂວງ, ເມືອງ ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງສູນກາງ ແລະ ທ້ອງຖິ່ນ ໃນແຕ່ລະໄລຍະ.
4) ຍາດແຍ່ງເອົາການຮ່ວມມື, ລົງທຶນ ແລະ ການຊ່ວຍເຫຼືອຮອບດ້ານ ຈາກທັງພາຍໃນ ແລະ ສາກົນ ເພື່ອສຸມໃສ່ພັດທະນາວຽກງານພັດທະນາກະສິກຳ.
5) ແບ່ງຄວາມຮັບຜິດຊອບ, ສິດຕົກລົງບັນຫາ ແລະ ຜົນປະໂຫຍດ ໃນການຄຸ້ມຄອງວຽກງານ ຂອງຂະແໜງການຕົນ ໃຫ້ທ້ອງຖິ່ນ, ແບ່ງງົບປະມານ, ວັດຖຸອຸປະກອນ ແລະ ພາຫະນະ ທີ່ຈຳເປັນ ໃຫ້ລະອຽດຈະແຈ້ງຂາດຕົວ.
6) ປັບປຸງກົນໄກການບໍລິຫານລັດດ້ານຕ່າງໆ ແລະ ບັນດາລະບຽບກົດໝາຍ ທີ່ກ່ຽວຂ້ອງກັບຂະແໜງການຕົນ ໃຫ້ມີຄວາມກະທັດຮັດ, ເຂົ້າໃຈ ແລະ ຈັດຕັ້ງປະຕິບັດງ່າຍ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວການປູກ, ການລ້ຽງ ຂອງປະຊາຊົນ ກໍຄືການດຳເນີນທຸລະກິດ ກະສິກຳ ຂອງຜູ້ປະກອບການ.

### 5.2.2 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຂະແໜງການຂອງລັດ ຂັ້ນທ້ອງຖິ່ນ

1) ສ້າງຍຸດທະສາດ ພັດທະນາຂະແໜງການ ຂອງທ້ອງຖິ່ນຕົນ ໂດຍໃຫ້ສອດຄ່ອງ ກັບຍຸດທະສາດກະສິກຳ ຮອດປີ 2025 ໂດຍສ້າງເປັນແຜນດຳເນີນງານລະອຽດ ໃນແຕ່ລະໄລຍະ ບົນພື້ນຖານສະພາບ, ເງື່ອນໄຂ, ຈຸດພິເສດ, ທ່າແຮງດ້ານຕ່າງໆ ແລະ ຄວາມສາມາດບົມຊ້ອນ ຕົວຈິງ ຂອງທ້ອງຖິ່ນຕົນ ພ້ອມທັງສູ້ຊົນຈັດຕັ້ງປະຕິບັດ ຍຸດທະສາດດັ່ງກ່າວ ໃຫ້ປະກົດຜົນເປັນຈິງ.
2) ສ້າງໂຄງການ ແລະ ລົງທຶນເຮັດທົດລອງ ເພື່ອຈັດຕັ້ງປະຕິບັດຢ່າງເປັນເຈົ້າການ, ມີການສະຫຼຸບ ແລະ ຖອດຖອນບົດຮຽນ ຢ່າງພາວະວິໄສ ແລ້ວຂະຫຍາຍເປັນໂຄງການຂະໜາດໃຫຍ່.
3) ຈັດຕັ້ງ ຜັນຂະຫຍາຍ ບັນດານະໂຍບາຍ, ມາດຖານເຕັກນິກ, ລະບຽບການ ທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ ແລະ ພັດທະນາຂະແໜງການ ໃຫ້ປະສົບຜົນສຳເລັດ.

4) ບັນຈຸ ຊັບຊ້ອນ ພະນັກງານລັດຖະກອນຂອງຕົນ ໃຫ້ສອດຄ່ອງກັບຕຳແຫນ່ງງານ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງ ເພື່ອຮອງຮັບໜ້າທີ່ການເມືອງ ຂອງຕົນໃນແຕ່ລະໄລຍະ.
5) ປະສານສົມທົບ ແລະ ຮ່ວມມື ກັບອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ສາກົນ ເພື່ອສຸມໃສ່ການພັດທະນາວຽກງານກະສິກຳຢູ່ໃນທ້ອງຖິ່ນຂອງຕົນ.
6) ແບ່ງຄວາມຮັບຜິດຊອບ ໃນການຄຸ້ມຄອງວຽກງານ ຂອງຂະແໜງການຕົນ ພ້ອມທັງຈັດສັນ ແບ່ງງົບປະມານ, ວັດຖຸອຸປະກອນ ແລະ ພາຫະນະ ທີ່ຈຳເປັນຈະແຈ້ງ ແລະ ຂາດຕົວ.
7) ປັບປຸງກົນໄກການບໍລິການ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວການປູກ, ການລ້ຽງຂອງປະຊາຊົນ ແລະ ຂອງຜູ້ປະກອບການໃນທ້ອງຖິ່ນຕົນ.

### 5.2.3 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງພາກທຸລະກິດ ແລະ ຜູ້ປະກອບການ

1) ເຊື່ອມຊຶມ ແລະ ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ ແລະ ແຜນຍຸດທະສາດ ພັດທະນາກະສິກຳ ຂອງລັດ ໃນແຕ່ລະໄລຍະ ເພື່ອພັດທະນາທຸລະກິດກະສິກຳຕາມທ່າແຮງ ຂອງ ແຕ່ລະເຂດແຄ້ວນໃຫ້ແທດເໝາະ ແລະ ຖືກທິດ.
2) ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ອົງກອນຂອງຕົນ ທັງທາງດ້ານບຸກຄະລາກອນ, ການຄຸ້ມຄອງ ແລະ ການບໍລິຫານຈັດການ ເພື່ອສາມາດດຳເນີນທຸລະກິດ ໄດ້ຢ່າງເປັນລະບົບຕໍ່ເນື່ອງ, ສາມາດແຂ່ງຂັນ ແລະ ເຊື່ອມໂຍງກັບສາກົນໄດ້.
3) ວາງແຜນການຜະລິດ ແລະ ດຳເນີນການຜະລິດ ຕາມຊະນິດ, ປະລິມານ, ຄຸນນະພາບ ແລະ ມາດຕະຖານ ທີ່ຕະຫລາດຕ້ອງການ ບົນພື້ນຖານຂັ້ນຕອນເຕັກນິກວິຊາການ, ລະບົບການຜະລິດກະສິກຳທີ່ດີ (GAP) ແລະ ຂອບເຂດທີ່ໄດ້ຮັບອະນຸຍາດ.
4) ປະກອບສ່ວນທາງດ້ານທຶນຮອນ ວັດຖຸອຸປະກອນ ເພື່ອຊຸກຍູ້ສົ່ງເສີມການຜະລິດ/ຜູ້ຜະລິດ ພ້ອມທັງສະໜອງປັດໃຈ ການຜະລິດທີ່ຈຳເປັນ ເຊັ່ນ: ຝຸ່ນ, ປູຍ, ຢາ, ເຄື່ອງກົນຈັກ ກ່ອນ ແລະ ຫຼັງການເກັບກ່ຽວ, ເກັບຊື້, ປຸງແຕ່ງ ແລະ ຈຳໜ່າຍ ບົນພື້ນຖານສັນຍາຜູກພັນ ກັບຊາວກະສິກອນພ້ອມທັງສະ ໜອງການຝຶກອົບຮົມດ້ານເຕັກນິກທີ່ຈຳເປັນໃຫ້ແກ່ຜູ້ຜະລິດ.
5) ໃຫ້ຄວາມຮ່ວມມື ຕອບສະໜອງຂໍ້ມູນຂ່າວສານ ແລະ ເອື້ອອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ໆກ່ຽວຂ້ອງຂອງລັດ ເພື່ອສະດວກໃນການລົງຊຸກຍູ້ ຕິດຕາມ, ກວດກາ, ຊ່ວຍເຫລືອ ແລະ ແກ້ໄຂສະພາບໃຫ້ ທ່ວງທັນກັບເວລາ.
6) ໂຄສະນາເຜີຍແຜ່ ກ່ຽວກັບວຽກງານການຜະລິດ, ຜະລິດຕະພັນ ໃຫ້ຂະຫຍາຍອອກສູ່ວົງກ້ວາງ.

### 5.2.4 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຊາວກະສິກອນ

1) ເຊື່ອມຊຶມແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ກ່ຽວກັບວຽກງານກະສິກຳໃນແຕ່ລະໄລຍະ ເພື່ອຈັດຕັ້ງດຳເນີນການຜະລິດໃຫ້ຖືກທິດ.

2) ເປັນເຈົ້າການຍົກລະດັບຄວາມຮູ້ ໃນການນຳໃຊ້ເຕັກນິກວິທະຍາການໃໝ່ ເຂົ້າໃນການປູກຝັງ ແລະ ການລ້ຽງສັດ ກໍຄືການຍົກລະດັບສີມືແຮງງານ ໃຫ້ສູງຂື້ນເປັນກ້າວໆ ເພື່ອຍົກສະມັດຖະພາບ ຂອງການຜະລິດ ຕາມທິດພັດທະນາກະສິກຳສະອາດ, ປອດໄພ ແລະ ຍືນຍົງ.
3) ຮັບຜິດຊອບ ໃນການຈັດຕັ້ງກຸ່ມ, ສະມາຄົມ ຫຼື ສະຫະກອນ ເພື່ອປັບປຸງ ແລະ ຂະຫຍາຍກຳລັງການຜະລິດ ໃຫ້ກ້ວາງຂວາງ, ມີກຳລັງແຮງ ແລະ ມີຄວາມເປັນເຈົ້າ ພ້ອມທັງດຳເນີນການຜະລິດ ຕາມຄວາມຕ້ອງການ ຂອງຜູ້ບໍລິໂພກ, ຂອງຕະຫຼາດ ຫຼື ຕາມການສັ່ງຈອງຂອງຜູ້ປະກອບການ.
4) ໃຫ້ຄວາມຮ່ວມມື ຕອບສະໜອງຂໍ້ມູນຂ່າວສານ ແລະ ເອື້ອອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ໆກ່ຽວຂ້ອງຂອງລັດ ໃນການລົງຊຸກຍູ້, ຕິດຕາມ ແລະ ຊ່ວຍເຫລືອ.

## 5.3 ການຕິດຕາມ, ກວດກາ ແລະ ປະເມີນຜົນ

ເພື່ອໃຫ້ເຫັນໄດ້ເຖິງໝາກຜົນຂອງ ການຈັດຕັ້ງປະຕິບັດຍຸດທະສາດ ໄປຕາມເປົ້າໝາຍ ແລະ ການປະຕິບັດຄາດໝາຍ ຂອງແຜນງານທີ່ກຳນົດໄວ້ໃນແຜນແມ່ບົດ 5 ປີ ແຕ່ລະໄລຍະ. ການຕິດຕາມ ແລະ ປະເມີນຜົນ ເປັນໜ້າທີ່ຂອງກົມແຜນການ ແລະ ກົມກວດກາ ຂອງກະຊວງກະສິກຳ ແລະ ປ່າໄມ້, ໂດຍການຮ່ວມມືຂອງພະແນກແຜນການ ຂອງແຕ່ລະກົມ, ສະຖາບັນ ຂອງກະຊວງກະສິກຳ ແລະ ປ່າໄມ້. ກົມແຜນການ ແລະ ກົມກວດກາ ຈະຊີ້ນຳຂະບວນການຕິດຕາມ-ປະເມີນຜົນທັງໝົດ ແລະ ກໍຈະກຳທີ່ພົວພັນພາຍໃນກະຊວງ ແລະ ຄູ່ຮ່ວມພັດທະນາ, ສະໜອງຂໍ້ມູນທີ່ຖືກຕ້ອງແຕ່ລະໄລຍະ ໃຫ້ແກ່ຜູ້ບໍລິຫານໂຄງການ ແລະ ຄູ່ຮ່ວມພັດທະນາຂອງໂຄງການ.

ການຕິດຕາມ, ກວດກາ ແລະ ປະເມີນຜົນ ເປັນວຽກງານໜຶ່ງທີ່ສຳຄັນ ແລະ ຂາດບໍ່ໄດ້ ໃນຂະບວນການຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ການຄຸ້ມຄອງການລົງທຶນຂອງລັດ ໃສ່ຂະແໜງການກະສິກຳ ແລະ ປ່າໄມ້ ແຕ່ສູນກາງ ລົງຮອດທ້ອງຖິ່ນຮາກຖານ. ການຕິດຕາມ ກວດກາ ແມ່ນການຕີລາຄາຖອດຖອນບົດຮຽນ ເພື່ອປັບປຸງແຜນການໃນແຕ່ລະປີ ໃຫ້ສອດຄ່ອງ ແລະ ສາມາດບັນລຸເຖິງຈຸດປະສົງ ຄາດໝາຍທີ່ໄດ້ກຳນົດໄວ້ ໃນຍຸດທະສາດ, ແຜນງານ ແລະ ແຜນການ ທັງເປັນການຊອກຫາ ຫຼັກຖານຕ່າງໆ ເພື່ອມາອ້າງອີງ, ພິສູດ, ຢັ້ງຢືນ ເຖິງປະສິດທິຜົນຂອງວຽກງານ ທຽບໃສ່ກັບຕົວຊີ້ວັດທີ່ໄດ້ກຳນົດໄວ້ ໃນແຜນຍຸດທະສາດ ແນໃສ່ເພື່ອເພີ້ມທະວີ ແລະ ເລັ່ງການດຳເນີນ ການຈັດຕັ້ງປະຕິບັດວຽກງານໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້. ການຕິດຕາມກວດກາ ແລະ ປະເມີນຜົນ ແມ່ນການຊອກໃຫ້ເຫັນດ້ານດີ, ປັດໃຈໃໝ່ທີ່ຕັ້ງໜ້າ ໃນການຈັດຕັ້ງແຜນຍຸດທະສາດ ເພື່ອສືບຕໍ່ເສີມຂະຫຍາຍໃຫ້ດີກວ່າເກົ່າ, ພ້ອມກັນນັ້ນ ກໍຊອກໃຫ້ເຫັນຂໍ້ຄົງຄ້າງ ແລະ ຂໍ້ຂາດຕົກບົກພ່ອງ ໃນການຈັດຕັ້ງປະຕິບັດວຽກງານຕົວຈິງ ແນໃສ່ຈຳກັດ, ແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງດັ່ງກ່າວ ພ້ອມທັງ ຖອດຖອນບົດຮຽນ ເພື່ອປັບປຸງ ເຮັດໃຫ້ປະສິດຕິຜົນຂອງວຽກງານນັບມື້ສູງຂຶ້ນ. ການກວດກາ ຕ້ອງດຳເນີນໄປຢ່າງຮອບດ້ານ ເຮັດຢ່າງເປື່ອງນິດລຽນຕິດ, ເປັນປົກກະຕິ, ເປັນລະບົບ ແລະ ເຮັດຢ່າງມີຈຸດສຸມ.

ການຕິດຕາມ ກວດກາ ແລະ ປະເມີນຜົນ ຕ້ອງໃຫ້ເຫັນໄດ້ ທັງສອງລະດັບຄື: 1) ການຕິດຕາມ ກວດກາ ບັນດາປັດໄຈນຳເຂົ້າ (ສິ່ງເຂົ້າ) ແລະ ຜົນງານຕ່າງໆ ຫຼື ເອີ້ນວ່າ: ການຕິດຕາມ ກວດກາການຈັດຕັ້ງປະຕິບັດ; 2) ການຕິດຕາມກວດກາໝາກຜົນໂດຍລວມ ຫຼື ຮ້ອງວ່າ ການຕິດຕາມກວດກາຜົນກະທົບ. ຜູ້ຮັບຜິດຊອບຕິດຕາມກວດກາ ຂອງຂະແໜງການ ຕ້ອງໄດ້ຕິດຕາມກວດກາ ການຈັດສັນ ບັນດາປັດໄຈການນຳເຂົ້າ ເພື່ອການຜະລິດທັງຫຼາຍ ນັບທັງລາຍຈ່າຍພາກລັດ ຊຶ່ງລວມມີການຊ່ວຍເຫຼືອຂອງຕ່າງປະເທດ ແລະ ລາຍຈ່າຍໃຫ້ແກ່ວຽກງານສົ່ງເສີມຕ່າງໆ. ການຕິດຕາມກວດກາເບິ່ງຜົນໄດ້ຮັບ ຂອງການລົງທຶນໃສ່ຂະແໜງການ, ກວດກາເບິ່ງຜົນງານ ໃນການລົງທຶນ ໃສ່ລະບົບຊົນລະປະທານ, ການສະໜອງແນວພັນ, ການກໍ່ສ້າງວິຊາການດ້ານຕ່າງໆໃນແຕ່ລະຂັ້ນ ແລະ ອື່ນໆ.

ທ້ອງຖິ່ນ ເປັນຜູ້ນຳເອົາຍຸດທະສາດລວມຂອງຂະແໜງການ ໄປຈັດຕັ້ງຜັນຂະຫຍາຍ ໃຫ້ເປັນອັນລະອຽດສະເພາະ ຂອງທ້ອງຖິ່ນຕົນ. ແຂວງສ້າງຍຸດທະສາດຂອງແຂວງ ໂດຍກຳນົດແຈ້ງ ກ່ຽວກັບຍຸດທະສາດ ຫຼື ເປົ້າໝາຍດ້ານການຜະລິດຕ່າງໆ ພາຍໃນແຂວງ ຫຼື ທ້ອງຖິ່ນຂອງຕົນ ຊຶ່ງປະກອບສ່ວນ ໃຫ້ເປົ້າໝາຍລວມ ຂອງຂະແໜງການປະສົບຜົນສຳເລັດ. ພ້ອມດຽວກັນນັ້ນ ແຂວງ ຕ້ອງພົວພັນກັບໜ່ວຍງານຄຸ້ມຄອງມະຫາພາກ ຂອງກະຊວງ ຢ່າງສະໜິດແໜ້ນ ແລະ ເປັນປົກກະຕິ ເພື່ອສາມາດຕິດຕາມ ການຈັດຕັ້ງປະຕິບັດ ຍຸດທະສາດໃນລະດັບແຂວງ ໃຫ້ມີປະສິດທິຜົນ ໂດຍສອດຄ່ອງ ກັບການຈັດຕັ້ງປະຕິບັດ ໃນລະດັບສູນກາງຢ່າງຈະແຈ້ງ. ແຂວງຕ້ອງເກັບກຳ, ສັງລວມຂໍ້ມູນ ຂອງຕົນຢ່າງຄົບຖ້ວນ ແລະ ຊັດເຈນເປັນລະບົບ ເພື່ອສະໜອງໃຫ້ແກ່ສູນກາງ. ດັ່ງນັ້ນ ແຂວງ ຕ້ອງມີລະບົບຂໍ້ມູນຂ່າວສານທີ່ດີ ແລະ ຕ້ອງມີການປະສານງານ ກັບຫ້ອງການກະສິກຳ ແລະ ປ່າໄມ້ ເມືອງຢ່າງເປັນລະບົບ.

ສ່ວນຢູ່ຂັ້ນສູນກາງ ຕ້ອງມີການປະສານສົມທົບກັນ ລະຫວ່າງຂະແໜງການກ່ຽວຂ້ອງ ພ້ອມກັນສ້າງລະບົບ, ກຳນົດໂຕຊີ້ວັດ, ກຳນົດເວລາ ໃນການລາຍງານ ຢ່າງຊັດເຈນ. ດຳເນີນການຕິດຕາມກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານ, ການໃຊ້ຈ່າຍງົບປະມານ ລວມທັງການລົງທຶນ ຂອງແຕ່ລະຂະແໜງການຕາມສາຍຕັ້ງ, ສາຍຂວາງ ກວດກາ ແຕ່ເທິງລົງລຸ່ມ ແລະ ແຕ່ລຸ່ມຂຶ້ນເທິງ ດ້ວຍຄວາມຮັບຜິດຊອບຢ່າງຮອບຄອບ ແລະ ຕົວຈິງ.